ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

# ບົດສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາ ການສຶກສາ ແລະ ກິລາ ສົກຮຽນ 2018-2019 ແລະ ແຜນພັດທະນາການສຶກສາ ແລະ ກິລາ ສົກຮຽນ 2019-2020

ກໍລະກົດ

**ສາລະບານ**


**ສາລະບານ ............................................................................................................... i**

**ຄຳນຳ ..................................................................................................................... iv**

**ຄຳຂອບໃຈ.................................................................................................................. v**

**ພາກທີ I ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019........................................................................................ 1**

**I. ພາກສະເໜີ: ........................................................................................................ 1**

1. ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດ 15 ຄາດໝາຍຫຼັກ ............................................................ 1
2. ຜົນສຳເລັດການຈັດຕັ້ງປະຕິບັດວຽກຂອງຂະແໜງການຍ່ອຍ ......................................................... 2
3. ຂໍ້ມູນດ້ານການສຶກສາສັງລວມໂດຍຫຍໍ້ໃນສົກຮຽນ 2018-2019.................................................. 6
4. ສັດສ່ວນງົບປະມານຂອງຂະແໜງການສຶກສາ............................................................................. 9
5. ບັນຫາ ແລະ ສາຍເຫດທີ່ເຮັດໃຫ້ບໍ່ສາມາດບັນລຸໄດ້ ຄາດໝາຍທີ່ສະພາຮັບຮອງ.................................. 9
6. ແຜນວຽກບູລິມະສິດສຳລັບປີ 2020. ................................................................................. 11

**ພາກທີ II ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020 ຂອງ 10 ຂະແໜງການຍ່ອຍ ............................................................................................... 13**

**I. ຂະແໜງການຍ່ອຍການສຶກສາກ່ອນໄວຮຽນ ....................................................................... 14**

1.1. ສະພາບລວມ .................................................................................................... 14
1.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ.................................................................................... 17
1.3. ແຜນວຽກບູລິມະສິດສຳລັບປີ 2020 ............................................................................ 18

**II. ຂະແໜງການຍ່ອຍປະຖົມສຶກສາ.................................................................................. 19**

2.1. ສະພາບລວມ .................................................................................................... 19
2.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ.................................................................................... 24
2.3. ແຜນວຽກບູລິມະສິດສຳລັບປີ 2020 ............................................................................ 25

**III. ຂະແໜງການຍ່ອຍມັດທະຍົມສຶກສາຕອນຕົ້ນ ................................................................ 27**

3.1. ສະພາບລວມ .................................................................................................... 27
3.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ.................................................................................... 31
3.3. ແຜນວຽກບູລິມະສິດສຳລັບປີ 2020 ............................................................................ 32

**IV. ຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ.................................................................. 34**

4.1. ສະພາບລວມ .................................................................................................... 34
4.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ.................................................................................... 37
4.3. ແຜນວຽກບູລິມະສິດສຳລັບປີ 2020 ............................................................................ 37

**V. ຂະແໜງການຍ່ອຍການສຶກສານອກໂຮງຮຽນ ................................................................... 39**

5.1. ສະພາບລວມ .................................................................................................... 39
5.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ.................................................................................... 41

5.3. ແຜນວຽກບູລິມະສິດ ສໍາລັບປີ 2020 ..... 42
**VI. ຂະແໜງການຍ່ອຍສ້າງຄູ ..... 44**
6.1. ສະພາບລວມ ..... 44
6.2. ປະເດັນບັນຫາ ແລະ ສິ່ງທ້າທາຍ ..... 46
6.3. ແຜນວຽກບູລິມະສິດສໍາລັບປີ 2020 ..... 47
**VII. ຂະແໜງການຍ່ອຍ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ..... 49**
7.1 ສະພາບລວມ ..... 49
7.2 ບັນຫາ ແລະ ສິ່ງທ້າທາຍ ..... 51
7.3 ແຜນວຽກບູລິມະສິດ ສໍາລັບປີ 2020 ..... 52
7.4 ວຽກຈຸດສຸມ ..... 52
**VIII. ຂະແໜງກາຍ່ອຍການສຶກສາຊັ້ນສູງ ..... 53**
8.1. ສະພາບລວມ ..... 53
8.2. ປະເດັນບັນຫາ ແລະ ສິ່ງທ້າທາຍ. ..... 54
8.3. ແຜນວຽກບູລິມະສິດ ສໍາລັບປີ 2020. ..... 54
**IX. ຂະແໜງການຍ່ອຍກິລາ-ກາຍະກໍາ ..... 56**
9.1 ສະພາບລວມ: ..... 56
9.2 ບັນຫາ ແລະ ສິ່ງທ້າທາຍ : ..... 59
9.3 ແຜນວຽກບູລິມະສິດ ສໍາລັບປີ 2020: ..... 60
**X. ຂະແໜງການຍ່ອຍການບໍລິຫານ ແລະ ຄຸ້ມຄອງການສຶກສາ ..... 64**
10.1 ວຽກງານຈັດຕັ້ງ ແລະ ພະນັກງານ ..... 64
10.2 ວຽກງານການພັດທະນາຜູ້ບໍລິຫານການສຶກສາ ..... 65
10.3 ວຽກງານສະຖິຕິ ແລະ ແຜນການ ..... 66
10.4 ວຽກງານການເງິນ ..... 67
10.5 ວຽກງານຕິດຕາມ, ກວດກາ, ປະເມີນຜົນ ..... 68
10.6 ວຽກງານພົວພັນຕ່າງປະເທດ ..... 69
10.7 ວຽກງານ ICT ..... 71
10.8 ວຽກງານຫ້ອງການເລຂາຄະນະກໍາມາທິການແຫ່ງຊາດລາວເພື່ອອຸຍແນສໂກ ..... 72
10.9 ວຽກງານສາມສ້າງ ..... 73
**XI. ການສຶກສາຮຽນຮ່ວມ ..... 75**
11.1. ຜົນສໍາເລັດ ..... 75
11.2. ບັນຫາ ແລະ ສິ່ງທ້າທາຍ ..... 76
11.3. ແຜນວຽກບູລິມະສິດ ສໍາລັບປີ 2020 ..... 76
**ພາກທີ III ການເງິນຂອງຂະແໜງການສຶກສາ ແລະ ກິລາ ..... 77**
I. ສະພາບການເງິນສໍາລັບຂະແໜງການສຶກສາ ແລະ ກິລາ ປີ 2019 ..... 77
II. ຄວາມຕ້ອງການດ້ານການເງິນສໍາລັບປີ 2020 ..... 77

**ພາກທີ IV ກົນໄກການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ ............................... 78**
I. ມາດຕະການໃນການຈັດຕັ້ງປະຕິບັດ........................................................................................ 78
II. ການຕິດຕາມ ແລະ ປະເມີນ..................................................................................................... 78

## ສາລະບານຕາຕະລາງ ແລະ ເສັ້ນສະແດງ

ຕາຕະລາງທີ 1: ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນພາກລັດ .................................................... 6
ຕາຕະລາງທີ 2: ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນພາກເອກະຊົນ ......................................... 6
ຕາຕະລາງທີ 3: ອັດຕາເຂົ້າຮຽນໃນແຕ່ລະຊັ້ນການສຶກສາ ......................................................................... 7
ຕາຕະລາງທີ 4: ການຂະຫຍາຍໂອກາດການເຂົ້າຮຽນສຳລັບການສຶກສາກ່ອນໄວຮຽນ ປີ 2018 ແລະ 2019.....15
ຕາຕະລາງທີ 5 : ຕົວຊີ້ບອກຊັ້ນປະຖົມສຶກສາ..........................................................................................22
ຕາຕະລາງທີ 6: ຕົວຊີ້ບອກຊັ້ນມັດທະຍົມຕອນຕົ້ນ...................................................................................28
ຕາຕະລາງທີ 7: ຕົວຊີ້ບອກຊັ້ນມັດທະຍົມຕອນປາຍ..................................................................................34
ຕາຕະລາງທີ 8: ຈຳນວນນັກຮຽນທັງໝົດທາງພາກລັດ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ .......................49
ຕາຕະລາງທີ 9: ຈຳນວນນັກຮຽນພາກເອກະຊົນທັງໝົດ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ...................50
ຕາຕະລາງທີ 10: ນັກຮຽນສາມັນກິນນອນຊົນເຜົ່າທົ່ວປະເທດທີ່ໄປຕໍ່ວິຊາຊີບ ໃນສົກຮຽນ 2018-2019.........75
ຮູບພາບທີ 1: ອັດຕາການຄ້າງຫ້ອງ ແລະ ປະລະການຮຽນຊັ້ນປະຖົມສຶກສາ....................................................... 7
ຮູບພາບທີ 2: ອັດຕາການປະລະການຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ ........................................................ 8
ຮູບພາບທີ 3: ອັດຕາການປະລະການຮຽນຊັ້ນມັດທະຍົມສຶກສາຕອນປາຍ ........................................................ 8
ຮູບພາບທີ 4 : ເມືອງທີ່ມີອັດຕາເຂົ້າຮຽນຂອງເດັກ 5 ປີ ຕໍ່າກວ່າ 60%.................................................................15
ຮູບພາບທີ 5: ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາໃນລະດັບແຂວງ ແລະ ທົ່ວປະເທດໃນປີ 2019...............19
ຮູບພາບທີ 6: ເມືອງທີ່ອັດຕາຄ້າງຫ້ອງຂັ້ນ ປ.1 ສູງກວ່າ 14%.........................................................................20
ຮູບພາບທີ 8: ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນໃນທົ່ວປະເທດ........................................................28
ຮູບພາບທີ 9: ຈຳນວນເມືອງທີ່ມີອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນຕໍ່າກວ່າ 70% ............................28
ຮູບພາບທີ 10: ຈຳນວນເມືອງທີ່ມີອັດຕາປະລະການຮຽນຊັ້ນມັດທະຍົມຕອນຕົ້ນ ສູງກວ່າ 15 % ....................30
ຮູບພາບທີ 11: ອັດຕາເຂົ້າຮຽນລວມໃໝ່ ຂັ້ນ ມ.4 ຂອງນັກຮຽນຍິງ (ອັດຕາຈົບຊັ້ນມັດທະຍົມຕອນຕົ້ນ)........30
ຮູບພາບທີ 12: ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍ .........................................................................35

**ຄຳນຳ**

ຜ່ານການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 4 ສົກຮຽນຜ່ານມາ ຄື: ແຕ່ສົກຮຽນ 2015-2016 ຮອດສົກຮຽນ 2018-2019 ເຫັນໄດ້ວ່າ ມີຜົນສຳເລັດຫຼາຍດ້ານ ບໍ່ວ່າຈະເປັນດ້ານການເຂົ້າເຖິງການສຶກສາແຕ່ ຊັ້ນອະນຸບານ ຈົນຮອດ ມະຫາວິທະຍາໄລ ແລະ ປະສິດທິພາບພາຍໃນຂອງການສຶກສາ ກໍໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ. ນອກຈາກນັ້ນ ລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ແຕ່ສູນກາງຮອດທ້ອງຖິ່ນກໍໄດ້ຮັບການປັບປຸງດີຂຶ້ນ ໂດຍໄດ້ມີການປັບປຸງກົງຈັກການຈັດຕັ້ງໃຫ້ເໝາະສົມກັບສະພາບຄວາມເປັນຈິງ, ການຄຸ້ມຄອງແຜນການ, ງົບປະມານ, ການຄຸ້ມຄອງຂໍ້ມູນຂ່າວສານ ແລະ ວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນ ກໍໄດ້ຮັບການປັບປຸງໃຫ້ເປັນລະບົບດີກ່ອນເກົ່າ. ການເຂົ້າຮ່ວມໃນວຽກງານກິລາ-ກາຍຍະກຳ ບໍ່ວ່າຈະເປັນກິລາກາຍຍະກຳມວນຊົນ, ກິລາໃນໂຮງຮຽນ ກໍຄືກິລາ-ກາຍຍະກຳອາຊີບ ກໍໄດ້ຮັບການຮ່ວມມືຈາກສັງຄົມ ແລະ ຊຸມຊົນຫຼາຍຂຶ້ນ ອັນເຮັດໃຫ້ວຽກງານດັ່ງກ່າວຄ່ອຍພັດທະນາດີຂຶ້ນເທື່ອລະກ້າວ.

ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບດ້ານຕັ້ງໜ້າທີ່ກ່າວມານັ້ນ ກໍຍັງມີສິ່ງທ້າທາຍຫຼາຍຢ່າງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃນສະເພາະໜ້າ ແລະ ຍາວນານ ເພື່ອໃຫ້ບັນລຸໄດ້ວິໄສທັດໃນການພັດທະນາການສຶກສາ ກໍຄືເປົ້າໝາຍການພັດທະນາແບບຍືນຍົງ ຮອດປີ 2030 ເຊັ່ນ: ບັນຫາຄວາມແຕກໂຕນກັນໃນການພັດທະນາການສຶກສາຢູ່ໃນແຕ່ລະທ້ອງຖິ່ນ, ບັນຫາຄຸນນະພາບຂອງການສຶກສາຂັ້ນພື້ນຖານຕ່ຳ, ປະສິດທິພາບໃນການນຳໃຊ້ຊັບພະຍາກອນທີ່ມີຈຳກັດຍັງຕ່ຳ ແລະ ອື່ນໆ.

ເພື່ອໃຫ້ບັນລຸໄດ້ວິໄສທັດ ແລະ ເປົ້າໝາຍດັ່ງກ່າວ, ຈຸດປະສົງໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ສົກຮຽນ 2019-2020 ແມ່ນເພື່ອສືບຕໍ່ຜັນຂະຫຍາຍບັນດານະໂຍບາຍ, ຍຸດທະສາດ, ຄາດໝາຍ ແລະ ວຽກຈຸດສຸມທີ່ກຳນົດຢູ່ໃນແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020), ໂດຍສະເພາະແມ່ນ ເພື່ອແກ້ໄຂບັນຫາທີ່ພົບພໍ້ໃນການປະເມີນກາງສະໄໝ ຂອງພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ **VIII** (2016-2020). ເພື່ອໃຫ້ບັນລຸໄດ້ຈຸດປະສົງສະເພາະຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020, ໃນເອກະສານແຜນການສະບັບນີ້ ໄດ້ກຳນົດວຽກບູລິມະສິດຫຼາຍຢ່າງທີ່ແຕ່ລະຂະແໜງການຍ່ອຍຈະໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດ ພ້ອມທັງຈັດສັນງົບປະມານທີ່ມີຈຳກັດເຂົ້າໃສ່ຢ່າງມີຈຸດສຸມ ເພື່ອໃຫ້ສາມາດບັນລຸໄດ້ຕາມແຜນ. ຄຽງຄູ່ກັນນັ້ນ ກໍໄດ້ມີມະຕິຂອງກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019 ທີ່ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 29-31 ກໍລະກົດ (7) 2019 ຢູ່ທີ່ ແຂວງວຽງຈັນ.

ດັ່ງນັ້ນ, ໃນນາມການນຳຂອງກະຊວງສຶກສາທິການ ແລະ ກິລາ ຂ້າພະເຈົ້າຈຶ່ງຮຽກຮ້ອງໃຫ້ບັນດາຜູ້ບໍລິຫານການສຶກສາ ແລະ ກິລາ ທຸກລະດັບແຕ່ສູນກາງງຮອດທ້ອງຖິ່ນ ລວມທັງຜູ້ອຳນວຍການໂຮງຮຽນ ແລະ ຄູສອນທຸກຊັ້ນທຸກສາຍໃນທົ່ວປະເທດ ຈົ່ງນຳເອົາບັນດາຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມ ລວມທັງມະຕິຂອງກອງປະຊຸມ ທີ່ກຳນົດໃນເອກະສານແຜນການສະບັບນີ້ ເປັນບ່ອນອີງໃນການຄົ້ນຄວ້າ ແລະ ຜັນຂະຫຍາຍອອກເປັນແຜນກິດຈະກຳລະອຽດ ເພື່ອໄປຈັດຕັ້ງປະຕິບັດໃນຂັ້ນຂອງຕົນໃຫ້ປະກົດຜົນເປັນຈິງ; ພ້ອມນັ້ນ, ກໍໃຫ້ເອົາໃຈໃສ່ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານຄວາມຄືບໜ້າໃຫ້ກະຊວງສຶກສາທິການ ແລະ ກິລາ ຊາບເປັນປົກກະຕິໃນແຕ່ລະໄລຍະ.

**ລັດຖະມົນຕີ**

ນ.ແສງເດືອນ ຫຼ້າຈັນທະບູນ

# ຄຳຂອບໃຈ

ກົມແຜນການ ກະຊວງສຶກສາທິການ ແລະ ກິລາ ໃນນາມຄະນະຮັບຜິດຊອບເນື້ອໃນຂອງບົດສະຫຼຸບຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020 ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງຍິ່ງຕໍ່ບັນດາກົມ, ສູນ, ສະຖາບັນ, ຫ້ອງການ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ສະຖາບັນການສຶກສາຕ່າງໆ ຕະຫຼອດເຖິງບຸກຄົນທີ່ໄດ້ສະໜອງຂໍ້ມູນ ແລະ ປະກອບຄຳຄິດຄຳເຫັນທີ່ມີຄຸນຄ່າເຂົ້າໃນເນື້ອໃນຂອງເອກະສານສະບັບນີ້.

ພິເສດ, ຂໍສະແດງຄວາມຮູ້ບຸນຄຸນຕໍ່ຄະນະນຳກະຊວງສຶກສາທິການ ແລະ ກິລາ ແລະ ຜູ້ແທນກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທຸກທ່ານ ທີ່ໄດ້ປະກອບຄຳຄິດເຫັນ ແລະ ຂໍ້ສະເໜີແນະນຳທີ່ມີຄວາມໝາຍ ແລະ ເປັນປະໂຫຍດຕໍ່ເນື້ອໃນບົດສະຫຼຸບ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ສະບັບນີ້.

ເອກະສານທີ່ມີຄວາມໝາຍຄວາມສຳຄັນສະບັບນີ້ ຈະໄດ້ນຳອອກແຈກຢາຍ ແລະ ເຜີຍແຜ່ໄດ້ ກໍຍ້ອນໄດ້ຮັບການສະໜັບສະໜູນໃນການຈັດພິມຈາກສະຫາພາບເອີຣົບ (European Union) ປະຈຳ ສປປ ລາວ. ດັ່ງນັ້ນ, ໃນນາມຕາງໜ້າໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ກະຊວງສຶກສາທິການ ແລະ ກິລາ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຕໍ່ສະຫາພາບເອີຣົບ (EU) ປະຈຳ ສປປ ລາວ ທີ່ໃຫ້ທຶນສະໜັບສະໜູນອັນລ້ຳຄ່າໃນການຈັດພິມເອກະສານສະບັບນີ້.

**ຫົວໜ້າກົມແຜນການ**

**ພາກທີ I:**
**ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019**

# I. ພາກສະເໜີ:

ໃນສົກຮຽນ 2018-2019 ເຊິ່ງເປັນປີທີ 4 ຂອງການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020) ແລະ ເປັນປີທຳອິດທີ່ຈະຕ້ອງໄດ້ເອົາບັນດາຂໍ້ແນະນຳ ຈາກຜົນການປະເມີນກາງສະໄໝຂອງແຜນພັດທະນາຂະແໜງການສຶກສາ ມາສອດແຊກເພື່ອຈະນຳໄປຈັດຕັ້ງປະຕິບັດໃນປີຕໍ່ໄປ.

ຈຸດປະສົງໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ສົກຮຽນ 2018-2019 ຍັງແມ່ນເພື່ອສືບຕໍ່ຜັນຂະຫຍາຍບັນດານະໂຍບາຍ, ຍຸດທະສາດ ແລະ ວຽກຈຸດສຸມ ທີ່ກຳນົດຢູ່ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020) ໂດຍສະເພາະແມ່ນສືບຕໍ່ສົ່ງເສີມໃຫ້ເດັກໃນເກນອາຍຸໄດ້ເຂົ້າກຽມຄວາມພ້ອມໃນຊັ້ນການສຶກສາກ່ອນໄວຮຽນຢ່າງທົ່ວເຖິງ, ສົ່ງເສີມການເຂົ້າເຖິງການສຶກສາຂັ້ນພື້ນຖານ, ພ້ອມທັງຮັບປະກັນໃຫ້ຜົນການຮຽນຂອງນັກຮຽນໄດ້ຮັບການປັບປຸງໃຫ້ດີຂຶ້ນ, ຍົກສູງຄຸນນະພາບຂອງການສຶກສາຫຼັງຊັ້ນມັດທະຍົມໃຫ້ດີຂຶ້ນ ໂດຍເນັ້ນໃສ່ການສ້າງສີມືແຮງງານ ແລະ ນັກວິຊາການ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງສັງຄົມ, ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາແຕ່ສູນກາງຮອດທ້ອງຖິ່ນ ແລະ ສົ່ງເສີມໃຫ້ປະຊາຊົນທຸກເພດທຸກໄວຫັນມາໃສ່ໃຈການອອກກຳລັງກາຍເພື່ອສຸຂະພາບ ແລະ ສົ່ງເສີມໃຫ້ຜູ້ທີ່ມີພອນສະຫວັນດ້ານກິລາ-ກາຍຍະກຳ ໃຫ້ກາຍເປັນນັກກິລາອາຊີບ. ດັ່ງນັ້ນ, ໃນສົກຮຽນດັ່ງກ່າວນີ້ ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ກຳນົດ 15 ຄາດໝາຍຫຼັກ ແລະ 2 ຄາດໝາຍຈາກຜົນການປະເມີນກາງສະໄໝ ເພື່ອຕິດຕາມເຖິງຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019.

## 1. ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດ 15 ຄາດໝາຍຫຼັກ

ເຖິງວ່າ ມີ 7 ຄາດໝາຍ ໃນຈຳນວນ 15 ຄາດໝາຍ ທີ່ກຳນົດໃນແຜນປະຈຳສົກຮຽນ 2018-2019 ທີ່ບໍ່ສາມາດບັນລຸໄດ້ຕາມແຜນ ແຕ່ກໍເຫັນວ່າ ມີ 2 ຄາດໝາຍທີ່ສາມາດບັນລຸໄດ້ສູງກວ່າຄາດໝາຍທີ່ກຳນົດ, ໃນຂະນະທີ່ມີ 6 ຄາດໝາຍທີ່ສາມາດປະຕິບັດໄດ້ດີຂຶ້ນເມື່ອທຽບໃສ່ສົກຮຽນ 2017-2018 ເຊິ່ງໃນນີ້ມີບາງຄາດໝາຍກໍ່ໃກ້ຈະບັນລຸ, ຊຶ່ງລາຍລະອຽດມີຄືດັ່ງນີ້:

### 1.1. ຄາດໝາຍທີ່ສາມາດບັນລຸໄດ້ ມີ 2 ຄາດໝາຍດັ່ງນີ້:

1) ອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຈາກ 77,1% ເປັນ 79,4% (ຄາດໝາຍ 79%); ໃນນັ້ນມີ 135 ເມືອງທີ່ມີອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ສູງກວ່າ 60% (ຄາດໝາຍ 130 ເມືອງ).
2) ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາ ບັນລຸໄດ້ 99,1% (ຄາດໝາຍ 98,9%).

### 1.2. ຄາດໝາຍທີ່ປະຕິບັດໄດ້ດີຂຶ້ນເມື່ອທຽບໃສ່ສົກຮຽນ 2017-2018 ແຕ່ຍັງບໍ່ສາມາດບັນລຸໄດ້ຕາມຄາດໝາຍທີ່ກຳນົດ ມີ 6 ຄາດໝາຍດັ່ງນີ້:

1) ອັດຕາຄ້າງຫ້ອງຂອງນັກຮຽນ ຂັ້ນ ປ.1 ຫຼຸດລົງຈາກ 8,8% ເປັນ 8,4% (ຄາດໝາຍ 8%).
2) ອັດຕາຄ້າງຫ້ອງຂອງນັກຮຽນຊັ້ນປະຖົມ ຫຼຸດລົງຈາກ 4% ເປັນ 3,8% (ຄາດໝາຍ 3%).
3) ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນໃໝ່ລວມ ຂັ້ນ ປ.5 ສູງກວ່າ 95% ເພີ່ມຈາກຈຳນວນ 127 ເມືອງ ເປັນ 134 ເມືອງ (ຄາດໝາຍ 135 ເມືອງ).
4) ອັດຕາເຂົ້າຮຽນລວມ ຊັ້ນມັດທະຍົມຕອນປາຍ ເພີ່ມຂຶ້ນ ຈາກ 53,3% ເປັນ 54,8% (ຄາດໝາຍ 55%).

5) ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາເພີ່ມຂຶ້ນຈາກ 3% ເປັນ 3,3% (ຄາດໝາຍ 4%).
6) ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວ ໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍະກຳ ເພີ່ມຂຶ້ນຈາກ 22% ເປັນ 24% ຂອງພົນລະເມືອງ (ຄາດໝາຍ 26%).

### 1.3. ຄາດໝາຍທີ່ມີທ່າອ່ຽງທົດຖອຍ ທຽບໃສ່ປີຜ່ານມາ ມີ 7 ຄາດໝາຍດັ່ງນີ້:

1) ອັດຕາປະລະການຮຽນ ຂອງນັກຮຽນ ຊັ້ນ ປ.1 ເພີ່ມຂຶ້ນຈາກ 5,8% ເປັນ 6,3% (ຄາດໝາຍ 5%).
2) ອັດຕາປະລະການຮຽນ ຂອງນັກຮຽນຊັ້ນປະຖົມສຶກສາ ເພີ່ມຂຶ້ນ ຈາກ 4% ເປັນ 4,3% (ຄາດໝາຍ 3%).
3) ອັດຕາລອດເຫຼືອຮອດ ຊັ້ນ ປ.5 ຫຼຸດລົງຈາກ 82,2% ເປັນ 82% (ຄາດໝາຍ 84%) .
4) ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນຫຼຸດລົງຈາກ 83,1% ເປັນ 82,8% (ຄາດໝາຍ 84%).
5) ຈຳນວນແຂວງທີ່ບັນລຸອັດຕາເຂົ້າຮຽນໃໝ່ລວມ ຊັ້ນ ມ.4 ຂອງນັກຮຽນຍິງສູງກວ່າ 70% ຫຼຸດລົງ ຈາກ 12 ແຂວງ ເປັນ 10 ແຂວງ (ຄາດໝາຍ 14 ແຂວງ).
6) ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ເພີ່ມຂຶ້ນຈາກ 9,2% ເປັນ 9,5% (ຄາດໝາຍ 8,5%).
7) ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນປາຍເພີ່ມຂຶ້ນຈາກ 7,1% ເປັນ 8,1% (ຄາດໝາຍ 6,5%).

## 2. ຜົນສຳເລັດການຈັດຕັ້ງປະຕິບັດວຽກຂອງຂະແໜງການຍ່ອຍ

### 2.1. ການສຶກສາກ່ອນໄວຮຽນ

ກະຊວງສຶກສາທິການ ແລະ ກິລາ ຍັງຖືເອົາການການຂະຫຍາຍຕາໜ່າງການສຶກສາກ່ອນໄວຮຽນ ເປັນບູລິມະສິດ ໂດຍສະເພາະແມ່ນຂະຫຍາຍໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມ, ອັນເຮັດໃຫ້ ໃນສົກຮຽນ 2018-2019 ໃນທົ່ວປະເທດ ມີໂຮງຮຽນອະນຸບານທັງໝົດ 3.432 ແຫ່ງ, ເພີ່ມຂຶ້ນ 221 ແຫ່ງ ທຽບໃສ່ປີຜ່ານມາ, ໃນນີ້ ໂຮງຮຽນລັດ ເພີ່ມຂຶ້ນ 181 ແຫ່ງ ແລະ ເອກະຊົນເພີ່ມຂຶ້ນ 20 ແຫ່ງ. ມີນັກຮຽນເພີ່ມຂຶ້ນຈາກ 229.892 ຄົນ ເປັນ 240.384 ຄົນ. ພ້ອມນີ້ ກໍ່ເຮັດໃຫ້ອັດຕາເຂົ້າຮຽນຂອງເດັກ 3-5 ປີ ເພີ່ມຈາກ 56,3% ເປັນ 59% ແລະ ອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຈາກ 77,1% ເປັນ 79,4%. ໂດຍລວມເຫັນວ່າການສຶກສາກ່ອນໄວຮຽນ ໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆມາ.

### 2.2. ການສຶກສາຊັ້ນປະຖົມ:

ສະພາບການພັດທະນາການສຶກສາຊັ້ນປະຖົມ ເມື່ອທຽບໃສ່ຫຼາຍປີຜ່ານມາເຫັນວ່າມີທ່າອ່ຽງທີ່ດີ, ທັງນີ້ກໍຍ້ອນວ່າກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ຊຸກຍູ້ຕິດຕາມການຮຽນ-ການສອນ, ປັບປຸງຫຼັກສູດການສິດສອນຈຳນວນໜຶ່ງ ລວມທັງໄດ້ສະໜອງປຶ້ມແບບຮຽນ ແລະ ອຸປະກອນຮັບໃຊ້ການສິດສອນ ໃຫ້ແກ່ບັນດາໂຮງຮຽນປະຖົມໃນທົ່ວປະເທດ. ດັ່ງນັ້ນ, ຈຶ່ງເຮັດໃຫ້ອັດຕາເຂົ້າຮຽນສຸດທິເພີ່ມຂຶ້ນໜ້ອຍໜຶ່ງຈາກ 98,8% ໃນສົກຮຽນ 2017-2018 ເປັນ 99,1% ໃນສົກຮຽນ 2018-2019 ແລະ ອັດຕາຄ້າງຫ້ອງປະຖົມຫຼຸດລົງຈາກ 4% ເປັນ 3,8%. ຍ້ອນໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດອັນຮ້າຍແຮງໃນປີຜ່ານມາ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນພົບຄວາມຫຍຸ້ງຍາກ, ພື້ນຖານໂຄງລ່າງດ້ານການສຶກສາຈຳນວນໜຶ່ງຖືກທຳລາຍ. ດັ່ງນັ້ນ, ຈຶ່ງເຮັດໃຫ້ໂຮງຮຽນຫຼາຍແຫ່ງບໍ່ສາມາດດຳເນີນການຮຽນ-ການສອນໄດ້ທັນເວລາ. ນອກຈາກນັ້ນ ຄອບຄົວທີ່ຖືກຜົນກະທົບຈາກໄພທຳມະຊາດ ຈຳເປັນຕ້ອງໄດ້ຍົກຍ້າຍບ່ອນທຳມາຫາກິນ ອັນເຮັດໃຫ້ລູກຫຼານຂອງເຂົາເຈົ້າຈຳເປັນຕ້ອງຕິດຕາມຄອບຄົວໄປ ແລ້ວກໍປະລະການຮຽນ. ນອກນັ້ນ ກໍມີປັດໄຈດ້ານເສດຖະກິດ ແລະ ອື່ນໆ ຈຶ່ງເຮັດໃຫ້ອັດຕາປະລະການຮຽນຂອງນັກຮຽນມີທ່າອ່ຽງເພີ່ມຂຶ້ນ ຈາກ 4% ເປັນ 4,3%. ເວົ້າລວມ ຕົວຊີ້ບອກຂອງການສຶກສາຊັ້ນປະຖົມໃນສົກຮຽນ 2018-2019 ແມ່ນມີທ່າອ່ຽງອ່ອນກວ່າປີຜ່ານມາ ເຊັ່ນ: ຈຳນວນເມືອງທີ່ມີອັດຕາປະລະຊັ້ນປະຖົມ

ສຶກສາ ຕ່ຳກວ່າ 6% ຫຼຸດຈາກ 119 ເມືອງ ເປັນ 118 ເມືອງ, ຈຳນວນເມືອງທີ່ມີອັດຕາຄ້າງຫ້ອງປະຖົມ ເພີ່ມຂຶ້ນ ທຽບໃສ່ປີຜ່ານມາ ມີ 74 ເມືອງ, ໃນຂະນະທີ່ຈຳນວນເມືອງ ທີ່ມີອັດຕາປະລະເພີ່ມຂຶ້ນ ມີ 70 ເມືອງ.

## 2.3. ການສຶກສາຊັ້ນມັດທະຍົມ (ຕອນຕົ້ນ ແລະ ຕອນປາຍ)

ໃນສົກຮຽນ 2018-2019 ເຖິງວ່າ ໄດ້ມີການຂະຫຍາຍໂຮງຮຽນມັດທະຍົມອອກຕື່ມຈຳນວນ 34 ແຫ່ງ ໃນທົ່ວປະເທດ ອັນເຮັດໃຫ້ມີຈຳນວນໂຮງຮຽນທັງໝົດ 1.792 ແຫ່ງ, ແຕ່ເຫັນວ່າ ຈຳນວນນັກຮຽນລວມທັງມັດທະຍົມຕອນຕົ້ນ ແລະ ຕອນປາຍຫຼຸດລົງເຖິງ 11.214 ຄົນ ຖ້າທຽບໃສ່ປີຜ່ານມາ, ທັງນີ້ກໍຍ້ອນອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ.5 ຂຶ້ນ ມ.1 ຫຼຸດລົງຈາກ 89,7% ໃນສົກຮຽນ 2016-2017 ເປັນ 88% ໃນສົກຮຽນ 2017-2018 ແລະ ເປັນ 87,9% ໃນສົກຮຽນ 2018-2019. ດັ່ງນັ້ນ, ຈຶ່ງເຮັດໃຫ້ອັດຕາເຂົ້າຮຽນລວມຊັ້ນມັດທະຍົມສຶກສາຕອນຕົ້ນຫຼຸດລົງຈາກ 83,1% ເປັນ 82,8%. ໃນຂະນະດຽວກັນ ອັດຕາການປະລະການຮຽນກໍເພີ່ມຂຶ້ນຈາກ 9,2% ເປັນ 9,5% ທຽບໃສ່ປີຜ່ານມາ. ສ່ວນອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍເພີ່ມຂຶ້ນພຽງເລັກນ້ອຍຈາກ 53,3% ເປັນ 54,8%, ໃນຂະນະ ທີ່ອັດຕາປະລະກໍເພີ່ມຂຶ້ນ 1% ຈາກ 7,1 % ເປັນ 8,1% ທຽບໃສ່ປີຜ່ານມາ. ເຊັ່ນດຽວກັບວຽກງານປະຖົມສຶກສາ, ການແກ້ໄຂບັນຫາການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາ ແມ່ນຍັງບໍ່ທັນໄດ້ຮັບການເອົາໃຈໃສ່ຈາກທຸກພາກສ່ວນທີ່ກ່ຽວຂ້ອງ. ສາຍເຫດທີ່ແທ້ຈິງຂອງການປະລະການຮຽນຂອງນັກຮຽນ ຍັງບໍ່ໄດ້ຮັບການສຶກສາ ແລະ ວິໄຈຢ່າງມີວິທະຍາສາດ ແລະ ເປັນລະບົບ.

## 2.4. ການສຶກສານອກໂຮງຮຽນ

ກະຊວງສຶກສາທິການ ແລະ ກິລາ ໄດ້ຖືເອົາການສຶກສານອກໂຮງຮຽນ ເປັນສ່ວນໜຶ່ງຂອງລະບົບການສຶກສາແຫ່ງຊາດ ເພື່ອເຮັດໜ້າທີ່ສະໜອງການຮຽນ-ການສອນບຳລຸງຊັ້ນປະຖົມ ໃຫ້ແກ່ເດັກນ້ອຍກຸ່ມເປົ້າໝາຍທີ່ພາດໂອກາດທາງການສຶກສາຢູ່ບັນດາແຂວງຕ່າງໆ. ນອກຈາກນັ້ນ, ກໍສະໜອງການຮຽນ-ການສອນບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມໃຫ້ກຸ່ມເປົ້າໝາຍທີ່ຈົບປະຖົມ ແລະ ທຽບເທົ່າຢູ່ທີ່ສູນການສຶກສານອກໂຮງຮຽນຂັ້ນຕ່າງໆ. ໃນສົກຮຽນ 2018-2019 ສາມາດປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວເມືອງ ໄດ້ 23 ເມືອງ ເຊິ່ງແມ່ນຫຼຸດຄາດໝາຍ 1 ເມືອງ ເມື່ອທຽບໃສ່ຄາດໝາຍທີ່ວາງໄວ້ໃຫ້ສຳເລັດ 24 ເມືອງ ແລະ ປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວແຂວງ ໄດ້ 2 ແຂວງ. ຮອດປະຈຸບັນນີ້ ໃນທົ່ວປະເທດໄດ້ສຳເລັດການບຳລຸງຈົບຊັ້ນມັດທະຍົມຕອນຕົ້ນໄປແລ້ວທັງໝົດ 133 ເມືອງ.

ສ່ວນປະເດັນບັນຫາສຳລັບການສຶກສານອກໂຮງຮຽນ ກໍຍັງເປັນບັນຫາເກົ່າທີ່ຍັງບໍ່ສາມາດແກ້ໄຂໄດ້ ເຊັ່ນ: ກຸ່ມເປົ້າໝາຍຜູ້ຮຽນສ່ວນຫຼາຍບໍ່ຢາກຮຽນຍ້ອນຂາດແຮງງານໃນຄອບຄົວ, ການດຳລົງຊີວິດຢູ່ກະແຈກກະຈາຍ, ລະບົບການເກັບກຳຂໍ້ມູນສະຖິຕິການສຶກສານອກໂຮງຮຽນຍັງບໍ່ທັນຮັບປະກັນ ແລະ ຍັງບໍ່ທັນໄດ້ວິເຄາະເພື່ອຊອກຫາບັນຫາ, ສາເຫດ ແລະ ວິທີການແກ້ໄຂຕາມສະພາບຄວາມເປັນຈິງ. ການສະຫຼຸບລາຍງານໃນຂັ້ນຕ່າງໆ ກໍຍັງຊັກຊ້າ, ຄຸນນະພາບການຮຽນ-ການສອນບຳລຸງຍົກລະດັບການສຶກສາຊັ້ນຕ່າງໆ ຍັງບໍ່ທັນສູງ ແລະ ຍັງແລ່ນນຳປະລິມານຫຼາຍ ຂາດຄູສອນບຳລຸງຊັ້ນມັດທະຍົມຕົ້ນສຳລັບປະຊາຊົນໃນເຂດຫ່າງໄກສອກຫຼີກ.

## 2.5. ການສຶກສາຄູ

ໂດຍອີງໃສ່ສະພາບນັກສຶກສາຄູທີ່ຮຽນຈົບອອກໄປໃນແຕ່ລະປີ ບໍ່ໄດ້ຮັບການບັນຈຸມີຈຳນວນຫຼວງຫຼາຍ. ດັ່ງນັ້ນ, ໃນສົກຮຽນ 2018-2019 ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ຫຼຸດການຮັບນັກຮຽນຄູເຂົ້າຮຽນໃນສະຖາບັນສ້າງຄູຕ່າງໆ ປະມານ 14% ທຽບໃສ່ປີຜ່ານມາ. ໃນສົກຮຽນດັ່ງກ່າວນີ້ ມີນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນປາຍສະໝັກເຂົ້າຮຽນຢູ່ສະບັນສ້າງຄູຕ່າງໆ ທົ່ວປະເທດ ຈຳນວນທັງໝົດ 3.659 ຄົນ, ໃນນີ້ ຄູອະນຸບານ 527 ຄົນ, ຄູປະຖົມ 329 ຄົນ, ຄູມັດທະຍົມ 1.701 ຄົນ, ຄູພະລະ ແລະ ສິລະປະສຶກສາ 282 ຄົນ ແລະ ນອກນັ້ນ ຍັງມີນັກສຶກສາຄູສາຍສົງອີກຈຳນວນໜຶ່ງ. ການຮັບນັກສຶກສາຄູແມ່ນອີງຕາມອັດຕາສ່ວນສອບເສັງ 80%; ຕົວເລກແບ່ງປັນ 20%; ໃນນັ້ນ 10% ໄດ້ຮັບເບ້ຍລ້ຽງ ໂດຍແມ່ນແຂວງເປັນຜູ້ຄັດເລືອກ ແລະ ອີກ 10% ແມ່ນວິທະຍາໄລຄູເປັນຜູ້ຄັດເລືອກໂດຍອີງຕາມຜົນການສອບເສັງຄັດເລືອກເຂົ້າຮຽນ.

ໃນສົກຮຽນດຽວກັນນີ້ ມີນັກສຶກສາຄູທີ່ຮຽນຈົບອອກຈາກສະຖາບັນສ້າງຄູຕ່າງໆ ຈຳນວນ 3.124 ຄົນ, ທຽບໃສ່ປີຜ່ານມາ ຫຼຸດລົງປະມານ 46,5%. ໃນນີ້ ຄູອະນຸບານມີ 466 ຄົນ, ຄູປະຖົມ 204 ຄົນ, ຄູມັດທະຍົມ 1.960 ຄົນ, ຄູພະລະ ແລະ ສິລະປະສຶກສາ 372 ຄົນ ແລະ ຄູສົງອີກຈຳນວນ 122 ອົງ.

ບັນຫາຄຸນນະພາບຂອງນັກຮຽນຄູທີ່ຖືກນຳສົ່ງມາຈາກທ້ອງຖິ່ນ ຍັງເປັນປະເດັນທີ່ຈະຕ້ອງໄດ້ປັບປຸງ ເພື່ອໃຫ້ໄດ້ຄູທີ່ມີຄວາມຮູ້ ແລະ ຄວາມສາມາດ ຕາມມາດຕະຖານທີ່ກຳນົດ. ນອກຈາກນັ້ນ ການປະເມີນຄວາມຮູ້ ແລະ ຈັນຍາບັນຂອງຄູປະຈຳການຊັ້ນປະຖົມ ແລະ ມັດທະຍົມ ກໍຈຳເປັນຕ້ອງໄດ້ປະຕິບັດໃຫ້ເປັນຮູບປະທຳ ເພື່ອແນໃສ່ປັບປຸງຜົນການຮຽນຂອງນັກຮຽນໃຫ້ດີຂຶ້ນ.

## 2.6. ວຽກງານອາຊີວະສຶກສາ

ໂດຍສົມທົບກັບຂະແໜງການຕ່າງໆທັງພາກລັດ ແລະ ເອກະຊົນ, ກະຊວງສຶກສາທິການ ແລະ ກິລາ ໄດ້ພະຍາຍາມສົ່ງເສີມ ແລະ ຊຸກຍູ້ໃຫ້ ຜູ້ທີ່ຮຽນຈົບຈາກໂຮງຮຽນມັດທະຍົມທັງຕອນຕົ້ນ ແລະ ຕອນປາຍ ໄດ້ເຂົ້າຮຽນໃນສາຍວິຊາຊີບໃຫ້ຫຼາຍຂຶ້ນ ໂດຍໄດ້ສະໜອງຫຼັກສູດທີ່ຫຼາກຫຼາຍ ແລະ ຫຼາຍຮູບແບບ. ໃນສົກຮຽນ 2018-2019 ນີ້ມີຜູ້ສະໝັກເຂົ້າຮຽນໃນສາຍອາຊີວະສຶກສາທຸກລະບົບ ທັງພາກລັດ ແລະ ເອກະຊົນ ທັງໝົດຈຳນວນ 31.835 ຄົນ ໃນນີ້ ເຂົ້າຮຽນໃນສະຖາບັນທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ມີ 17.829 ຄົນ, ສະຖາບັນທີ່ຂຶ້ນກັບຂະແໜງການອື່ນໆ ເຊັ່ນ: ຂະແໜງກະສິກຳ, ການເງິນ, ສາທາລະນະສຸກ, ຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ ແລະ ຍຸຕິທຳ ມີ 6.458 ຄົນ ແລະ ເຂົ້າຮຽນໃນສະຖາບັນພາກເອກະຊົນຈຳນວນ 7.548 ຄົນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ມີນັກຮຽນທັງໝົດທີ່ກຳລັງຮຽນຢູ່ໃນສະຖາບັນອາຊີວະສຶກສາທັງພາກລັດ ແລະ ເອກະຊົນທັງໝົດ 75.466 ຄົນ, ໃນຂະນະທີ່ ສົກຮຽນ 2017-2018 ມີນັກສຶກສາທີ່ຮຽນຈົບອອກທັງໝົດ ທັງພາກລັດ ແລະ ເອກະຊົນ ມີ 14.153 ຄົນ, ໃນນັ້ນ ຮຽນຈົບຂະແໜງກະສິກຳ 1.513 ຄົນ, ຮຽນຈົບຂະແໜງອຸດສາຫະກຳ ຈຳນວນ 6.212 ຄົນ ແລະ ຂະແໜງບໍລິການ ທັງໝົດ 6.428 ຄົນ.

ບັນຫາການລົງທຶນເຂົ້າໃສ່ອຸປະກອນຮັບໃຊ້ການຮຽນ-ການສອນ ຖືເປັນວຽກບູລິມະສິດ ທີ່ຜູ້ບໍລິຫານສະຖານອາຊີວະສຶກສາຈະຕ້ອງພິຈາລະນາ ໂດຍນຳໃຊ້ລາຍຮັບວິຊາການ ແລະ ງົບປະມານບໍລິຫານທີ່ລັດຖະບານສະໜອງໃຫ້. ນອກຈາກນັ້ນ, ການສະໜອງ ແລະ ພັດທະນາຫຼັກສູດໃຫ້ສອດຄ່ອງກັບທ່າແຮງໃນການພັດທະນາຂອງທ້ອງຖິ່ນແມ່ນມີຄວາມຈຳເປັນ ພ້ອມທັງເພີ່ມການຮ່ວມມືກັບຜູ້ປະກອບການ ແລະ ຜູ້ລົງທຶນ ໃນແຕ່ລະທ້ອງຖິ່ນ.

## 2.7. ວຽກງານການສຶກສາຊັ້ນສູງ

ໃນສົກຮຽນ 2018-2019 ກະຊວງສຶກສາທິການ ແລະ ກິລາ ຍັງສືບຕໍ່ປະຕິບັດນະໂຍບາຍ ໃຫ້ທຶນການສຶກສາ ແກ່ນັກຮຽນເກັ່ງ ແລະ ຜູ້ທີ່ດ້ອຍໂອກາດ ໃນສັດສ່ວນ 20% ຂອງແຜນຮັບນັກສຶກສາທັງໝົດ ແລະ ອີກ 80% ແມ່ນຜ່ານການສອບເສັງຄັດເລືອກ ແລະ ຈ່າຍຄ່າຮຽນດ້ວຍຕົນເອງ. ໃນສົກຮຽນ 2018-2019 ມີນັກສຶກສາທີ່ເຂົ້າຮຽນໃໝ່ໃນມະຫາວິທະຍາໄລ 4 ແຫ່ງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ແລະ ອີກ 1 ແຫ່ງ ທີ່ຂຶ້ນກັບກະຊວງສາທາລະນະສຸກ ທັງໝົດ 12.258 ຄົນ, ໃນຂະນະດຽວກັນ ມີນັກສຶກສາທີ່ກຳລັງສຶກສາຢູ່ທັງໝົດ 39.497 ຄົນ.

ໃນສົກຮຽນ 2018-2019 ມີນັກສຶກສາທີ່ຮຽນຈົບອອກຈາກບັນດາມະຫາວິທະຍາໄລຕ່າງໆ ຖ້າແຍກຕາມກຸ່ມການສຶກສາມີດັ່ງນີ້: 1) ກຸ່ມການສຶກສາ ແລະ ກິລາ ມີ 1.165 ຄົນ; 2) ກຸ່ມພາສາ ແລະ ມະນຸດສາດ ມີ 592 ຄົນ; 3) ກຸ່ມສັງຄົມສາດ ມີ 685 ຄົນ; 4) ກຸ່ມທຸລະກິດ, ການບໍລິຫານ ແລະ ກົດໝາຍ ມີ 2.601 ຄົນ; 5) ກຸ່ມເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ມີ 74 ຄົນ; 6) ກຸ່ມວິທະຍາສາດ ມີ 480 ຄົນ; 7) ກຸ່ມວິສາວະກຳສາດ ມີ 1.890 ຄົນ; 8) ກຸ່ມກະສິກຳ ແລະ ປ່າໄມ້ ມີ 985 ຄົນ; 9) ກຸ່ມສຸຂະພາບ ແລະ ສະຫວັດດີການສັງຄົມ ມີ 219 ຄົນ ແລະ 10) ກຸ່ມການບໍລິການ ມີ 89 ຄົນ.

ການຍົກສູງຄຸນນະພາບການຮຽນ-ການສອນຢູ່ບັນດາມະຫາວິທະຍາໄລຕ່າງໆ ເປັນວຽກບູລິມະສິດ ທີ່ຜູ້ບໍລິຫານລະດັບສູງຂອງມະຫາວິທະຍາໄລ ຈະຕ້ອງໄດ້ເອົາໃຈໃສ່ເພື່ອໃຫ້ສາມາດສ້າງນັກວິຊາການທີ່ມີຄວາມຮູ້ ແລະ

ຄວາມສາມາດສູງ. ຜ່ານມາ, ບັນດາສະຖາບັນການສຶກສາຊັ້ນສູງຕ່າງໆ ຍັງບໍ່ໄດ້ລົງທຶນເຂົ້າໃນການສະໜອງເຄື່ອງທົດລອງ, ຫ້ອງປະຕິບັດງານ ແລະ ປຶ້ມແບບຮຽນຕ່າງໆ ເຂົ້າໃນຫ້ອງສະໝຸດໃຫ້ພຽງພໍ.

## 2.8. ວຽກງານກິລາ - ກາຍຍະກຳ

ຂະແໜງການຍ່ອຍກິລາ-ກາຍະກຳ ເປັນຂະແໜງການຍ່ອຍໜຶ່ງຂອງກະຊວງສຶກສາທິການ ແລະ ກິລາ ທີ່ເຮັດໜ້າທີ່ ໃນການສົ່ງເສີມການອອກກຳລັງກາຍຂອງທົ່ວປວງຊົນລາວ ລວມທັງເຮັດໜ້າທີ່ສົ່ງເສີມກິລາອາຊີບ, ໃນສົກຮຽນປີຜ່ານມາ ໄດ້ຈັດຕັ້ງຂະບວນການອອກກຳລັງກາຍໃນວັນສຳຄັນຕ່າງໆ ໂດຍໄດ້ສົມທົບກັບ ສະຫະພັນກິລາແຫ່ງຊາດ ຈັດການແຂ່ງຂັນກິລາລະດັບນາໆຊາດ, ແຂ່ງຂັນກິລາປະຈຳປີ, ຊິງຂັນຜູ້ນຳ ພັກ-ລັດ ແລະ ສະຫຼອງວັນສຳຄັນຂອງຊາດ ຈຳນວນ 60 ຄັ້ງ ມີ 26 ປະເພດກິລາ ເຂົ້າຮ່ວມ ແລະ ຜູ້ເຂົ້າຮ່ວມທັງໝົດ 2.500 ຄົນ;

ໂດຍໄດ້ສົມທົບກັບສະຫະພັນກິລາແຫ່ງຊາດ ແລະ ຄະນະກຳມະການໂອແລມປິກແຫ່ງຊາດລາວ ໄດ້ສົ່ງນັກກິລາທີມຊາດລາວ ເຂົ້າຮ່ວມການແຂ່ງຂັນຊິງແຊ້ມນາໆຊາດ ຕາມການເຊື້ອເຊີນ ຈຳນວນ 71 ຄັ້ງ, ມີ 26 ປະເພດກິລາ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 851 ເທື່ອຄົນ ແລະ ສາມາດຍາດໄດ້ 17 ຫຼຽນຄຳ, 21 ຫຼຽນເງິນ ແລະ 31 ຫຼຽນທອງ. ພິເສດແມ່ນຄະນະນັກກິລາບານເຕະຍິງ ລຸ້ນອາຍຸ 19 ປີ ສາມາດຍາດໄດ້ 1 ຫຼຽນຄຳ ຮ່ວມກັບປະເທດເຈົ້າພາບທີ່ປະເທດ ບັງກະລາເທດ, ຫຼຽນເງິນກິລາບານເຕະຍິງ ລາຍການ U-15 AFF ທີ່ປະເທດໄທເປັນເຈົ້າພາບ ແລະ ປະເພດກິລາແລ່ນ-ລານ ເຂົ້າຮ່ວມການແຂ່ງຂັນໃນລາຍການໄທແລນໂອເພັນ 2019 ສາມາດຍາດໄດ້ 1 ຫຼຽນຄຳ ຈາກລາຍການແລ່ນຂ້າມຮົ້ວ 110 ແມັດຊາຍ, ຫຼຽນເງິນທີມຍິງ 4x100 ແມັດ ແລະ ຫຼຽນທອງແລ່ນຂ້າມຮົ້ວຍິງ 100 ແມັດ; ນັກຮຽນກິລາຂອງໂຮງຮຽນພອນສະຫວັນກິລາ-ກາຍຍະກຳ ເຂົ້າຮ່ວມແຂ່ງຂັນລະດັບນາໆຊາດ 7 ຄັ້ງ ມີຈຳນວນ ນັກຮຽນກິລາເຂົ້າຮ່ວມ 22 ນ້ອງ, ຍາດໄດ້ 3 ຫຼຽນເງິນ, 5 ຫຼຽນທອງ ລວມທັງໝົດ 8 ຫຼຽນ.

## 2.9. ວຽກງານການບໍລິຫານ - ຄຸ້ມຄອງການສຶກສາ

ວຽກງານການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ເປັນປັດໃຈຕັດສິນ ເພື່ອເຮັດໃຫ້ລະບົບການສຶກສາໄດ້ຮັບການປັບປຸງດີຂຶ້ນ ບໍ່ວ່າຈະເປັນການຄຸ້ມຄອງການຮຽນ-ການສອນ, ຄຸ້ມຄອງຄູສອນ ແລະ ພະນັກງານ ຄຸ້ມຄອງການເງິນ ກໍຄືຄຸ້ມຄອງການຈັດຕັ້ງປະຕິບັດແຜນນະໂຍບາຍໃນການພັດທະນາການສຶກສາ ແລະ ກິລາ. ດັ່ງນັ້ນ, ໃນສົກຮຽນຜ່ານມາ ກະຊວງສຶກສາທິການ ແລະ ກິລາ ໄດ້ຖືເອົາການເຊື່ອມຊຶມບັນດາມະຕິຄຳສັ່ງ ແລະ ນະໂຍບາຍຕ່າງໆຂອງລັດຖະບານໃຫ້ແກ່ຜູ້ບໍລິຫານການສຶກສາທຸກຂັ້ນ, ໄດ້ສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆ ເພື່ອໃຫ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດນະໂຍບາຍດ້ານການສຶກສາ ເຊັ່ນ: ໄດ້ສຳເລັດການສ້າງ, ຮັບຮອງ ແລະ ປະກາດໃຊ້ຄູ່ມືແນະນຳການສັບຊ້ອນ, ນຳໃຊ້ ແລະ ສ້າງແຜນຄວາມຕ້ອງການຄູປະຈຳປີ (ສະບັບປັບປຸງຄັ້ງທີ 2) ພ້ອມທັງຈັດຝຶກອົບຮົມໃຫ້ແກ່ພະນັກງານຈັດຕັ້ງໃນພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ໃນທົ່ວປະເທດ; ສຳເລັດການສ້າງ ແລະ ຮັບຮອງການນຳໃຊ້ປຶ້ມຄູ່ມືແນະນຳວິທີການຈັດສັນງົບປະມານ ໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ໃຫ້ມີຄວາມເປັນເອກະພາບ ແລະ ຍຸຕິທຳ ໂດຍສະເພາະແມ່ນພາກລາຍຈ່າຍບໍລິຫານປົກກະຕິ (ພາກ 62) ແລະ ພາກດັດສົມ-ສົ່ງເສີມ ແລະ ບຳລຸງ (ພາກ 63). ນອກນັ້ນ, ກໍໄດ້ປັບປຸງກົດໝາຍວ່າດ້ວຍອາຊີວະສຶກສາ ແລະ ນິຕິກຳລຸ່ມກົດໝາຍອີກຈຳນວນໜຶ່ງ.

ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງແຜນການ ແລະ ການເງິນ, ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ພັດທະນາລະບົບຄຸ້ມຄອງແຜນການ ແລະ ການເງິນໃຫ້ທັນສະໄໝ ໂດຍນຳໃຊ້ລະບົບຄອມພິວເຕີເຂົ້າມາຊ່ວຍ ພ້ອມດຽວກັນນັ້ນ ກໍຍັງໄດ້ດັດປັບຫຼັກສູດຝຶກອົບຮົມການສ້າງແຜນພັດທະນາການສຶກສາ ຊຶ່ງເປັນຫຼັກສູດຂອງສະຖາບັນນານາຊາດເພື່ອການວາງແຜນການສຶກສາປະເທດຝຣັ່ງ ໃຫ້ກາຍມາເປັນຫຼັກສູດຂອງເຮົາເອງ ໂດຍແມ່ນສະຖາບັນພັດທະນາການບໍລິຫານການສຶກສາເປັນຜູ້ພັດທະນາ ເພື່ອກະກຽມໃຫ້ແກ່ການຝຶກອົບຮົມໃຫ້ແກ່ ຜູ້ບໍລິຫານການສຶກສາແຕ່ສູນກາງຮອດທ້ອງຖິ່ນ ໃນປີຕໍ່ໄປ.

ພິເສດ ເພື່ອເປັນການສ້າງພະນັກງານສືບທອດ, ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ຈັດສົ່ງພະນັກງານລົງຮາກຖານຢູ່ຂັ້ນແຂວງ/ນະຄອນຫຼວງ ແລະ ບັນດາເມືອງເປົ້າໝາຍຈຳນວນໜຶ່ງ ເພື່ອຈັດຕັ້ງປະຕິບັດໂຄງການຍົກສູງຄຸນນະພາບການສຶກສາໃນເຂດຫ່າງໄກສອກຫຼີກ ຕິດພັນກັບຂະບວນການຮັກຊາດພັດທະນາ ຕາມທິດ 3 ສ້າງ.

ເຖິງຢ່າງໃດກໍຕາມ, ປະເດັນບັນຫາທີ່ຍັງແກ້ໄຂບໍ່ທັນໄດ້ຢ່າງເປັນຮູບປະທຳ ກໍຄືການປະເມີນການປະຕິບັດ ໜ້າທີ່ຂອງຜູ້ບໍລິຫານການສຶກສາ ລວມທັງການປະຕິບັດໜ້າທີ່ຂອງຄູສອນ; ການສັບຊ້ອນຄູສອນຈາກບ່ອນທີ່ເຫຼືອ ໄປສິດສອນຢູ່ທີ່ໂຮງຮຽນທີ່ຂາດເຂີນຄູກໍຍັງບໍ່ທັນສາມາດປະຕິບັດໄດ້. ນອກນັ້ນ, ຍັງບໍ່ທັນມີກົນໄກທີ່ຊັດເຈນ ໃນການຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ ແລະ ມະຕິຄຳສັ່ງຕ່າງໆ ລວມທັງ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາໃນແຕ່ລະໄລຍະ. ການຈັດສັນງົບປະມານ ລວມທັງການຄຸ້ມຄອງການໃຊ້ຈ່າຍງົບປະມານຍັງຈຳເປັນຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ ເພື່ອໃຫ້ການນຳໃຊ້ງົບປະມານທີ່ມີຈຳກັດ ມີປະສິດທິພາບຫຼາຍຂຶ້ນກວ່າເກົ່າ.

## 3. ຂໍ້ມູນດ້ານການສຶກສາສັງລວມໂດຍຫຍໍ້ໃນສົກຮຽນ 2018-2019

### 3.1. ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນ

**ຕາຕະລາງທີ 1: ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນພາກລັດ**

| ລ/ດ | | 2017-2018 | | | | 2018-2019 | | | |
|---|---|---|---|---|---|---|---|---|---|
| | | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| 1 | ອະນຸບານ | 5.312 | 2.742 | 7.397 | 182.647 | 5.657 | 2.923 | 7.739 | 191.261 |
| 2 | ປະຖົມສຶກສາ | 32.383 | 8.604 | 33.948 | 737.484 | 32.074 | 8.570 | 33.533 | 717.853 |
| 3 | ມັດທະຍົມຕອນຕົ້ນ | 12.154 | 905 | 24.988 | 432.961 | 12.308 | 897 | 25.041 | 426.822 |
| 4 | ມັດທະຍົມຕອນປາຍ | 5.734 | 36 | 11.789 | 217.909 | 5.840 | 34 | 11.878 | 211.686 |
| 5 | ມັດທະຍົມສົມບູນ | | 716 | | | | 748 | | |

**ຕາຕະລາງທີ 2: ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນພາກເອກະຊົນ**

| ລ/ດ | | 2017-2018 | | | | 2018-2019 | | | |
|---|---|---|---|---|---|---|---|---|---|
| | | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| 1 | ອະນຸບານ | 1.607 | 469 | 3.485 | 38.140 | 1.732 | 509 | 3.801 | 39.875 |
| 2 | ປະຖົມສຶກສາ | 1.737 | 253 | 2.179 | 48.762 | 1.918 | 284 | 2.358 | 52.806 |
| 3 | ມັດທະຍົມຕອນຕົ້ນ | 527 | 57 | 1.023 | 14.796 | 591 | 64 | 1.186 | 16.034 |
| 4 | ມັດທະຍົມຕອນປາຍ | 191 | | 371 | 5.398 | 197 | | 395 | 5.308 |
| 5 | ມັດທະຍົມສົມບູນ | | 44 | | | | 49 | | |

### 3.2. ອັດຕາເຂົ້າຮຽນໃນແຕ່ລະຊັ້ນການສຶກສາ

**ຕາຕະລາງທີ 3: ອັດຕາເຂົ້າຮຽນໃນແຕ່ລະຊັ້ນການສຶກສາ**

| | 2017-2018 | | | 2018-2019 | | |
|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 3 - 5 ປີ (%) | 56,2 | 56,3 | 56,1 | 59,0 | 59,1 | 58,8 |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 5 ປີ (%) | 77,1 | 77,0 | 77,2 | 79,4 | 79,5 | 79,4 |
| ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາ (%) | 97,8 | 97,6 | 97,9 | 98,2 | 97,9 | 98,4 |
| ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາ (%) | 98,8 | 98,6 | 99,0 | 99,1 | 98,8 | 99,3 |
| ອັດຕາເຂົ້າຮຽນໃໝ່ລວມຊັ້ນປະຖົມສຶກສາ (%) | 110,9 | 109,6 | 112,1 | 109,2 | 107,8 | 110,4 |
| ອັດຕາເຂົ້າຮຽນລວມຊັ້ນປະຖົມສຶກສາ (%) | 110,6 | 109,2 | 112,0 | 108,2 | 107,0 | 109,4 |
| ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນ (%) | 83,1 | 81,2 | 84,9 | 82,8 | 81,2 | 84,3 |
| ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ (%) | 53,3 | 50,8 | 55,7 | 54,8 | 52,0 | 57,5 |
| ອັດຕາເຂົ້າຮຽນລວມຊັ້ນມັດທະຍົມ (%) | 70,0 | 67,9 | 72,1 | 70,9 | 68,8 | 73,0 |

### 3.3. ປະສິດທິພາບພາຍໃນ

#### 3.3.1. ຊັ້ນປະຖົມສຶກສາ

**ຮູບພາບທີ 1: ອັດຕາການຄ້າງຫ້ອງ ແລະ ປະລະການຮຽນຊັ້ນປະຖົມສຶກສາ**




ເຖິງວ່າໃນສົກຮຽນ 2018-2019 ອັດຕາຄ້າງການຫ້ອງຊັ້ນປະຖົມສຶກສາຫຼຸດລົງຈາກ 4,0% ເປັນ 3,8% ເມື່ອທຽບໃສ່ປີຜ່ານມາ, ແຕ່ເມື່ອເບິ່ງໃນຂັ້ນເມືອງເຮົາຈະສັງເກດເຫັນໄດ້ວ່າມີເຖິງ 74 ເມືອງ ທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນ ເຊິ່ງເພີ່ມຫຼາຍທີ່ສຸດແມ່ນເມືອງໄຊສະຖານ, ຮອງລົງມາແມ່ນ ເມືອງລ້ອງແຈ້ງ ແລະ ເມືອງໄຊຈໍາພອນ ຕາມລໍາດັບ. ເມືອງທີ່ມີອັດຕາຄ້າງຫ້ອງຊັ້ນປະຖົມສູງກວ່າໝູ່ ແມ່ນເມືອງນອງ ສູງເຖິງ 23,09% ຖັດລົງມາ ແມ່ນເມືອງໄຊສະຖານ 16,36%, ເມືອງດັກຈຶງ 14,06% ແລະ ເມືອງກະລຶມ 13,91%. ແຕ່ໃນທາງກົງກັນຂ້າມ, ອັດຕາປະລະຊັ້ນປະຖົມ ພັດມີທ່າອ່ຽງເພີ່ມຂຶ້ນຈາກ 4% ເປັນ 4,3%, ໃນຂັ້ນເມືອງ ແມ່ນເພີ່ມຂຶ້ນເຖິງ 70 ເມືອງ ເມື່ອທຽບໃສ່ປີຜ່ານມາ. ອັດຕາປະລະໃນຊັ້ນປະຖົມສູງກວ່າໝູ່ແມ່ນຢູ່ ເມືອງເຊໂປນ 15%, ຖັດລົງມາແມ່ນ ເມືອງຕະໂອ້ຍ ແລະ ເມືອງພິນ 13,8% ແລະ 13,6% ຕາມລໍາດັບ.

### 3.3.2. ຊັ້ນມັດທະຍົມສຶກສາຕອນຕົ້ນ

**ຮູບພາບທີ 2: ອັດຕາການປະລະການຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ**




### 3.3.3. ຊັ້ນມັດທະຍົມຕອນປາຍ

**ຮູບພາບທີ 3: ອັດຕາການປະລະການຮຽນຊັ້ນມັດທະຍົມສຶກສາຕອນປາຍ**




ໃນໄລຍະຜ່ານມາເຫັນໄດ້ວ່າອັດຕາປະລະຊັ້ນມັດທະຍົມຕອນຕົ້ນ ແລະ ຊັ້ນມັດທະຍົມຕອນປາຍ ມີທ່າອ່ຽງເພີ່ມຂຶ້ນ ດັ່ງທີ່ໄດ້ສະແດງອອກໃນ (ຮູບພາບທີ 2 ແລະ 3). ໃນຊັ້ນມັດທະຍົມຕອນຕົ້ນ, ອັດຕາປະລະເພີ່ມຂຶ້ນເຖິງ 1,2% ຈາກ 8,3% ໃນສົກຮຽນ 2016-2017 ເປັນ 9,5% ໃນສົກຮຽນ 2018-2019. ສ່ວນໃນຊັ້ນມັດທະຍົມຕອນປາຍ, ເຫັນໄດ້ວ່າອັດຕາປະລະເພີ່ມຂຶ້ນຫຼາຍກວ່າຊັ້ນມັດທະຍົມຕອນຕົ້ນ ຈາກ 5,8% ເປັນ 8,1% (ເພີ່ມເຖິງ 2,3%). ບັນຫາດັ່ງກ່າວໄດ້ສະແດງໃຫ້ເຮົາເຫັນວ່າ ເຮົາຕ້ອງໄດ້ເລັ່ງປັບປຸງປະສິດທິພາບພາຍໃນຂອງລະບົບການສຶກສາ ແລະ ການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂບັນຫາດັ່ງກ່າວ ຢ່າງຮີບດ່ວນ.

## 4. ສັດສ່ວນງົບປະມານຂອງຂະແໜງການສຶກສາ

ໃນປີ 2019 ງົບປະມານຂອງ ຂະແໜງສຶກສາ ແລະ ກິລາ ທີ່ສະພາແຫ່ງຊາດຮັບຮອງ ແລະ ກະຊວງການເງິນ ອະນຸມັດໃຫ້ທັງໝົດ 4.055.976,54 ລ້ານກີບ ເທົ່າກັບ 12,15% ທຽບໃສ່ລາຍຈ່າຍລັດຖະບານ ແລະ ເທົ່າກັບ 2,45% ທຽບໃສ່ GDP. ໃນນີ້ ງົບປະມານບໍລິຫານປົກກະຕິ: 3.447.918,07 ລ້ານກີບ (ລາຍຈ່າຍວິຊາການ: 95.268,65 ລ້ານກີບ) ແລະ ງົບປະມານການລົງທຶນທັງໝົດ 608.058,47 ລ້ານກີບ (ທຶນພາຍໃນລວມທັງໝົດ 149.448,75 ລ້ານກີບ ແລະ ທຶນຕ່າງປະເທດທັງໝົດ 458.609,72 ລ້ານກີບ). ໃນງົບປະມານທັງໝົດ, ສູນກາງຄຸ້ມຄອງມີຢູ່ 1.207.035,72 ລ້ານກີບ (ກະຊວງສຶກສາທິການ ແລະ ກິລາ, ມະຫາວິທະຍາໄລແຫ່ງຊາດ) ແລະ ທ້ອງຖິ່ນຄຸ້ມຄອງແມ່ນ 2.848.840,82 ລ້ານກີບ.

## 5. ບັນຫາ ແລະ ສາຍເຫດທີ່ເຮັດໃຫ້ບໍ່ສາມາດບັນລຸໄດ້ ຄາດໝາຍທີ່ສະພາຮັບຮອງ

ເຖິງວ່າກະຊວງສຶກສາທິການ ແລະ ກິລາ ໄດ້ມີການກຳນົດວຽກງານຈຸດສຸມທີ່ເປັນບູລິມະສິດ ເພື່ອຈັດຕັ້ງປະຕິບັດ ແນໃສ່ໃຫ້ບັນລຸບັນດາຄາດໝາຍ ແລະ ນະໂຍບາຍທີ່ກຳນົດໃນແຜນສຳລັບສົກຮຽນ 2018-2019 ກໍຄືຄາດໝາຍທີ່ສະພາແຫ່ງຊາດຮັບຮອງ, ນອກນັ້ນ ກອງປະຊຸມຜູ້ບໍລິຫານການສຶກສາປະຈຳປີ 2018 ກໍໄດ້ຮັບຮອງເອົາມະຕິຂອງກອງປະຊຸມ ເພື່ອໃຫ້ເປັນທິດທາງໃນການຈັດຕັ້ງປະຕິບັດ, ແຕ່ໃນພາກປະຕິບັດເຫັນວ່າ ແຕ່ລະພາກສ່ວນຍັງບໍ່ໄດ້ເປັນເຈົ້າການ ແລະ ບໍ່ເອົາໃຈໃສ່ປະຕິບັດຕາມເນື້ອໃນ ແລະ ທິດຊີ້ນຳທີ່ກຳນົດໃນມະຕິຂອງກອງປະຊຸມຜູ້ບໍລິຫານການສຶກສາປະຈຳປີເທົ່າທີ່ຄວນ ອັນເຮັດໃຫ້ຍັງມີຫຼາຍບັນຫາຄົງຄ້າງ ໂດຍສະເພາະແມ່ນການປະລະການຮຽນໃນແຕ່ລະຊັ້ນຮຽນທີ່ສູງຂຶ້ນເມື່ອທຽບໃສ່ປີຜ່ານມາ. ຜົນຈາກການປະເມີນເຄິ່ງສະໄໝຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII ກໍ່ໄດ້ສະແດງໃຫ້ເຫັນວ່າ ໜຶ່ງໃນບັນຫາຫຼັກໆທີ່ຄວນໄດ້ຮັບການແກ້ໄຂ ຢ່າງຮີບດ່ວນ ກໍ່ແມ່ນອັດຕາປະລະໃນແຕ່ລະຊັ້ນທີ່ສູງຂຶ້ນ ແລະ ອັດຕາເລື່ອນຊັ້ນ ຈາກ ປ.5 ຂຶ້ນ ມ.1 ທີ່ຫຼຸດລົງ. ດັ່ງນັ້ນ, ໃນການຈັດຕັ້ງປະຕິບັດບັນດາຕົວຊີ້ບອກໃນປີ 2018-2019 ທີ່ຜ່ານມາ, ຈຶ່ງມີຫຼາຍຕົວຊີ້ບອກ ແລະ ຄາດໝາຍທີ່ກຳນົດໄວ້ໃນແຜນທີ່ບໍ່ສາມາດບັນລຸໄດ້ ແລະ ບາງຕົວຍັງມີທ່າອ່ຽງທີ່ປະຕິບັດໄດ້ອ່ອນກວ່າເກົ່າ ເຊິ່ງທັງໝົດນີ້ກໍ່ຍ້ອນສາຍເຫດ ແລະ ປັດໄຈດັ່ງນີ້:

### 1) ສາຍເຫດທີ່ເຮັດໃຫ້ອັດຕາການຄ້າງຫ້ອງຢູ່ຊັ້ນປະຖົມສູງ ມີດັ່ງນີ້:

- ຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ຈຳນວນບໍ່ໜ້ອຍຍັງບໍ່ເອົາໃຈໃສ່ຕໍ່ໜ້າທີ່ຂອງຕົນ ເຊັ່ນ: ຄູມາສິດສອນບໍ່ປົກກະຕິ, ມາຊ້າ ແລະ ເລີກກ່ອນໂມງ ແລະ ອື່ນໆ;
- ນິຕິກຳກ່ຽວກັບວຽກງານນິເທດການສຶກສາໄດ້ສ້າງຂຶ້ນມາ, ແຕ່ການລົງນິເທດບໍ່ໄດ້ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ຜູ້ອຳນວຍການໂຮງຮຽນກໍ່ບໍ່ໄດ້ມີການນິເທດພາຍໃນ;
- ຢູ່ເຂດຊົນນະບົດຍັງຂາດເຂີນຄູສອນ ອັນເຮັດໃຫ້ມີໂຮງຮຽນຈຳນວນບໍ່ໜ້ອຍຈຳເປັນຕ້ອງໄດ້ສະໜອງ ການສອນຫ້ອງຄວບ ໂດຍສະເພາະການສອນຄວບຫ້ອງ ປ.1.
- ການຈັດສັນງົບປະມານຍັງບໍ່ສອດຄ່ອງກັບແຜນວຽກຈຸດສຸມ ກໍຄືບູລິມະສິດໃນການປັບປຸງຄຸນນະພາບ ຂອງການຮຽນ-ການສອນ ເຊັ່ນ: ການຝຶກອົບຮົມຄູປະຈຳການ ແລະ ການລົງຕິດຕາມຊຸກຍູ້ການຮຽນ ແລະ ການສິດສອນຂອງຄູ.
- ຄູສອນຈຳນວນໜຶ່ງບໍ່ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ, ບໍ່ເຮັດໜ້າທີ່ຊຸກຍູ້ ແລະ ບຳລຸງນັກຮຽນທີ່ຮຽນອ່ອນ. ຈາກຜົນການສຳຫຼວດດັດຊະນີໝາຍສັງຄົມຄັ້ງທີ II (LSIS-II 2017) ໄດ້ຊີ້ໃຫ້ເຫັນວ່າ ການຂາດສອນຂອງຄູແມ່ນເປັນບັນຫາທີ່ຮ້າຍແຮງໃນ ສປປ ລາວ ໃນທຸກໆຊັ້ນຮຽນ ແລະ ມີເດັກ ນ້ອຍຫຼາຍກວ່າ 80% ທີ່ຍົກສາເຫດຂອງການຂາດຮຽນ ແມ່ນເປັນຍ້ອນຄູຂາດສອນ ອັນນຳໄປສູ່ການປະລະ ແລະ ຄ້າງຫ້ອງຂອງນັກຮຽນ.

- ອັດຕາຄ້າງຫ້ອງຂອງນັກຮຽນປະຖົມສູງສ່ວນໃຫຍ່ແມ່ນຢູ່ເມືອງທຸກຍາກ, ມີເດັກຊົນເຜົ່າທີ່ບໍ່ເວົ້າພາສາລາວເປັນພາສາແມ່, ຊຶ່ງເດັກດັ່ງກ່າວບໍ່ໄດ້ກຽມຄວາມພ້ອມທາງດ້ານພາສາລາວ ກ່ອນເຂົ້າຮຽນຊັ້ນປະຖົມບວກກັບຄູທີ່ສອນຢູ່ເຂດດັ່ງກ່າວ ຂາດທັກສະໃນການສອນເດັກຊົນເຜົ່າ.

**2) ສາຍເຫດທີ່ພາໃຫ້ນັກຮຽນປະລະການຮຽນຢູ່ຊັ້ນປະຖົມມີດັ່ງນີ້:**

- ການປະຕິບັດໜ້າທີ່ຂອງຄູໃນການຕິດຕາມການມາໂຮງຮຽນຂອງນັກຮຽນຍັງບໍ່ທັນໄດ້ດີ ແລະ ຂາດການປະສານງານລະຫວ່າງໂຮງຮຽນ ແລະ ຜູ້ປົກຄອງຂອງເດັກ ໃນການຕິດຕາມນັກຮຽນຂາດຮຽນ, ຊຶ່ງເປັນສາຍເຫດໃຫ້ນັກຮຽນອອກໂຮງຮຽນ.
- ການດຳລົງຊີວິດຂອງປະຊາຊົນຢູ່ກະແຈກກະຈາຍ, ບໍ່ມີອາຊີບຄົງທີ່, ຮອດລະດູການຜະລິດ ຈຳເປັນຕ້ອງເອົາລູກຫຼານອອກໄປອາໄສຢູ່ໄຮ່ຢູ່ສວນນຳເຮັດໃຫ້ຮຽນບໍ່ຄົບຫຼັກສູດ ແລ້ວກໍປະລະການຮຽນ.
- ຄວາມເຂົ້າໃຈຂອງສັງຄົມຕໍ່ກັບພັນທະຂອງພົນລະເມືອງ ຕໍ່ກັບການສຶກສາໂດຍສະເພາະການສຶກສາຂັ້ນພື້ນຖານຍັງຈຳກັດ.
- ພໍ່ແມ່ຜູ້ປົກຄອງຈຳນວນໜຶ່ງບໍ່ເອົາໃຈໃສ່ສົ່ງລູກຫຼານຂອງຕົນເຂົ້າຮຽນ, ຍິ່ງໄປກວ່ານັ້ນ ຍັງລະດົມໃຫ້ລູກອອກໂຮງຮຽນ ດ້ວຍເຫດຜົນຕ່າງໆທີ່ແຕກຕ່າງກັນ.
- ການປະສານສົມທົບລະຫວ່າງໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານຍັງບໍ່ທັນເຂັ້ມແຂງ.
- ຢູ່ຊົນນະບົດ ຜູ້ປົກຄອງຍັງບໍ່ສົນໃຈຕໍ່ການໄປໂຮງຮຽນ ແລະ ການຮຽນຂອງລູກຫຼານຕົນ.

**3) ສາຍເຫດທີ່ເຮັດໃຫ້ ອັດຕາການການເຂົ້າຮຽນລວມຕໍ່າ ແລະ ການປະລະການຮຽນຊັ້ນມັດທະຍົມສຶກສາສູງ ມີດັ່ງນີ້:**

- ຫ້ອງຮຽນແອອັດ (ບາງບ່ອນ ຈຳນວນນັກຮຽນຕໍ່ຫ້ອງມີສູງເຖິງ 60-70 ຄົນ), ບ້ານຂອງນັກຮຽນຢູ່ຫ່າງໄກຈາກໂຮງຮຽນ ແລະ ບໍ່ມີຫໍພັກທີ່ປອດໄພເພື່ອໃຫ້ນັກຮຽນໄດ້ອາໄສຢູ່.
- ມີນັກຮຽນຈຳນວນບໍ່ໜ້ອຍທີ່ປະລະການຮຽນ ໄປອອກແຮງງານຢູ່ຕາມໂຮງຈັກໂຮງງານ, ສວນຢາງ ແລະ ກໍມີຈຳນວນບໍ່ໜ້ອຍທີ່ປະລະການຮຽນ ໄປອອກແຮງງານຢູ່ປະເທດເພື່ອນບ້ານ.
- ຄອບຄົວ ແລະ ສັງຄົມຍັງບໍ່ໃຫ້ຄວາມຮ່ວມມືໃນການສົ່ງເສີມ ແລະ ຊຸກຍູ້ໃຫ້ລູກຫຼານຂອງຕົນສືບຕໍ່ຮຽນຈົນຈົບຊັ້ນມັດທະຍົມ.
- ເນື່ອງຈາກລັດຖະບານໄດ້ມີນະໂຍບາຍຈຳກັດຈຳນວນໂກຕາລັດຖະກອນລົງ, ໃນທາງອ້ອມແມ່ນມີຜົນສະທ້ອນເຮັດໃຫ້ນັກຮຽນບໍ່ຢາກຮຽນ ຍ້ອນເຂົ້າໃຈວ່າຮຽນຈົບໄປແລ້ວກໍບໍ່ໄດ້ເຮັດວຽກ.

**4) ອັດຕາການເຂົ້າຮຽນໃນສາຍອາຊີວະສຶກສາຍັງຕໍ່າ:**

ຄວາມຈິງຈຳນວນນັກຮຽນທີ່ເຂົ້າຮຽນໃນສາຍອາຊີວະສຶກສາແມ່ນເພີ່ມຂຶ້ນໃນແຕ່ລະປີ, ແຕ່ເນື່ອງຈາກວ່າ ຈຳນວນນັກຮຽນທີ່ຮຽນຈົບມັດທະຍົມຕອນຕົ້ນ ແລະ ຕອນປາຍໃນແຕ່ລະປີເພີ່ມຂຶ້ນ ຈຶ່ງເຮັດໃຫ້ເປີເຊັນນັກຮຽນ ເຂົ້າຮຽນ ທຽບໃສ່ຈຳນວນນັກຮຽນຈົບມັດທະຍົມຕໍ່າ. ນອກຈາກນັ້ນ, ຍັງຂາດນະໂຍບາຍສົ່ງເສີມການຮ່ວມມື ລະຫວ່າງຜູ້ປະກອບການ ແລະ ຜູ້ລົງທຶນໃນຂົງເຂດຕ່າງໆໃນການສ້າງສີມືແຮງງານ ແລະ ການສ້າງວຽກເຮັດງານທຳ ໃຫ້ຜູ້ຮຽນຈົບສາຍວິຊາຊີບ. ຫຼັກສູດການສອນສາຍວິຊາຊີບຍັງບໍ່ມີຈຸດສຸມ ແລະ ບໍ່ສອດຄ່ອງກັບທ່າແຮງ ໃນການ ພັດທະນາຂອງປະເທດກໍຄືຂອງແຕ່ລະທ້ອງຖິ່ນ. ການລົງທຶນເຂົ້າໃນການພັດທະນາອຸປະກອນຮັບໃຊ້ ການຮຽນ-ການສອນຢູ່ສາຍອາຊີວະສຶກສາຍັງຈຳກັດ ເຮັດໃຫ້ຄຸນນະພາບຂອງນັກຮຽນທີ່ຮຽນຈົບຕໍ່າ. ດັ່ງນັ້ນ, ຈຶ່ງບໍ່ສາມາດ ຊອກວຽກເຮັດງານທຳໄດ້. ຂາດນະໂຍບາຍທາງດ້ານການເງິນ ເພື່ອສົ່ງເສີມນັກຮຽນທີ່ຮຽນຈົບວິຊາຊີບໃຫ້ສາມາດ ປະກອບການດ້ວຍຕົນເອງ.

## 6. ແຜນວຽກບູລິມະສິດສຳລັບປີ 2020.

### 6.1. ຈຸດປະສົງ

1. ເພື່ອສືບຕໍ່ສົ່ງເສີມ ແລະ ຂະຫຍາຍການສຶກສາກ່ອນໄວຮຽນໃຫ້ກວ້າງຂວາງ ພ້ອມທັງຮັບປະກັນດ້ານຄຸນນະພາບ.
2. ເພື່ອຈັດຕັ້ງປະຕິບັດນະໂຍບາຍການສຶກສາພາກບັງຄັບ ໃຫ້ປະກົດຜົນເປັນຈິງເທື່ອລະກ້າວ ພ້ອມທັງຮັບປະກັນດ້ານຄຸນນະພາບ.
3. ເພື່ອຍົກສູງຄຸນນະພາບຂອງການສຶກສາຫຼັງຊັ້ນມັດທະຍົມໃຫ້ດີຂຶ້ນ ໂດຍເນັ້ນໃສ່ການສ້າງສີມືແຮງງານ ແລະ ນັກວິຊາການ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງສັງຄົມ.
4. ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາແຕ່ສູນກາງຮອດທ້ອງຖິ່ນ.
5. ສົ່ງເສີມໃຫ້ປະຊາຊົນທຸກເພດທຸກໄວຫັນມາໃສ່ໃຈການອອກກຳລັງກາຍເພື່ອສຸຂະພາບ ແລະ ສົ່ງເສີມໃຫ້ຜູ້ທີ່ມີພອນສະຫວັນດ້ານກິລາ-ກາຍຍະກຳ ໃຫ້ກາຍເປັນນັກກິລາອາຊີບ.

### 6.2. ຄາດໝາຍຫຼັກ.

1. ອັດຕາເຂົ້າຮຽນຂອງເດັກ 5 ປີ ໃນຊັ້ນການສຶກສາກ່ອນໄວຮຽນສະເລ່ຍໃນທົ່ວປະເທດ ໃຫ້ເພີ່ມຂຶ້ນຈາກ 79,4% ໃຫ້ບັນລຸສູງກວ່າ 80%;
2. ສູ້ຊົນໃຫ້ມີຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນຂອງເດັກ 5 ປີ ສູງກວ່າ 60% ເພີ່ມຂຶ້ນຈາກ 135 ເມືອງ ເປັນ 140 ເມືອງ;
3. ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາ ໃຫ້ບັນລຸໄດ້ສູງກວ່າ 99%;
4. ຫຼຸດຜ່ອນອັດຕາຄ້າງຫ້ອງ ຂອງນັກຮຽນ ປ.1 ຈາກ 8,4% ໃຫ້ຍັງເຫຼືອ 7%.
5. ຫຼຸດຜ່ອນອັດຕາຄ້າງຫ້ອງຂອງນັກຮຽນຊັ້ນປະຖົມສຶກສາ ຈາກ 3,8% ໃຫ້ຍັງເຫຼືອ 3%;
6. ຫຼຸດຜ່ອນອັດຕາປະລະການຮຽນ ຂອງນັກຮຽນ ປ.1 ຈາກ 6,3% ໃຫ້ຍັງເຫຼືອ 5,5%;
7. ຫຼຸດຜ່ອນອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ຈາກ 4,3% ໃຫ້ຍັງເຫຼືອ 3,5%;
8. ອັດຕາລອດເຫຼືອຮອດ ປ.5 ໃຫ້ບັນລຸ 86%;
9. ເພີ່ມຈຳນວນເມືອງທີ່ມີອັດຕາປະລະຊັ້ນປະຖົມສຶກສາ ຕ່ຳກວ່າ 6% ຈາກ 118 ເມືອງ ເປັນ 123 ເມືອງ.
10. ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນ ໃຫ້ບັນລຸ 85%;
11. ຫຼຸດຜ່ອນອັດຕາປະລະຊັ້ນມັດທະຍົມຕອນຕົ້ນ ຈາກ 9,5% ໃຫ້ຍັງເຫຼືອ 8,5%;
12. ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍໃຫ້ບັນລຸ 56%;
13. ຫຼຸດຜ່ອນອັດຕາປະລະຊັ້ນມັດທະຍົມຕອນປາຍ ຈາກ 8,1% ໃຫ້ຍັງເຫຼືອ 7%;
14. ສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາໃຫ້ໄດ້ 5% ແລະ ນັກຮຽນທີ່ຈົບມັດທະຍົມຕອນປາຍ ໃຫ້ໄດ້ສືບຕໍ່ຮຽນໃນລະບົບຕ່າງໆ ບັນລຸໄດ້ 80%;
15. ສືບຕໍ່ສົ່ງເສີມມວນຊົນທຸກເພດ, ທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາເພື່ອສຸຂະພາບ, ເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວຈັດກິດຈະກຳການແຂ່ງຂັນກິລາປະຈຳປີ, ກິລາວັນບຸນປະເພນີ ແລະ ກິລາວັນບຸນສຳຄັນຕ່າງໆຂອງຊາດ-ສາກົນ ໃຫ້ບັນລຸໄດ້ 26% ຂອງພົນລະເມືອງລາວ ໃນປີ 2020.

## 6.3. ວຽກຈຸດສຸມ.

1. ຈະສຸມໃສ່ຂະຫຍາຍຫ້ອງກຽມປະຖົມຢູ່ບັນດາເມືອງທຸກຍາກ ແລະ ເມືອງທີ່ມີເດັກຊົນເຜົ່າຫຼາຍ ເພື່ອກຽມຄວາມພ້ອມໃຫ້ເດັກດັ່ງກ່າວກ່ອນເຂົ້າຮຽນຊັ້ນປະຖົມສຶກສາ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ.
2. ບັນດາແຂວງ ແລະ ເມືອງ ເອົາໃຈໃສ່ສ້າງຕັ້ງກຸ່ມໂຮງຮຽນປະຖົມສຶກສາ ໂດຍໃຫ້ຕິດພັນກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ການນໍາໃຊ້ຊັບພະຍາກອນຮ່ວມກັນ (ຄູສອນ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ) ໂດຍເອົາການຝຶກອົບຮົມທີ່ເນັ້ນກຸ່ມໂຮງຮຽນເປັນຫຼັກ;
3. ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສົມທົບກັບຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ແລະ ອໍານວຍການໂຮງຮຽນ ແລະ ຄູສອນ ເພື່ອດໍາເນີນການສອນບໍາລຸງໃຫ້ນັກຮຽນອ່ອນ (ເສັງບໍ່ຜ່ານ) ເພື່ອໃຫ້ເຂົາເຈົ້າສາມາດເລື່ອນຊັ້ນໄດ້;
4. ສົມທົບກັບອົງການປົກຄອງຂັ້ນທ້ອງຖິ່ນ ແລະ ຜູ້ປົກຄອງ ເພື່ອລະດົມ ແລະ ຊຸກຍູ້ໃຫ້ນັກຮຽນສືບຕໍ່ຮຽນຈົນຈົບຊັ້ນມັດທະຍົມຕອນຕົ້ນ;
5. ດໍາເນີນການປະເມີນຄວາມຮູ້ຄວາມສາມາດ ແລະ ຈັນຍາບັນຂອງຄູປະຖົມ ແລະ ມັດທະຍົມ ໃນທົ່ວປະເທດພ້ອມທັງ ສຸມງົບປະມານທີ່ມີໃສ່ການຍົກລະດັບໃຫ້ແກ່ຄູປະຈໍາການ ໂດຍສະເພາະຜູ້ທີ່ບໍ່ໄດ້ມາດຕະຖານ.
6. ສົມທົບກັບອົງການປົກຄອງຂັ້ນທ້ອງຖິ່ນ ເພື່ອຕິດຕາມ ແລະ ກວດກາການປະຕິບັດໜ້າທີ່ຂອງຄູ ແລະ ອໍານວຍການໂຮງຮຽນ;
7. ສົມທົບກັບອໍານາດການປົກຄອງ ເພື່ອປຸກລະດົມຜູ້ປົກຄອງໃຫ້ເຫັນຄວາມສໍາຄັນຂອງການສຶກສາໃຫ້ເອົາໃຈໃສ່ສົ່ງລູກມາຮຽນ ພ້ອມທັງເອົາໃຈໃສ່ໃນການສອນລູກ ແລະ ຊຸກຍູ້ລູກຮຽນເວລາຢູ່ເຮືອນ;
8. ລົງຕິດຕາມ ແລະ ຊຸກຍູ້ການປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງ ແລະ ຝຶກອົບຮົມໃຫ້ຄູເພີ່ມເຕີມ ເພື່ອໃຫ້ຄູນໍາໄປຈັດຕັ້ງປະຕິບັດ;
9. ຄົ້ນຄວ້າຄືນການເປີດຫຼັກສູດການຮຽນ-ການສອນຂອງໂຮງຮຽນວິຊາຊີບຢູ່ບັນດາແຂວງ ເພື່ອໃຫ້ສອດຄ່ອງກັບການພັດທະນາຂອງທ້ອງຖິ່ນຕົນ;
10. ສືບຕໍ່ປະສານສົມທົບກັບຜູ້ປະກອບການ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເຊັ່ນ: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງ/ຂະແໜງການ ໃນການພັດທະນາສີມືແຮງງານ;
11. ລົງຕິດຕາມ ແລະ ຊຸກຍູ້ໃຫ້ມີການນິເທດເປັນປົກກະຕິ ພ້ອມທັງຍົກລະດັບໂດຍການຝຶກອົບຮົມໃຫ້ແກ່ຄູທີ່ມີຄວາມພ້ອມເພື່ອສ້າງເປັນຄູນິເທດໃໝ່ສໍາລັບເມືອງທີ່ບໍ່ທັນມີ;
12. ສົ່ງເສີມມວນຊົນທຸກເພດ-ໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ອອກກໍາລັງກາຍ, ຫຼິ້ນກິລາ ແລະ ສ້າງຂະບວນການເຄື່ອນໄຫວກິດຈະກໍາຈັດການແຂ່ງຂັນກິລາກາຍຍະກໍາມວນຊົນປະເພດຕ່າງໆ ປະຈໍາປີ, ວັນບຸນປະເພນີ, ວັນບຸນສໍາຄັນຕ່າງໆຂອງຊາດ ແລະ ສາກົນ ໃຫ້ບັນລຸໄດ້ຕາມຄາດໝາຍ;
13. ສືບຕໍ່ຫັນພະນັກງານລົງຮາກຖານ ເພື່ອໄປຊ່ວຍເຫຼືອ ແລະ ຊຸກຍູ້ທາງດ້ານວິຊາການຢູ່ບັນດາເມືອງ ທີ່ມີຕົວຊີ້ວັດທາງການສຶກສາຕໍ່າ;
14. ສ້າງຂີດຄວາມສາມາດໃຫ້ແກ່ຜູ້ບໍລິຫານການສຶກສາແຕ່ສູນກາງຮອດທ້ອງຖິ່ນ ໃນຫົວຂໍ້ຕ່າງໆ ໂດຍແມ່ນສະຖາບັນພັດທະນາການບໍລິຫານການສຶກສາ ເປັນຜູ້ດໍາເນີນການ;
15. ປັບປຸງລະບົບຄຸ້ມຄອງຂໍ້ມູນຂ່າວສານພາຍໃນຂະແໜງການສຶກສາ ແລະ ກິລາ;
16. ເອົາວຽກງານຕິດຕາມ ແລະ ປະເມີນຜົນ ເປັນກົນໄກໃນການຄຸ້ມຄອງການຈັດຕັ້ງປະຕິບັດແຜນນະໂຍບາຍ ແລະ ແຜນພັດທະນາການສຶກສາ.

# ພາກທີ II: ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020 ຂອງ 10 ຂະແໜງການຍ່ອຍ

# I. ຂະແໜງການຍ່ອຍການສຶກສາກ່ອນໄວຮຽນ

## 1.1. ສະພາບລວມ

### 1.1.1. ການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໃນຊຸມປີຜ່ານມາ ການຂະຫຍາຍໂອກາດໃຫ້ແກ່ເດັກໃຫ້ໄດ້ເຂົ້າກຽມຄວາມພ້ອມ ໃນການສຶກສາກ່ອນໄວຮຽນ ແມ່ນໄດ້ຮັບການພັດທະນາໃຫ້ດີຂຶ້ນເທື່ອລະກ້າວ. ໃນສົກຮຽນ 2018-2019, ມີຫ້ອງລ້ຽງເດັກ 967 ແຫ່ງ ຖ້າທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 82 ແຫ່ງ. ໂຮງຮຽນອະນຸບານກໍ່ເພີ່ມຂຶ້ນ, ປະຈຸບັນມີທັງໝົດ 3.432 ແຫ່ງ ທຽບໃສ່ປີຜ່ານມາ ແມ່ນເພີ່ມຂຶ້ນເຖິງ 221 ແຫ່ງ. ເຖິງວ່າການຂະຫຍາຍໂຮງຮຽນອະນຸບານຍັງບໍ່ທັນທົ່ວເຖິງ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ, ແຕ່ລັດຖະບານ ກໍຄືກະຊວງສຶກສາທິການ ແລະ ກິລາ ກໍໄດ້ມີຄວາມພະຍາຍາມຂະຫຍາຍຫ້ອງກຽມປະຖົມ ຢູ່ບັນດາໂຮງຮຽນມູນລະປະຖົມສຶກສາ ແລະ ໂຮງຮຽນປະຖົມສົມບູນ ເຊິ່ງໃນປະຈຸບັນມີຫ້ອງກຽມປະຖົມຈຳນວນ 2.346 ຫ້ອງ ທຽບໃສ່ປີຜ່ານມາແມ່ນເພີ່ມຂຶ້ນ 18 ຫ້ອງ, ເພີ່ມຂຶ້ນຫຼາຍແມ່ນຢູ່ ເມືອງປາກອູ ແຂວງຫຼວງພະບາງ, ເມືອງເລົ່າງາມ ແຂວງສາລະວັນ ແລະ ເມືອງງາ ແຂວງອຸດົມໄຊ ເຊິ່ງເມືອງເຫຼົ່ານີ້ກໍ່ລ້ວນແລ້ວແຕ່ນອນໃນ 40 ເມືອງບູລິມະສິດຂອງຂະແໜງການສຶກສາ. ຄຽງຄູ່ກັບການຂະຫຍາຍຕົວຂອງໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມແລ້ວ, ການຂະຫຍາຍກຸ່ມຫຼິ້ນສູ່ເຂດທີ່ບໍ່ມີເງື່ອນໄຂໃນການຂະຫຍາຍໂຮງຮຽນອະນຸບານ ແລະ ຫ້ອງກຽມກໍໄດ້ຮັບການເອົາໃຈໃສ່, ມີເດັກນ້ອຍອາຍຸ 3-5 ປີ ທີ່ເຂົ້າຮຽນໃນກຸ່ມຫຼິ້ນ ເພີ່ມຂຶ້ນຈາກ 2.777 ຄົນ ໃນສົກຮຽນ 2017-18 ເປັນ 3.576 ຄົນໃນສົກຮຽນ 2018-19 ໃນທົ່ວປະເທດ.

ຄຽງຄູ່ກັບການລົງທຶນຂອງພາກລັດແລ້ວ, ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ມີນະໂຍບາຍສົ່ງເສີມໃຫ້ພາກເອກະຊົນ ລົງທຶນເຂົ້າໃນການສຶກສາກ່ອນໄວຮຽນຢ່າງກວ້າງຂວາງ ເຊິ່ງສະແດງໃຫ້ເຫັນ ການເພີ່ມຂຶ້ນຂອງໂຮງລ້ຽງເດັກເຖິງ 71 ແຫ່ງ, ໂຮງຮຽນອະນຸບານ 39 ແຫ່ງ, ນັກຮຽນເພີ່ມຂຶ້ນ 4% ເຊິ່ງໃນປີ 2019 ມີນັກຮຽນໃນການສຶກສາກ່ອນໄວຮຽນຈຳນວນ 49.123 ຄົນ ກວມ 20,4% ຂອງຈຳນວນນັກຮຽນທັງໝົດ.

ວຽກງານສົ່ງເສີມສຸຂະພາບ, ສຸຂະອະນາໄມ ແລະ ໂພຊະນາການໃນສະຖານການສຶກສາກ່ອນໄວຮຽນກໍ່ເປັນວຽກໜຶ່ງທີ່ສຳຄັນ ເປັນຕົ້ນແມ່ນການສະໜອງອາຫານທ່ຽງໃນໂຮງຮຽນ, ສ້າງສິ່ງອຳນວຍຄວາມສະດວກໃນການລ້າງມື-ຖູແຂ້ວ ໂດຍຊຸມຊົນເປັນເຈົ້າການ ເຊິ່ງປະກອບດ້ວຍອ່າງລ້າງມື, ຢາຖູແຂ້ວ, ແປງຖູແຂ້ວ ແລະ ສະບູ, ສະໜອງເຄື່ອງກອງນ້ຳ, ສ້າງຫ້ອງນ້ຳ ແລະ ວິດຖ່າຍ ທີ່ອຳນວຍຄວາມສະດວກໃຫ້ນັກຮຽນຍິງ-ຊາຍ ແລະ ນັກຮຽນພິການ ພ້ອມທັງສ້າງລະບົບນ້ຳໃຫ້ແກ່ໂຮງຮຽນ ເຊິ່ງເຫັນໄດ້ວ່າໃນປີ 2018 ທີ່ ຜ່ານມາໄດ້ສ້າງອ່າງລ້າງມື-ຖູແຂ້ວ ຈຳນວນ 195 ແຫ່ງ ຖ້າທຽບໃສ່ໃນປີ 2017 ແມ່ນເພີ້ມຂຶ້ນ 38 ແຫ່ງ.

ຜ່ານການຈັດຕັ້ງປະຕິບັດຂ້າງເທິງນັ້ນ, ໄດ້ເຮັດໃຫ້ອັດຕາການເຂົ້າຮຽນຂອງເດັກອາຍຸ 3-5 ປີ ບັນລຸໄດ້ 59% ແລະ ເດັກອາຍຸ 5 ປີ ບັນລຸໄດ້ 79,4% ໃນສົກປີ 2018-19 ເຊິ່ງລື່ນຄາດໝາຍທີ່ສະພາແຫ່ງຊາດຮັບຮອງ. ໃນນັ້ນ, ທັງເດັກຍິງ ແລະ ເດັກຊາຍກໍ່ມີຄວາມສະເໝີພາບກັນໃນການເຂົ້າຮຽນ ເຊິ່ງສະແດງອອກຜ່ານດັດຊະນີຄວາມສະເໝີພາບຍິງຊາຍ ເທົ່າກັບ 1. ເມື່ອເບິ່ງພິເສດ ໃນ 40 ເມືອງເປົ້າໝາຍ 3 ສ້າງນັ້ນ ເຫັນໄດ້ວ່າ ເມື່ອທຽບ ໃສ່ປີຜ່ານມາ ມີເຖິງ 28 ເມືອງທີ່ມີອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຂຶ້ນ ເຊິ່ງພົ້ນເດັ່ນທີ່ສຸດກໍ່ມີເມືອງມະຫາໄຊ ແຂວງຄຳມ່ວນ, ເມືອງ ກວັນ ແຂວງຫົວພັນ ແລະ ເມືອງງາ ແຂວງອຸດົມໄຊ.

ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບຜົນສຳເລັດດັ່ງດ່າວ ກໍຍັງສັງເກດເຫັນວ່າ ການຂະຫຍາຍຕົວຂອງການສຶກສາກ່ອນໄວຮຽນຍັງຄົງມີຄວາມແຕກໂຕນກັນລະຫວ່າງເມືອງ ໂດຍສະເພາະຢູ່ບັນດາເມືອງທີ່ຢູ່ໃກ້ຊາຍແດນຫວຽດນາມ ເຂດທີ່ມີຊົນເຜົ່າສ່ວນໜ້ອຍ ແລະ ເມືອງພູດອຍ ເຊິ່ງຍັງມີອັດຕາດັ່ງກ່າວຕ່ຳ ເປັນຕົ້ນ ເມືອງກະລຶມ ແຂວງເຊກອງ, ເມືອງບົວລະພາ ແຂວງຄຳມ່ວນ, ເມືອງນອງ, ເມືອງເຊໂປນ ແຂວງສະຫວັນນະເຂດ ແລະ ອື່ນໆ. ຈາກສະຖິຕິໃນສົກຮຽນ 2018-19 ເຫັນໄດ້ວ່າ ຈຳນວນເມືອງ ທີ່ມີອັດຕາການເຂົ້າຮຽນຂອງເດັກ 5 ປີ ຕ່ຳກວ່າ 60% ຍັງເຫຼືອ 13 ເມືອງ, ຫຼຸດລົງ 9 ເມືອງ ເມື່ອທຽບໃສ່ປີຜ່ານມາ (ສະແດງຢູ່ໃນຮູບພາບທີ 4 ດ້ານລຸ່ມ). ແຕ່ໃນທາງກົງກັນຂ້າມ, ຍັງເຫັນວ່າ ບາງເມືອງເຖິງມີການຂະຫຍາຍຕົວຂອງໂຮງຮຽນອະນຸບານ ຫຼື ຫ້ອງກຽມ ແຕ່ອັດຕາເຂົ້າຮຽນຂອງເດັກຊ້ຳ

ພັດຫຼຸດລົງ ຫຼື ເທົ່າເກົ່າ ເມື່ອທຽບກັບປີຜ່ານມາ ຕົວຢ່າງ: ເມືອງບາຈຽງຈະເລີນສຸກ ທີ່ມີຫ້ອງກຽມເພີ່ມຂຶ້ນເຖິງ 9 ຫ້ອງ ແຕ່ອັດ ຕາເຂົ້າຮຽນຂອງເດັກ 5 ປີ ຫຼຸດລົງເຖິງ 6%; ເມືອງໂຂງ ເພີ່ມຂຶ້ນ 3 ຫ້ອງ ແຕ່ອັດຕາຫຼຸດລົງ 4%, ເມືອງ ພູກູດ ເພີ່ມຂຶ້ນ 2 ຫ້ອງ ແຕ່ອັດຕາຫຼຸດລົງເຖິງ 24% ແລະ ເມືອງປາກອູ ເພີ່ມຂຶ້ນເຖິງ 11 ຫ້ອງ ແຕ່ອັດຕາເຂົ້າຮຽນ ຍັງເທົ່າເດີມ.

**ຕາຕະລາງທີ 4: ການຂະຫຍາຍໂອກາດໃນການເຂົ້າຮຽນສຳລັບການສຶກສາກ່ອນໄວຮຽນ ປີ 2018 ແລະ 2019**

| ຕົວຊີ້ບອກ | ສົກຮຽນ | ສົກຮຽນ |
|---|---|---|
| | 2017-2018 | 2018-2019 |
| ຫ້ອງລ້ຽງເດັກ | 885 | 967 |
| ຈຳນວນຫ້ອງຮຽນອະນຸບານ | 6.919 | 7.389 |
| ຈຳນວນຫ້ອງກຽມ | 2.328 | 2.346 |
| ຈຳນວນນັກຮຽນທັງໝົດ | 229.892<br>ຍິງ: 113.985 | 240.384<br>ຍິງ: 119.366 |
| ອັດຕາເຂົ້າຮຽນຂອງເດັກ 3-4 ປີ (%) | 45% | 47,8% |
| ອັດຕາເຂົ້າຮຽນຂອງເດັກ 3-5 ປີ (%) | 56,2% | 59% |
| ອັດຕາເຂົ້າຮຽນຂອງເດັກ 5 ປີ (%) | 77,1% | 79,4% |

**ຮູບພາບທີ 4 : ເມືອງທີ່ມີອັດຕາເຂົ້າຮຽນຂອງເດັກ 5 ປີ ຕໍ່າກວ່າ 60%**



**1.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ**

ການປັບປຸງທາງດ້ານຄຸນນະພາບໃນການສຶກສາກ່ອນໄວຮຽນກໍ່ເປັນອີກວຽກງານໜຶ່ງທີ່ສຳຄັນ ຄຽງຄູ່ກັບການຂະຫຍາຍໂອກາດໃນການເຂົ້າຮຽນ. ໃນໄລຍະຜ່ານມາ, ກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ສ້າງຂີດຄວາມສາມາດທາງດ້ານການບໍລິຫານຄຸ້ມຄອງໃຫ້ແກ່ຜູ້ບໍລິຫານ ແລະ ຄວາມຮູ້ຄວາມສາມາດໃຫ້ແກ່ນັກວິຊາການດ້ານການສຶກສາກ່ອນໄວຮຽນ. ໄດ້ມີນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາກ່ອນໄວຮຽນ, ໄດ້ສືບຕໍ່ທົດລອງນຳໃຊ້ມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນອະນຸບານສຶກສາ, ຫ້ອງກຽມປະຖົມ ແລະ ກຸ່ມຮຽນຜ່ານການຫຼິ້ນ. ພ້ອມດຽວກັນ ກໍ່ມີມາດຕະຖານແຫ່ງຊາດ ດ້ານນໍ້າ ແລະ ສຸຂະອະນາໄມ ໃນສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ.

ໃນສົກຮຽນ 2018-19, ກະຊວງສຶກສາທິການ ແລະ ກິລາ ໄດ້ສ້າງເຄື່ອງມືຝຶກອົບຮົມຄູສອນ ແລະ ເຄື່ອງມືລົງຕິດຕາມການທົດລອງຫ້ອງກຽມປະຖົມພ້ອມທັງລົງຕິດຕາມ. ພ້ອມດຽວກັນ, ກໍໄດ້ມີການຖອດຖອນບົດຮຽນເພື່ອປັບປຸງທາງດ້ານຄຸນນະພາບ ແລະ ສະໜອງປຶ້ມຕ່າງໆ ຄື: ປັບປຸງປຶ້ມໜ່ວຍການສອນທີ 1-3; ປັບປຸງປຶ້ມສອນກຽມຄວາມພ້ອມການສອນ 10 ອາທິດ, ໄດ້ຈັດພິມຄືນປຶ້ມອະນຸບານປີທີ 1 (12 ຕົ້ນສະບັບ) ຈຳນວນ 49.296 ຫົວ; ອະນຸບານປີທີ 2 (12 ຕົ້ນສະບັບ) ຈຳນວນ 89.352 ຫົວ ແລະ ອະນຸບານປີທີ 3 (12 ຕົ້ນສະບັບ) ຈຳນວນ 76.476 ຫົວ; ສະໜອງປຶ້ມບັນທຶກຕ່າງໆຊັ້ນອະນຸບານເຊັ່ນ: ປຶ້ມຕິດຕາມພັດທະນາການປະຈຳພາກຮຽນ; ປຶ້ມຮຽກຊື່ ແລະ ຕິດຕາມພັດທະນາການປະຈຳເດືອນ; ຄູ່ມືແນະນຳການຈັດກິດຈະກຳການຮຽນ-ການສອນ ແລະ ການຕິດຕາມພັດທະນາເດັກຈຳນວນ 143.678 ຫົວ; ແລະ ສະໜອງປຶ້ມແບບຮຽນ-ຄູ່ມືຄູຊັ້ນອະນຸບານ ໃຫ້ແກ່ໂຮງຮຽນຕ່າງໆໃນຂອບເຂດທົ່ວປະເທດ ຈຳນວນ 230.400 ຫົວ.

ໄລຍະຜ່ານມາ ເພື່ອໃຫ້ການຈັດການຮຽນ-ການສອນມີຄຸນນະພາບ ຕາມມາດຕະຖານຄຸນນະພາບການສຶກສາກ່ອນໄວຮຽນ; ໄດ້ມີການທົບທວນ ແລະ ປັບປຸງການນຳໃຊ້ ແລະ ແຜນການລ້ຽງດູ ສຳລັບວຽກງານລ້ຽງເດັກ; ອະນຸບານ ແລະ ກຽມປະຖົມສຳລັບເດັກ 5 ປີ ໃຫ້ມີຄວາມເໝາະສົມຂຶ້ນ ເຊິ່ງມາຮອດປີ 2019; ພະນັກງານວິຊາການໜ່ວຍງານການສຶກສາກ່ອນໄວຮຽນຈຳນວນໜຶ່ງ ໄດ້ຮັບການຝຶກອົບຮົມການນຳໃຊ້ຫຼັກສູດ ແລະ ແຜນຈັດປະສົບການຊັ້ນອະນຸບານ ແລະ ຜູ້ອຳນວຍການໂຮງຮຽນປະຖົມ ທີ່ມີຫ້ອງກຽມຈຳນວນໜຶ່ງ ກໍ່ໄດ້ຮັບການເຜີຍແຜ່ ແລະ ຮັບຮູ້ການນຳໃຊ້ຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມ ແລະ ກຸ່ມຮຽນຜ່ານການຫຼິ້ນ.

ສຳລັບວຽກງານການສຶກສານິເທດຂອງການສຶກສາກ່ອນໄວຮຽນ ພາຍຫຼັງທີ່ໄດ້ມີການເລີ່ມຕົ້ນຈັດຕັ້ງປະຕິບັດມາແລ້ວນັ້ນ, ເຄື່ອງມືຕິດຕາມ ແລະ ຊຸກຍູ້ຊ່ວຍເຫຼືອຄູນິເທດ ກໍ່ໄດ້ຮັບການພັດທະນາ ແລະ ປັບປຸງຈົນສຳເລັດ ພ້ອມນັ້ນ ຄູຝຶກໃນລະດັບແຂວງ ຈຳນວນ 27 ຄົນໃນ 8 ແຂວງ ກໍໄດ້ຮັບການຝຶກອົບຮົມ.

ຄຽງຄູ່ກັບການລົງທຶນເຂົ້າໃນການສຶກສາກ່ອນໄວຮຽນຂອງພາກລັດໃນການປັບປຸງຄຸນນະພາບ, ຄູ່ຮ່ວມພັດທະນາຫຼາຍໆອົງການ ກໍ່ໄດ້ເອົາໃຈໃສ່ຕໍ່ວຽກງານດັ່ງກ່າວເຊັ່ນກັນ. ເປັນຕົ້ນແມ່ນການສຸມໃສ່ວຽກງານກຸ່ມພັດທະນາເດັກໃນຊຸມຊົນ, ການສອນຄວບເດັກອາຍຸ 3-5 ປີ, ການຝຶກອົບຮົມຄະນະພັດທະນາການສຶກສາຂັ້ນບ້ານ, ຝຶກອົບຮົມຜູ້ດູແລເດັກ, ສະໜອງອຸປະກອນ ແລະ ການຕິດຕາມຊຸກຍູ້ ແລະ ເງິນອຸດໜູນໃຫ້ແກ່ຜູ້ດູແລເດັກຈຳນວນໜຶ່ງຢູ່ໃນເມືອງເປົ້າໝາຍອີກດ້ວຍ.

ໂດຍລວມແລ້ວ, ວຽກງານລ້ຽງເດັກ-ອະນຸບານ ແມ່ນໄດ້ຮັບການພັດທະນາ ແລະ ປັບປຸງໃຫ້ດີຂຶ້ນ ເຊິ່ງຜົນການປະເມີນຄຸນນະພາບໃນຂອບເຂດທົ່ວແຂວງ ເຫັນໄດ້ວ່າຄຸນນະພາບການເບິ່ງແຍງດູແລເດັກ ແລະ ການຮຽນ-ການສອນໃນຊັ້ນອະນຸບານ ແມ່ນຢູ່ໃນລະດັບທີ່ໜ້າເພິ່ງພໍໃຈ, ຄູສອນຈຳນວນໜຶ່ງໄດ້ຮັບການຝຶກອົບຮົມ, ສັງຄົມ, ຊຸມຊົນ ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນວຽກງານລ້ຽງເດັກ-ອະນຸບານ ເປັນຕົ້ນແມ່ນການສະໜອງອຸປະກອນ, ເຄື່ອງຫຼິ້ນ ແລະ ຜະລິດອຸປະກອນການຮຽນ-ການສອນດ້ວຍຫຼາຍສີສັນ ເຊິ່ງໄດ້ເຮັດໃຫ້ຄຸນນະພາບໃນວຽກງານດັ່ງກ່າວໄປໃນທິດທາງທີ່ດີຂຶ້ນເທື່ອລະກ້າວ.

ແຕ່ຄຽງຄູ່ກັບການພັດທະນາທີ່ກ່າວມານັ້ນ, ເຫັນວ່າຍັງມີບາງບັນຫາທີ່ສົ່ງຜົນກະທົບໃຫ້ແກ່ຄຸນນະພາບຂອງການຮຽນ-ການສອນຢູ່ໃນຊັ້ນການສຶກສາກ່ອນໄວຮຽນ ໂດຍສະເພາະແມ່ນກ່ຽວກັບຄູສອນ. ອີງໃສ່ຂໍ້ມູນຈາກບົດລາຍງານ ຜົນການສຳຫຼວດລັດຖະກອນຄູ ແລະ ບໍລິຫານ ສຳລັບການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ສົກ

ຮຽນ 2017-18 ເຫັນໄດ້ວ່າ ມີລັດຖະກອນຄູການສຶກສາກ່ອນໄວຮຽນທັງໝົດ 4.995 ຄົນ ໃນນັ້ນມີຈຳນວນ 422 ຄົນ (ເທົ່າກັບ 8,45%) ທີ່ສອນບໍ່ຖືກກັບວິຊາທີ່ຮຽນຈົບມາ. ນອກຈາກນັ້ນ ຍັງມີຄູສອນທີ່ຮຽນຈົບສາຍຄູປະຖົມສຶກສາ ມາສອນຫ້ອງກຽມປະຖົມສຶກສາ ໂດຍບໍ່ໄດ້ຮັບການຝຶກອົບຮົມການນຳໃຊ້ຫຼັກສູດ ແລະ ແຜນຈັດປະສົບການຫ້ອງກຽມປະຖົມ. ສະພາບຄູເຫຼືອ-ບໍ່ພໍ ກໍ່ມີໃນຊັ້ນການສຶກສາກ່ອນໄວຮຽນເຊັ່ນດຽວກັນ, ໃນທົ່ວປະເທດ ມີຄູທີ່ເຫຼືອ 168 ຄົນ, ໃນຂະນະທີ່ຄູບໍ່ພໍ ມີເຖິງ 4.153 ຄົນ ແລະ ຍັງມີຄູອາສາສະໝັກອີກຈຳນວນ 1.965 ຄົນ ທີ່ສອນໃນສະຖານການສຶກສາກ່ອນໄວຮຽນ ເຊິ່ງໃນນັ້ນ ສອນຖືກຕາມວິຊາທີ່ຮຽນຈົບມີພຽງ 1.560 ຄົນ ເທົ່ານັ້ນ.

### 1.1.3. ການບໍລິຫານ ແລະ ຄຸ້ມຄອງ

ຜູ້ບໍລິຫານການສຶກສາກ່ອນໄວຮຽນໄດ້ຮັບຟັງການເຜີຍແຜ່ບັນດານິຕິກຳ ທີ່ກ່ຽວຂ້ອງກັບການສຶກສາກ່ອນໄວຮຽນ ເປັນຕົ້ນແມ່ນ ການບໍລິຫານ ແລະ ຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ. ສຳເລັດການຝຶກອົບຮົມໃຫ້ແກ່ຄູຝຶກ ແລະ ຫຼັງຈາກນັ້ນ ດຳເນີນການຝຶກອົບຮົມໃຫ້ແກ່ຄູສອນຄວບອາຍຸ ແລະ ຜູ້ອຳນວຍການໃນໂຮງຮຽນເປົ້າໝາຍ 62 ແຫ່ງ. ຜູ້ອຳນວຍການຈຳນວນ 30 ທ່ານຈາກໂຮງຮຽນອະນຸບານໃນ 9 ຕົວເມືອງທົ່ວນະຄອນຫຼວງວຽງຈັນໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານຄຸ້ມຄອງການສຶກສາ. ຜູ້ອຳນວຍການຈຳນວນ 40 ທ່ານຈາກໂຮງຮຽນອະນຸບານໃນ 40 ເມືອງ ທີ່ຕິດພັນກັບວຽກງານ 3 ສ້າງ ໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານຄຸ້ມຄອງການສຶກສາ.

ເຖິງແມ່ນວ່າ ການບໍລິຫານ ແລະ ຄຸ້ມຄອງເປັນຫົວໃຈສຳຄັນຂອງການພັດທະນາວຽກງານການສຶກສາ ກ່ອນໄວຮຽນ ແຕ່ກໍຍັງເຫັນໄດ້ເຖິງບັນຫາຈຳນວນໜຶ່ງທີ່ເກີດຂຶ້ນຄື: ຜູ້ບໍລິຫານສະຖານການສຶກສາກ່ອນໄວຮຽນ ສ່ວນຫຼາຍຍັງບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບການບໍລິຫານ-ຄຸ້ມຄອງ ໂດຍສະເພາະແມ່ນອຳນວຍການ ໂຮງຮຽນປະຖົມທີ່ມີຫ້ອງກຽມຍັງບໍ່ເຂົ້າໃຈຕໍ່ການຄຸ້ມຄອງຫ້ອງກຽມປະຖົມ ອາດມີຜົນເຮັດໃຫ້ການຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດຫ້ອງກຽມປະຖົມບໍ່ມີປະສິດທິພາບເທົ່າທີ່ຄວນ.

## 1.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

ເຖິງແມ່ນວ່າການສຶກສາກ່ອນໄວຮຽນຈະມີທ່າອ່ຽງທີ່ດີຂຶ້ນເທື່ອລະກ້າວ ທັງໃນການຂະຫຍາຍໂອກາດໃນການເຂົ້າເຖິງຜ່ານຮູບແບບຕ່າງໆ ແລະ ການປັບປຸງດ້ານຄຸນນະພາບ, ແຕ່ໃນເວລາດຽວກັນ ກໍ່ຍັງມີບາງບັນຫາທີ່ຍັງຄົງຄ້າງທີ່ຕ້ອງໄດ້ຮັບການປັບປຸງ ແລະ ແກ້ໄຂ ເຊິ່ງສາຍເຫດຂອງບັນຫາທີ່ພາໃຫ້ມີຂໍ້ຄົງຄ້າງຕ່າງໆມີຄືດັ່ງນີ້:

1. ການຂະຫຍາຍໂຮງຮຽນອະນຸບານສ່ວນຫຼາຍແມ່ນຢູ່ໃນຕົວເມືອງ ຈຶ່ງເຮັດໃຫ້ໂອກາດການເຂົ້າເຖິງ ການພັດທະນາເດັກກ່ອນໄວຮຽນຍັງຈຳກັດ ແລະ ຫຼຸດໂຕນກັນ ລະຫວ່າງຕົວເມືອງ ແລະ ຊົນນະບົດ;
2. ຫ້ອງຮຽນອະນຸບານສ່ວນຫຼາຍບໍ່ໄດ້ມາດຖານ: ເປ່ເພ, ຊຸດໂຊມ, ຂາດເຄື່ອງຫຼິ້ນ, ຂາດອຸປະກອນການຮຽນ-ການສອນ, ຂາດສິ່ງດຶງດູດທັງໃນ ແລະ ນອກຫ້ອງຮຽນ;
3. ຄູສອນຈຳນວນໜຶ່ງຍັງບໍ່ເຂົ້າໃຈຫຼັກສູດໃໝ່ຂອງການສຶກສາກ່ອນໄວຮຽນ ແລະ ອີກຈຳນວນໜຶ່ງກໍບໍ່ເອົາ ໃຈໃສ່ຕໍ່ໜ້າທີ່ ຈຶ່ງເຮັດໃຫ້ການດຳເນີນການສອນບໍ່ໄດ້ດີເທົ່າທີ່ຄວນ; ຄູສອນ ແລະ ຜູ້ດູແລເດັກຍັງບໍ່ທັນ ເຫັນຄວາມສຳຄັນໃນການພັດທະນາຂອງເດັກ ແລະ ໂພຊະນາການຂອງເດັກເທົ່າທີ່ຄວນ;
4. ການຄຸ້ມຄອງທາງດ້ານວິຊາການຍັງພົບຄວາມຫຍຸ້ງຍາກ ເນື່ອງຈາກວ່າໂຮງຮຽນອະນຸບານຢູ່ຫ່າງໄກກັນ ສ່ວນຫຼາຍບໍ່ມີຜູ້ອຳນວຍການໂຮງຮຽນ ແລະ ເປັນໂຮງຮຽນອະນຸບານທີ່ຂຶ້ນກັບປະຖົມ;
5. ຜູ້ອຳນວຍການໂຮງຮຽນປະຖົມຈຳນວນໜຶ່ງທີ່ມີຫ້ອງອະນຸບານຕິດແປະບໍ່ເຂົ້າໃຈຕໍ່ວຽກງານການສຶກສາກ່ອນໄວຮຽນ, ຂາດການຕິດຕາມຊຸກຍູ້ການຮຽນ-ການສອນຂອງຄູ ແລະ ການປົກປັກຮັກສາເຄື່ອງຫຼິ້ນຕ່າງໆ;
6. ການຕິດຕາມກວດກາຂອງຜູ້ບໍລິຫານບາງບ່ອນໃນແຕ່ລະຂັ້ນຍັງບໍ່ທັນທົ່ວເຖິງ ແລະ ບໍ່ທັນມີຈຸດສຸມຮ່ວມກັບຊຸມຊົນ.

## 1.3. ແຜນວຽກບູລິມະສິດສຳລັບປີ 2020

### 1.3.1. ຈຸດປະສົງ

1. ເພື່ອເຮັດໃຫ້ເດັກໄດ້ກຽມຄວາມພ້ອມໃນທຸກດ້ານກ່ອນເຂົ້າຮຽນຊັ້ນປະຖົມສຶກສາ ແລະ ເພື່ອຫຼຸດອັດຕາການຄ້າງຫ້ອງ ແລະ ປະລະຂັ້ນ ປ1;
2. ເພື່ອຂະຫຍາຍການສຶກສາກ່ອນໄວຮຽນ ໂດຍສະເພາະແມ່ນບັນດາເມືອງທີ່ມີອັດຕາເຂົ້າຮຽນຕ່ຳ, ການສະໜອງສິ່ງອຳນວຍຄວາມສະດວກຕ່າງໆ ໃນການຮຽນ-ການສອນໃນຊັ້ນການສຶກສາກ່ອນໄວຮຽນໃຫ້ພຽງພໍຂັ້ນພື້ນຖານ;

### 1.3.2. ຄາດໝາຍ

1. ອັດຕາເຂົ້າຮຽນຂອງເດັກ 3-5 ປີ ໃຫ້ໄດ້ສູງກວ່າ 60%.
2. ອັດຕາເຂົ້າຮຽນຂອງເດັກ 5 ປີ ໃຫ້ບັນລຸໄດ້ສູງກວ່າ 80%.
3. ເພີ່ມຈຳນວນເມືອງທີ່ມີອັດຕາເຂົ້າຮຽນຂອງເດັກ 5 ປີ ສູງກວ່າ 60% ຈາກ 135 ເມືອງ ໃຫ້ເປັນ 140 ເມືອງ.

### 1.3.3. ວຽກຈຸດສຸມ

1. ຂະຫຍາຍໂຮງຮຽນອະນຸບານ-ຫ້ອງກຽມແຫ່ງໃໝ່ຕາມບ້ານທີ່ມີເດັກໃນເກນອາຍຸເຂົ້າຮຽນຫຼາຍ ໂດຍການສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ປຸກລະດົມຊຸມຊົນເປັນເຈົ້າການໃນການປະກອບສ່ວນ ໃນການກໍ່ສ້າງໂຮງຮຽນໃນເຂດທີ່ມີເງື່ອນໄຂໂດຍສະເພາະເມືອງທີ່ມີອັດຕາເຂົ້າຮຽນຂອງເດັກ 5 ປີ ຕ່ຳກວ່າ 60%;
2. ຂະຫຍາຍການຈັດການຮຽນ-ການສອນກຸ່ມຮຽນຜ່ານການຫຼິ້ນໄປສູ່ເຂດທີ່ມີປະຊາກອນເກນອາຍຸ 3-5 ປີ ໃນບ່ອນທີ່ບໍ່ມີໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມ;
3. ຊຸກຍູ້ຊຸມຊົນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານໃຫ້ມີສ່ວນຮ່ວມໃນການບໍລິຫານ-ຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ ແລະ ປັບປຸງສະພາບແວດລ້ອມ;
4. ສ້າງນິຕິກຳທີ່ກ່ຽວຂ້ອງກັບການສ້າງໂຮງຮຽນລ້ຽງເດັກ ແລະ ໂຮງຮຽນອະນຸບານຕົວແບບ (ທັງພາກລັດ ແລະ ເອກະຊົນ);
5. ສ້າງ, ປັບປຸງການນິເທດການສຶກສາກ່ອນໄວຮຽນ ແລະ ຊຸກຍູ້ຄູນິເທດຂັ້ນເມືອງ ລົງຕິດຕາມຊຸກຍູ້ການຮຽນ-ການສອນຂອງຄູຢູ່ແຕ່ລະໂຮງຮຽນ ຢ່າງໜ້ອຍພາກຮຽນລະ 1 ຄັ້ງ.
6. ພັດທະນາເຄື່ອງມື ແລະ ຄູ່ມືຕິດຕາມ, ທົດລອງນຳໃຊ້ເຄື່ອງມືຕິດຕາມ, ວິເຄາະ ແລະ ປັບປຸງເຄື່ອງມືຕິດຕາມ, ຮັບຮອງ ແລະ ຂໍອະນຸມັດນຳໃຊ້ເຄື່ອງມືຕິດຕາມການຈັດຕັ້ງປະຕິບັດການສຶກສາກ່ອນໄວຮຽນທຸກຮູບແບບ;
7. ສ້າງຄວາມເຂັ້ມແຂງໃຫ້ຂັ້ນແຂວງ ແລະ ຂັ້ນເມືອງ ກ່ຽວກັບການນຳໃຊ້ເຄື່ອງມືປະເມີນມາດຕະຖານນ້ຳ ແລະ ສຸຂະອະນາໄມໃນສະຖານການສຶກສາກ່ອນໄວຮຽນ, ພ້ອມທັງຕິດຕາມການນຳໃຊ້ເຄື່ອງມືປະເມີນມາດຕະຖານດ້ານນ້ຳ ແລະ ສຸຂະອະນາໄມ ໂດຍນຳໃຊ້ຮູບແບບ 3 ດາວ;
8. ປຸກລະດົມຊຸກຍູ້-ສົ່ງເສີມຂະບວນການຮຽນ-ການສອນໃຫ້ມີຄຸນນະພາບ, ສົ່ງເສີມການແຂ່ງຂັນສິລະປະວັນ ນະຄະດີໃນໂຮງຮຽນອະນຸບານໃຫ້ເປັນຂະບວນຟົດຟື້ນ;
9. ປະສານສົມທົບກັບຂະແໜງການສາທາລະນະສຸກ ແລະ ກະສິກຳ ທີ່ພົວພັນກັບວຽກໂພຊະນາການ ເພື່ອເຜີຍແຜ່ໃຫ້ຊຸມຊົນ ແລະ ຜູ້ດູແລເດັກ;
10. ສະໜອງອຸປະກອນ ແລະ ເຄື່ອງຫຼິ້ນທີ່ເປັນສິ່ງຈູງໃຈ ແລະ ສ້າງໂຮງຮຽນໃຫ້ເປັນສະຖານທີ່ທີ່ປອດໄພ ເພື່ອໃຫ້ຜູ້ປົກຄອງມີຄວາມເຊື່ອໝັ້ນໃນການສົ່ງລູກຫຼານໄປຮຽນ.

# II. ຂະແໜງການຍ່ອຍປະຖົມສຶກສາ

## 2.1. ສະພາບລວມ

### 2.1.1. ການຂະຫຍາຍໂອກາດ, ປະສິດທິພາບພາຍໃນ ແລະ ຄວາມເທົ່າທຽມ

ການຂະຫຍາຍໂອກາດໃນການເຂົ້າເຖິງການສຶກສາຊັ້ນປະຖົມຢ່າງທົ່ວເຖິງ ແລະ ເທົ່າທຽມ ຍັງສືບຕໍ່ເປັນບູລິມະສິດຂອງຂະແໜງການຍ່ອຍປະຖົມສຶກສາ. ກະຊວງສຶກສາທິການ ແລະ ກິລາ ໄດ້ສືບຕໍ່ຮ່ວມມືກັບຫຼາຍພາກສ່ວນລວມທັງພາກລັດ, ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ໃນການປັບປຸງຄຸນນະພາບການສຶກສາ ແລະ ສະພາບແວດລ້ອມຂອງໂຮງຮຽນປະຖົມ ໂດຍສະເພາະແມ່ນການສ້າງ, ສ້ອມແປງຫ້ອງຮຽນ ເພື່ອທົດແທນຫ້ອງຮຽນທີ່ມີສະພາບເປ່ເພ ແລະ ປັບປຸງພັດທະນາພື້ນຖານໂຄງລ່າງໃຫ້ເປັນທີ່ດຶງດູດຂອງນັກຮຽນຫຼາຍຂຶ້ນ. ໃນປີ 2019, ມີໂຮງຮຽນປະຖົມຈຳນວນ 4.529 ແຫ່ງ ທີ່ມີນໍ້າໃຊ້ຕະຫຼອດປີ ຊຶ່ງກວມປະມານ 51% ທຽບໃສ່ຈຳນວນໂຮງຮຽນປະຖົມທັງໝົດ ແລະ ມີໂຮງຮຽນປະຖົມ 2.181 ແຫ່ງ ທີ່ມີອ່າງລ້າງມື ແລະ ນັກຮຽນມີກິດຈະກຳລ້າງມືພ້ອມທັງຖູແຂ້ວໃນໂຮງຮຽນ ເທົ່າກັບ 25% ທຽບໃສ່ຈຳນວນໂຮງຮຽນປະຖົມທັງໝົດ.

ນອກນັ້ນ ກໍໄດ້ສົມທົບກັບຊຸມຊົນ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ພາກເອກະຊົນ ເພື່ອຊຸກຍູ້ ແລະ ລະດົມໃຫ້ເດັກໃນເກນອາຍຸໄດ້ເຂົ້າເຖິງການສຶກສາຊັ້ນປະຖົມຢ່າງທົ່ວເຖິງ. ຍ້ອນແນວນັ້ນ ຈຶ່ງເຮັດໃຫ້ອັດຕາເຂົ້າຮຽນໃໝ່ສຸດທິ ແລະ ອັດຕາເຂົ້າຮຽນສຸດທິຊັ້ນປະຖົມເພີ່ມຂຶ້ນຈາກ 97,8% ເປັນ 98,2% ແລະ ຈາກ 98,8% ເປັນ 99,1% ຕາມລຳດັບ. ໃນຂະນະດຽວກັນ, ອັດຕາເຂົ້າຮຽນລວມຊັ້ນປະຖົມກໍ່ຄ່ອຍໆຫຼຸດລົງ ຈາກ 110,6% ໃນປີ 2018 ມາເປັນ 108,2% ໃນປີ 2019 ນັ້ນສະແດງໃຫ້ເຫັນວ່າ ການເຂົ້າຮຽນໃນຊັ້ນປະຖົມມີທ່າອ່ຽງເຂົ້າຖືກເກນອາຍຸຫຼາຍຂຶ້ນ.

ຄຽງຄູ່ກັບການສຶກສາພາກລັດ, ການສຶກສາພາກເອກະຊົນ ກໍໄດ້ປະກອບສ່ວນຫຼາຍສົມຄວນເຂົ້າໃນການພັດທະນາການສຶກສາຊັ້ນປະຖົມ. ໃນສົກຮຽນ 2018-2019 ສັດສ່ວນນັກຮຽນປະຖົມພາກເອກະຊົນກວມ 7% ຂອງຈຳນວນນັກຮຽນທັງໝົດ, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 1%.

**ຮູບພາບທີ 5: ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາໃນລະດັບແຂວງ ແລະ ທົ່ວປະເທດໃນປີ 2019**



ເຖິງວ່າໃນໄລຍະຜ່ານມາ, ກະຊວງສຶກສາທິການ ແລະ ກິລາ ກໍຄືທຸກພາກສ່ວນໄດ້ເອົາໃຈໃສ່ຂະຫຍາຍໂອກາດໃຫ້ເດັກທຸກຄົນໄດ້ເຂົ້າຮຽນໃນຊັ້ນປະຖົມຢ່າງທົ່ວເຖິງ ແລະ ຖືກຕາມເກນອາຍຸກໍຕາມ, ແຕ່ການທີ່ຈະຮັກສານັກຮຽນໃຫ້ຢູ່ໃນລະບົບການສຶກສາຢ່າງມີຄຸນນະພາບ ແລະ ຈົບຊັ້ນປະຖົມ ແມ່ນຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ. ບັນຫາດັ່ງກ່າວໄດ້ສະແດງອອກຜ່ານ ອັດຕາຄ້າງຫ້ອງ ແລະ ອັດຕາປະລະທີ່ເພີ່ມຂຶ້ນໃນບາງຂັ້ນຮຽນ ແລະ ບາງເມືອງ ເຊິ່ງເປັນສາເຫດໃຫ້ອັດຕາລອດເຫຼືອຮອດ ຂັ້ນ ປ.5 ໃນຊັ້ນປະຖົມຫຼຸດລົງ.

ເຖິງວ່າອັດຕາຄ້າງຫ້ອງໃນຊັ້ນປະຖົມ ຫຼຸດລົງ 0,2% (ຈາກ 4% ມາເປັນ 3,8%) ແຕ່ເຫັນວ່າ ມີເຖິງ 74 ເມືອງທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນ ເມື່ອທຽບໃສ່ປີຜ່ານມາ. ໃນສົກຮຽນ 2018-2019, ເມືອງທີ່ມີອັດຕາຄ້າງຫ້ອງສູງທີ່ສຸດແມ່ນເມືອງນອງ ແຂວງສະຫວັນນະເຂດ (23,1%), ຖັດມາແມ່ນ ເມືອງໄຊສະຖານ ແຂວງໄຊຍະບູລີ (16,4%), ເມືອງດັກຈຶງ (14,1%) ແລະ ເມືອງກະລຶມ ແຂວງເຊກອງ (13,9%). ແຕ່ທີ່ໜ້າເປັນຫ່ວງທີ່ສຸດ ແມ່ນການຄ້າງຫ້ອງ ຢູ່ໃນຂັ້ນ ປ.1, ໃນ 74 ເມືອງທີ່ມີອັດຕາຄ້າງຫ້ອງໃນຊັ້ນປະຖົມເພີ່ມຂຶ້ນນັ້ນ ມີເຖິງ 56 ເມືອງ ທີ່ອັດຕາຄ້າງຫ້ອງເພີ່ມຂຶ້ນຢູ່ໃນຂັ້ນ ປ.1 ເຊິ່ງເພີ່ມຂຶ້ນຫຼາຍທີ່ສຸດແມ່ນຢູ່ ເມືອງໄຊສະຖານ ແຂວງ ໄຊຍະບູລີ ແລະ ເມືອງລ້ອງແຈ້ງ ແຂວງໄຊສົມບູນ. ໃນທົ່ວປະເທດ ເມືອງທີ່ມີອັດຕາຄ້າງຫ້ອງຂັ້ນ ປ.1 ສູງກວ່າ 14% ມີ 20 ເມືອງຫຼຸດລົງ 1 ເມືອງເມື່ອທຽບໃສ່ປີຜ່ານມາ. ໃນ 20 ເມືອງນັ້ນ, ເມືອງທີ່ມີອັດຕາດັ່ງກ່າວສູງທີ່ສຸດແມ່ນ ເມືອງນອງ, ຖັດມາແມ່ນ ເມືອງດາກຈຶງ, ເມືອງກະລຶມ ແລະ ເມືອງສະໜາມໄຊ ເຊິ່ງເມືອງເຫຼົ່ານີ້ມີອັດຕາຄ້າງຫ້ອງສູງກວ່າ 25%. ແຕ່ເຖິງຢ່າງໃດກໍຕາມ, ໃນບັນດາເມືອງເຫຼົ່ານີ້ກໍມີເມືອງຈຳນວນໜຶ່ງທີ່ປະຕິບັດໄດ້ດີຂຶ້ນ ແລະ ມີອັດຕາດັ່ງກ່າວ ຫຼຸດລົງ. ໃນນັ້ນ, ເມືອງກະລຶມ ເປັນເມືອງທີ່ມີອັດຕາຄ້າງຫ້ອງຂັ້ນ ປ.1 ຫຼຸດລົງ ເຖິງ 17,6% (ຈາກ 46,7% ເຫຼືອ 29,12%).

**ຮູບພາບທີ 6: ເມືອງທີ່ອັດຕາຄ້າງຫ້ອງຂັ້ນ ປ.1 ສູງກວ່າ 14%**




ໜຶ່ງໃນຕົວຊີ້ບອກຂອງກະແສນັກຮຽນ ກໍຄືອັດຕາການປະລະການຮຽນ. ໃນສົກຮຽນ 2018-2019, ອັດຕາປະລະການຮຽນຢູ່ຊັ້ນປະຖົມສຶກສາແມ່ນເພີ່ມຂຶ້ນຈາກ 4% ເປັນ 4,3% ເຊິ່ງໃນທົ່ວປະເທດ ມີເຖິງ 70 ເມືອງ ທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນ ແລະ ມີເຖິງ 30 ເມືອງ ທີ່ມີອັດຕາດັ່ງກ່າວສູງກວ່າ 6%. ການປະລະການຮຽນຢູ່ຊັ້ນປະຖົມນັ້ນ, ສ່ວນໃຫຍ່ແມ່ນຢູ່ໃນຂັ້ນ ປ.1. ເມືອງທີ່ມີອັດຕາປະລະ ປ.1 ສູງກວ່າໝູ່ແມ່ນ ເມືອງບົວລະພາ ແຂວງຄຳມ່ວນ ສູງເຖິງ 23,9%, ເມືອງເຊໂປນ, ເມືອງພະລານໄຊ ແຂວງສະຫວັນນະເຂດ ສູງເຖິງ 21,7% ແລະ 18,9% ຕາມລຳດັບ. ທຽບໃສ່ປີຜ່ານມາແມ່ນມີເຖິງ 77 ເມືອງ ທີ່ມີອັດຕາປະລະ ປ.1 ເພີ່ມຂຶ້ນ ແລະ ເພີ່ມຫຼາຍ ທີ່ສຸດແມ່ນຢູ່ ເມືອງບົວລະພາ (ເພີ່ມຂຶ້ນຈາກ 4,9% ເປັນ 23,9%), ຖັດລົງມາມີ ເມືອງກະລຶມ ແລະ ເມືອງອາດສະພັງທອງ ແຂວງສະຫວັນນະເຂດ ທີ່ເພີ່ມຈາກ 2,4% ເປັນ 12,9% ແລະ 2,2% ເປັນ 10,5% ຕາມລຳດັບ. ກໍລະນີຂອງ

ເມືອງກະລຶມ ແມ່ນກໍລະນີທີ່ຄວນມີການສຶກສາເປັນພິເສດ ເນື່ອງຈາກວ່າໃນສົກຮຽນ ຜ່ານມາອັດຕາຄ້າງຫ້ອງ ປ.1 ໄດ້ຫຼຸດລົງເຖິງ 17,6% ແຕ່ໃນຂະນະດຽວກັນ ອັດຕາປະລະໃນຂັ້ນດັ່ງກ່າວ ພັດເພີ່ມຂຶ້ນ ເຖິງ 11%, ນັ້ນສະແດງໃຫ້ເຫັນວ່າ ໃນສົກຮຽນຜ່ານມາ ເດັກນ້ອຍທີ່ເລືອກປະລະການຮຽນມີເພີ່ມຂຶ້ນ ແທນທີ່ພວກເຂົາຈະກັບຄືນມາຄ້າງຫ້ອງ ປ.1 ຄືນ.

ບັນຫາຕ່າງໆທີ່ກ່າວມານັ້ນ ເປັນຜົນກະທົບຕໍ່ກັບປະສິດທິພາບພາຍໃນຂອງລະບົບການສຶກສາ. ການປະລະ ແລະ ການຄ້າງຫ້ອງທີ່ສູງ ເຮັດໃຫ້ອັດຕາລອດເຫຼືອຮອດ ປ.5 ໃນສົກຮຽນ 2018-2019 ຫຼຸດລົງ ຈາກ 82,2% ເປັນ 82% ເມື່ອທຽບໃສ່ສົກຮຽນຜ່ານມາ. ຈາກຜົນການວິເຄາະຕາມກະແສຮຸ່ນນັກຮຽນ (Cohort Analysis) ໃນສົກຮຽນ 2018-19 ເຫັນວ່າຖ້າປະສິດທິພາບພາຍໃນຂອງລະບົບການສຶກສາຍັງເປັນແບບນີ້ຕໍ່ໄປ, ນັກຮຽນ 1.000 ຄົນໃດທີ່ເຂົ້າຮຽນຈະລອດເຫຼືອໄປຮອດ ຂັ້ນ ປ.5 ຢູ່ປະມານ 826 ຄົນ ແລະ ຈົບຊັ້ນປະຖົມ 798 ຄົນ (ພາຍໃຕ້ສົມມຸດຖານວ່າອະນຸຍາດໃຫ້ຄ້າງຫ້ອງໄດ້ 2 ປີ). ນັ້ນໝາຍຄວາມວ່າ 202 ຄົນ ທີ່ເຮົາລົງທຶນໄປຈະບໍ່ຈົບ ການສຶກສາຊັ້ນປະຖົມພາຍໃນ 5 ຫຼື 7 ປີ ແລະ ແທນທີ່ເດັກນ້ອຍຄົນໜຶ່ງຈະໃຊ້ເວລາພຽງ 5 ປີ ໃນການຈົບ ຊັ້ນປະຖົມ ແຕ່ພັດຕ້ອງໃຊ້ເວລາ 5,2 ປີ ຕໍ່ 1 ຄົນ ຢ່າງໜ້ອຍເພື່ອໃຫ້ຈົບຊັ້ນ. ຖ້າເປັນແບບນັ້ນ, ລັດຖະບານຈະຕ້ອງ ໄດ້ລົງທຶນໃສ່ເດັກນ້ອຍຄົນໜຶ່ງເພື່ອໃຫ້ຈົບຊັ້ນ 1,18 ເທື່ອ ແທນທີ່ຈະແມ່ນ 1 ເທື່ອ ຂອງມູນຄ່າຫົວໜ່ວຍຕໍ່ນັກຮຽນ ໜຶ່ງຄົນ. ໃນກໍລະນີນີ້ ຈະຖືວ່າເປັນການສິ້ນເປືອງງົບປະມານລັດຖະບານຫຼາຍຂຶ້ນ.

ດັ່ງນັ້ນແລ້ວ, ເພື່ອແກ້ໄຂບັນຫາດັ່ງກ່າວ ກະຊວງສຶກສາທິການ ແລະ ກິລາ ລວມທັງພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ຕ້ອງໄດ້ເອົາໃຈໃສ່ຊີ້ນຳຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ໃຫ້ເພີ່ມຄວາມເອົາໃຈໃສ່ເປັນພິເສດໂດຍສະເພາະບັນດາເມືອງທີ່ມີບັນຫາທີ່ກ່າວມານັ້ນ ເພື່ອໃຫ້ການຊຸກຍູ້ ແລະ ຊ່ວຍເຫຼືອຢ່າງໃກ້ຊິດໃນການປະຕິບັດໜ້າທີ່ຂອງຜູ້ອຳນວຍການໂຮງຮຽນ ແລະ ຄູສອນຢ່າງເປັນປົກກະຕິ.

**ຮູບພາບທີ 7: ເມືອງທີ່ອັດຕາປະລະ ປ.1 ສູງກວ່າ 6% (30 ເມືອງ)**



**ຕາຕະລາງທີ 5 : ຕົວຊີ້ບອກຊັ້ນປະຖົມສຶກສາ**

| ຕົວຊີ້ບອກ | ສົກຮຽນ 2016-2017 | ສົກຮຽນ 2017-2018 | ສົກຮຽນ 2018-2019 |
|---|---|---|---|
| ຈຳນວນຫ້ອງຮຽນ (ຫ້ອງ) | 34.305 | 34.120 | 33.991 |
| ຈຳນວນນັກຮຽນທັງໝົດ (ຄົນ) | 808.705 | 786.246 | 770.683 |
| ອັດຕາເຂົ້າຮຽນໃໝ່ສຸດທິ (%) | 97,6 | 97,8 | 98,1 |
| ອັດຕາເຂົ້າຮຽນສຸດທິ (%) | 98,7 | 98,8 | 99,0 |
| ອັດຕາເຂົ້າຮຽນໃໝ່ລວມ (%) | 111,3 | 110,9 | 109,1 |
| ອັດຕາເຂົ້າຮຽນລວມ (%) | 113,2 | 110,6 | 108,2 |
| ອັດຕາຄ້າງຫ້ອງ ປ 1 (%) | 9,2 | 8,8 | 8,4 |
| ອັດຕາປະລະ ປ 1 (%) | 6,9 | 5,8 | 6,3 |
| ອັດຕາຄ້າງຫ້ອງ (%) | 4,1 | 4,0 | 3,8 |
| ອັດຕາປະລະ (%) | 4,4 | 4,0 | 4,3 |
| ອັດຕາລອດເຫຼືອ (%) | 81,1 | 82,2 | 82,0 |
| ອັດຕາສ່ວນການເຂົ້າຮຽນໃນໂຮງຮຽນເອກະຊົນທຽບໃສ່ນັກຮຽນທັງໝົດ (%) | 5,7 | 6 | 7 |

### 2.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

➢ **ດ້ານການປັບປຸງຫຼັກສູດ**

ເພື່ອເປັນການປັບປຸງຄຸນນະພາບໃນຊັ້ນປະຖົມໃຫ້ດີຂຶ້ນ, ໃນປີ 2019 ກະຊວງສຶກສາທິການ ແລະ ກິລາ ໄດ້ປັບປຸງຫຼັກສູດ, ຄູ່ມືຄູ, ປຶ້ມແບບຮຽນ, ສື່ການຮຽນອື່ນໆ ສຳລັບທຸກວິຊາ. ສຳເລັດການປັບປຸງ, ກວດແກ້ປຶ້ມແບບຮຽນ ແລະ ຄູ່ມືຄູ ປ.1 ຈຳນວນ 6 ວິຊາຄືນໃໝ່ (ບໍ່ນັບວິຊາ ຄະນິດສາດ), ສຳເລັດການຄົ້ນຄວ້າ ແລະ ຮຽບຮຽງປຶ້ມແບບຮຽນ ແລະ ຄູ່ມືຄູສຳລັບຊັ້ນປະຖົມສຶກສາປີທີ 2 (ພາຍໃຕ້ແຜນງານ BEQUAL). ລົງຕິດຕາມ ແລະ ປະເມີນຜົນການທົດລອງປຶ້ມແບບຮຽນ ແລະ ຄູ່ມືຄູ ປ.2 ຢູ່ 25 ໂຮງຮຽນເປົ້າໝາຍໃນແຂວງຫຼວງນໍ້າທາ, ນະຄອນຫຼວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງສາລະວັນ. ສຳເລັດການຂຽນປຶ້ມແບບຮຽນ ແລະ ຄູ່ມືຄູຄະນິດສາດ ປ.2 ເພື່ອກະກຽມຈັດພິມແຈກຢາຍທົ່ວປະເທດ (ຈຳນວນ 2 ຕົ້ນສະບັບ). ຈັດພິມຄືນປຶ້ມແບບຮຽນພາສາລາວ, ຄະນິດສາດ, ຄຸນສົມບັດ, ໂລກອ້ອມຕົວ ແລະ ພາສາອັງກິດ ປ.3-ປ.5 ລວມທັງໝົດ 476.689 ຫົວ, ຈັດພິມປຶ້ມແບບຮຽນ ແລະ ຄູ່ມືຄູວິຊາຄະນິດສາດ ປ.1 ສະບັບປັບປຸງໃໝ່ ຈຳນວນ 202.700 ຫົວ. ພ້ອມດຽວກັນນັ້ນ, ກໍ່ໄດ້ມີການຝຶກອົບຮົມຄູສຶກສານິເທດ ເພື່ອສະໜັບສະໜູນການສອນຫຼັກສູດໃໝ່. ໄດ້ປັບປຸງມາດຕະຖານຄຸນນະພາບການສຶກສາຊັ້ນປະຖົມຈາກ 6 ຂົງເຂດ 42 ຕົວຊີ້ວັດ ແລະ 210 ເງື່ອນໄຂ ມາເປັນມາດຕະຖານຂັ້ນພື້ນຖານຂອງການສຶກສາຊັ້ນປະຖົມ ຊຶ່ງປະກອບມີສອງພາກຄື: ພາກທີໜຶ່ງ ກ່ຽວຂ້ອງກັບປັດໄຈການສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ແລະ ພາກທີສອງ ກ່ຽວຂ້ອງກັບການບໍລິຫານ-ຄຸ້ມຄອງໂຮງຮຽນ, ການສິດສອນຂອງຄູ ແລະ ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາການສຶກສາ.

ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບການພັດທະນາ ແລະ ປັບປຸງຫຼັກສູດໃໝ່ນັ້ນ, ຍັງສັງເກດເຫັນວ່າ ການປັບປຸງຫຼັກສູດບໍ່ໄດ້ອີງໃສ່ຜົນການປະເມີນນັກຮຽນຕົວຈິງ ມາເປັນບ່ອນອີງໃນການປັບປຸງ ເພື່ອໃຫ້ແທດເໝາະກັບຄວາມສາມາດທີ່ຄວນຮັບຮູ້ໃນແຕ່ລະຂັ້ນຮຽນໄດ້ເທົ່າທີ່ຄວນ. ສະນັ້ນ, ການປັບປຸງຫຼັກສູດ, ປຶ້ມແບບຮຽນ, ການປັບປຸງການສ້າງຄູ ແລະ ການຝຶກອົບຮົມຄູປະຈຳການ ຄວນອີງໃສ່ຜົນການປະເມີນຜົນການຮຽນຂອງນັກຮຽນມາເປັນບ່ອນອີງ ເພື່ອເຮັດໃຫ້ຜົນການຮຽນຂອງນັກຮຽນດີຂຶ້ນ.

➢ **ດ້ານຄູສອນ**

ຄູສອນເປັນປັດໄຈນຳເຂົ້າຫຼັກ ທີ່ຕັດສິນດ້ານຄຸນນະພາບການຮຽນ-ການສອນ. ດັ່ງນັ້ນ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ເອົາໃຈໃສ່ບັນຈຸ ແລະ ສັບຊ້ອນຄູສອນຊັ້ນປະຖົມສຶກສາ ໃຫ້ແກ່ບັນດາໂຮງຮຽນໃນຂອບເຂດທົ່ວປະເທດ. ໃນສົກຮຽນ 2018-19 ທົ່ວປະເທດມີຄູສອນຊັ້ນປະຖົມພາກລັດທັງໝົດຈຳນວນ 33.533 ຄົນ ໃນນັ້ນເປັນຄູສອນປະຈຳ 20.683 ຄົນ, ຄູສັນຍາຈ້າງ ແລະ ອາສາສະໝັກ ຈຳນວນ 3.718 ຄົນ, ຜູ້ບໍລິຫານໃນໂຮງຮຽນທີ່ໄດ້ສິດສອນຈຳນວນ 9.132 ຄົນ. ດັ່ງນັ້ນ, ເຮັດໃຫ້ອັດຕາສ່ວນນັກຮຽນຕໍ່ຄູມີພຽງແຕ່ 21 ຄົນ ຕໍ່ຄູ 1 ຄົນ, ແຕ່ຖ້າບໍ່ໄລ່ຄູອາສາສະໝັກ ແລະ ຜູ້ອຳນວຍການໂຮງຮຽນທີ່ບໍ່ໄດ້ສອນຈະເຮັດໃຫ້ອັດຕາສ່ວນນັກຮຽນຕໍ່ຄູ 24 ຄົນຕໍ່ຄູ 1 ຄົນ. ເມື່ອສົມທຽບບັນດາເມືອງໃນທົ່ວປະເທດ ເຫັນວ່າ ອັດຕາສ່ວນນັກຮຽນຕໍ່ຄູ ຕ່ຳສຸດແມ່ນນັກຮຽນ 12 ຄົນຕໍ່ຄູ 1 ຄົນ ຢູ່ເມືອງ ແກ້ວອຸດົມ ແຂວງວຽງຈັນ ແລະ ສູງສຸດຢູ່ເມືອງຕຸ້ມລານ ແຂວງສາລະວັນ ໃນອັດຕານັກຮຽນ 33 ຄົນຕໍ່ຄູ 1 ຄົນ. ແຕ່ກໍບໍ່ໝາຍຄວາມວ່າມີຄູພຽງພໍກັບຄວາມຕ້ອງການແລ້ວ ເພາະວ່າຍັງມີຫ້ອງຮຽນຈຳນວນ 9.187 ຫ້ອງ ທີ່ຍັງມີການສອນຫ້ອງຄວບ.

ເພື່ອໃຫ້ການນຳໃຊ້ຫຼັກສູດໃໝ່ໃນຂັ້ນ ປ.1 ໄດ້ຮັບຜົນທີ່ດີ, ໄດ້ມີການຝຶກອົບຮົມຄູຝຶກຫຼັກ ຈຳນວນ 59 ທ່ານ ແລະ ຄູຝຶກຂັ້ນແຂວງ ຈຳນວນ 567 ທ່ານເພື່ອຈະໄປຝຶກໃຫ້ຜູ້ອຳນວຍການໂຮງຮຽນ ແລະ ຄູສຶກສານິເທດໃນການນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມືຄູ ຂັ້ນ ປ.1 ທົ່ວປະເທດ. ໄດ້ປັບປຸງຄູ່ມືຍົກລະດັບຄູສຶກສານິເທດ ເພື່ອຈະຍົກລະດັບຄູສຶກສານິເທດທົ່ວປະເທດ ແລະ ສ້າງຄູຝຶກຄູສຶກສານິເທດຂັ້ນສູນກາງ ແລະ ຂັ້ນແຂວງ ຈຳນວນ 22 ທ່ານພ້ອມທັງໄດ້ທົດລອງນຳໃຊ້ຄູ່ມືຝຶກອົບຮົມຄູສຶກສານິເທດ ສຳເລັດແລ້ວ 28 ທ່ານ ໃນ 3 ແຂວງ ຄື ສະຫວັນນະເຂດ ວຽງຈັນ ແລະ ສາລະວັນ.

ການເອົາໃຈໃສ່ ແລະ ການປະຕິບັດໜ້າທີ່ຂອງຄູແມ່ນເປັນປັດໄຈຫຼັກໃນການພັດທະນາທາງດ້ານຄຸນນະພາບຂອງການສຶກສາ. ໃນບາງທ້ອງຖິ່ນຍັງເຫັນວ່າຄູສອນຈຳນວນໜຶ່ງຍັງແຕ່ງບົດສອນບໍ່ຄົບຖ້ວນ, ການຜະລິດ ແລະ ນຳໃຊ້ສື່ເຂົ້າໃນການຮຽນ-ການສອນມີໜ້ອຍ, ຂາດສອນ ແລະ ຂາດການຕິດຕາມເອົາໃຈໃສ່ ການຮຽນຂອງນັກຮຽນ ເຊິ່ງເປັນສາຍເຫດໃຫ້ ຜົນການຮຽນຂອງນັກຮຽນ ໃນບາງວິຊາບໍ່ໄດ້ຕາມມາດຖານ.

➢ **ດ້ານຜົນການຮຽນຂອງນັກຮຽນ**

ໄດ້ມີການປະເມີນຜົນການຮຽນຂອງນັກຮຽນ ໂດຍການດຳເນີນສຳຫຼວດຜົນສຳເລັດການຮຽນຮູ້ວິຊາຄະນິດສາດ ໂດຍການສຸ່ມຕົວຢ່າງເອົານັກຮຽນຂັ້ນ ປ.3 ຈຳນວນ 17.000 ຄົນໃນທົ່ວປະເທດ. ໄດ້ເຂົ້າຮ່ວມ ໃນການວັດຜົນການຮຽນຮູ້ຂອງນັກຮຽນ ປ.5 ຂອງຊັ້ນປະຖົມສຶກສາອາຊຽນໃນອາຊີຕາເວັນອອກສຽງໃຕ້ (SEAPLM), ສຳເລັດການທົດລອງເຄື່ອງມືປະເມີນຜົນກັບນັກຮຽນ ປ.5 ຈຳນວນ 4.500 ຄົນ ໂດຍອີງໃສ່ເນື້ອໃນ ທັງໝົດໃນຫຼັກສູດຂອງອາຊຽນ ເຊິ່ງໄດ້ດັດປັບໃຫ້ເຂົ້າກັບສະພາບການຂອງ ສປປ ລາວ ແລະ ໃຫ້ສອດຄ່ອງກັບ ຜົນການຮຽນຮູ້ຂອງນັກຮຽນ ປ.5 ທົ່ວພາກພື້ນ, ວິຊາທີ່ຈະນຳໄປທົດສອບມີວິຊາພາສາລາວ, ຄະນິດສາດ ແລະ ການເປັນພົນລະເມືອງຂອງໂລກ.

ຈາກການປະເມີນຜົນການຮຽນຂອງນັກຮຽນໃນວິຊາພາສາລາວ ແລະ ຄະນິດສາດ ຂັ້ນ ປ.3 ເຫັນວ່າ ນັກຮຽນຍັງມີລະດັບຄວາມສາມາດຕ່ຳ ແລະ ມີຄວາມຫຼາກຫຼາຍຢູ່ບັນດາແຂວງ ເຊິ່ງຜົນການປະເມີນມີຄືດັ່ງນີ້: ວິຊາພາສາລາວ ມີພຽງນັກຮຽນຈຳນວນ 34% ທີ່ຈັດໄດ້ວ່າມີຄວາມພ້ອມເພື່ອເລື່ອນຂຶ້ນ ປ.4 ໄດ້ ແລະ ວິຊາຄະນິດສາດ ມີນັກຮຽນ ຈຳນວນ 18% ຖືກຈັດໄດ້ວ່າມີຄວາມພ້ອມເພື່ອເລື່ອນຂຶ້ນ ປ.4 ໄດ້.

ໃນການລົງທົດລອງທົດສອບຄວາມຮູ້ພື້ນຖານນັກຮຽນຂັ້ນ ປ.3, ປ.4 ແລະ ປ.5 ໃນ 5 ແຂວງເປົ້າໝາຍຂອງສູນປະກັນຄຸນນະພາບສະແດງໃຫ້ເຫັນວ່າ ໃນການລົງທົດສອບຄັ້ງທີ 1 ເຊິ່ງມີນັກຮຽນ 894 ຄົນ ຈາກ 30 ໂຮງຮຽນ 7 ເມືອງ ໃນແຂວງວຽງຈັນ ແລະ ອຸດົມໄຊ ເຫັນວ່າ ນັກຮຽນ ປ.3 ມີເຖິງ 69% ທີ່ສາມາດອ່ານໄດ້ພຽງແຕ່ ຕົວອັກສອນເທົ່ານັ້ນ, ສ່ວນ ປ.4 ແມ່ນ 59% ແລະ ປ.5 ຍັງມີເຖິງ 36% ແລະ ໃນຈຳນວນດຽວກັນ, ສັດສ່ວນທີ່ສາມາດອ່ານບົດເລື່ອງສັ້ນໄດ້ ໃນຂັ້ນ ປ.3 ມີ 13%, ປ.4 ມີ 20% ແລະ ປ.5 ມີ 39%. ໃນຄັ້ງທີ 2 ໄດ້ດຳເນີນການທົດສອບກັບນັກຮຽນ 1.050 ຄົນ ໃນ 36 ໂຮງຮຽນ 6 ເມືອງ ຢູ່ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ

ແລະ ແຂວງຈຳປາສັກ, ຜົນການປະເມີນເຫັນໄດ້ວ່າ ນັກຮຽນ ປ.3 ມີເຖິງ 40% ທີ່ສາມາດອ່ານໄດ້ພຽງແຕ່ຕົວອັກສອນເທົ່ານັ້ນ, ສ່ວນ ປ.4 ແມ່ນ 16% ແລະ ປ.5 ຍັງມີເຖິງ 9% ແລະ ໃນຈຳນວນດຽວກັນ, ສັດສ່ວນທີ່ສາມາດອ່ານບົດເລື່ອງສັ້ນໄດ້ ໃນຂັ້ນ ປ.3 ມີ 38%, ປ.4 ມີ 60% ແລະ ປ.5 ມີ 70%.

ຈາກຜົນການປະເມີນຜົນການຮຽນຂອງນັກຮຽນທັງໝົດນັ້ນ, ສະແດງໃຫ້ເຫັນວ່າ ທັກສະຂອງນັກຮຽນປະຖົມຕອນຕົ້ນ ດ້ານການອ່ານ, ການຂຽນພາສາລາວ ແລະ ການຄິດໄລ່ເລກຂັ້ນພື້ນຖານ ຍັງບໍ່ໄດ້ດີ (ຍັງອ່ອນ) ທີ່ຈະຊ່ວຍໃຫ້ເຂົາເຈົ້າສາມາດຮຽນໄດ້ຢ່າງມີຄຸນນະພາບໃນຂັ້ນທີ່ສູງກວ່າຂອງຊັ້ນປະຖົມ ແລະ ມັດທະຍົມຕົ້ນ.

### 2.1.3. ວຽກບໍລິຫານ ແລະ ການຄຸ້ມຄອງ

ໃນສົກປີ 2019, ກະຊວງສຶກສາທິການ ແລະ ກິລາ ໄດ້ປັບປຸງນິຕິກຳ, ຂໍ້ຕົກລົງວ່າດ້ວຍມາດຕະຖານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນສາມັນສຶກສາ, ຄູ່ມືໃນການເຄື່ອນໄຫວ ກຸ່ມໂຮງຮຽນປະຖົມສຶກສາ ແລະ ຄູ່ມືດຳເນີນວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ ເພື່ອນຳໃຊ້ເຂົ້າໃນການຝຶກອົບຮົມໃຫ້ແກ່ຜູ້ອຳນວຍການໂຮງຮຽນ ແລະ ຄູໃນທົ່ວປະເທດ. ພ້ອມກັນນັ້ນ, ເພື່ອຮັບປະກັນໃຫ້ການຄຸ້ມຄອງໂຮງຮຽນ ມີປະສິດທິພາບຍິ່ງຂຶ້ນ, ໃນປີ 2019 ລັດຖະບານໄດ້ເພີ່ມມູນຄ່າຫົວໜ່ວຍເງິນບໍລິຫານໂຮງຮຽນຊັ້ນປະຖົມຈາກ 50.000 ກີບເປັນ 70.000 ກີບຕໍ່ຄົນຕໍ່ປີ, ພິເສດ ສຳລັບໂຮງຮຽນທີ່ຢູ່ບັນດາເມືອງທີ່ໄດ້ຮັບການຊ່ວຍເຫຼືອຂອງໂຄງການ GPE II ແມ່ນໄດ້ຮັບງົບປະມານເພີ່ມຕື່ມ 30.000 ກີບ ຕໍ່ຄົນ ລວມເປັນ 100.000 ກີບຕໍ່ຄົນຕໍ່ປີ.

ເຖິງແມ່ນວ່າໂດຍລວມ, ການບໍລິຫານຄຸ້ມຄອງໃນແຕ່ລະຂັ້ນຈະໄດ້ຮັບການປັບປຸງໃຫ້ດີຂຶ້ນໃນເທື່ອລະກ້າວ, ແຕ່ກໍ່ຍັງມີບາງບັນຫາທີ່ຕ້ອງໄດ້ຮັບການປັບປຸງຕື່ມ ເຊັ່ນ: ການຕິດຕາມການປະຕິບັດໜ້າທີ່ຂອງຄູສຶກສານິເທດ ແລະ ຜູ້ອຳນວຍການໂຮງຮຽນ, ການປະສານງານລະຫວ່າງໂຮງຮຽນ ແລະ ຊຸມຊົນ ລວມໄປເຖິງການຈັດຕັ້ງກຸ່ມໂຮງຮຽນກໍ່ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

## 2.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

- **ສາຍເຫດໃນການຄ້າງຫ້ອງ**

1. ການຂະຫຍາຍໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມໄປຫາກຸ່ມບ້ານຍັງມີຈຳກັດ ເດັກຈຶ່ງບໍ່ໄດ້ຜ່ານການກຽມຄວາມພ້ອມກ່ອນເຂົ້າຮຽນຊັ້ນປະຖົມສຶກສາ;
2. ຄູສອນຈຳນວນໜຶ່ງບໍ່ໄດ້ເອົາໃຈໃສ່ໃນການສິດສອນ, ບໍ່ໄດ້ມີການວາງແຜນການສອນ, ບໍ່ແຕ່ງບົດສອນ, ບໍ່ຜະລິດ ແລະ ບໍ່ນຳໃຊ້ສື່ການຮຽນ-ການສອນ ແລະ ຄູສອນຈຳນວນໜຶ່ງທີ່ຢູ່ເຂດຫ່າງໄກສອກຫຼີກ ປະລະຊົ່ວໂມງສອນ;
3. ການບຳລຸງນັກຮຽນອ່ອນຍັງເຮັດບໍ່ທັນໄດ້ດີ ແລະ ບໍ່ຕໍ່ເນື່ອງໃນບາງໂຮງຮຽນຍັງບໍ່ໄດ້ມີການຕິດຕາມນັກຮຽນອ່ອນ;
4. ການເລື່ອນຂັ້ນແບບຕໍ່ເນື່ອງຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ;
5. ຜູ້ປົກຄອງຈຳນວນໜຶ່ງບໍ່ເຫັນໄດ້ເຖິງຄວາມສຳຄັນຂອງການສຶກສາ ບໍ່ໄດ້ເອົາໃຈໃສ່ສອນລູກ ແລະ ຊຸກຍູ້ລູກຮຽນເວລາຢູ່ເຮືອນ;
6. ເຂດຊົນນະບົດຍັງຂາດເຂີນຄູສອນ ອັນເຮັດໃຫ້ມີໂຮງຮຽນຈຳນວນບໍ່ໜ້ອຍຈຳເປັນຕ້ອງໄດ້ສະໜອງ ການສອນຫ້ອງຄວບ ໂດຍສະເພາະການສອນຄວບຫ້ອງ ປ.1 ແລະ ຄູທີ່ສອນຫ້ອງຄວບຍັງຂາດທັກສະ ການສອນຫ້ອງຄວບ;
7. ການລົງເຄື່ອນໄຫວ, ຊ່ວຍເຫຼືອ, ແນະນຳຄູສອນໃນຂັ້ນໂຮງຮຽນຂອງຄູສຶກສານິເທດຂັ້ນເມືອງບໍ່ທົ່ວເຖິງ ແລະ ບໍ່ຕໍ່ເນື່ອງ ຍ້ອນງົບປະມານມີຈຳກັດ ແລະ ຜູ້ອຳນວຍການບາງໂຮງຮຽນກໍ່ບໍ່ໄດ້ມີການນິເທດພາຍໃນ;
8. ຕົວຊີ້ບອກໃນການປະເມີນຄູບໍ່ໄດ້ເນັ້ນໃສ່ຜົນການຮຽນຂອງນັກຮຽນເປັນຫຼັກ.

❖ **ສາເຫດໃນການປະລະ**

1. ການຄຸ້ມຄອງ-ບໍລິຫານໂຮງຮຽນ ຂອງຜູ້ອຳນວຍໂຮງຮຽນຫຼາຍແຫ່ງບໍ່ທັນໄດ້ດີເທົ່າທີ່ຄວນ ເຮັດໃຫ້ສະພາບແວດລ້ອມໂຮງຮຽນບໍ່ເປັນສິ່ງດຶງດູດໃຫ້ເດັກຢາກມາໂຮງຮຽນ;
2. ບາງນິຕິກຳມີລັກສະນະເຄັ່ງຄັດເກີນໄປ ເຮັດໃຫ້ນັກຮຽນທີ່ຂາດກາຍກຳນົດ ບໍ່ສາມາດເຂົ້າຮຽນຕໍ່ໄດ້;
3. ຍ້ອນໂຮງຮຽນຕັ້ງຫ່າງໄກຈາກບ້ານ, ເດັກບໍ່ສາມາດຍ່າງໄດ້ທຸກມື້ ແລະ ມີຄວາມສ່ຽງໃນການຍ່າງໄປໂຮງຮຽນຕາມລຳພັງ;
4. ການດຳລົງຊີວິດຂອງປະຊາຊົນ ຍັງຢູ່ກະແຈກກະຈາຍ, ບໍ່ມີອາຊີບຄົງທີ່, ຮອດລະດູການຜະລິດ ຈຳເປັນຕ້ອງເອົາລູກຫຼານອອກໄປອາໄສຢູ່ໄຮ່ຢູ່ສວນນຳເຮັດໃຫ້ຮຽນບໍ່ທັນໝູ່ ແລ້ວກໍປະລະການຮຽນ.
5. ການໂຮມບ້ານນ້ອຍເປັນບ້ານໃຫຍ່ແຕ່ເຂດທຳການຜະລິດຢູ່ໄກ ເຮັດໃຫ້ພໍ່ແມ່ຈຳເປັນເອົາລູກໄປທຳການຜະລິດນຳ ແລະ ນອກຈາກນີ້ຜູ້ອຳນວຍການໂຮງຮຽນ ແລະ ຄູສອນບໍ່ໄດ້ປະສານສົມທົບກັບ ຜູ້ປົກຄອງເດັກທີ່ຂາດຮຽນ.
6. ຍ້ອນນັກຮຽນຈຳນວນໜຶ່ງບໍ່ໄດ້ຜ່ານການສຶກສາກ່ອນໄວຮຽນ ເມື່ອຮຽນບໍ່ໄດ້ຈຶ່ງອອກໂຮງຮຽນ;
7. ຍ້ອນວ່າຄອບຄົວມີຄວາມທຸກຍາກ ແລະ ຂາດເຂີນດ້ານເສດຖະກິດ ເຊັ່ນ: ຂາດອາຫານ ແລະ ເຄື່ອງນຸ່ງຫົ່ມ;

## 2.3. ແຜນວຽກບູລິມະສິດສຳລັບປີ 2020

### 2.3.1. ຈຸດປະສົງ

ເພື່ອປັບປຸງຄຸນນະພາບການຮຽນ - ການສອນ ພາສາລາວ ແລະ ຄະນິດສາດ ໃຫ້ດີຂຶ້ນພ້ອມທັງຫຼຸດຜ່ອນອັດຕາປະລະ ແລະ ອັດຕາຄ້າງຫ້ອງ.

### 2.3.2. ຄາດໝາຍ

1. ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາໃຫ້ບັນລຸໄດ້ 99%.
2. ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາໃຫ້ບັນລຸໄດ້ສູງກວ່າ 99%.
3. ຫຼຸດຜ່ອນອັດຕາຄ້າງຫ້ອງ ຂອງນັກຮຽນ ປ.1 ໃຫ້ຍັງເຫຼືອ 7%.
4. ຫຼຸດຜ່ອນອັດຕາປະລະການຮຽນ ຂອງນັກຮຽນ ປ.1 ໃຫ້ຍັງເຫຼືອ 5,5%.
5. ຫຼຸດຜ່ອນອັດຕາຄ້າງຫ້ອງຂອງນັກຮຽນຊັ້ນປະຖົມສຶກສາ ໃຫ້ຍັງເຫຼືອ 3%.
6. ຫຼຸດຜ່ອນອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ໃຫ້ຍັງເຫຼືອ 3,5%.
7. ອັດຕາລອດເຫຼືອຮອດ ປ.5 ໃຫ້ບັນລຸໄດ້ 86%.
8. ເພີ່ມຈຳນວນເມືອງທີ່ມີອັດຕາປະລະຊັ້ນປະຖົມສຶກສາ ຕ່ຳກວ່າ 6% ຈາກ 118 ເມືອງ ເປັນ 123 ເມືອງ.

### 2.3.3. ວຽກຈຸດສຸມ

1. ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການຄຸ້ມຄອງຂະແໜງການຍ່ອຍປະຖົມ ແລະ ປັບປຸງລະບົບກຸ່ມໂຮງຮຽນຄືນໃໝ່;
2. ສົມທົບກັບອຳນາດການປົກຄອງເພື່ອປຸກລະດົມຜູ້ປົກຄອງໃຫ້ເຫັນຄວາມສຳຄັນຂອງການສຶກສາ ແລະ ເອົາໃຈໃສ່ສົ່ງລູກມາຮຽນ ພ້ອມທັງເອົາໃຈໃສ່ໃນການສອນລູກ ແລະ ຊຸກຍູ້ລູກຮຽນເວລາຢູ່ເຮືອນ;
3. ສົມທົບກັບອົງການປົກຄອງຂັ້ນທ້ອງຖິ່ນ ເພື່ອຕິດຕາມ ແລະ ກວດກາການປະຕິບັດໜ້າທີ່ຂອງຄູ ແລະ ອຳນວຍການໂຮງຮຽນ ພ້ອມທັງລົງຕິດຕາມ ແລະ ຊຸກຍູ້ຄູສອນ ແລະ ຜູ້ອຳນວຍການໂດຍສະເພາະຢູ່ໂຮງຮຽນທີ່ມີຜົນການຮຽນຕ່ຳ ແລະ ແນະນຳໃຫ້ຄູສອນເນັ້ນໃສ່ການສອນທັກສະການອ່ານ, ການຂຽນ ແລະ ຄິດໄລ່ເລກພື້ນຖານ ເປັນຫຼັກ;
4. ລົງຕິດຕາມການຮຽນ-ການສອນ, ການປະຕິບັດຫຼັກສູດ ແລະ ການປະເມີນຕຳແໜ່ງວິຊາການຄູ, ດຳເນີນການປະເມີນຄວາມຮູ້ຄວາມສາມາດ ແລະ ຈັນຍາບັນຂອງຄູປະຖົມ ແລະ ມັດທະຍົມໃນທົ່ວປະເທດ ພ້ອມທັງສຸມງົບປະມານທີ່ມີໃສ່ການຍົກລະດັບໃຫ້ແກ່ຄູປະຈຳການໂດຍສະເພາະຜູ້ທີ່ບໍ່ໄດ້ມາດຕະຖານ;

5. ກວດກາຄືນຄວາມເໝາະສົມ ແລະ ຄວາມຈຳເປັນໃນການດຳເນີນການສິດສອນຫ້ອງຄວບ ໂດຍສະເພາະບັນດາໂຮງຮຽນປະຖົມສົມບູນ ແລະ ຕິດຕາມຊຸກຍູ້ການສອນຫ້ອງຄວບ ເພື່ອໃຫ້ການຊ່ວຍເຫຼືອແກ່ຄູສອນດັ່ງກ່າວ ແລະ ຝຶກອົບຮົມໃຫ້ແກ່ຄູສອນທີ່ບໍ່ໄດ້ຜ່ານການຝຶກອົບຮົມ;
6. ລົງຕິດຕາມ ແລະ ຊຸກຍູ້ຜູ້ອຳນວຍການໂຮງຮຽນໃຫ້ປະຕິບັດການນິເທດພາຍໃນ ພ້ອມທັງງຊຸກຍູ້ຄູປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງເປັນປົກກະຕິ ແລະ ຝຶກອົບຮົມໃຫ້ຄູເພີ່ມເຕີມ ເພື່ອໃຫ້ຄູນຳໄປຈັດຕັ້ງປະຕິບັດ;
7. ລົງຊຸກຍູ້ການປະຕິບັດໜ້າທີ່ຂອງຄູ ແລະ ອຳນວຍການໂຮງຮຽນ ໃນການປະສານສົມທົບກັບຜູ້ປົກຄອງເດັກ ເພື່ອຕິດຕາມ ແລະ ສົ່ງຂ່າວໃຫ້ຜູ້ປົກຄອງເດັກ ຕໍ່ກັບເດັກທີ່ມີຄວາມສ່ຽງກ້າວໄປສູ່ການອອກໂຮງຮຽນ;
8. ສືບຕໍ່ດຳເນີນການວິເຄາະຂໍ້ມູນການປະເມີນຜົນສຳເລັດການຮຽນຂອງນັກຮຽນ ຊັ້ນປະຖົມສຶກສາປີທີ 5 ຂອງບັນດາປະເທດໃນອາຊີຕາເວັນອອກສຽງໃຕ້ (SEA-PLM);
9. ດຳເນີນການປະເມີນຜົນການຮຽນຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ໃນຂອບເຂດທົ່ວປະເທດ.

# III. ຂະແໜງການຍ່ອຍມັດທະຍົມສຶກສາຕອນຕົ້ນ

## 3.1. ສະພາບລວມ

### 3.1.1. ການຂະຫຍາຍໂອກາດ, ປະສິດທິພາບພາຍໃນ ແລະ ຄວາມເທົ່າທຽມ

ຂະແໜງການຍ່ອຍມັດທະຍົມສຶກສາຕອນຕົ້ນ ກໍເປັນຂະແໜງການຍ່ອຍໃຫຍ່ອັນດັບທີສອງ ຖັດຈາກຂະແໜງການຍ່ອຍປະຖົມສຶກສາ ເຊິ່ງກະຊວງສຶກສາທິການ ແລະ ກິລາ ໄດ້ຮ່ວມມືກັບບັນດາພາກສ່ວນຕ່າງໆ ລວມທັງຄູ່ຮ່ວມພັດທະນາ ປັບປຸງໂຄງລ່າງພື້ນຖານຂອງໂຮງຮຽນມັດທະຍົມຈຳນວນໜຶ່ງ, ສະໜອງງົບປະມານໃນການສ້ອມ ແປງຫໍພັກ, ຫ້ອງນໍ້າ ແລະ ລະບົບນໍ້າໃຊ້ໃນໂຮງຮຽນ. ຄຽງຄູ່ກັນນັ້ນ ກໍໄດ້ສະໜອງເງິນເບ້ຍລ້ຽງໃຫ້ແກ່ນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນທີ່ທຸກຍາກ, ດ້ອຍໂອກາດ, ເດັກຍິງຊົນເຜົ່າຈຳນວນ 2.000 ຄົນ (ນັກຮຽນ ມ.1 ແລະ ມ.2) ໃນຈຳນວນ 30 ເມືອງທຸກຍາກ ເພື່ອສົ່ງເສີມໃຫ້ເດັກນ້ອຍທີ່ຈົບປະຖົມ ໄດ້ມີໂອກາດສືບຕໍ່ຮຽນໃນຊັ້ນມັດທະຍົມຕອນຕົ້ນຕໍ່ໄປ.

ເຖິງຢ່າງໃດກໍຕາມ, ໃນສົກຮຽນ 2018-2029 ເຫັນວ່າອັດຕາເລື່ອນຊັ້ນຈາກ ປ.5 ຂຶ້ນ ມ.1 ມີທ່າອ່ຽງຫຼຸດລົງ, ທຽບໃສ່ປີ 2016-2017 ແມ່ນຫຼຸດລົງເກືອບ 2%. ໃນທົ່ວປະເທດ ມີນັກຮຽນ 17.455 ຄົນ ເທົ່າກັບ 12% ຂອງນັກຮຽນທີ່ເສັງຈົບ ປ.5 ແລ້ວໃນສົກຮຽນ 2017-2018 ແຕ່ບໍ່ໄປສືບຕໍ່ຮຽນຂັ້ນ ມ.1 ໃນສົກຮຽນ 2018-2019. ເມື່ອສົມທຽບລະດັບແຂວງ, ແຂວງຜົ້ງສາລີແມ່ນມີອັດຕາເລື່ອນຊັ້ນຕໍ່າກວ່າໝູ່ ຄື ມີພຽງແຕ່ 76,4% ແລະ ຖັດມາແມ່ນແຂວງສາລະວັນ ຊຶ່ງມີພຽງແຕ່ 77,8%. ແຕ່ເມື່ອສັງເກດລົງເລິກລະດັບເມືອງ ເຫັນໄດ້ວ່າມີຄວາມແຕກໂຕນກັນຫຼາຍ ແລະ ອັດຕາເລື່ອນຊັ້ນຫຼຸດລົງຫຼາຍທີ່ສຸດແມ່ນຢູ່ ເມືອງສະໝ້ອຍ ແຂວງສາລະວັນ ເຊິ່ງຫຼຸດລົງເຖິງ 21,5% (ຈາກ 90,8% ໃນປີ 2018 ເປັນ 69,3% ໃນປີ 2019), ຖັດມາແມ່ນເມືອງກະລຶມ ແຂວງເຊກອງ ຈາກ 78,4% ເປັນ 67,7%, ເມືອງໃໝ່ ແຂວງຜົ້ງສາລີ ຈາກ 68,9% ເປັນ 58,7% ແລະ ເມືອງນອງ ແຂວງ ສະຫວັນນະເຂດ ຈາກ 79,8% ເປັນ 70,6%.

ເນື່ອງຈາກການເລື່ອນຊັ້ນທີ່ຫຼຸດລົງ, ຈຶ່ງເປັນສາເຫດໜຶ່ງທີ່ເຮັດໃຫ້ຈຳນວນນັກຮຽນທັງໝົດຫຼຸດລົງ ເຊິ່ງທຽບໃສ່ປີຜ່ານມາແມ່ນຫຼຸດລົງເຖິງ 4.901 ຄົນ ອັນເຮັດໃຫ້ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນຫຼຸດລົງ ເຊັ່ນດຽວກັນຈາກ 83,1% ເປັນ 82,8% ທຽບກັບປີຜ່ານ ຊຶ່ງຕໍ່າກວ່າໝູ່ແມ່ນຢູ່ແຂວງ ຈຳປາສັກ, ສາລະວັນ ແລະ ສະຫວັນນະເຂດ ຄື ຢູ່ທີ່ 67.5 %, 68,4% ແລະ 69,2% ຕາມລຳດັບ (ເບິ່ງຮູບພາບທີ 8). ຍິ່ງໄປກວ່ານັ້ນ ອັດຕາເຂົ້າຮຽນດັ່ງກ່າວມີຄວາມແຕກໂຕນກັນແຕ່ລະເມືອງ ຄື ສູງສຸດ 111,7% ຢູ່ເມືອງແປກ ແຂວງຊຽງຂວາງ ແລະ ຕໍ່າສຸດ 41,3% ຢູ່ເມືອງນອງ ແຂວງສະຫວັນນະເຂດ, ໃນນີ້ ມີ 29 ເມືອງ ທີ່ມີອັດຕາເຂົ້າຮຽນລວມຕໍ່າກວ່າ 70% (ເບິ່ງຮູບພາບທີ 9).

## ຮູບພາບທີ 8: ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນໃນທົ່ວປະເທດ




## ຮູບພາບທີ 9: ຈຳນວນເມືອງທີ່ມີອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນຕ່ຳກວ່າ 70%




## ຕາຕະລາງທີ 6: ຕົວຊີ້ບອກຊັ້ນມັດທະຍົມຕອນຕົ້ນ

| ຕົວຊີ້ບອກ | ສົກຮຽນ 2016-2017 | ສົກຮຽນ 2017-2018 | ສົກຮຽນ 2018-2019 |
|---|---|---|---|
| ຈຳນວນຫ້ອງຮຽນ (ຫ້ອງ) | 12.428 | 12.681 | 12.903 |
| ຈຳນວນນັກຮຽນທັງໝົດ (ຄົນ) | 452.532 | 447.757 | 442.856 |
| ອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ. 5 ຂຶ້ນມັດທະຍົມຕອນຕົ້ນ (%) | 89,7 | 88,0 | 87,9 |
| ອັດຕາເຂົ້າຮຽນລວມໃໝ່ ມ. 4 (ອັດຕາຈົບຊັ້ນມັດທະຍົມຕອນຕົ້ນ (%)) | 72,6 | 71,8 | 72,4 |
| ອັດຕາເຂົ້າຮຽນສຸດທິ (%) | 62,9 | 65,1 | 67,2 |
| ອັດຕາເຂົ້າຮຽນລວມ (%) | 82,9 | 83,1 | 82,8 |
| ອັດຕາຄ້າງຫ້ອງ (%) | 1,1 | 1,1 | 1,2 |
| ອັດຕາການປະລະ (%) | 8,3 | 9,2 | 9,5 |

ຈາກຕາຕະລາງທີ່ສະແດງຢູ່ຂ້າງເທິງ ເຫັນໄດ້ວ່າອັດຕາຄ້າງຫ້ອງ ແລະ ອັດຕາປະລະໃນຊັ້ນມັດທະຍົມຕອນຕົ້ນກໍ່ມີທ່າອ່ຽງເພີ່ມຂຶ້ນ ເຊິ່ງມັນສະແດງໃຫ້ເຫັນເຖິງປະສິດທິພາບພາຍໃນຂອງການຄຸ້ມຄອງການສຶກສາທີ່ມີບັນຫາ. ໂດຍສະເພາະແມ່ນການປະລະ ເຊິ່ງໃນປີ 2019 ໃນທົ່ວປະເທດ, ມີເຖິງ 94 ເມືອງທີ່ມີອັດຕາປະລະຊັ້ນ ມ.ຕົ້ນ ສູງກວ່າ 8,5% (ຄາດໝາຍແຫ່ງຊາດຂອງສະພາ ໃນປີ 2019) ເຊິ່ງໃນນັ້ນ ເມືອງທີ່ມີອັດຕາປະລະສູງ 5 ອັນດັບ ລ້ວນແຕ່ແມ່ນຈາກແຂວງພາກໃຕ້ຄື: ເມືອງຈຳປາສັກ (21,5%), ເມືອງສະໝ້ອຍ ແຂວງສາລະວັນ (20,9%), ເມືອງສານໄຊ ແຂວງອັດຕະປື (19,5%), ເມືອງຕະໂອ້ຍ ແຂວງສາລະວັນ ແລະ ເມືອງສຸຂຸມາ ແຂວງຈຳປາສັກ (19% ແລະ 18,5%) ຕາມລຳດັບ. ເສັ້ນສະແດງລຸ່ມນີ້ ແມ່ນ 20 ເມືອງທີ່ມີອັດຕາປະລະ ຊັ້ນ ມ.ຕົ້ນ ສູງກວ່າ 15% ເພີ່ມຂຶ້ນ 4 ເມືອງເມື່ອທຽບໃສ່ປີຜ່ານມາ ແລະ ໃນນັ້ນ ມີເຖິງ 16 ເມືອງທີ່ນອນໃນ 40 ເມືອງ 3 ສ້າງ ທີ່ເປັນບູລິມະສິດຂອງຂະແໜງການສຶກສາ.

ການຫຼຸດລົງຂອງນັກຮຽນເລື່ອນຊັ້ນ ຈາກ ປ.5 ຂຶ້ນ ມ.1 ແລະ ການປະລະທີ່ເພີ່ມຂຶ້ນ ໄດ້ສົ່ງຜົນກະທົບຕໍ່ກັບອັດຕາເຂົ້າຮຽນໃໝ່ລວມໃນຂັ້ນ ມ.4 ເຊັ່ນດຽວກັນ ໂດຍສະເພາະແມ່ນເພດຍິງ ຊຶ່ງໃນປີຜ່ານມາສາມາດບັນລຸ 12 ແຂວງທີ່ມີອັດຕາເຂົ້າຮຽນໃໝ່ຂອງນັກຮຽນຍິງ ຂັ້ນ ມ.4 ສູງກວ່າ 70%, ແຕ່ມາຮອດປີ 2019, ເຫຼືອພຽງ 10 ແຂວງທີ່ບັນລຸອັດຕາດັ່ງກ່າວ (ແຂວງຫຼວງພະບາງ ແລະ ແຂວງເຊກອງ ຫຼຸດ 70% ໃນປີ 2019). ໃນຂະນະດຽວກັນ, ເຫັນວ່າເມື່ອທຽບໃສ່ປີຜ່ານມາ ມີ 10 ແຂວງທີ່ມີອັດຕາດັ່ງກ່າວຫຼຸດລົງ (ແຂວງວຽງຈັນ, ອຸດົມໄຊ, ບໍລິຄຳໄຊ, ບໍ່ແກ້ວ, ຫຼວງນ້ຳທາ, ເຊກອງ, ຫຼວງພະບາງ, ຄຳມ່ວນ, ຈຳປາສັກ ແລະ ຜົ້ງສາລີ) ເຊິ່ງລາຍລະອຽດຕ່າງໆສະແດງຢູ່ໃນຮູບພາບ 11 ລຸ່ມນີ້:

**ຮູບພາບທີ 10: ຈຳນວນເມືອງທີ່ມີອັດຕາປະລະການຮຽນຊັ້ນມັດທະຍົມຕອນຕົ້ນ ສູງກວ່າ 15 %**




**ຮູບພາບທີ 11: ອັດຕາເຂົ້າຮຽນລວມໃໝ່ ຊັ້ນ ມ.4 ຂອງນັກຮຽນຍິງ (ອັດຕາຈົບຊັ້ນມັດທະຍົມຕອນຕົ້ນ)**



### 3.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

ໃນສົກຮຽນ 2018-2019 ກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ປັບປຸງຂະບວນການຮຽນ-ການສອນໃຫ້ມີຄຸນນະພາບດີຂຶ້ນດ້ວຍການຝຶກອົບຮົມວຽກງານການບໍລິຫານຄຸ້ມຄອງ, ວຽກວິຊາການອື່ນໆທີ່ປິ່ນອ້ອມໃຫ້ແກ່ຂັ້ນແຂວງ, ຂັ້ນເມືອງ, ໂຮງຮຽນ ແລະ ຄູສອນ. ນອກຈາກນັ້ນ ຍັງໄດ້ຮ່ວມກັບພະແນກສຶກສາທິການ ແລະ ກິລາ ແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ຄູ່ຮ່ວມພັດທະນາຕ່າງໆ ເອົາໃຈໃສ່ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດການຮຽນ-ການສອນໃຫ້ຄົບຕາມຫຼັກສູດແຫ່ງຊາດ ແລະ ໄປຕາມສາມລັກສະນະຫ້າຫຼັກມູນຂອງການສຶກສາທີ່ກຳນົດໄວ້.

ຄູສອນ ແມ່ນປັດໄຈນຳເຂົ້າທີ່ສຳຄັນໃນການປັບປຸງຄຸນນະພາບ ແລະ ປະສິດທິພາບພາຍໃນຂອງການສຶກສາ. ໃນສົກປີ 2018-19 ໃນຊັ້ນມັດທະຍົມສຶກສາພາກລັດ ມີຈຳນວນຄູທັງໝົດ 36.919 ຄົນ, ເພີ່ມຂຶ້ນ 142 ຄົນ ທຽບໃສ່ປີຜ່ານມາ, ຄູສອນປະຈຳ 27.233 ຄົນ ຫຼຸດລົງ 90 ຄົນ ແຕ່ມີຄູອາສາ ແລະ ຄູຮັບຈ້າງເຖິງ 6.000 ຄົນ. ຈາກສະພາບຕົວຈິງທີ່ເກີດຂຶ້ນ ເຫັນວ່າໃນຊັ້ນມັດທະຍົມສຶກສາຕອນຕົ້ນ ຍັງມີລັກສະນະຄູເຫຼືອບໍ່ພໍ, ໂຮງຮຽນຫຼາຍແຫ່ງຂາດຄູສອນວິຊາພື້ນຖານວິຊາຊີບ, ກິລາ, ສິລະປະ ແລະ ໄອຊີທີ, ພ້ອມດຽວກັນ ຄູບາງຄົນກໍສອນຫຼາຍຕຳລາ ຫຼື ສອນບໍ່ຖືກກັບວິຊາສະເພາະ ອັນເປັນເຫດໃຫ້ ຄູອາສາສະໝັກ ແລະ ຄູສັນຍາຈ້າງເພີ່ມຂຶ້ນ.

ຈາກຜົນການສອບເສັງນັກຮຽນເກັ່ງ ຊັ້ນມັດທະຍົມສຶກສາຕອນຕົ້ນ ລະຫວ່າງສົກຮຽນ 2017-18 ແລະ 2018-19 ເຫັນໄດ້ວ່າ ນັກຮຽນເກັ່ງຊັ້ນ ມ.ຕົ້ນ ສົກຮຽນ 2018-19 ມີຄະແນນສູງສຸດໃນວິຊາຄະນິດສາດ (9,25) ແລະ ວິຊາພາສາລາວເຫັນວ່າເພີ່ມຂຶ້ນທຽບໃສ່ສົກຮຽນ 2017-18 ສ່ວນວິຊາອື່ນໆແມ່ນຫຼຸດລົງ. ສຳລັບວິຊາຄະນິດສາດ ມ.ຕົ້ນ ບໍ່ມີນັກຮຽນເກັ່ງລະດັບຊາດ ອັນດັບທີ 2 ແລະ 3 ຍ້ອນວ່າຄະແນນບໍ່ເຖິງເກນທີ່ກຳນົດ. ຜົນການສອບເສັງນັກຮຽນເກັ່ງຂ້າງເທິງນີ້ ສະແດງໃຫ້ເຫັນວ່າຄຸນນະພາບການສຶກສາຍັງຂ້ອນຂ້າງຕ່ຳ ແລະ ມີລັກສະນະຫຼຸດໂຕນກັນ. ແຕ່ເຖິງຢ່າງໃດກໍ່ຕາມ ຜົນການສອບເສັງນີ້ຍັງບໍ່ທັນສາມາດຢັ້ງຢືນໄດ້ເຖິງຄຸນນະພາບຂອງການສຶກສາໂດຍລວມໃນທົ່ວປະເທດໄດ້.

### 3.1.3. ວຽກບໍລິຫານ ແລະ ການຄຸ້ມຄອງ

ເພື່ອເປັນການຂະຫຍາຍໂອກາດ ແລະ ປັບປຸງຄຸນນະພາບໃນການສຶກສາຊັ້ນມັດທະຍົມຕອນຕົ້ນ, ລັດຖະບານ ກໍຄືກະຊວງສຶກສາທິການ ແລະ ກິລາ ໄດ້ລົງທຶນເຂົ້າໃສ່ວຽກງານມັດທະຍົມຕອນຕົ້ນຫຼາຍສົມຄວນ. ໄດ້ສະໜອງປຶ້ມແບບຮຽນ, ອຸປະກອນຮັບໃຊ້ການຮຽນ-ການສອນ ເປັນມູນຄ່າກວ່າ 6 ຕື້ກີບ ແລະ ສະໜອງເງິນ ອຸດໜູນການສຶກສາໃຫ້ແກ່ນັກຮຽນທຸກຍາກ, ດ້ອຍໂອກາດຊັ້ນມັດທະຍົມສຶກສາຕອນຕົ້ນ ມ.1 ແລະ ມ.2 ດ້ວຍທຶນ ຂອງລັດຖະບານຈຳນວນ 2.000 ຄົນ, ຈຳນວນເງິນ ລວມມູນຄ່າ 1,6 ຕື້ກີບ. ນອກຈາກນີ້ ລັດຖະບານກໍ່ໄດ້ມີການຈັດການສອບເສັງແຂ່ງຂັນນັກຮຽນເກັ່ງຊັ້ນມັດທະຍົມສຶກສາຕອນຕົ້ນ (ມ.4) ເພື່ອເປັນການກະຕຸ້ນໃຫ້ນັກຮຽນເອົາໃຈໃສ່ໃນການຮ່ຳຮຽນອີກດ້ວຍ.

ແຕ່ໃນເວລາດຽວກັນ, ການບໍລິຫານ ຄຸ້ມຄອງໃນບາງວຽກງານຍັງມີລັກສະນະບໍ່ທົ່ວເຖິງ ແລະ ເລິກເຊິ່ງເທົ່າທີ່ຄວນ ໂດຍສະເພາະແມ່ນການເຜີຍແຜ່ນະໂຍບາຍ, ຍຸດທະສາດ ແລະ ບັນດານິຕິກຳຕ່າງໆ ເຮັດໃຫ້ບັນດານິຕິກຳເຫຼົ່ານັ້ນບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ.

## 3.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

ໂດຍລວມແລ້ວ, ເຫັນໄດ້ວ່າ ການສຶກສາຊັ້ນມັດທະຍົມຕອນຕົ້ນມີລັກສະນະທົດຖອຍ, ການເລື່ອນຊັ້ນຈາກປະຖົມຫຼຸດລົງ, ອັດຕາເຂົ້າຮຽນລວມຫຼຸດລົງ ແຕ່ ອັດຕາຄ້າງຫ້ອງ ແລະ ອັດຕາປະລະພັດເພີ່ມຂຶ້ນ. ບັນດາສາຍເຫດທີ່ພາໃຫ້ເກີດບັນຫາດັ່ງກ່າວມີຄືດັ່ງນີ້:

1. ໂຮງຮຽນຕັ້ງຢູ່ໄກບ້ານ, ການຂະຫຍາຍໂຮງຮຽນມັດທະຍົມຍັງບໍ່ທັນທົ່ວເຖິງທຸກກຸ່ມບ້ານ, ບໍ່ມີຫໍພັກ, ສະພາບແວດລ້ອມຂອງໂຮງຮຽນຈຳນວນຫຼາຍຍັງບໍ່ເໝາະສົມ, ຂາດສິ່ງອຳນວຍຄວາມສະດວກຕ່າງໆ, ໂຮງຮຽນຫຼາຍແຫ່ງບໍ່ມີລະບົບນ້ຳສະອາດ ແລະ ວິດຖ່າຍພຽງພໍ ແລະ ບໍ່ໄດ້ຕາມມາດຕະຖານ.

2. ຜູ້ບໍລິຫານໂຮງຮຽນມັດທະຍົມຕອນຕົ້ນຫຼາຍແຫ່ງ ບໍ່ມີບົດຮຽນໃນການບໍລິຫານ ແລະ ຄຸ້ມຄອງໂຮງຮຽນ, ເຖິງວ່າໄດ້ຜ່ານການຝຶກອົບການຄຸ້ມຄອງ-ບໍລິຫານໂຮງຮຽນແລ້ວກໍຕາມ ແລະ ຜູ້ບໍລິຫານໂຮງຮຽນຈຳນວນໜຶ່ງຍັງບໍ່ທັນເອົາໃຈໃສ່ໃນການປະຕິບັດໜ້າທີ່ວຽກງານຕາມພາລະໜ້າທີ່ ທີ່ຂັ້ນເທິງມອບໝາຍໃຫ້.
3. ຄູບໍ່ພຽງພໍໃນເຂດຫ່າງໄກສອກຫຼີກ, ຄູສອນຜູ້ໜຶ່ງໄດ້ສອນຫຼາຍຕຳລາ, ຄູແຕ່ງບົດສອນບໍ່ຄົບ ແລະ ກໍ່ບໍ່ແມ່ນວິ ຊາທີ່ຮຽນຈົບ, ໂຮງຮຽນຫຼາຍແຫ່ງຍັງໃຊ້ຄູອາສາມາສອນຊ່ວຍ.
4. ການດຳລົງຊີວິດຂອງປະຊາຊົນຢູ່ເຂດຊົນນະບົດຫ່າງໄກສອກຫຼີກຈຳນວນຫຼວງຫຼາຍ ແມ່ນທຸກຍາກຂາດເຂີນທາງດ້ານສະບຽງອາຫານ ໂດຍສະເພາະແມ່ນເຂົ້າກິນ, ທີ່ຢູ່ອາໃສຢູ່ຫ່າງໄກຈາກໂຮງຮຽນ.
5. ຄູສອນວິຊາວິທະຍາສາດຈຳນວນຫຼາຍບໍ່ສາມາດນຳໃຊ້ອຸປະກອນການທົດລອງ ເນື່ອງຈາກບໍ່ມີຫ້ອງທົດລອງ ແລະ ບໍ່ໄດ້ຮັບການຝຶກອົບຮົມ.
6. ການລົງຕິດຕາມ, ຊຸກຍູ້ການຮຽນ-ການສອນ ຂອງຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ນິເທດຂັ້ນແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ຍັງບໍ່ປົກກະຕິ ແລະ ບໍ່ທົ່ວເຖິງ.
7. ຊາວໜຸ່ມທີ່ຮຽນໃນຊັ້ນມັດທະຍົມ ແມ່ນເປັນໄວອອກແຮງງານ. ດັ່ງນັ້ນ, ມີນັກຮຽນຈຳນວນບໍ່ໜ້ອຍທີ່ປະລະການຮຽນໄປອອກແຮງງານຢູ່ຕາມໂຮງຈັກໂຮງງານ, ສວນຢາງ ແລະ ກໍມີຈຳນວນບໍ່ໜ້ອຍທີ່ປະລະການຮຽນ ໄປອອກແຮງງານຢູ່ປະເທດເພື່ອນບ້ານ.

## 3.3. ແຜນວຽກບູລິມະສິດສຳລັບປີ 2020

### 3.3.1. ຈຸດປະສົງ

1. ຮັບປະກັນໃຫ້ນັກຮຽນທຸກຄົນໄດ້ສືບຕໍ່ຮຽນຈົນຈົບຫຼັກສູດຊັ້ນມັດທະຍົມຕອນຕົ້ນ ຢ່າງມີຄຸນນະພາບ.
2. ຮັບປະກັນໃຫ້ໂຮງຮຽນມັດທະຍົມຕອນຕົ້ນທຸກແຫ່ງ ໄດ້ຮັບການສິດສອນຄົບທຸກວິຊາທີ່ກຳນົດໃນຫຼັກສູດ ພ້ອມທັງຮັບປະກັນດ້ານຄຸນນະພາບ.
3. ເພື່ອໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ໄດ້ມີຄວາມຮູ້ພື້ນຖານດ້ານວິທະຍາສາດເພື່ອກະກຽມເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ ຄຽງຄູ່ກັບການສ້າງທັກສະພື້ນຖານດ້ານວິຊາຊີບ ແລະ ທັກສະການແກ້ໄຂບັນຫາເຂົ້າໃນການດຳລົງຊີວິດປະຈຳວັນ.

### 3.3.2. ຄາດໝາຍ

1. ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນໃຫ້ໄດ້ 85%;
2. ເພີ່ມອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ.5 ຂຶ້ນ ມ.1 ໃຫ້ໄດ້ 89%;
3. ອັດຕາປະລະການຮຽນຂອງນັກຮຽນມັດທະຍົມຕອນຕົ້ນ ໃຫ້ຍັງເຫຼືອ 8,5%;

### 3.3.3. ວຽກຈຸດສຸມ

1. ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການຄຸ້ມຄອງຂະແໜງການຍ່ອຍມັດທະຍົມຕອນຕົ້ນ;
2. ຂະຫຍາຍໂຮງຮຽນມັດທະຍົມຕອນຕົ້ນໃຫ້ເປັນໂຮງຮຽນມັດທະຍົມສົມບູນ ຢູ່ເຂດຫ່າງໄກສອກຫຼີກບ່ອນທີ່ມີເງື່ອນໄຂ ແລະ ປັບປຸງພື້ນຖານໂຄງລ່າງ ພ້ອມທັງສະໜອງຫໍພັກໃຫ້ເຂດຈຸດສຸມ ທີ່ມີໂຮງຮຽນມັດທະຍົມຕອນຕົ້ນ ທີ່ຢູ່ຫ່າງໄກສອກຫຼີກ;
3. ດັດສົມຈຳນວນນັກຮຽນທີ່ຮຽນຈົບມັດທະຍົມສຶກສາຕອນຕົ້ນ ທີ່ມີພອນສະຫວັນດ້ານວິຊາຊີບໃຫ້ໄປຮຽນຕໍ່ໃນສາຍອາຊີວະສຶກສາ;
4. ລະດົມ ແລະ ສົ່ງເສີມໃຫ້ເດັກຍິງ, ເດັກຊົນເຜົ່າ ແລະ ຜູ້ດ້ອຍໂອກາດໃຫ້ໄດ້ເຂົ້າເຖິງການສຶກສາຫຼາຍຂຶ້ນ ສ້າງເງື່ອນໄຂໃຫ້ເຂົາເຈົ້າມີໂອກາດຮຽນຈົບໃນຊັ້ນມັດທະຍົມຕອນຕົ້ນ ເຊິ່ງເປັນເງື່ອນໄຂສາມາດເຂົ້າຮຽນຕໍ່ວິຊາຊີບໃຫ້ຫຼາຍກວ່າເກົ່າ;
5. ສ້າງຄູສຶກສານິເທດຂັ້ນເມືອງ ແລະ ພັດທະນາລະບົບການນິເທດພາຍໃນ ແລະ ພາຍນອກໂຮງຮຽນໃຫ້ເຂັ້ມແຂງ;

6. ລົງຕິດຕາມການຮຽນ-ການສອນ, ການປະຕິບັດຫຼັກສູດ ແລະ ການປະເມີນຕໍາແໜ່ງວິຊາການຄູ ໃນຊັ້ນມັດທະຍົມຕອນຕົ້ນ;
7. ລົງຊຸກຍູ້ ແລະ ຕິດຕາມການສ້າງຕັ້ງສູນກຸ່ມໂຮງຮຽນມັດທະຍົມ ທົ່ວແຂວງ ເພື່ອເອົາໃຈໃສ່ຊີ້ນໍາວຽກງານວິຊາການໃຫ້ດໍາເນີນໄປເປັນປົກກະຕິ, ລົງປະເມີນການຮຽນ-ການສອນຂອງຄູ ໃນບ່ອນມີເງື່ອນໄຂ ແລະ ຂອບເຂດທີ່ຢູ່ຫ່າງໄກສອກຫຼີກ;
8. ປະສານສົມທົບກັບອໍານາດການປົກຄອງທ້ອງຖິ່ນ ເພື່ອຊ່ວຍລະດົມແນວຄວາມຄິດຂອງຜູ້ປົກຄອງໃນການຊຸກຍູ້ລູກເຂົ້າຮຽນ ແລະ ບໍ່ປະລະການຮຽນ;
9. ມີມາດຕະການບັງຄັບຕໍ່ກັບເຈົ້າຂອງໂຮງຈັກໂຮງງານ ແລະ ຜູ້ປະກອບການເພື່ອບໍ່ໃຫ້ຮັບນັກຮຽນຜູ້ທີ່ຍັງບໍ່ທັນມີໃບປະກາຊະນີຍະບັດຈົບມັດທະຍົມຕອນຕົ້ນ ເຂົ້າເຮັດວຽກ ແລະ ສົມທົບກັບອໍານາດການປົກຄອງບໍ່ອະນຸຍາດເຮັດໜັງສືຜ່ານແດນໃຫ້ນັກຮຽນທີ່ບໍ່ທັນຈົບມັດທະຍົມຕອນຕົ້ນໄປເຮັດວຽກ;
10. ຊີ້ນໍາການຈັດຕັ້ງສອບເສັງນັກຮຽນເກັ່ງ ແລະ ສອບເສັງຈົບຊັ້ນມັດທະຍົມສຶກສາຕອນຕົ້ນ;
11. ສືບຕໍ່ດໍາເນີນການປະເມີນຜົນການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 4.

# IV. ຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ

## 4.1. ສະພາບລວມ

### 4.1.1. ການຂະຫຍາຍໂອກາດ, ປະສິດທິພາບພາຍໃນ ແລະ ຄວາມເທົ່າທຽມ

ການສຶກສາຊັ້ນມັດທະຍົມຕອນປາຍ ມີຈຸດປະສົງເພື່ອຍົກລະດັບ ແລະ ຂະຫຍາຍເນື້ອໃນບົດຮຽນທີ່ຮຽນມາໃນຊັ້ນມັດທະຍົມຕອນຕົ້ນ. ນອກຈາກນັ້ນ, ຍັງໄດ້ລົງເລິກບາງວິຊາ ເພື່ອພັດທະນາຄວາມຮູ້ຄວາມສາມາດ ແລະ ພອນສະຫວັນຂອງຜູ້ຮຽນ ສໍາລັບຮຽນຕໍ່ສາຍອາຊີວະສຶກສາ, ການສຶກສາຊັ້ນສູງ ແລະ ການປະກອບອາຊີບ. ໃນປີ 2018-2019, ອັດຕາເລື່ອນຊັ້ນຈາກ ມ.4 ຂຶ້ນ ມ.5 ໃນທົ່ວປະເທດແມ່ນ 84,9% ຫຼຸດລົງ 2,2% ແລະ ອັດຕາເລື່ອນຊັ້ນ ຈາກ ມ.4 ເຂົ້າສາຍອາຊີວະສຶກສາ ແມ່ນ 3,3% ເພີ່ມຂຶ້ນ 0,3% ເມື່ອທຽບໃສ່ປີຜ່ານມາ, ໃນຂະນະທີ່ອັດຕາຮຽນລວມໃນຊັ້ນມັດທະຍົມຕອນປາຍ ເພີ່ມຈາກ 53,3% ເປັນ 54,8% ເຊິ່ງຄາດໝາຍທີ່ກໍານົດໄວ້ແມ່ນ 55%. ໃນຂະນະດຽວກັນ, ອັດຕາເຂົ້າຮຽນສຸດທິຊັ້ນດັ່ງກ່າວບັນລຸພຽງແຕ່ 38,2%, ໝາຍຄວາມວ່າ ໃນຈໍານວນພົນລະເມືອງ 15-17 ປີ, ມີພຽງ 38,2% ທີ່ເຂົ້າຮຽນຖືກເກນອາຍຸໃນຊັ້ນມັດທະຍົມປາຍ. ເມື່ອສົມທຽບລະຫວ່າງເພດ ຍັງເຫັນວ່າບໍ່ທັນມີຄວາມສະເໝີພາບເທົ່າທີ່ຄວນ ສະແດງອອກຜ່ານດັດຊະນີຄວາມສະເໝີພາບຍິງ-ຊາຍ ມີພຽງ 0,9 ນັ້ນ ໝາຍຄວາມວ່າ ເດັກຊາຍ 10 ຄົນໃດເຂົ້າຮຽນ ຈະມີເດັກຍິງພຽງ 9 ຄົນທີ່ໄດ້ເຂົ້າຮຽນ.

ນອກຈາກການເພີ່ມຂຶ້ນໃນອັດຕາເຂົ້າຮຽນລວມໃນຊັ້ນມັດທະຍົມສາຍສາມັນສຶກສາຕອນປາຍແລ້ວ ກົມສາມັນສຶກສາ ຍັງໄດ້ທົດລອງກ່ຽວກັບການຈັດຕັ້ງການຮຽນ-ການສອນ ຫ້ອງຮຽນສາມັນວິຊາຊີບຢູ່ໂຮງຮຽນກິນນອນຊົນເຜົ່າ ນັບແຕ່ຊັ້ນ ມ.5 - ມ.7 ໃນ 3 ແຂວງຄື: ແຂວງອຸດົມໄຊ ວິຊາ ການກໍ່ສ້າງ, ໄຊຍະບູລີ ວິຊາກະສິກໍາ (ປູກຝັງລ້ຽງສັດ) ແລະ ແຂວງວຽງຈັນ ວິຊາການໄຟຟ້າ ພາຍໃຕ້ການສະໜັບສະໜູນງົບປະມານຂອງລັດຖະບານ. ທັງນີ້ເພື່ອແນໃສ່ສ້າງ ແລະ ພັດທະນາທັກສະກ່ຽວກັບສີມືໃຫ້ແກ່ນັກຮຽນທີ່ເປັນຊົນເຜົ່າພາຍຫຼັງທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍແລ້ວແມ່ນສາມາດໄດ້ຮັບປະກາສະນີຍະບັດຈົບສາມັນສຶກສາ ແລະ ຈົບວິຊາຊີບຂັ້ນພື້ນຖານ ເພື່ອຮັບປະກັນໃຫ້ນັກຮຽນທີ່ເປັນຊົນເຜົ່າ ທີ່ບໍ່ມີຄວາມສາມາດໄປຮຽນຕໍ່ໃນລະດັບທີ່ສູງກວ່າ ໃຫ້ສາມາດຊອກວຽກເຮັດງານທໍາເພື່ອສ້າງລາຍໄດ້ໃຫ້ແກ່ຕົນເອງ ແລະ ຄອບຄົວຂອງຕົນໃນຂັ້ນພື້ນຖານໄດ້.

**ຕາຕະລາງທີ 7: ຕົວຊີ້ບອກຊັ້ນມັດທະຍົມຕອນປາຍ**

| ຕົວຊີ້ບອກ | ສົກຮຽນ 2017-2018 | ສົກຮຽນ 2018-2019 |
|---|---|---|
| ຈໍານວນຫ້ອງຮຽນ (ຫ້ອງ) | 5.925 | 6.037 |
| ຈໍານວນນັກຮຽນທັງໝົດ (ຄົນ) | 223.307 | 216.994 |
| ອັດຕາເຂົ້າຮຽນລວມໃໝ່ ມ.7 (ອັດຕາຈົບຊັ້ນມັດທະຍົມຕອນປາຍ (%)) | 44,9 | 52,0 |
| ອັດຕາເຂົ້າຮຽນສຸດທິ (%) | 36,9 | 38,1 |
| ອັດຕາເຂົ້າຮຽນລວມ (%) | 53,3 | 54,8 |
| ອັດຕາຄ້າງຫ້ອງ (%) | 0,7 | 0,6 |
| ອັດຕາການປະລະ (%) | 7,1 | 8,1 |

**ຮູບພາບທີ 12: ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍ**




ເຖິງແມ່ນວ່າ ອັດຕາເຂົ້າຮຽນຈະມີທ່າອ່ຽງເພີ່ມຂຶ້ນໃນທາງທີ່ດີເມື່ອທຽບໃສ່ປີຜ່ານມາ ແຕ່ເຫັນວ່າທາງດ້ານປະສິດທິພາບພາຍໃນຂອງການສຶກສາ ແມ່ນຍັງຕ້ອງໄດ້ຮັບການແກ້ໄຂໃນບາງຈຸດ. ໃນສົກຮຽນ 2018-19, ເຖິງແມ່ນວ່າອັດຕາຄ້າງຫ້ອງໄດ້ຫຼຸດລົງຈາກ 0,7% ມາເປັນ 0,6% ແຕ່ເຫັນວ່າ ມີເຖິງ 67 ເມືອງໃນທົ່ວປະເທດທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນ. ໃນທາງກົງກັນຂ້າມ, ໃນສົກປີ 2018-19 ອັດຕາປະລະຊັ້ນ ມ.ປາຍ ພັດເພີ່ມຂຶ້ນ ຈາກ 7,1% ເປັນ 8,1% ເຊິ່ງໃນທົ່ວປະເທດ ມີເຖິງ 92 ເມືອງທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນ ແລະ ເມືອງທີ່ເພີ່ມຂຶ້ນຫຼາຍກວ່າໝູ່ແມ່ນ ເມືອງໄຊຈຳພອນ ແຂວງບໍລິຄຳໄຊ ຈາກ 8,5% ເປັນ 17,1%, ຖັດມາແມ່ນ ເມືອງປາກທາ ແຂວງບໍ່ແກ້ວ ຈາກ 4,2% ເປັນ 11,8% ແລະ ເມືອງໂພນທອງ ແຂວງຫຼວງພະບາງ ຈາກ 11,9% ເປັນ 19,2% ທັງຍັງເປັນເມືອງທີ່ມີອັດຕາປະລະສູງທີ່ສຸດໃນປີ 2019. ໂດຍລວມແລ້ວ, ໃນທົ່ວປະເທດມີເຖິງ 114 ເມືອງ ທີ່ມີອັດຕາປະລະຊັ້ນ ມ.ປາຍ ສູງກວ່າ 6,5% ເຊິ່ງເປັນຄາດໝາຍທີ່ສະພາຮັບຮອງໃນປີ 2019. ດັ່ງນັ້ນ, ເຮົາເຫັນໄດ້ວ່າ ກະຊວງສຶກສາທິການ ແລະ ກິລາ ຍັງຕ້ອງໄດ້ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງເພື່ອກະຕຸກຊຸກຍູ້ ແລະ ແກ້ໄຂບັນຫາການປະລະໃນຊັ້ນ ມ.ປາຍໃຫ້ຫຼຸດລົງໃນແຕ່ລະເຂດ.

### 4.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

ເພື່ອປັບປຸງຄຸນນະພາບການຮຽນ - ການສອນໃນຊັ້ນມັດທະຍົມຕອນປາຍ, ກະຊວງສຶກສາທິການ ແລະ ກິລາໂດຍຮ່ວມກັບພະແນກສຶກສາທິການ ແລະ ກິລາແຂວງໄດ້ເອົາໃຈໃສ່ຊຸກຍູ້ຕິດຕາມຂະບວນການປະຕິບັດຫຼັກສູດ, ການຮຽນ-ການສອນ, ການຕິດຕາມ ແລະ ປະເມີນຄູທີ່ໄດ້ຮັບຕຳແໜ່ງວິຊາການຄູ (ຄູປະສົບການ), ລົງກວດກາ ແລະ ປະເມີນຕຳແໜ່ງວິຊາການຄູຊັ້ນມັດທະຍົມສຶກສາຂັ້ນແຂວງ, ການສອບເສັງນັກຮຽນເກັ່ງ, ການສອບເສັງຈົບຊັ້ນ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ການນິເທດພາຍໃນຢ່າງເປັນລະບົບ ເຊິ່ງມີລາຍລະອຽດໃນດ້ານຕ່າງໆຄືດັ່ງນີ້:

- **ດ້ານການປັບປຸງຫຼັກສູດ**

ກະຊວງສຶກສາທິການ ແລະ ກິລາໄດ້ພັດທະນາຫຼັກສູດ ແລະ ສະໜອງປຶ້ມແບບຮຽນ ແລະ ຄູ່ມືຄູໃຫ້ແກ່ບັນດາໂຮງຮຽນໃນທົ່ວປະເທດ. ພັດທະນາຫຼັກສູດກ່ຽວກັບການທົດລອງການສອນຫ້ອງສາມັນວິຊາຊີບໃນ 3 ສາຂາວິຊາ: ໄຟຟ້າ, ກະສິກຳ ແລະ ກໍ່ສ້າງທີ່ແຂວງອຸດົມໄຊ, ໄຊຍະບູລີ ແລະ ແຂວງວຽງຈັນ, ສະໜອງອຸປະກອນສິລະປະດົນຕີພື້ນເມືອງຈຳນວນໜຶ່ງ ແລະ ສະໜອງອຸປະກອນປະກອບການສອນວິຊາເລຂາຄະນິດ ໂຮງຮຽນລະ 5 ຊຸດ ທົ່ວປະເທດລວມທັງໝົດຈຳນວນ 1.000 ຊຸດ. ຫຼັກສູດການຮຽນ-ການສອນ ປກຊ-ປກສ ຊັ້ນມັດທະຍົມສຶກສາຕອນ

ປາຍໄດ້ຖືກປັບປຸງ ພ້ອມທັງໄດ້ປ່ຽນຊື່ວິຊາຮຽນໃນຊັ້ນມັດທະຍົມສຶກສາຕອນປາຍມາເປັນ "ສຶກສາວິຊາພື້ນຖານປ້ອງກັນຕົວ". ພັດທະນາຄູ່ມືເສີມກ່ຽວກັບການສອນພະລະ ແລະ ສິລະປະສຶກສາໃນໂຮງຮຽນສາມັນ. ພັດທະນາຫຼັກສູດປຶ້ມແບບຮຽນ ແລະ ຄູ່ມືຄູສຳລັບຫ້ອງຮຽນສາຍສາມັນວິຊາຊີບ ຂັ້ນ ມ.7 ໂດຍສົມທົບກັບກົມອາຊີວະສຶກສາ, ສະຖາບັນພັດທະນາອາຊີວະສຶກສາ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນ 3 ແຂວງທົດລອງ. ສະໜອງອຸປະກອນ ແລະ ເຄື່ອງມືໃນການນຳໃຊ້ເຄື່ອງທົດລອງວິທະຍາສາດໃຫ້ແກ່ໂຮງຮຽນເປົ້າໝາຍທີ່ສ້າງເປັນ ໂຮງຮຽນຕົວແບບຈຳນວນ 5 ແຫ່ງ, ສະໜອງກະດານຂຽວມາດຕະຖານສາກົນສຳລັບຊັ້ນມັດທະຍົມ ຈຳນວນ 1.000 ແຜ່ນໃຫ້ແກ່ໂຮງຮຽນມັດທະຍົມໃນຂອບເຂດທົ່ວປະເທດ.

- **ດ້ານຄູສອນ**

ໄດ້ມີການກວດກາ ແລະ ຮັບຮອງຕຳແໜ່ງວິຊາການຄູຊັ້ນມັດທະຍົມສຶກສາໃນແຂວງຫົວພັນ ແລະ ນະຄອນຫຼວງວຽງຈັນ ມີທັງໝົດ 2 ຄົນ ເປັນຍິງ 2 ຄົນ ໃນວິຊາຊີວະສາດ ແລະ ພູມສາດ. ເພື່ອເປັນການຊຸກຍູ້ ແລະ ຊ່ວຍເຫຼືອຄູສອນຈຳນວນໜຶ່ງໃນການປັບປຸງ ການຮຽນ-ການສອນ ວຽກງານນິເທດກໍ່ຖືເປັນຫົວໃຈສຳຄັນໜຶ່ງ ເຊິ່ງຜ່ານມາ ຄູຈຳນວນ 114 ຄົນ ໄດ້ຮັບການຝຶກອົບຮົມເພື່ອສ້າງເປັນຄູສຶກສານິເທດທົດແທນໃນແຂວງຫົວພັນ, ຊຽງຂວາງ, ອຸດົມໄຊ, ວຽງຈັນ, ຄຳມ່ວນ, ນະຄອນຫຼວງ, ສະຫັວນນະເຂດ, ຈຳປາສັກ, ເຊກອງ ແລະ ອັດຕະປື. ພ້ອມດຽວກັນ, ຄູສອນຈຳນວນ 263 ຄົນທີ່ສອນວິຊາຟີຊິກສາດ, ເຄມີສາດ ແລະ ຊີວະສາດໄດ້ຮັບການຝຶກອົບຮົມການຈັດການຮຽນ-ການສອນ ວິຊາວິທະຍາສາດທຳມະຊາດໃນຫ້ອງທົດລອງ ເພື່ອໃຫ້ຄູສອນມີຄວາມສາມາດ ແລະ ທັກສະທັງໃນດ້ານທິດສະດີ ແລະ ປະຕິບັດຕົວຈິງ.

ຄຽງຄູ່ກັບການເພີ່ມຂຶ້ນຂອງນັກຮຽນໃນຊັ້ນມັດທະຍົມສຶກສາຕອນປາຍ ແມ່ນມີຄວາມຈຳເປັນທີ່ຕ້ອງໄດ້ຂະຫຍາຍຫ້ອງຮຽນ ແລະ ໂຮງຮຽນສຳລັບນັກຮຽນມັດທະຍົມສຶກສາຕອນປາຍຂຶ້ນໃນບາງເຂດ, ບາງແຂວງທີ່ເຫັນວ່າເໝາະສົມ ເພື່ອອຳນວຍຄວາມສະດວກໃນການຮຽນ-ການສອນຂອງຄູ ແລະ ນັກຮຽນ, ເພື່ອຫຼຸດຜ່ອນຄວາມແອອັດຂອງນັກຮຽນ ແລະ ເພື່ອຮັບປະກັນການຮຽນ-ການສອນໃຫ້ມີຄຸນນະພາບ. ກະຊວງສຶກສາທິການ ແລະ ກິລາ ຕ້ອງໄດ້ເອົາໃຈໃສ່ ບັນຈຸ ແລະ ສັບຊ້ອນຄູ ຊັ້ນມັດທະຍົມສຶກສາ ໃຫ້ແກ່ບັນດາໂຮງຮຽນໃນຂອບເຂດທົ່ວປະເທດ. ພ້ອມດຽວກັນ, ສຳລັບໂຮງຮຽນສາມັນທີ່ມີການສອນຫ້ອງຮຽນສາມັນວິຊາຊີບໃນໂຮງຮຽນກິນນອນຊົນເຜົ່າໃນ 3 ແຂວງທີ່ໄດ້ທົດລອງສອນວິຊາຊີບພື້ນຖານໃນຊັ້ນມັດທະຍົມສຶກສາຕອນປາຍ ເຫັນວ່າຍັງຂາດເຂີນຄູທີ່ຮຽນຈົບກ່ຽວກັບວຽກງານອາຊີວະສຶກສາ (ວິຊາຊີບ). ດັ່ງນັ້ນ ຈິ່ງມີຄວາມຈຳເປັນຕ້ອງໄດ້ປະກອບ ແລະ ບັນຈຸຄູທີ່ຈະສອນຫ້ອງຮຽນສາມັນວິຊາຊີບນີ້ໃຫ້ພຽງພໍກັບຄວາມຕ້ອງການ.

- **ດ້ານຜົນການຮຽນຂອງນັກຮຽນ**

ການສອບເສັງແຂ່ງຂັນນັກຮຽນເກັ່ງລະດັບຊາດ ຊັ້ນມັດທະຍົມສຶກສາຕອນປາຍ (ມ.7) ມີ 4 ວິຊາ ຄື: ພາສາລາວ-ວັນນະຄະດີ, ວິຊາຄະນິດສາດ, ວິຊາຟີຊິກສາດ ແລະ ວິຊາເຄມີສາດ. ຜົນການສອບເສັງນັກຮຽນເກັ່ງ ປະຈຳສົກຮຽນ 2018-19 ເຫັນວ່າ: ຂັ້ນ ມ.7 ຄະແນນ ວິຊາພາສາລາວ-ວັນນະຄະດີ, ວິຊາຟີຊິກສາດ ແລະ ວິຊາເຄມີສາດເພີ່ມຂຶ້ນ ຖ້າທຽບໃສ່ ສົກຮຽນ 2017-18, ສ່ວນຄະແນນວິຊາຄະນິດສາ ແມ່ນເທົ່າເກົ່າ. ຜ່ານການຈັດຕັ້ງປະຕິບັດການສອບເສັງແຂ່ງຂັນນັກຮຽນເກັ່ງເຫັນໄດ້ວ່າ: ນັກຮຽນເກັ່ງລະດັບຊາດ ມີການກະຈາຍຢູ່ແຕ່ລະແຂວງ ເຊິ່ງໃນນັ້ນມີທັງເພດຍິງ, ຊົນເຜົ່າ, ຈາກຕົວເມືອງ ແລະ ເຂດຫ່າງໄກສອກຫຼີກ ເຊິ່ງສະແດງໃຫ້ເຫັນເຖິງການພັດທະນາ ຄຸນນະພາບການສຶກສາ ໄດ້ມີການຂະຫຍາຍຕົວຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ ແລະ ການຈັດຕັ້ງການສອບດີຮຽນເກັ່ງໃນໂຮງຮຽນມັດທະຍົມ ໄດ້ຮັບການຈັດຕັ້ງປະຕິບັດໃນທົ່ວປະເທດ.

### 4.1.3. ວຽກບໍລິຫານ ແລະ ຄຸ້ມຄອງ

ໃນຂັ້ນສູນກາງແມ່ນໄດ້ສຳເລັດການພັດທະນາຖານ ຂໍ້ມູນນັກຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ (ມ.7); ສຳເລັດການປັບປຸງລະບົບຖານຂໍ້ມູນໃນການຕິດຕາມ, ກວດກາ ແລະ ພັດທະນາວຽກງານມັດທະຍົມສຶກສາ; ເພີ່ມການຮ່ວມມືກັບພາກລັດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງຕ່າງໆທາງສັງຄົມ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນງານໃຫ້ມີປະສິດທິຜົນ ແລະ ຄວາມຍືນຍົງ ແລະ ອອກແບບ, ຄຸ້ມຄອງ ແລະ ຈັດພິມຮ່າງປະກາດສະນິຍະບັດມັດທະຍົມສຶກສາຕອນປາຍ.

ເຖິງວ່າທີ່ຜ່ານມາໄດ້ມີການກະຕຸກຊຸກຍູ້ໃຫ້ແຕ່ລະໂຮງຮຽນ ເອົາໃຈໃສ່ເພີ່ມຕື່ມໃນການບໍລິຫານ, ຄຸ້ມຄອງໂຮງຮຽນ ແຕ່ກໍຍັງເຫັນວ່າ ໃນບາງໂຮງຮຽນ ຜູ້ອຳນວຍການບໍ່ໄດ້ຮັບການຝຶກອົບຮົມ, ຜູ້ອຳນວຍການຈຳນວນໜຶ່ງທີ່ຜ່ານການຝຶກແລ້ວ ແຕ່ຄວາມຮັບຜິດຊອບກໍຍັງບໍ່ສູງ, ການສ້າງແຜນພັດທະນາໂຮງຮຽນ ຂາດການປະສານງານກັບຊຸມຊົນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຍັງຂາດຄວາມເປັນເຈົ້າການໃນການພັດທະນາ ແລະ ປົກປັກຮັກສາໂຮງຮຽນ.

## 4.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

1. ໂຮງຮຽນເປ່ເພ, ບໍ່ໄດ້ມາດຖານ ແລະ ບໍ່ມີຫໍພັກໃຫ້ນັກຮຽນອາໄສ;
2. ການຊຸກຍູ້-ສົ່ງເສີມສ້າງຂອງຜູ້ບໍລິຫານການສຶກສາຕໍ່ກັບການຄົ້ນຄ້ວາຕຳແໜ່ງຄູວິຊາການ ຂອງຊັ້ນມັດທະຍົມຍັງບໍ່ທັນໄດ້ດີ;
3. ຄູສອນໃນບາງວິຊາບໍ່ພຽງພໍກັບການຂະຫຍາຍໂຮງຮຽນ, ຫ້ອງຮຽນ ເຊັ່ນ: ວິຊາຟີຊິກສາດ ແລະ ເຄມີສາດ, ວິຊາພະລະ ແລະ ສິລະປະສຶກສາ, ວິຊາພື້ນຖານວິຊາຊີບ, ເຕັກໂນໂລຊີຂໍ້ມູນຂ່າວສານ (ICT), ເຮັດໃຫ້ຄູບາງຄົນສອນບໍ່ຖືກຕາມວິຊາສະເພາະ ແລະ ຖືກຕາມວຸດທິ;
4. ໂຮງຮຽນຫຼາຍແຫ່ງຍັງຂາດຫ້ອງຄອມພິວເຕີ, ຫ້ອງທົດລອງ, ຫ້ອງຮຽນພາສາຕ່າງປະເທດ, ຫ້ອງສະໝຸດ ແລະ ອຸປະກອນຮັບໃຊ້;
5. ຄວາມຮັບຜິດຊອບ ແລະ ການພັດທະນາທັກສະດ້ານການສິດສອນ, ການສົ່ງຄວາມຮູ້ຂອງຄູຈຳນວນໜຶ່ງຍັງບໍ່ທັນສູງ;
6. ວິທີການສິດສອນຂອງຄູຈຳນວນໜຶ່ງມີລັກສະນະຕາຍຕົວ, ບໍ່ປະດິດສ້າງ, ບໍ່ສົ່ງເສີມໃຫ້ຜູ້ຮຽນມີຄວາມຕັ້ງໃຈຕໍ່ການຮຽນ. ການຕີລາຄາຜົນການຮຽນຂອງນັກຮຽນຍັງເຮັດແບບລວມໆ, ຄູສ່ວນຫຼາຍຍັງບໍ່ທັນເອົາວຽກບ້ານໃຫ້ນັກຮຽນ, ຄູສອນບາງຄົນໃຫ້ວຽກບ້ານແຕ່ບໍ່ກວດກາ ແລະ ນຳພານັກຮຽນແກ້ບົດຝຶກຫັດໃນຫ້ອງ;
7. ຄູບໍ່ໄດ້ມີການຕິດຕາມນັກຮຽນເປັນປົກກະຕິໂດຍສະເພາະຜູ້ຂາດຮຽນ;
8. ນັກຮຽນຍັງບໍ່ມີຄວາມກະຕືລືລົ້ນເອົາໃຈໃສ່ຕໍ່ການຮຽນ ແລະ ການແຂ່ງຂັນໃນການຮຽນ;
9. ການປະສານງານລະຫວ່າງຜູ້ອຳນວຍການໂຮງຮຽນ ແລະ ຄູສອນຍັງບໍ່ທັນປະຕິບັດໄດ້ດີ;
10. ຜູ້ບໍລິຫານໂຮງຮຽນຫຼາຍແຫ່ງ ຍັງບໍ່ທັນປະຕິບັດໜ້າທີ່ໃນການບໍລິຫານຄຸ້ມຄອງເທົ່າທີ່ຄວນ ເປັນຕົ້ນແມ່ນການພັດທະນາການຮຽນ-ການສອນ, ການບໍລິຫານໂຮງຮຽນໃຫ້ມີຄຸນນະພາບຕາມ 3 ລັກສະນະ ແລະ 5 ຫຼັກມູນ;
11. ການບໍລິຫານການພັດທະນາການສຶກສາ ຍັງບໍ່ປະຕິບັດຕາມນິຕິກຳທີ່ກຳນົດໄວ້ ຫຼື ບາງນິຕິກຳຍັງບໍ່ທັນຮັດກຸມ.

## 4.3. ແຜນວຽກບູລິມະສິດສຳລັບປີ 2020

### 4.3.1. ຈຸດປະສົງ

- ເພື່ອສ້າງໂອກາດໃຫ້ນັກຮຽນ, ຊາວໜຸ່ມມີຄວາມຮູ້ດ້ານວິຊາຊີບເພື່ອກຽມພ້ອມເຂົ້າສູ່ຕະຫຼາດແຮງງານ, ມີຄຸນສົມບັດ, ມີຄວາມຮູ້ເພື່ອເຂົ້າສູ່ຕະຫຼາດແຮງງານ ແລະ ປະກອບການ ພ້ອມທັງສືບຕໍ່ຮຽນໃນສາຍ ວິຊາຊີບ ແລະ ການສຶກສາຊັ້ນສູງ.

**4.3.2. ຄາດໝາຍ**

- ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍໃຫ້ໄດ້ 56 %.
- ອັດຕາປະລະຊັ້ນມັດທະຍົມຕອນປາຍໃຫ້ຫຼຸດລົງຈາກ 8,1% ໃຫ້ຍັງເຫຼືອ 7%.

**4.3.3. ວຽກຈຸດສຸມ**

1. ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການຄຸ້ມຄອງຂະແໜງການຍ່ອຍມັດທະຍົມຕອນປາຍ;
2. ຈັດຕັ້ງການປະຖົມນິເທດກ່ຽວກັບວຽກງານອາຊີວະສຶກສາ ໃຫ້ແກ່ໂຮງຮຽນສາມັນທົ່ວປະເທດ ເພື່ອໃຫ້ນັກຮຽນໄດ້ມີຄວາມເຂົ້າໃຈກ່ຽວກັບວຽກງານດັ່ງກ່າວ ແລະ ຢາກຮຽນໃນສາຍວິຊາຊີບໃຫ້ຫຼາຍຂຶ້ນ;
3. ລົງຕິດຕາມການຮຽນ-ການສອນ, ການປະຕິບັດຫຼັກສູດ ແລະ ການປະເມີນຕຳແໜ່ງວິຊາການຄູ ໃນຊັ້ນມັດທະຍົມສຶກສາຕອນປາຍ;
4. ສົ່ງເສີມການມີສ່ວນຮ່ວມຂອງພາກສ່ວນເອກະຊົນ ແລະ ຊຸມຊົນເຂົ້າໃນການປະກອບສ່ວນດ້ານທຶນຮອນ, ປະກອບ-ສ່ວນດ້ານການຄຸ້ມຄອງຊ່ວຍເຫຼືອໂຮງຮຽນຊັ້ນມັດທະຍົມສຶກສາຕອນປາຍ;
5. ສົ່ງເສີມການເຊື່ອມໂຍງກັນລະຫວ່າງການສຶກສາຊັ້ນມັດທະຍົມຕອນປາຍ, ຊຸມຊົນ, ຜູ້ປະກອບການ ແລະ ສະຖາບັນທີ່ກ່ຽວຂ້ອງໃນການລົງຝຶກປະຕິບັດຕົວຈິງ;
6. ສ້າງຄູ່ມືແນະນຳສາຍວິຊາຊີບໂດຍສົມທົບກັບຜູ້ປະກອບການ ແລະ ໂຮງຈັກໂຮງງານ ສຳລັບນັກຮຽນທີ່ກຳລັງຈະຈົບຊັ້ນມັດທະຍົມສຶກສາຕອນປາຍ ເພື່ອໃຫ້ເຂົາເຈົ້າຮູ້ຈັກສາຍວິຊາຮຽນທີ່ຈະໄປຮຽນຕໍ່ໃນການສຶກສາສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ແລະ ໃຫ້ຄວາມຮູ້ດ້ານການປະກອບອາຊີບ ຫຼັງຈາກຮຽນຈົບມັດທະຍົມຕອນປາຍ;
7. ພັດທະນາຫຼັກສູດວິຊາຊີບໃຫ້ເໝາະສົມກັບທ່າແຮງ ແລະ ອາຊີບໃນຊຸມຊົນທ້ອງຖິ່ນ ເພື່ອປະກອບເຂົ້າໃນການຮຽນ-ການສອນ ວິຊາຊີບຂັ້ນພື້ນຖານ;
8. ສັບຊ້ອນຄູສອນໃຫ້ໄດ້ສອນຖືກຕາມວິຊາສະເພາະທີ່ຮຽນມາຄົບທຸກວິຊາຕາມຫຼັກສູດ;
9. ສ້າງຄວາມເຂັ້ມແຂງໃຫ້ຄູປະຈຳການ ມີຄວາມສາມາດເຮັດການສຶກສານິເທດພາຍໃນໂຮງຮຽນດ້ວຍຕົນເອງຢ່າງມີຄຸນນະພາບ;
10. ຂະແໜງສາມັນ ແລະ ສູນນິເທດຂັ້ນແຂວງ ລົງຕິດຕາມຊຸກຍູ້ ການສິດສອນ ຊ່ວຍໂຮງຮຽນ ມັດທະຍົມປາຍຢູ່ເມືອງທີ່ມີອັດຕາປະລະສູງໂດຍສະເພາະ ເມືອງໂພນທອງ ແຂວງຫຼວງພະບາງ, ເມືອງໃໝ່ ແຂວງຜົ້ງສາລີ ແລະ ເມືອງປາກແບ່ງ ແຂວງອຸດົມໄຊ;
11. ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານໂຮງຮຽນກ່ຽວກັບການຄຸ້ມຄອງບໍລິຫານ, ການຮຽນ-ການສອນວິຊາຊີບໃນຊັ້ນມັດທະຍົມສຶກສາຕອນປາຍ;
12. ຊຸກຍູ້ໃຫ້ໂຮງຮຽນມັດທະຍົມແຕ່ລະແຫ່ງຕ້ອງໃຫ້ມີການຈັດການຮຽນ-ການສອນວິຊາພະລະ ແລະ ສິລະປະສຶກສາ ຕາມທີ່ໄດ້ກຳນົດໄວ້ໃນຫຼັກສູດ.

# V. ຂະແໜງການຍ່ອຍການສຶກສານອກໂຮງຮຽນ

## 5.1. ສະພາບລວມ

### 5.1.1. ການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ການສຶກສານອກໂຮງຮຽນ ເປັນອີກລະບົບການສຶກສາໜຶ່ງຄຽງຄູ່ກັບການສຶກສາສາຍສາມັນ ທີ່ມີຈຸດປະສົງເພື່ອບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ມັດທະຍົມ ໃຫ້ກັບກຸ່ມເປົ້າໝາຍ ທີ່ຕົກຫຼົ່ນຈາກໂຮງຮຽນສາມັນ, ຜູ້ທີ່ກຶກໜັງສືຄືນ ແລະ ຜູ້ທີ່ບໍ່ມີໂອກາດຮຽນໜັງສືເລີຍໃຫ້ໄດ້ເຂົ້າຮຽນຄືນ. ຜ່ານການສັງລວມ ແລະ ຕີລາຄາຜົນສຳເລັດ ຂອງການຈັດຕັ້ງປະຕິບັດວຽກງານການສຶກສາຕໍ່ເນື່ອງ ໃນສົກປີນີ້ ສາມາດປະຕິບັດໄດ້ດັ່ງນີ້:

#### 5.1.1.1. ວຽກງານການສຶກສາຕໍ່ເນື່ອງ

1) ສຳເລັດການເກັບກຳຂໍ້ມູນ ແລະ ຈັດຕັ້ງບຳລຸງຍົກລະດັບການສຶກສາຈົບຊັ້ນປະຖົມ ໃຫ້ກຸ່ມເປົ້າໝາຍອາຍຸ 6-14 ປີ ທີ່ບໍ່ມີໂອກາດ ແລະ ພາດໂອກາດທາງການສຶກສາຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດບໍ່ມີໂຮງຮຽນ ຢູ່ 12 ແຂວງ/ນະຄອນຫຼວງ; ຊຶ່ງມີຜູ້ຮຽນ ຈຳນວນ 1.765 ຄົນ, ຍິງ 830 ຄົນ;
2) ສຳເລັດການເກັບກຳຂໍ້ມູນກຸ່ມເປົ້າໝາຍທີ່ເປັນຊາວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ທີ່ກຶກໜັງສືຄືນ, ຜູ້ຕົກຫຼົ່ນຈາກໃນໂຮງຮຽນ ແລະ ຜູ້ທີ່ພາດໂອກາດທາງການສຶກສາ ແລະ ພ້ອມຈັດຕັ້ງການຮຽນ-ການສອນບຳລຸງຍົກລະດັບການສຶກສາຈົບຊັ້ນປະຖົມ ໃຫ້ແກ່ກຸ່ມເປົ້າໝາຍດັ່ງກ່າວໃນທົ່ວປະເທດ ເຊິ່ງມີຜູ້ຮຽນຈົບຈຳນວນ 5.924 ຄົນ, ຍິງ 3.029 ຄົນ, ທຽບໃສ່ຄາດໝາຍທີ່ວາງໄວ້ 8.000 ຄົນ ແມ່ນປະຕິບັດໄດ້ພຽງແຕ່ 74,05%;
3) ສຳເລັດການບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນ ຈັດການຮຽນ-ການສອນໃຫ້ກັບກຸ່ມເປົ້າໝາຍຊາວໜຸ່ມ ແລະ ຜູ້ໃຫຍ່ອາຍຸ 15-30 ປີ ທີ່ຕົກຫຼົ່ນຈາກສາຍສາມັນ ແລະ ຜູ້ທີ່ພາດໂອກາດທາງການສຶກສາ ໄດ້ ຈຳນວນ 30.065 ຄົນ, ຍິງ 14.362 ຄົນ; ທຽບໃສ່ຄາດໝາຍທີ່ວາງໄວ້ 60.000 ຄົນ ແມ່ນປະຕິບັດພຽງແຕ່ 50,1% ເທົ່ານັ້ນ;
4) ສຳເລັດການປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວເມືອງ ໄດ້ 23 ເມືອງ ທຽບໃສ່ຄາດໝາຍທີ່ວາງໄວ້ໃຫ້ສຳເລັດ 24 ເມືອງ ເຊິ່ງແມ່ນຫຼຸດຄາດໝາຍ 1 ເມືອງ ແລະ ປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວ ແຂວງ ໄດ້ 2 ແຂວງ (ແຂວງຫຼວງນ້ຳທາ ອັນດັບທີ 6 ແລະ ແຂວງສາລະວັນ ອັນດັບທີ 7). ມາຮອດປັດຈຸບັນ, ການປະກາດເປັນເມືອງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ ໃນທົ່ວປະເທດ ສຳເລັດໄປແລ້ວຈຳ ນວນ 133 ເມືອງ (ຍັງອີກ 15 ເມືອງ ກຳລັງດຳເນີນການຈັດການຮຽນ-ການສອນ ແລະ ກະກຽມປະເມີນການຮຽນ-ການສອນບຳລຸງ);
5) ບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນປາຍ ໃຫ້ກັບພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນທົ່ວໄປ ຢູ່ 16 ແຂວງ ແລະ ນະຄອນຫຼວງວຽງຈັນ; ໂດຍມີສະຖານການຮຽນ-ການສອນ ຈຳນວນ 58 ແຫ່ງ, ມີນັກຮຽນມາສະໝັກເຂົ້າຮຽນຕົ້ນປີ ທັງໝົດຈຳນວນ 4.602 ຄົນ/ຍິງ 1.412 ຄົນ; ມາຮອດທ້າຍສົກຮຽນ ສຳລັບຊັ້ນມັດທະຍົມຕອນປາຍບຳລຸງ (ມ.7) ມີຜູ້ຮຽນ ຈຳນວນ 2.336 ຄົນ/ຍິງ 685 ຄົນ ແລະ ມີຜູ້ເສັງຈົບຈຳນວນ 2.144 ຄົນ/ຍິງ 622 ຄົນ.

### 5.1.1.2. ວຽກງານການສົ່ງເສີມວິຊາຊີບຂັ້ນພື້ນຖານ

ໃນສົກຮຽນ 2018-19 ນີ້ ຍັງສືບຕໍ່ເອົາໃຈໃສ່ສົ່ງເສີມຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໃຫ້ແກ່ກຸ່ມເປົ້າໝາຍ ຊຶ່ງໄດ້ລວມເອົາທັງຄົນພິການ. ໃນທົ່ວປະເທດມີກຸ່ມເປົ້າໝາຍທີ່ໄດ້ຮັບການຝຶກອົບຮົມວິຊາຊີບສຳເລັດ ຈຳນວນ 4.305 ຄົນ ເປັນຍິງ 2.088 ຄົນ ເຊິ່ງເຫັນວ່າເພດຍິງກໍ່ໄດ້ຮັບໂອກາດເທົ່າທຽມກັນກັບເພດຊາຍ; ທຽບໃສ່ຄາດໝາຍທີ່ວາງໄວ້ 4.000 ຄົນ ແມ່ນສາມາດບັນລຸໄດ້ເກີນຄາດໝາຍ ເຖິງ 107 % ຂອງຄາດໝາຍລວມ.

ສຳລັບສາຂາວິຊາຊີບທີ່ມີຜູ້ເຂົ້າຮັບການຝຶກອົບຮົມຫຼາຍກວ່າໝູ່ແມ່ນວິຊາຊີບສາຂາປຸງແຕ່ງອາຫານ ມີ 1.554 ຄົນ ຍິງ 973 ຄົນ, ວິຊາຊີບສາຂາປູກຝັງ ມີ 697 ຄົນ, ຍິງ 132 ຄົນ ແລະ ວິຊາຊີບສາຂາຕັດຫຍິບ ມີ 483 ຄົນ, ຍິງ 259 ຄົນ ເຊິ່ງອາດມີຄວາມເປັນໄປໄດ້ວ່າ ສາເຫດທີ່ມີຜູ້ເຂົ້າຮັບການຝຶກອົບຮົມຫຼາຍກວ່າໝູ່ ແມ່ນຍ້ອນວ່າ ພວກເຮົາມີຄວາມພ້ອມທາງດ້ານພື້ນຖານໂຄງລ່າງ, ອຸປະກອນ, ຄູຝຶກ ແລະ ແຫຼ່ງທຶນ ໃນການສະໜັບສະໜູນວິຊາຊີບດັ່ງກ່າວນີ້. ອີກສາເຫດໜຶ່ງ ກໍ່ອາດຈະແມ່ນຍ້ອນສອງວິຊາຊີບດັ່ງກ່າວນີ້ ເປັນວິຊາຊີບທີ່ຕິດພັນກັບການດຳລົງຊີ ວິດປະຈຳວັນຕົວຈິງ ຂອງປະຊາຊົນລາວເຮົາ ແລະ ເປັນສາຂາວິຊາຊີບທີ່ຄົນລາວເຮົາ ໂດຍສະເພາະແມ່ນກຸ່ມເປົ້າໝາຍທີ່ດຳລົງຊີວິດຕິດພັນກັບການທຳມາຫາລ້ຽງຊີບປະຈຳວັນ.

### 5.1.2. ການປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ

ການພັດທະນາວຽກງານການສຶກສານອກໂຮງຮຽນ ບໍ່ພຽງແຕ່ຂະຫຍາຍໂອກາດ ແລະ ສົ່ງເສີມໃຫ້ກຸ່ມ ເປົ້າໝາຍໄດ້ເຂົ້າຮຽນຄືນເທົ່ານັ້ນ ແຕ່ຍັງໄດ້ມີການປັບປຸງທາງດ້ານຄຸນນະພາບພື້ນຖານໂຄງລ່າງ ຂອງການຮຽນ-ການສອນ, ສ້າງຂີດຄວາມສາມາດໃຫ້ກັບບຸກຄະລາກອນ ແລະ ຄູສອນສຳລັບການສອນຜູ້ໃຫຍ່ ແລະ ຝຶກອົບຮົມ ກ່ຽວກັບທັກສະວິຊາຊີບສະເພາະ; ພັດທະນາ ແລະ ປັບປຸງຫຼັກສູດ ລຶບລ້າງຄວາມບໍ່ຮູ້ໜັງສື; ບຳລຸງຍົກລະດັບຊັ້ນປະຖົມ, ບຳລຸງຍົກລະດັບຊັ້ນມັດທະຍົມຕົ້ນ ແລະ ມັດທະຍົມປາຍ ເພື່ອໃຫ້ມີຄຸນນະພາບໃກ້ຄຽງກັບການສຶກສາໃນໂຮງຮຽນເທື່ອລະກ້າວ ແລະ ສອດຄ່ອງກັບສະພາບແວດລ້ອມຕົວຈິງໃນປະຈຸບັນ; ພັດທະນາສື່ການຮຽນ-ການສອນ ແລະ ປັບປຸງວິທີການສິດສອນ ເພື່ອໃຫ້ຮັບປະກັນທາງດ້ານປະສິດທິພາບ ແລະ ໃຫ້ຍັບເຂົ້າໃກ້ກັບຄຸນນະພາບຂອງການຮຽນ-ການສອຂອງໃນໂຮງຮຽນ. ພ້ອມກັນນັ້ນ, ກໍ່ໄດ້ເອົາໃຈໃສ່ປັບປຸງດ້ານຄຸນນະພາບຂອງການຝຶກອົບຮົມ ວິຊາຊີບຂັ້ນພື້ນຖານ ເພື່ອແນໃສ່ເຂົ້າກັບສະພາບການດຳລົງຊີວິດຂອງປະຊາຊົນ ແລະ ເຮັດໃຫ້ສາມາດເຊື່ອມໂຍງກັບວຽກງານວິຊາຊີບອາຊີວະສຶກສາ.

### 5.1.3. ວຽກງານບໍລິຫານ ແລະ ຄຸ້ມຄອງ

ວຽກງານການບໍລິຫານ ແລະ ຄຸ້ມຄອງກໍ່ເປັນອີກວຽກໜຶ່ງທີ່ໄດ້ຮັບການພັດທະນາ ຄຽງຄູ່ກັບແຜນງານຂະຫຍາຍໂອກາດ ແລະ ການປັບປຸງຄຸນນະພາບ ເປັນຕົ້ນແມ່ນການພັດທະນາພື້ນຖານໂຄງລ່າງ, ການປັບປຸງບັນດານິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງ ລວມເຖິງການລົງເຜີຍແຜ່ວິທີການບໍລິຫານ, ຄຸ້ມຄອງ ແລະ ພັດທະນາວຽກງານການສຶກສານອກໂຮງຮຽນ. ໃນປີ 2018-19, ສາມາດສ້າງຕັ້ງສູນການສຶກສານອກໂຮງຮຽນຂັ້ນເມືອງເພີ່ມໄດ້ 7 ແຫ່ງ ແລະ ສ້າງສູນຂັ້ນແຂວງເປັນສູນການສຶກສານອກໂຮງຮຽນ ຕົວແບບໄດ້ 1 ແຫ່ງຄື: ແຂວງຊຽງຂວາງ. ສະນັ້ນ, ໃນປະຈຸບັນມີສູນການສຶກສານອກໂຮງຮຽນປະຈຳພາກ 3 ແຫ່ງ, ຂັ້ນແຂວງ 17 ແຫ່ງ, ຂັ້ນເມືອງ 36 ແຫ່ງ ແລະ ສູນການຮຽນຮູ້ຊຸມຊົນ 342 ແຫ່ງ.

ໃນປະຈຸບັນ, ການຈັດການຮຽນ-ການສອນ ຂອງຂະແໜງການສຶກສານອກໂຮງຮຽນ ແມ່ນນຳໃຊ້ຄູອາສາສະໝັກທີ່ເປັນລັດຖະກອນຄູເປັນຕົ້ນຕໍ ແຕ່ກໍ່ຍັງມີຈຳນວນໜຶ່ງທີ່ຍັງບໍ່ທັນໄດ້ເປັນລັດຖະກອນຄູ; ສຳລັບຄູສອນບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ແມ່ນນຳໃຊ້ຄູທີ່ສອນມັດທະຍົມໃນໂຮງຮຽນ ທີ່ຢູ່ໃກ້ສະຖານທີ່ການຈັດການຮຽນ-ການສອນນັ້ນເປັນຜູ້ສອນ, ສຳລັບສູນການສຶກສານອກໂຮງຮຽນ ທີ່ຫັນຈາກໂຮງຮຽນບຳລຸງແຂວງໃນເມື່ອກ່ອນນັ້ນ ມີຄູສອນປະຈຳປົກກະຕິ ເຊິ່ງລວມທັງຄູສອນວິຊາຊີບຂັ້ນພື້ນຖານ. ໃນສົກຮຽນ 2018-19 ມີພະນັກງານ ແລະ ລັດຖະກອນຄູ ການສຶກສານອກໂຮງຮຽນ ທັງໝົດ 11.754 ຄົນ, ຍິງ 5.875 ຄົນ; ໃນຈຳນວນດັ່ງກ່າວມີຄູສອນບຳລຸງຍົກລະດັບການສຶກສາຊັ້ນປະຖົມ ຈຳນວນ 2.657 ຄົນ, ຍິງ 112 ຄົນ; ຄູສອນບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນບຳລຸງ ຈຳນວນ 8.504 ຄົນ, ຍິງ 5.403 ຄົນ; ແລະ ຄູສອນບຳ

ລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນປາຍບຳລຸງ ຈຳນວນ 528 ຄົນ, ຍິງ 320 ຄົນ; ຄູວິຊາຊີບຂັ້ນພື້ນ ຖານ 65 ຄົນ, ຍິງ 40 ຄົນ.

ນອກຈາກນັ້ນ ສຳລັບການພັດທະນານິຕິກຳ ກໍ່ໄດ້ສືບຕໍ່ປັບປຸງຮ່າງດຳລັດນາຍົກລັດຖະມົນຕີວ່າດ້ວຍ ການຮຽນຮູ້ຕະຫຼອດຊີວິດ ເຊິ່ງສະເໜີເຂົ້າຜ່ານໃນກອງປະຊຸມລັດຖະບານ ປະຈຳເດືອນກໍລະກົດ 2019; ໄດ້ມີການອະນຸມັດ ແລະ ເຜີຍແຜ່ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຝຶກອົບຮົມວິຊາຊີບຂັ້ນພື້ນຖານນອກໂຮງຮຽນ ໃຫ້ກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ສູນການສຶກສານອກໂຮງຮຽນໃນທຸກຂັ້ນ. ທີ່ສຳຄັນທີ່ສຸດແມ່ນໄດ້ປັບປຸງຂໍ້ຕົກລົງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນ ການສຶກສາ ນອກໂຮງຮຽນຂັ້ນພາກ, ສູນແຂວງ, ສູນເມືອງ ແລະ ສູນຮຽນຮູ້ຊຸມຊົນ.

## 5.2. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

ຜ່ານການຕີລາຄາຜົນການຈັດຕັ້ງປະຕິບັດປີຜ່ານມາ ເຫັນວ່າຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນີ້ ວຽກງານການສຶກສານອກໂຮງຮຽນ ກໍ່ຍັງມີບາງຂໍ້ຄົງຄ້າງທີ່ຕ້ອງໄດ້ສຸມໃສ່ຊອກຫາວິທີແກ້ໄຂໃນສົກຮຽນຕໍ່ໄປ ຄືດັ່ງນີ້:

1. ກຸ່ມເປົ້າໝາຍຜູ້ຮຽນສ່ວນຫຼາຍບໍ່ຢາກຮຽນຍ້ອນຊີວິດການເປັນຢູ່ຝືດເຄືອງ, ຂາດແຮງງານໃນຄອບຄົວ, ຢູ່ກະແຈກກະຈາຍ, ເປົ້າໝາຍຮຽນມີຈຳນວນເພີ່ມຂຶ້ນຢ່າງຫຼວງຫຼາຍໃນແຕ່ລະປີ ໂດຍສະເພາະແມ່ນຊັ້ນມັດທະຍົມສຶກສາ ຍ້ອນອັດຕາການປະລະການຮຽນໃນຊັ້ນມັດທະຍົມມີສູງໃນແຕ່ລະປີ.
2. ລະບົບການເກັບກຳຂໍ້ມູນສະຖິຕິການສຶກສານອກໂຮງຮຽນ ຍັງບໍ່ທັນເຊື່ອມເຂົ້າກັບລະບົບການເກັບກຳຂໍ້ມູນຂອງກະຊວງ ແລະ ຍັງບໍ່ທັນໄດ້ວິເຄາະເພື່ອຊອກຫາບັນຫາ, ສາເຫດ ແລະ ວິທີການແກ້ໄຂທີ່ມີຫຼາຍຮູບແບບ ສົມເຫດສົມຜົນຕາມສະພາບຄວາມເປັນຈິງ.
3. ລະບົບການສະຫຼຸບລາຍງານວຽກງານການສຶກສານອກໂຮງຮຽນປະຈຳພາກຮຽນ ປະຈຳປີຈາກໜ່ວຍງານຂອງເມືອງ, ຈາກສູນການສຶກສາຂັ້ນຕ່າງໆກໍ່ຍັງຊັກຊ້າ ບໍ່ຖືກຕາມເວລາທີ່ກຳນົດໄວ້; ບາງບ່ອນພາຍຫຼັງຈັດຕັ້ງພິທີປະກາດຈົບຊັ້ນປະຖົມບຳລຸງ ແລະ ຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວເມືອງໄປແລ້ວ ແມ່ນຢຸດສະງັກ ບໍ່ສືບຕໍ່ເກັບກຳຂໍ້ມູນສະຖິຕິກຸ່ມເປົ້າໝາຍ ແລະ ບໍ່ຈັດຕັ້ງການຮຽນ-ການສອນເລີຍ ຈຶ່ງເປັນສາເຫດໃຫ້ເກີດມີກຸ່ມເປົ້າໝາຍກືກໜັງສື ແລະ ຮຽນບໍ່ຈົບຫຼາຍຂຶ້ນ.
4. ຄຸນນະພາບການຮຽນ-ການສອນບຳລຸງຍົກລະດັບການສຶກສາຊັ້ນຕ່າງໆຍັງບໍ່ທັນສູງ ແລະ ຍັງແລ່ນນຳປະລິມານຫຼາຍ, ຂາດຄູສອນບຳລຸງຊັ້ນມັດທະຍົມຕົ້ນສຳລັບປະຊາຊົນໃນເຂດຫ່າງໄກສອກຫຼີກໄກສອກຫຼີກ.
5. ສູນການສຶກສານອກໂຮງຮຽນຂັ້ນຕ່າງໆ ສ່ວນຫຼາຍຍັງບໍ່ທັນໄດ້ວາງແຜນ ແລະ ຈັດຕັ້ງດຳເນີນວຽກງານການຝຶກອົບຮົມໃຫ້ແກ່ກຸ່ມເປົ້າໝາຍຕາມໜ້າທີ່ຂອງຕົນເທົ່າທີ່ຄວນ, ສາເຫດຍ້ອນບໍ່ມີຄູຝຶກ, ບໍ່ມີອຸປະກອນ ແລະ ຂາດງົບປະມານ.
6. ການຕິດຕາມ, ຊຸກຍູ້ ແລະ ປະເມີນຄຸນນະພາບການສຶກສານອກໂຮງຮຽນ, ການຕິດຕາມການຮຽນ-ການສອນບຳລຸງຍົກລະດັບການສຶກສາຕົວຈິງ, ການຕິດຕາມຜົນຂອງການປະຕິບັດ ພາຍຫຼັງຝຶກອົບຮົມວິຊາຊີບໄປແລ້ວບໍ່ໄດ້ຮັບການປະເມີນ.
7. ບາງສູນຍັງບໍ່ມີຄວາມພ້ອມໃນການຈັດການຝຶກອົບຮົມວິຊາຊີບ, ບາງສາຂາວິຊາຊີບກໍ່ຍັງມີຈຳກັດ ແລະ ຄູຝຶກວິຊາຊີບຈຳນວນໜຶ່ງກໍ່ຍັງບໍ່ມີຄວາມຊຳນິຊຳນານເທົ່າທີ່ຄວນ;
8. ກຸ່ມເປົ້າໝາຍສ່ວນຫຼາຍບໍ່ໄດ້ຮັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ, ຮຽນແລ້ວບໍ່ສາມາດນຳໄປໃຊ້ໃຫ້ເກີດຜົນປະໂຫຍດໃນຊີວິດການເປັນຢູ່ໄດ້ເທົ່າທີ່ຄວນ.

## 5.3. ແຜນວຽກບູລິມະສິດ ສຳລັບປີ 2020

### 5.3.1. ຈຸດປະສົງ

1. ສ້າງໂອກາດໃຫ້ປະຊາຊົນກຸ່ມເປົ້າໝາຍ ອາຍຸ 6-14 ປີ ແລະ 15-40 ປີ ທີ່ບໍ່ທັນຈົບຊັ້ນປະຖົມ ແລະ 15-30 ປີ ທີ່ບໍ່ຈົບຊັ້ນມັດທະຍົມຕອນຕົ້ນ ຍ້ອນບໍ່ມີໂອກາດ ແລະ ພາດໂອກາດໃນການສຶກສາ ໃຫ້ໄດ້ຮັບ ການສຶກສາຢ່າງເທົ່າທຽມກັນ, ທົ່ວເຖິງ ແລະ ມີຄຸນນະພາບ ເພື່ອສຳເລັດການສຶກສາພາກບັງຄັບ ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ;
2. ສືບຕໍ່ປັບປຸງຄຸນນະພາບການສຶກສານອກໂຮງຮຽນ ຕາມມາດຕະຖານຄຸນນະພາບ ສຳລັບການສຶກສາ ນອກໂຮງຮຽນ;
3. ສົ່ງເສີມໃຫ້ກຸ່ມເປົ້າໝາຍໂດຍສະເພາະແມ່ນບ້ານສາມສ້າງໄດ້ຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະຊີວິດ ເພື່ອຍົກສູງຄຸນນະພາບຊີວິດຂອງເຂົາເຈົ້າໃຫ້ດີຂຶ້ນ.

### 5.3.2. ຄາດໝາຍ

1. ສົ່ງເສີມໃຫ້ເດັກນ້ອຍກຸ່ມເປົ້າໝາຍອາຍຸ 6-14 ປີ ໃຫ້ຮຽນຈົບຊັ້ນປະຖົມບຳລຸງ ໃຫ້ໄດ້ 3.000 ຄົນ;
2. ສົ່ງເສີມໃຫ້ຊາວໜຸ່ມ ແລະ ຜູ້ໃຫຍ່ກຸ່ມເປົ້າໝາຍອາຍຸ 15-40 ປີ ໃຫ້ຮຽນຈົບຊັ້ນປະຖົມບຳລຸງໃຫ້ໄດ້ 8.000 ຄົນ;
3. ສົ່ງເສີມໃຫ້ຊາວໜຸ່ມ ແລະ ຜູ້ໃຫຍ່ ກຸ່ມເປົ້າໝາຍ ອາຍຸ 15-35 ປີ ໃຫ້ຮຽນຈົບຊັ້ນມັດທະຍົມຕອນຕົ້ນໃຫ້ໄດ້ 60.000 ຄົນ;
4. ສຳເລັດການບຳລຸງຍົກລະດັບການສຶກສາຈົບຊັ້ນມັດທະຍົມຕອນຕົ້ນທົ່ວເມືອງ ໃຫ້ໄດ້ 15 ເມືອງ;
5. ສືບຕໍ່ຈັດການຮຽນ ການສອນ-ບຳລຸງຍົກລະດັບການສຶກສາຈົບຊັ້ນມັດທະຍົມຕອນປາຍໃຫ້ໄດ້ 3.000 ຄົນ;
6. ສືບຕໍ່ຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ປະຊາຊົນໃນກຸ່ມເປົ້າໝາຍທີ່ສົນໃຈ ແລະ ເຂດທີ່ມີເງື່ອນໄຂໃຫ້ໄດ້ 4.000 ຄົນ;
7. ຝຶກອົບຮົມເຕັກນິກວິທີການສອນ, ການເປັນຄູຝຶກວິຊາຊີບ ແລະ ຍົກລະດັບທັກສະວິຊາຊີບ ໃຫ້ຄູຝຶກສູນການສຶກສານອກໂຮງຮຽນ ຂັ້ນເມືອງ ໃນຂອບເຂດທົ່ວປະເທດ ໃຫ້ໄດ້ 30 ຄົນ;
8. ສືບຕໍ່ຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໃຫ້ປະຊາຊົນບ້ານສາມສ້າງ ໃຫ້ໄດ້ 70 ຄົນ;
9. ສ້າງສູນການສຶກສານອກໂຮງຮຽນ ຂັ້ນແຂວງ ໃຫ້ໄດ້ 1 ແຫ່ງ (ແຂວງໄຊສົມບູນ).

### 5.3.3. ວຽກຈຸດສຸມ

1. ສືບຕໍ່ວຽກງານການສຶກສາຕໍ່ເນື່ອງໃຫ້ແກ່ກຸ່ມເປົ້າໝາຍອາຍຸ 6-14 ປີ ທີ່ດ້ອຍໂອກາດ ແລະ ພາດໂອກາດທາງການສຶກສາ ແລະ ກຸ່ມເປົ້າໝາຍອາຍຸ 15-40 ປີ ທີ່ບໍ່ຮຽນຈົບຊັ້ນປະຖົມບຳລຸງ ແລ້ວຈັດຕັ້ງການຮຽນ-ການສອນ ໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້;
2. ສືບຕໍ່ປັບປຸງລະບົບການເກັບກຳຂໍ້ມູນ ແລະ ລະບົບການລາຍງານ ຂອງສູນການສຶກສານອກໂຮງຮຽນປະຈຳພາກ, ແຂວງ, ເມືອງ ແລະ ສູນການຮຽນຮູ້ຊຸມຊົນ ເພື່ອເຮັດໃຫ້ຂໍ້ມູນ ແລະ ການລາຍງານມີຄວາມເຊື່ອຖື, ຖືກຕ້ອງກັບຕົວຈິງຫຼາຍກວ່າເກົ່າ ແລະ ສາມາດສະໜອງຂໍ້ມູນ ໃຫ້ກົມໄດ້ທັນເວລາ;
3. ຊຸກຍູ້, ສົ່ງເສີມຂະບວນການບຳລຸງຍົກລະດັບການສຶກສາຈົບຊັ້ນມັດທະຍົມ ໂດຍຖືຄຸນນະພາບເປັນຕົ້ນຕໍ ແລະ ພ້ອມຈັດຕັ້ງປະຕິບັດໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້;
4. ສົ່ງເສີມ, ຊຸກຍູ້ ແລະ ຕິດຕາມ ໂຮງຮຽນເຕັກນິກວິຊາຊີບພາກເອກະຊົນ ຈັດຝຶກອົບຮົມວິຊາຊີບໃຫ້ກຸ່ມເປົ້າໝາຍທີ່ຢູ່ໃນເຂດຕົວເມືອງ;
5. ຊຸກຍູ້, ຕິດຕາມ ແລະ ຈັດຝຶກອົບຮົມວິຊາຊີບຢູ່ຂັ້ນບ້ານ ຢູ່ບ້ານຈຸດສຸມ 3 ສ້າງ ໂດຍການໃຫ້ໂອກາດ ແລະ ຄັດເລືອກເອົາປະຊາຊົນຢູ່ກັບບ້ານ ຜູ້ທີ່ມີຄວາມກ້າວໜ້າ ແລະ ສົນໃຈຮຽນຮູ້;
6. ພັດທະນາ ແລະ ປັບປຸງຫຼັກສູດວິຊາຊີບບາງສາຂາ ພ້ອມທັງສ້າງປຶ້ມແບບຮຽນໃຫ້ສຳເລັດ ແລະ ເຜີຍແຜ່ການນຳໃຊ້ໃຫ້ສູນການສຶກສານອກໂຮງຮຽນທົ່ວປະເທດ;

7. ສ້າງ ແລະ ຝຶກອົບຮົມ ເຕັກນິກວິທີການສອນ, ການເປັນຄູຝຶກວິຊາຊີບ ແລະ ຍົກລະດັບທັກສະວິຊາຊີບ ໃຫ້ກັບສູນການສຶກສານອກໂຮງຮຽນ ປະຈໍາພາກ, ຂັ້ນແຂວງ ແລະ ຂັ້ນເມືອງ;
8. ປັບປຸງຮ່າງດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຮຽນຕະຫຼອດຊີວິດ ແລະ ຮ່າງນິຕິກໍາອື່ນໆໃຫ້ສໍາເລັດ;
9. ປັບປຸງໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດ ການເຄື່ອນໄຫວຂອງສູນການສຶກສານອກໂຮງຮຽນ ແຕ່ລະຂັ້ນ ເພື່ອໃຫ້ມີຄວາມເໝາະສົມ ແລະ ແທດເໝາະກັບສະພາບຕົວຈິງ.

# VI. ຂະແໜງການຍ່ອຍສ້າງຄູ

## 6.1. ສະພາບລວມ

### 6.1.1. ການຂະຫຍາຍໂອກາດ ແລະ ການເຂົ້າເຖິງ

ໂດຍອີງໃສ່ສະພາບນັກສຶກສາຄູທີ່ຮຽນຈົບອອກໄປໃນແຕ່ລະປີ ບໍ່ໄດ້ຮັບການບັນຈຸມີຈຳນວນຫຼວງຫຼາຍ. ດັ່ງນັ້ນ, ໃນສົກຮຽນ 2018-2019 ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ຫຼຸດການຮັບນັກຮຽນຄູເຂົ້າຮຽນ ໃນສະຖາບັນສ້າງຄູຕ່າງໆປະມານ 14% ທຽບໃສ່ປີຜ່ານມາ. ໃນສົກຮຽນດັ່ງກ່າວນີ້ ມີນັກຮຽນທີ່ຮຽນຈົບ ຊັ້ນມັດທະຍົມຕອນປາຍ ສະໝັກເຂົ້າຮຽນຢູ່ສະບັນສ້າງຄູຕ່າງໆ ທົ່ວປະເທດ ຈຳນວນທັງໝົດ 3.659 ຄົນ, ໃນນີ້ ຄູອະນຸບານ 527 ຄົນ, ຄູປະຖົມ 329 ຄົນ, ຄູມັດທະຍົມ 1.701 ຄົນ, ຄູພະລະ ແລະ ສິລະປະສຶກສາ 282 ຄົນ ແລະ ຍັງມີນັກສຶກສາຄູສາຍສິງອີກຈຳນວນໜຶ່ງ. ການຮັບນັກສຶກສາຄູແມ່ນອີງຕາມອັດຕາສ່ວນສອບເສັງ 80% ຕົວເລກແບ່ງປັນ 20%, ໃນນັ້ນ 10% ໄດ້ຮັບເບັ້ຍລ້ຽງໂດຍແມ່ນແຂວງເປັນຜູ້ຄັດເລືອກ ແລະ ອີກ 10% ແມ່ນ ວິທະຍາໄລຄູເປັນຜູ້ເລືອກໂດຍອີງຕາມຜົນການສອບເສັງຄັດເລືອກເຂົ້າຮຽນ.

ໃນສົກຮຽນດຽວກັນນີ້ ມີນັກສຶກສາຄູທີ່ຮຽນຈົບອອກຈາກສະຖາບັນສ້າງຄູຕ່າງໆ ຈຳນວນ 3.124 ຄົນ, ທຽບໃສ່ປີຜ່ານມາ ຫຼຸດລົງປະມານ 46,5%. ໃນນີ້, ຄູອະນຸບານມີ 466 ຄົນ, ຄູປະຖົມ 204 ຄົນ, ຄູມັດທະຍົມ 1.960 ຄົນ, ຄູພະລະ ແລະ ສິລະປະສຶກສາ 372 ຄົນ ແລະ ຄູສິງອີກຈຳນວນ 122 ອົງ.

ລາຍລະອຽດຈຳນວນນັກຮຽນແຕ່ລະຊັ້ນແຕ່ລະສາຍມີດັ່ງນີ້:

❖ **ສາຍຄູອະນຸບານ:**

- ມີຈຳນວນນັກຮຽນ-ນັກສຶກສາທັງໝົດ 1.789 ຄົນ, ຍິງ 1.788 ຄົນ, ທຽບໃສ່ປີຜ່ານມາຫຼຸດ 28,47%. ມີນັກຮຽນເຂົ້າໃໝ່ທັງໝົດ 527 ຄົນ, ຍິງ 527 ຄົນ. ນັກຮຽນປີສຸດທ້າຍ ຈຳນວນ 466 ຄົນ ແລະ ຄູອະນຸບານຮຽນຕໍ່ເນື່ອງຈຳນວນທັງໝົດ 128 ຄົນ, ຍິງ 128 ຄົນ.

❖ **ສາຍຄູປະຖົມ:**

- ມີຈຳນວນນັກຮຽນ-ນັກສຶກສາສາຍຄູປະຖົມຢູ່ວິທະຍາໄລຄູ 8 ແຫ່ງ ມີຈຳນວນທັງໝົດ 1.364 ຄົນ, ຍິງ 870 ຄົນ, ທຽບໃສ່ປີຜ່ານມາແມ່ນຫຼຸດ 9,91%. ມີນັກຮຽນເຂົ້າໃໝ່ 329 ຄົນ, ຍິງ 301 ຄົນ. ມີນັກສຶກສາປີສຸດທ້າຍຈຳນວນ 204 ຄົນ, ຍິງ 120 ຄົນ ແລະ ນັກຮຽນຄູປະຖົມຮຽນຕໍ່ເນື່ອງ 169 ຄົນ, ຍິງ 55 ຄົນ.

❖ **ສາຍຄູມັດທະຍົມ:**

- ຈຳນວນນັກຮຽນຄູສາຍຊັ້ນມັດທະຍົມສຶກສາທີ່ຮຽນຢູ່ຄະນະສຶກສາສາດ 4 ແຫ່ງ ແລະ ວິທະຍາໄລຄູຕ່າງໆ ມີຈຳນວນທັງໝົດ 7.001 ຄົນ, ທຽບໃສ່ປີຜ່ານມາແມ່ນຫຼຸດ 14,61%. ມີນັກຮຽນເຂົ້າໃໝ່ທັງໝົດ 1.701 ຄົນ ທຽບໃສ່ປີຜ່ານມາຫຼຸດລົງ 19,71%. ຈຳນວນນັກຮຽນຄູປີສຸດທ້າຍ ຈຳນວນ 1.960 ຄົນ.

❖ **ສາຍຄູພະລະສຶກສາ ແລະ ສິລະປະສຶກສາ:**

- ຈຳນວນນັກຮຽນ-ນັກສຶກສາຄູພະລະສຶກສາ ມີທັງໝົດ 450 ຄົນ, ມີນັກຮຽນເຂົ້າໃໝ່ 134 ຄົນ ແລະ ນັກຮຽນປີສຸດທ້າຍຈຳນວນ 126 ຄົນ. ນອກນີ້, ຍັງມີນັກສຶກສາຄູພະລະສຶກສາຊັ້ນສູງ ຮຽນຢູ່ວິທະຍາໄລຄູ ປາກເຊ ຊຸດທີ 2 ມີນັກສຶກສາ 26 ຄົນ ແລະ ວິທະຍາໄລຄູຄັງໄຂ ຊຸດທີ 1 ມີນັກສຶກສາ 27 ຄົນ.
- ນັກຮຽນຄູສິລະປະສຶກສາ ມີນັກສຶກສາທັງໝົດ 435 ຄົນ, ມີນັກຮຽນເຂົ້າໃໝ່ 154 ຄົນ ແລະ ນັກສຶກສາປີສຸດທ້າຍ 147 ຄົນ.

ເຖິງວ່າສະພາບການຮັບນັກຮຽນຄູເຂົ້າໃໝ່ ແລະ ນັກຮຽນຄູທີ່ຮຽນຈົບອອກໄປຈະຫຼຸດລົງ ທຽບໃສ່ປີຜ່ານມາ, ແຕ່ຈຳນວນນັກຮຽນທີ່ຮຽນຈົບອອກໄປ ແມ່ນຍັງບໍ່ໄດ້ຮັບການບັນຈຸເປັນລັດຖະກອນຄູ ຈຳນວນໂຄຕ້າມີຈຳກັດ ອັນເນື່ອງມາຈາກຈຳນວນນັກຮຽນຄູທີ່ຈົບອອກໄປ ແຕ່ບໍ່ໄດ້ຮັບການບັນຈຸຍັງມີຫຼາຍ.

### 6.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

#### 6.1.2.1. ການປັບປຸງຫຼັກສູດ ແລະ ການສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ

1. ສຳເລັດການພັດທະນາຫຼັກສູດສາຍສ້າງຄູປະຖົມລະດັບອະນຸປະລິນຍາ ໂດຍການສະໜັບສະໜູນຂອງແຜນງານ BEQUAL.
2. ສຳເລັດການປັບປຸງຫຼັກສູດສ້າງຄູມັດທະຍົມ ລະດັບປະລິນຍາຕີ 15 ສາຂາວິຊາ ໂດຍການສະໜັບສະໜູນຂອງໂຄງການ SESDP.
3. ສຳເລັດການປັບປຸງໂຄງຮ່າງຫຼັກສູດສ້າງຄູມັດທະຍົມລະບົບຕໍ່ເນື່ອງ ລະດັບປະລິນຍາຕີ ຈຳນວນ 05 ສາຂາວິຊາ ຄື: ຄະນິດສາດ, ພາສາລາວ, ຊີວະສາດ, ເຄມີສາດ ແລະ ພາສາອັງກິດ.
4. ສຳເລັດການປັບປຸງຫຼັກສູດສ້າງຄູອະນຸບານ ແລະ ຄູປະຖົມ ລະບົບຕໍ່ເນື່ອງ ລະດັບປະລິນຍາຕີ.
5. ສຳເລັດການປັບປຸງຫຼັກສູດສ້າງຄູອະນຸບານລະດັບປະລິນຍາຕີ ໂດຍການສະໜັບສະໜູນຂອງ UNESCO Bangkok.
6. ສຳເລັດການພັດທະນາມາດຕະຖານການສອນຄູຊັ້ນປະຖົມສຶກສາ.
7. ສ້າງທັກສະໃຫ້ແກ່ນັກສຶກສາຄູກ່ຽວກັບການຜະລິດອຸປະກອນສື່ການຮຽນ - ການສອນ ຈາກວັດຖຸທີ່ຫາໄດ້ງ່າຍໆ.

#### 6.1.2.2. ການຍົກສູງຄຸນນະພາບການສອນຂອງຄູໃນສະຖາບັນສ້າງຄູໃຫ້ສູງຂຶ້ນ

1. ຖອດຖອນບົດຮຽນກ່ຽວກັບການຮຽນການສອນລະດັບປະລິນຍາຕີ ແລະ ການວິໄຈໃນຫ້ອງຮຽນໃນສະຖານບັນສ້າງຄູ.
2. ຄົ້ນຄວ້າການຂໍຕຳແໜ່ງອາຈານ ແລະ ຜູ້ຊ່ວຍອາຈານໃຫ້ຄູສອນໃນວິທະຍາໄລຄູ ແລະ ວິທະຍາໄລສົງ.
3. ສະຖານການສ້າງຄູທຸກແຫ່ງ ນຳພາ ນັກຮຽນ-ນັກສຶກສາຄູ ປີສຸດທ້າຍ ລົງຝຶກຫັດວິຊາຊີບຄູໃນເຂດບໍລິການຂອງຕົນ ພ້ອມທັງຖອດຖອນບົດຮຽນກ່ຽວກັບວຽກງານດັ່ງກ່າວ.
4. ຄູ-ອາຈານໃນວິທະຍາໄລຄູທຸກແຫ່ງ ເຮັດການວິໄຈທາງດ້ານວິຊາການ ແລະ ຖອດຖອນບົດຮຽນກ່ຽວກັບວຽກງານດັ່ງກ່າວ.
5. ເສີມສ້າງຄວາມສາມາດໃນການນຳໃຊ້ຫ້ອງຟັງສຽງ, ໄອຊີທີ ແລະ ພາສາອັງກິດໃຫ້ຄູ-ອາຈານໃນວິທະຍາໄລຄູ ແລະ ໂຮງຮຽນສາທິດ.
6. ເສີມສ້າງທັກສະການສອນພາສາລາວ, ວິທະຍາສາດ ແລະ ຄະນິດສາດ ໂດຍເນັ້ນຜູ້ຮຽນເປັນໃຈກາງໃຫ້ແກ່ຄູ-ອາຈານໃນວິທະຍາໄລຄູ.

#### 6.1.2.3. ການສະໜອງການບຳລຸງຄູໃຫ້ເປັນລະບົບ ເພື່ອພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ປັບປຸງເຄືອຂ່າຍ ການພັດທະນາວິຊາຊີບຄູໃຫ້ໜັກແໜ້ນ.

1. ສຳເລັດການຝຶກອົບຮົມແນະນຳການນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມືຄູ ວິຊາຄະນິດສາດຊັ້ນປະຖົມປີທີ 1 ແລະ 2 ສະບັບປັບປຸງໃໝ່ ໃຫ້ແກ່ຄູຝຶກຂັ້ນແຂວງ, ຂັ້ນເມືອງ, ວິທະຍາໄລຄູຈຳນວນ 242 ຄົນ ແລະ ຄູສອນຂັ້ນ ປ.1 ໃນທົ່ວປະເທດ ທັງພາກລັດ ແລະ ເອກະຊົນ ຈຳນວນ 10.245 ຄົນ (ພາກລັດ 9.730 ຄົນ, ເອກະຊົນ 515 ຄົນ) ແລະ ຄູສອນຂັ້ນ ປ.2 ໃນ 4 ແຂວງເປົ້າໝາຍຂອງ ອົງການ JICA ທັງພາກລັດ ແລະ ເອກະຊົນ ຈຳນວນ 3.139 ຄົນ (ພາກລັດ 2.756 ຄົນ, ເອກະຊົນ 383 ຄົນ).
2. ສ້າງຄວາມເຂັ້ມແຂງໃນການຈັດການຮຽນ-ການສອນວິຊາວິທະຍາສາດ ແລະ ຄະນິດສາດໃຫ້ແກ່ຄູທີ່ສອນໃນຫຼັກສູດສ້າງຄູປະຖົມ ແລະ ຄູຊັ້ນປະຖົມ ຈຳນວນ 35 ຄົນ ຮ່ວມກັບສູນ SEAMEO RECSAM.

3. ຄູຝຶກຫຼັກແຫຼ່ງ ຈຳນວນ 60 ຄົນ ແລະ ຄູຝຶກປະຈຳແຂວງ ຈຳນວນ 611 ຄົນ ໄດ້ຮັບການຝຶກອົບຮົມກ່ຽວກັບການນຳໃຊ້ຫຼັກສູດຊັ້ນປະຖົມສຶກສາ ຂັ້ນ ປ.1 ແລະ ຍົກລະດັບການເປັນຄູສຶກສານິເທດຂັ້ນກະຊວງຈຳນວນ 24 ຄົນ ແລະ ຂັ້ນເມືອງ 6 ເມືອງ ຈຳນວນ 28 ຄົນ ຮ່ວມກັບກົມສາມັນສຶກສາ ໂດຍການສະໜັບສະໜູນຂອງອົງການ UNICEF.
4. ພັດທະນາຄູ່ມື ວິທີການສອນ ທີ່ຄຳນຶງເຖິງຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ໃນການສອນວິຊາວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ຊັ້ນມັດທະຍົມສຶກສາ (STEM) ແລະ ປັບປຸງເຄື່ອງມືເກັບກຳຂໍ້ມູນການສຶກສາຄູ ແລະ ການບຳລຸງຄູປະຈຳການຮ່ວມກັບອົງການ UNESCO.
5. ເສີມສ້າງຄວາມສາມາດໃນການນຳໃຊ້ຫ້ອງທົດລອງວິທະຍາສາດ ໃຫ້ແກ່ຄູສອນມັດທະຍົມໃນເທດສະບານນະຄອນຫຼວງພະບາງ, ແຂວງອຸດົມໄຊ ແລະ ການສອນພາສາລາວ ມ.4 ແລະ ມ.7 ໃຫ້ຄູສອນມັດທະຍົມ ໃນແຂວງໄຊຍະບູລີ.
6. ສ້າງຄວາມເຂັ້ມແຂງດ້ານການຈັດ ການຮຽນ-ການສອນ ໃຫ້ຄູສອນຊັ້ນມັດທະຍົມໃນເມືອງໂຂງ ແຂວງຈຳປາສັກ ແລະ ແຂວງສາລະວັນ.
7. ເສີມສ້າງທັກສະການວິໄຈສຸຂະພາບຂອງໄວໜຸ່ມ ໃຫ້ແກ່ຄູສອນສາຍຄູອະນຸບານ-ປະຖົມ.

#### 6.1.2.4. ການສ້າງຄວາມເຂັ້ມແຂງໃຫ້ແກ່ການປະກັນຄຸນນະພາບພາຍໃນ ແລະ ປັບປຸງການບໍລິຫານຈັດການໃນສະຖານການສ້າງຄູ.

1. ສຳເລັດການລົງກວດກາຄຸນນະພາບພາຍໃນສະຖານການສ້າງຄູ 10 ແຫ່ງ ປະຈຳປີ 2018.
2. ວິທະຍາໄລຄູ 8 ແຫ່ງໄດ້ຜ່ານການປະເມີນພາຍນອກ ຈາກສູນປະກັນຄຸນນະພາບການສຶກສາ ແລະ ໄດ້ຮັບໃບຮັບຮອງຄຸນນະພາບສະຖານການສຶກສາ.
3. ຖອດຖອນບົດຮຽນວຽກງານການບໍລິຫານ-ການຈັດຕັ້ງ ລະຫວ່າງວິທະຍາໄລຄູດ້ວຍກັນ ແລະ ສະຖານການສຶກສາອ້ອມຂ້າງ.
4. ປະເມີນຄວາມຮູ້ດ້ານວິຊາສະເພາະ ແລະ ທັກສະການສອນຂອງຄູ-ອາຈານ ໂດຍຜ່ານການສຳຫຼວດຄວາມພໍໃຈຂອງນັກຮຽນ-ນັກສຶກສາ ເພື່ອຊອກຫາບັນຫາ ແລະ ວິທີແກ້ໄຂ.
5. ວິທະຍາໄລຄູ 6 ແຫ່ງ ລວມທັງວິທະຍາໄລພະລະສຶກສາ ແລະ ວິທະຍາໄລສິລະປະສຶກສາ ໄດ້ປະກາດເປັນວິທະຍາໄລປອດຢາເສບຕິດ ໃນສົກຮຽນ 2018-19.

## 6.2. ປະເດັນບັນຫາ ແລະ ສິ່ງທ້າທາຍ

1. ນັກຮຽນທີ່ມາຕາມຕົວເລກແບ່ງປັນຈາກແຂວງ ຍັງບໍ່ໄດ້ຕາມເງື່ອນໄຂ ແລະ ມາດຕະຖານການຄັດເລືອກ ໂດຍສະເພາະຄວາມຮູ້ພື້ນຖານຂອງນັກຮຽນຍັງຕ່ຳ.
2. ການພັດທະນາຄວາມຮູ້ທາງດ້ານໄອຊີທີ ແລະ ພາສາຕ່າງປະເທດຂອງຄູ-ອາຈານຈຳນວນໜຶ່ງຍັງມີຂີດຈຳກັດ.
3. ຄວາມສາມາດໃນການຊຸກຍູ້ ສົ່ງເສີມ ຄູ-ອາຈານ ຍົກລະດັບວຸດທິດ້ານວິຊາສະເພາະ ທັງພາຍໃນ ແລະ ຕ່າງປະເທດ ຍັງມີຂີດຈຳກັດ.
4. ການສ້າງຂີດຄວາມສາມາດຂອງຄູໃນວິທະຍາໄລຄູ ໃນການໃຫ້ການບໍລິການດ້ານວິຊາການແກ່ຊຸມຊົນໃນເຂດບໍລິການ ຍັງມີຂໍ້ຈຳກັດ.
5. ຮູບແບບ ແລະ ໄລຍະເວລາການລົງຝຶກຫັດວິຊາຊີບຄູ ຍັງບໍ່ເປັນເອກະພາບໃນການຈັດຕັ້ງປະຕິບັດ.

## 6.3. ແຜນວຽກບູລິມະສິດສຳລັບປີ 2020

### 6.3.1 ຈຸດປະສົງລວມ

1. ເພື່ອປັບປຸງ ການສ້າງຄູໃຫ້ມີຄຸນນະພາບ ແລະ ຮັບປະກັນໃຫ້ນັກສຶກສາຄູ ທີ່ຮຽນຈົບໃຫ້ໄດ້ຕາມສະມັດຖະພາບທີ່ວາງໄວ້.
2. ເພື່ອຮັບປະກັນການສະໜອງຄູໃຫ້ພຽງພໍ ແລະ ສອດຄ່ອງຕາມຄວາມຮຽກຮ້ອງຕ້ອງການຕົວຈິງ.
3. ເພື່ອປັບປຸງວົງຈອນການເຄື່ອນໄຫວການພັດທະນາວິຊາຊີບຄູແບບຕໍ່ເນື່ອງຢ່າງເປັນປົກກະຕິ.

### 6.3.2 ຈຸດປະສົງສະເພາະ

1. ເພື່ອຍົກລະດັບຫຼັກສູດສ້າງຄູໃຫ້ມີຄຸນນະພາບ ແລະ ໃຫ້ມີຄວາມສອດຄ່ອງກົມກຽວກັບຫຼັກສູດການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ.
2. ເພື່ອປັບປຸງມາດຕະຖານການສອນຂອງຄູຢູ່ໃນສະຖານການສ້າງຄູ, ປັບປຸງພື້ນຖານໂຄງລ່າງ ແລະ ສິ່ງແວດລ້ອມການຮຽນຮູ້ໃນສະຖານການສ້າງຄູ.
3. ເພື່ອເຮັດໃຫ້ລະບົບການເຝິກອົບຮົມຄູປະຈຳການມີຄຸນນະພາບ ແລະ ມີປະສິດທິພາບສູງຂຶ້ນ.
4. ເພື່ອຮັບປະກັນການຕອບສະໜອງຄູໃຫ້ບັນລຸໄດ້ຕາມຄວາມຕ້ອງການ ໂດຍສະເພາະແມ່ນຄູຢູ່ໃນເຂດຫ່າງໄກສອກຫຼີກ ພ້ອມທັງຄັດເລືອກນັກຮຽນຄູເຂົ້າຮຽນຄູໃຫ້ໄດ້ຕາມມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້.

### 6.3.3 ຄາດໝາຍ

1. ແຜນຮັບນັກຮຽນເຂົ້າຮຽນສາຍສ້າງຄູໃນສົກ 2019-2020 ແມ່ນອີງໃສ່ທິດຊີ້ນຳຂອງຄະນະນຳກະຊວງສຶກສາທິການ ແລະ ກິລາ ໂດຍໃຫ້ການສອບເສັງຄັດເລືອກເອົາໃນຈຳນວນ 2.685 ຄົນ, ຊຶ່ງ 20% ແມ່ນໄດ້ຮັບເບ້ຍລ້ຽງ, ໃນນັ້ນ 10% ມອບໃຫ້ພະແນກ ສຶກສາທິການ ແລະ ແຂວງ/ນະຄອນຫຼວງ ຄັດເລືອກ ແລະ ອີກ 10% ມອບໃຫ້ວິທະຍາໄລຄູຄັດເລືອກຕາມເງື່ອນໄຂ ທີ່ລະບຸໄວ້.
2. ຈັດຕັ້ງການຝຶກອົບຮົມຄູປະຈຳການໃນການນຳໃຊ້ຫຼັກສູດປະຖົມສຶກສາ ໃຫ້ໄດ້ 40% ຂອງຈຳນວນຄູທັງໝົດທົ່ວປະເທດ ແລະ ສ້າງຄູສຶກສານິເທດຊັ້ນປະຖົມສຶກສາ ໃຫ້ໄດ້ 50%.
3. ຍົກຖານະວິທະຍາໄລຄູໃຫ້ເປັນສະຖາບັນການສຶກສາຄູ ຢ່າງໜ້ອຍ 2 ແຫ່ງ.

### 6.3.4 ວຽກຈຸດສຸມ

1. ສືບຕໍ່ພັດທະນາ ຄູ່ມືຄວາມຮູ້ທ້ອງຖິ່ນ ແຊກຊ້ອນເຂົ້າໃນຫຼັກສູດແຕ່ລະລາຍວິຊາ.
2. ສືບຕໍ່ປັບປຸງໂຄງຮ່າງຫຼັກສູດ ແລະ ພັດທະນາເນື້ອໃນໂມດູນລາຍວິຊາສາຍຄູປະຖົມລະດັບອະນຸປະລິນຍາ.
3. ປັບປຸງໂຄງຮ່າງຫຼັກສູດລາຍວິຊາ (course outline) ສ້າງຄູມັດທະຍົມ ລະດັບປະລິນຍາຕີ 15 ສາຂາວິຊາ ແລະ ໂຄງຮ່າງຫຼັກສູດລາຍວິຊາ ສ້າງຄູມັດທະຍົມລະບົບຕໍ່ເນື່ອງ ລະດັບປະລິນຍາຕີ ຈຳນວນ 05 ສາຂາວິຊາ ຄື: ຄະນິດສາດ, ພາສາລາວ, ຊີວະສາດ, ເຄມີສາດ ແລະ ພາສາອັງກິດ.
4. ສືບຕໍ່ແລກປ່ຽນບົດຮຽນທາງດ້ານວິຊາການ ແລະ ຕິດຕາມການຈັດຕັ້ງຜັນຂະຫຍາຍ ບົດບັນທຶກຄວາມເຂົ້າໃຈລະຫວ່າງວິທະຍາໄລຄູດ້ວຍກັນ, ວິທະຍາໄລກັບມະຫາວິທະຍາໄລຕ່າງໆທັງພາຍໃນ ແລະ ຕ່າງປະເທດ.
5. ສ້າງແຜນຍົກລະດັບຄູສອນໃນສາຍສາມັນທີ່ສອນບໍ່ຖືກວຸດທິ ແລະ ບໍ່ຖືກວິຊາສະເພາະດ້ວຍຫຼາຍຮູບແບບ.
6. ສືບຕໍ່ດຳເນີນການພັດທະນາຄູ່ມືວິທີເຮັດວຽກຂອງໂຮງຮຽນອະນຸບານ ແລະ ປະຖົມສາທິດ.
7. ລົງຕິດຕາມ ແລະ ຖອດຖອນບົດຮຽນການນຳໃຊ້ຫ້ອງທົດລອງສາຍຄູເຄມີສາດ, ຊີວະສາດ, ຟີຊິກສາດ ແລະ ຫ້ອງຟັງສຽງໃນວິທະຍາໄລຄູ.
8. ຄົ້ນຄວ້າ ແລະ ຮັບຮອງຕຳແໜ່ງວິຊາການຄູ ປະຈຳສົກຮຽນ 2019-2020.
9. ສືບຕໍ່ຕິດຕາມການປັບປຸງເຄືອຂ່າຍການຮ່ວມມືລະຫວ່າງບັນດາສະຖານການສ້າງຄູ ແລະ ການພັດທະນາວິຊາຊີບແບບຕໍ່ເນື່ອງ ໃນຮູບແບບການສຶກສາການສອນ (Lesson Study) ຮ່ວມກັນລະຫວ່າງ ວິທະຍາໄລຄູ, ໂຮງຮຽນປະຖົມສາທິດ ແລະ ໂຮງຮຽນປະຖົມໃນເຄືອຂ່າຍ.
10. ສືບຕໍ່ປັບປຸງນິຕິກຳກ່ຽວກັບລະບົບການບຳລຸງຄູປະຈຳການ ເພື່ອສົ່ງເສີມການພັດທະນາວິຊາຊີບແບບຕໍ່ເນື່ອງ.

11. ສືບຕໍ່ຍົກລະດັບຄູ ທາງດ້ານການນໍາໃຊ້ ໄອຊີທີ ແລະ ພາສາອັງກິດ ເຂົ້າໃນການຮຽນການສອນ.
12. ລົງຕິດຕາມ-ກວດກາ ການປະກັນຄຸນນະພາບພາຍໃນສະຖານການສ້າງຄູ 10 ແຫ່ງ ປະຈໍາປີ 2019.
13. ຈັດຝຶກອົບຮົມຄູປະຈໍາການ ກ່ຽວກັບການນໍາໃຊ້ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ວິຊາຄະນິດສາດ ຂັ້ນ ປ.2 ແລະ ວິຊາອື່ນໆ ຂັ້ນ ປ.1 ຮ່ວມກັບອົງການ JICA ແລະ ແຜນງານ BEQUAL.
14. ຈັດຝຶກອົບຮົມຍົກລະດັບຄູສຶກສານິເທດຊັ້ນປະຖົມສຶກສາ ໃຫ້ແກ່ຄູສຶກສານິເທດຂັ້ນແຂວງ 9 ແຂວງ, ວິທະຍາໄລຄູ 8 ແຫ່ງ ແລະ ຂັ້ນເມືອງ 16 ເມືອງ ຮ່ວມກັບກົມສາມັນສຶກສາ, ອົງການ UNICEF ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ.
15. ຈັດຝຶກອົບຮົມເພື່ອສ້າງ ແລະ ຍົກລະດັບຄູສຶກສານິເທດຊັ້ນປະຖົມສຶກສາ ໃຫ້ແກ່ຄູສຶກສານິເທດ ຂັ້ນແຂວງ 9 ແຂວງ, ຂັ້ນເມືອງ 76 ເມືອງ ແລະ ວິທະຍາໄລຄູ 8 ແຫ່ງ ຈໍານວນ 316 ຄົນ ຮ່ວມກັບ ກົມສາມັນ, ອົງການ UNICEF ແລະ ພາກສ່ວນທີ່ກ່ຽວຂ້ອງ.

# VII. ຂະແໜງການຍ່ອຍ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

## 7.1 ສະພາບລວມ

### 7.1.1 ວຽກງານຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໂດຍສົມທົບກັບຂະແໜງການຕ່າງໆທັງພາກລັດ ແລະ ເອກະຊົນ, ກະຊວງສຶກສາທິການ ແລະ ກິລາ ໄດ້ພະຍາຍາມສົ່ງເສີມ ແລະ ຊຸກຍູ້ໃຫ້ ຜູ້ທີ່ຮຽນຈົບຈາກໂຮງຮຽນມັດທະຍົມທັງຕອນຕົ້ນ ແລະ ຕອນປາຍ ໄດ້ເຂົ້າຮຽນໃນສາຍວິຊາຊີບໃຫ້ຫຼາຍຂຶ້ນ ໂດຍໄດ້ສະໜອງຫຼັກສູດທີ່ຫຼາກຫຼາຍ ແລະ ຫຼາຍຮູບແບບ. ໃນສົກຮຽນ 2018-2019 ນີ້ມີຜູ້ສະໝັກເຂົ້າຮຽນໃນສາຍອາຊີວະສຶກສາທຸກລະບົບ ທັງພາກລັດ ແລະ ເອກະຊົນ ທັງໝົດຈຳນວນ 30.843 ຄົນໃນນີ້ເຂົ້າຮຽນໃນສະຖາບັນທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ມີ 16.837 ຄົນ, ສະຖາບັນທີ່ຂຶ້ນກັບຂະແໜງການອື່ນໆ ເຊັ່ນ: ຂະແໜງກະສິກຳ, ການເງິນ, ສາທາລະນະສຸກ, ຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ແລະ ຍຸດຕິທຳ ມີ 6.458 ຄົນ ແລະ ເຂົ້າຮຽນໃນສະຖາບັນພາກເອກະຊົນຈຳນວນ 7.548 ຄົນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ມີນັກຮຽນທັງໝົດ ທີ່ກຳລັງຮຽນຢູ່ໃນສະຖາບັນອາຊີວະສຶກສາທັງພາກລັດ ແລະ ເອກະຊົນທັງໝົດ 75.466 ຄົນ.

ສົກຮຽນ 2018-2019 ມີສະຖານອາຊີວະສຶກສາທັງພາກລັດ ແລະ ເອກະຊົນ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາຄຸ້ມຄອງທາງດ້ານວິຊາການ ມີທັງໝົດ 90 ແຫ່ງ, ມີນັກສຶກສາທັງໝົດ 57.278 ຄົນ, ຍິງ 26.255 ຄົນ ແລະ ມີພະນັກງານ-ຄູອາຈານ ທັງໝົດ 4.526 ຄົນ, ຍິງ 1.615 ຄົນ, ໃນນັ້ນ ສະຖານອາຊີວະສຶກສາພາກລັດທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ໂດຍກົງ ມີທັງໝົດ 23 ແຫ່ງ, ມີຈຳນວນນັກສຶກທັງໝົດ 35.611 ຄົນ, ຍິງ 14.519 ຄົນ, ພະນັກງານ-ຄູອາຈານ ທັງໝົດ 2.294 ຄົນ ແລະ ຍິງ 854 ຄົນ ແລະ ສະຖານອາຊີວະສຶກສາພາກເອກະຊົນມີ 67 ແຫ່ງ, ມີນັກສຶກສາທັງໝົດ 21.667 ຄົນ, ຍິງ 11.736 ຄົນ, ມີພະນັກງານ-ຄູອາຈານທັງໝົດ 2.232 ຄົນ, ຍິງ 761 ຄົນ, ສະຖານອາຊີວະສຶກສາພາກເອກະຊົນ ສ່ວນຫຼາຍແມ່ນຈັດຕັ້ງການຮຽນ-ການສອນ ໃນສາຂາບໍລິຫານທຸລະກິດ, ພາສາຕ່າງປະເທດ ແລະ ໄອທີ. ໃນສົກຮຽນ 2017-2018 ມີນັກສຶກສາທີ່ຮຽນຈົບໃນສະຖາບັນອາຊີວະສຶກສາ ຈຳນວນ 14.153 ຄົນ.

ຈຳນວນນັກຮຽນເຂົ້າໃໝ່ໃນສາຍອາຊີວະສຶກສາ ສົກຮຽນ 2018-2019 ມີທັງໝົດຈຳນວນ 16.837 ຄົນ ທຽບໃສ່ແຜນຮັບປະຕິບັດໄດ້ 77% ແລະ ທຽບໃສ່ສົກຮຽນ 2017-2018 ຜ່ານມາໄດ້ 10%.

**ຕາຕະລາງທີ 8: ຈຳນວນນັກຮຽນທັງໝົດທາງພາກລັດ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ**

| ລ/ດ | ຂະແໜງການ | ຈຳນວນນັກຮຽນທັງໝົດ | ຄິດໄລ່ເປັນເປີເຊັນ |
|---|---|---|---|
| 1 | ກະສິກຳ | 3.047 | 8,56% |
| 2 | ອຸດສາຫະກຳ | 19.709 | 52,35% |
| 3 | ບໍລິການ | 12.544 | 35,23% |
| 4 | ຄູອາຊີວະສຶກສາ | 311 | 0,87% |
| **ລວມທັງໝົດ** | | 35.611 | 100% |

**ຕາຕະລາງທີ 9: ຈຳນວນນັກຮຽນພາກເອກະຊົນທັງໝົດ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ**

| ລ/ດ | ຂະແໜງການ | ຈຳນວນນັກຮຽນທັງໝົດ | ຄິດໄລ່ເປັນເປີເຊັນ |
|---|---|---|---|
| **1** | ກະສິກຳ | 0 | 0 |
| **2** | ອຸດສາຫະກຳ | 2.921 | 13,48% |
| **3** | ບໍລິການ | 18.746 | 86,52% |
| **ລວມທັງໝົດ** | | 21.667 | 100% |

### 7.1.2 ຄຸນນະພາບ ແລະ ຄວາມສອດຄ່ອງ

#### 7.1.2.1 ການພັດທະນາຫຼັກສູດ, ປັບປຸງຮູບແບບອາຊີວະສຶກສາ ແລະ ປັບປຸງຫຼັກສູດ

1. ສຳເລັດການພັດທະນາມາດຕະຖານອາຊີບໃໝ່ ແລະ ຫຼັກສູດແບບເນັ້ນສະມັດຖະພາບ ຈຳນວນ 9 ສາຂາອາຊີບ ເນັ້ນໃສ່ລະດັບ 1 ແລະ 2 ຮ່ວມກັບສະຖາບັນພັດທະນາອາຊີວະສຶກສາ ພາຍໃຕ້ໂຄງການ SSTVET ໃນ 5 ສາຂາອາຊີບ (ສັດຕະວະແພດ, ກະສິກຳສະອາດ, ໄອຊີທີ, ແປຮູບອາຫານ ແລະ ສ້ອມແປງລົດຍົນ);
2. ສຳເລັດການປັບປຸງຫຼັກສູດຄູອາຊີວະສຶກສາລະດັບປະລິນຍາຕີ ໃນ 3 ສາຂາວິຊາ: ເຕັກໂນໂລຊີໄຟຟ້າ, ເຕັກໂນໂລຊີກົນຈັກ ແລະ ວິສະວະກຳໂຍທາ ແລະ ສຳເລັດການສ້າງຮ່າງຄູ່ມືຫຼັກສູດຝຶກອົບຮົມວິຊາການສຳລັບຜູ້ບໍລິຫານອາຊີວະສຶກສາ;
3. ສຳເລັດການປັບປຸງຫຼັກສູດຄູອາຊີວະສຶກສາລະດັບຊັ້ນສູງ ໃນ 3 ສາຂາວິຊາ: ກະສິກຳ, ປ່າໄມ້ ແລະ ບໍລິຫານທຸລະກິດ ແລະ ສຳເລັດການອະນຸມັດ ນຳໃຊ້ຫຼັກສູດ ທີ່ພັດທະນາຂຶ້ນໃໝ່ ຈຳນວນ 13 ສາຂາວິຊາ ແລະ ຫຼັກສູດສະບັບປັບປຸງ ຈຳນວນ 6 ສາຂາວິຊາ;
4. ສຳເລັດການທົດທວນ ແລະ ປັບປຸງລະບຽບການວ່າດ້ວຍການສ້າງມາດຕະຖານອາຊີບການຮຽນ-ການສອນແບບຄວບຄູ່ ແລະ ສຳເລັດການຈັດກອງປະຊຸມລະດົມແນວຄວາມຄິດການສ້າງຫຼັກສູດລາຍວິຊາ ແລະ ວິຊາປະກອບການກິດຈະການ.

#### 7.1.2.2 ສົ່ງເສີມເອກະຊົນ ແລະ ພາກສ່ວນທຸລະກິດປະກອບສ່ວນເຂົ້າໃນການພັດທະນາອາຊີວະສຶກສາ

1. ສຳເລັດການອະນຸມັດຮັບຮອງເອົາໂຄງການສະໜັບສະໜູນອາຊີວະສຶກສາໃນ ສປປ ລາວ ໄລຍະທີ 2 (VELA-2).
2. ສຳເລັດການຝຶກອົບຮົມຮ່ວມກັບ ບໍລິສັດເທີນຫີນບູນພາວເວີ ຈຳກັດ ໃນຫົວຂໍ້ການຈົດກ່າຍບັນຊີຄົວເຮືອນ ໃນການຈັດສັນຍົກຍ້າຍປະຊາຊົນໃນການສ້າງເຂື່ອນໄຟຟ້າໃນ 4 ບ້ານ.

#### 7.1.2.3 ກໍ່ສ້າງ-ບຳລຸງຄູ ແລະ ພັດທະນາບຸກຄະລາກອນອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

1. ຄູຈຳນວນ 117 ຄົນ ໄດ້ຮັບການຍົກລະດັບດ້ານວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດ ໂດຍການ ສະໜັບສະໜູນຈາກໂຄງການ SSTVET ລະດັບປະລິນຍາຕີ 22 ທ່ານ ແລະ ລະດັບປະລິນຍາໂທ 95 ທ່ານ.
2. ຄູຈຳນວນ 352 ຄົນໄດ້ຮັບການຝຶກອົບຮົມດ້ານວິຊາຄູໃນຫົວຂໍ້ການຈັດການຮຽນ-ການສອນ ໂດຍເອົານັກຮຽນເປັນໃຈກາງ.

#### 7.1.2.4 ປະກັນຄຸນນະພາບ ຂອງວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

1. ສຳເລັດການສຶກສາຄວາມຕ້ອງການໃນການຝຶກອົບຮົມ ແລະ ຈັດບູລິມະສິດຕາມຄວາມຕ້ອງການພັດທະ ນາຫຼັກສູດຂອງສະຖານອາຊີວະສຶກສາທັງພາກລັດ ແລະ ເອກະຊົນໃນຂອບເຂດທົ່ວປະເທດ ປະຈຳປີ 2019.
2. ສຳເລັດການຕິດຕາມ ແລະ ຊຸກຍູ້ ການຮຽນ-ການສອນ ໃນສະຖານອາຊີວະສຶກສາ ທົ່ວປະເທດ ສົກຮຽນ 2018-2019.

3. ສຳເລັດການລົງຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການ ຮ່ວມມືດ້ານວິຊາການ ລາວ-ໄທ (TICA) ໄລຍະທີ I ຢູ່ວິທະຍາໄລເຕັກນິກ-ວິຊາຊີບຫຼວງພະບາງ, ວິທະຍາໄລເຕັກນິກແຂວງວຽງຈັນ, ວິທະຍາໄລເຕັກນິກກະສິກຳດົງຄຳຊ້າງ ແລະ ວິທະຍາໄລເຕັກນິກ-ວິຊາຊີບ ສະຫວັນນະເຂດ;

### 7.1.3 ການບໍລິຫານ ແລະ ການຄຸ້ມຄອງ

1. ສຳເລັດການລົງສຳຫຼວດ ແລະ ວິໄຈຄວາມຕ້ອງການ ການກໍ່ສ້າງ-ບຳລຸງຄູ ແລະ ບຸກຄະລາກອນອາຊີວະສຶກສາທັງພາກລັດ ແລະ ເອກະຊົນຮ່ວມກັບສະຖາບັນອາຊີວະສຶກສາ.
2. ສຳເລັດ ການຮ່າງປຶ້ມຄູ່ມືແນະນຳວິຊາຊີບ ແລະ ໃຫ້ຄຳປຶກສາດ້ານອາຊີບ ສຳລັບສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແລະ ສຳເລັດການສ້າງຄູຝຶກວຽກງານດັ່ງກ່າວໄດ້ 15 ທ່ານ, ປັບປຸງຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສະຖິຕິ - ຂໍ້ມູນຂ່າວສານ;
3. ສຳເລັດການປັບປຸງເຄື່ອງມື 4 ຊຸດແບບສອບຖາມຄື: 1) ແບບສອບຖາມການເກັບກຳຂໍ້ມູນນັກສຶກສາກ່ອນຮຽນຈົບ, 2) ແບບສອບຖາມເກັບກຳຂໍ້ມູນນັກສຶກສາຮຽນຈົບ (ແບບລົງເກັບກຳຂໍ້ມູນ), 3) ແບບສອບຖາມເກັບກຳຂໍ້ມູນນັກສຶກສາຮຽນຈົບແບບອອນລາຍ (Google forms), 4) ແບບສອບຖາມຄວາມຄິດເຫັນຂອງຜູ້ໃຊ້ແຮງງານ (ຜູ້ປະກອບການ);
4. ສຳເລັດການວາງແຜນ ແລະ ພັດທະນາເວບໄຊໂຄສະນາທາງສື່ສັງຄົມອອນລາຍ ແລະ ການເສີມສ້າງໂອກາດໃຫ້ແກ່ຊາວໜຸ່ມໃນລາວ (Lao Youthwork platform) ພາຍໃຕ້ກອບບົດບັນທຶກຄວາມເຂົ້າໃຈລະຫວ່າງກະຊວງສຶກສາທິການ ແລະ ກິລາ ກັບບໍລິສັດ Microsoft ເຊິ່ງໄດ້ສົມທົບຈັດຕັ້ງປະຕິບັດໂດຍໂຄງການ SSTVET ໄລຍະ 2.
5. ສຳເລັດການຮັບຮອງເອົາ ຮ່າງ ກົດໝາຍວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ) ທີ່ ສະພາແຫ່ງຊາດ.
6. ສຳລັບການສ້າງຕັ້ງ, ແຕ່ງຕັ້ງຄະນະປະທານ ແລະ ສະມາຊິກສະພາທີ່ປຶກສາອາຊີວະສຶກສາ ແລະ ພັດທະນາສີມືແຮງງານລະດັບຂັ້ນແຂວງ ຢູ່ແຂວງຫຼວງພະບາງ ແລະ ແຂວງຈຳປາສັກ.
7. ສຳເລັດຮ່າງຍຸດທະສາດການສົ່ງເສີມວຽກງານອາຊີວະສຶກສາ ( TVET Promotion Strategy )

## 7.2 ບັນຫາ ແລະ ສິ່ງທ້າທາຍ

1. ພື້ນຖານໂຄງລ່າງຂອງສະຖານອາຊີວະສຶກສາຍັງບໍ່ພຽງພໍກັບການເພີ່ມຂຶ້ນຂອງນັກຮຽນ ແລະ ຈຳນວນໜຶ່ງຍັງບໍ່ໄດ້ຮັບການປັບປຸງ ເປັນຕົ້ນແມ່ນ: ຫ້ອງຝຶກງານ, ຫ້ອງທົດລອງ, ຫ້ອງສະໝຸດ, ຟາມປູກຝັງ-ລ້ຽງສັດ ແລະ ສະໂມສອນ;
2. ການຈັດຕັ້ງການຮຽນ-ການສອນ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຄຸນນະພາບຍັງຕ່ຳ, ການພັດທະນາຫຼັກສູດບໍ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ. ການກໍ່ສ້າງກຳລັງແຮງງານຂະແໜງການບໍລິການຍັງມີຈຳນວນຫຼາຍ ແລະ ມີລັກສະນະເຫຼືອບໍ່ພໍ;
3. ອຸປະກອນເຕັກນິກ ແລະ ສື່ການສອນຍັງບໍ່ທັນສະໄໝ ແລະ ບໍ່ພຽງພໍກັບການຂະຫຍາຍຕົວທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
4. ຜູ້ບໍລິຫານ, ພະນັກງານ, ຄູ-ອາຈານຈຳນວນໜຶ່ງ ຍັງຂາດຄວາມຮູ້ ຄວາມສາມາດໃນການບໍລິຫານ-ຄຸ້ມຄອງ ແລະ ຍັງຂາດປະສົບການ;
5. ສະຖານປະກອບການຍັງບໍ່ທັນປະກອບສ່ວນ ແລະ ຮ່ວມມືຢ່າງກວ້າງຂວາງໃນການພັດທະນາວຽກງານອາຊີວະສຶກສາ;
6. ບັນດານິຕິກຳລຸ່ມກົດໝາຍວ່າດ້ວຍອາຊີວະສຶກສາ ຍັງບໍ່ໄດ້ຮັບການປັບປຸງ ແລະ ພັດທະນາໃຫ້ທັນກັບສະພາບຕົວຈິງ;
7. ການປັບປຸງລະບົບຂໍ້ມູນ-ຂ່າວສານອາຊີວະສຶກສາ ຍັງບໍ່ທັນສົມບູນ ແລະ ນຳໃຊ້ໄດ້ຢ່າງທົ່ວເຖິງ.

## 7.3 ແຜນວຽກບູລິມະສິດ ສຳລັບປີ 2020

### 7.3.1 ຈຸດປະສົງ

1. ສົ່ງເສີມໃຫ້ນັກຮຽນຈົບມັດທະຍົມຕົ້ນ ແລະ ມັດທະຍົມປາຍເຂົ້າຮຽນສາຍອາຊີວະສຶກສາໃຫ້ຫຼາຍຂຶ້ນ;
2. ປັບປຸງຫຼັກສູດອາຊີວະສຶກສາທີ່ມີຢູ່ ແລະ ສ້າງຫຼັກສູດໃໝ່ໃຫ້ສອດຄ່ອງກັບຄວາມຕ້ອງການ ຂອງຕະຫຼາດແຮງງານ ແລະ ໃຫ້ໃກ້ຄຽງກັບພາກພື້ນ ແລະ ສາກົນ.
3. ເພີ່ມການເຂົ້າຮຽນລວມ ແລະ ປັບປຸງການເຂົ້າເຖິງການຮຽນສາຍອາຊີວະສຶກສາໃຫ້ເທົ່າທຽມກັນ ສຳລັບນັກຮຽນຍິງ, ຊົນເຜົ່າ ແລະ ຜູ້ດ້ອຍໂອກາດຈາກເຂດຫ່າງໄກສອກຫຼີກ ດ້ວຍການໃຫ້ທຶນການສຶກສາ;
4. ຂະຫຍາຍການເຂົ້າຮຽນໃຫ້ນັກຮຽນໄດ້ເຂົ້າຮຽນໃນສາຍອາຊີວະສຶກສາ ໃນຮູບແບບການຮຽນແບບຄວບຄູ່ ແລະ ການຮຽນແບບປະສົມ ໃນ ແລະ ນອກໂຮງຮຽນ ສຳລັບຜູ້ທີ່ຮຽນບໍ່ຈົບມັດທະຍົມຕອນຕົ້ນດ້ວຍການໃຫ້ທຶນການສຶກສາ;
5. ຊຸກຍູ້, ສົ່ງເສີມສະຖານປະກອບການ ໃຫ້ມີສ່ວນຮ່ວມໃນການພັດທະນາມາດຖານອາຊີບ, ພັດທະນາຫຼັກສູດສື່ການຮຽນ-ການສອນ ແລະ ຝຶກອົບຮົມວິຊາຊີບ.
6. ຊຸກຍູ້ສົ່ງເສີມໃຫ້ພາກເອກະຊົນ ແລະ ສັງຄົມ ປະກອບສ່ວນໃນວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໃຫ້ນັບມື້ນັບຫຼາຍຂຶ້ນ.

### 7.3.2 ຄາດໝາຍ

- ສູ້ຊົນໃຫ້ມີນັກຮຽນທີ່ຈົບຊັ້ນມັດທະຍົມຕົ້ນໄດ້ເຂົ້າຮຽນໃນສາຍວິຊາຊີບກວມເອົາ 5% ແລະ ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມປາຍ ໄດ້ເຂົ້າຮຽນສາຍອາຊີວະສຶກສາກວມເອົາ 60%.

### 7.3.3 ວຽກຈຸດສຸມ

1. ກໍ່ສ້າງ, ປັບປຸງ ແລະ ຂະຫຍາຍຄວາມອາດສາມາດຂອງສະຖານອາຊີວະສຶກສາ ຈັດຕັ້ງປະຕິປັດການກໍ່ສ້າງໂຮງຊ່າງ, ອາຄານຮຽນ, ຫໍພັກ, ຕະຂ່າຍໄຟຟ້າ, ນໍ້າປະປາ ແລະ ຮົ້ວ ເພື່ອຂະຫຍາຍວິທະຍາເຂດໃໝ່ຂອງວິທະຍາໄລ ເຕັກນິກລາວ-ເຢຍລະມັນ ທີ່ບ້ານ ຊຽງດາ ແລະ ສະໜອງການປະກອບອຸປະກອນເຕັກນິກ, ສື່ການຮຽນ-ການສອນ ແລະ ເຟີນີເຈີໃຫ້ແກ່ ວິທະຍາໄລເຕັກນິກ-ວິຊາຊີບແຂວງຄໍາມ່ວນ, ສັບພະວິຊາ, ແຂວງສະຫັວນນະເຂດ, ມິດຕະພາບວຽງຈັນ-ຮ່າໂນ້ຍ, ປາກປ່າສັກ, ແຂວງວຽງຈັນ, ແຂວງຈໍາປາສັກ, ວິທະຍາໄລເຕັກນິກກະສິກໍາດົງຄໍາຊ້າງ.
2. ສົ່ງເສີມສັງຄົມ ແລະ ພາກສ່ວນທຸລະກິດ ປະກອບສ່ວນເຂົ້າໃນການພັດທະນາອາຊີວະສຶກສາ ແລະ ເລືອກເອົາຜູ້ປະສົບຜົນສໍາເລັດໃນສາຍວິຊາຊີບໃດໜຶ່ງ ເພື່ອເປັນຕົວແບບໂຄສະນາແນະແນວວິຊາຊີບ.
3. ປັບປຸງຮູບແບບຫຼັກສູດອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.
4. ກໍ່ສ້າງ, ບໍາລຸງຄູ ແລະ ພັດທະນາບຸກຄາລາກອນອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.
5. ປະກັນຄຸນນະພາບວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.
6. ພັດທະນາລະບົບຂໍ້ມູນ - ຂ່າວສານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.
7. ປັບປຸງການຄຸ້ມຄອງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແລະ ສ້າງນະໂຍບາຍ ແລະ ເຄື່ອງມືຄຸ້ມຄອງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.
8. ສືບຕໍ່ການຮ່ວມມືດ້ານວິຊາການກັບບັນດາອົງການຈັດຕັ້ງສາກົນຕ່າງໆ.
9. ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການ ແລະ ແຜນງານການຊ່ວຍເຫຼືອຕ່າງໆ ຈາກຕ່າງປະເທດ.

# VIII. ຂະແໜງການຍ່ອຍການສຶກສາຊັ້ນສູງ

## 8.1. ສະພາບລວມ

### 8.1.1. ວຽກງານຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໃນສົກຮຽນ 2018-2019 ກະຊວງສຶກສາທິການ ແລະ ກິລາ ຍັງສືບຕໍ່ປະຕິບັດນະໂຍບາຍ ໃຫ້ທຶນການສຶກສາແກ່ນັກຮຽນເກັ່ງ ແລະ ຜູ້ທີ່ດ້ອຍໂອກາດ ໃນສັດສ່ວນ 20% ຂອງແຜນຮັບນັກສຶກສາທັງໝົດ ແລະ ອີກ 80% ແມ່ນຜ່ານການສອບເສັງຄັດເລືອກ ແລະ ຈ່າຍຄ່າຮຽນດ້ວຍຕົນເອງ. ໃນສົກຮຽນ 2018-2019 ມີນັກສຶກສາ ທີ່ເຂົ້າຮຽນໃໝ່ໃນມະຫາວິທະຍາໄລ 4 ແຫ່ງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ແລະ ອີກ 1 ແຫ່ງ ທີ່ຂຶ້ນກັບກະຊວງສາທາລະນະສຸກ ທັງໝົດ 12.258 ຄົນ, ໃນຂະນະດຽວກັນ ມີນັກສຶກສາ ທີ່ກຳລັງສຶກສາຢູ່ທັງໝົດ 39.497 ຄົນ.

ໃນຈຳນວນນັກສຶກສາທີ່ເຂົ້າຮຽນໃໝ່ນີ້ ຖ້າແຍກຕາມກຸ່ມວິຊາຮຽນທີ່ອີງການຢູແນສໂກກຳນົດ ມີລາຍລະອຽດດັ່ງນີ້: 1) ກຸ່ມການສຶກສາ ແລະ ກິລາ ມີ 1.126 ຄົນ; 2) ກຸ່ມພາສາ ແລະ ມະນຸດສາດ ມີ 1.050 ຄົນ; 3) ກຸ່ມ ສັງຄົມສາດ ມີ 768 ຄົນ; 4) ກຸ່ມທຸລະກິດ, ການບໍລິຫານ ແລະ ກົດໝາຍ ມີ 3.570 ຄົນ; 5) ກຸ່ມ ເທັກໂນໂລຊີ ແລະ ຂໍ້ມູນຂ່າວສານ ມີ 118 ຄົນ; 6) ກຸ່ມວິທະຍາສາດ ມີ 593 ຄົນ; 7) ກຸ່ມ ວິສາວະກຳສາດ ມີ 2.653 ຄົນ; 8) ກຸ່ມກະສິກຳ ແລະ ປ່າໄມ້ ມີ 1.677 ຄົນ; 9) ກຸ່ມ ສຸຂະພາບ ແລະ ສະຫວັດດີການສັງຄົມ ມີ 592 ຄົນ ແລະ 10) ກຸ່ມການບໍລິການ ມີ 111 ຄົນ. ໃນຂະນະທີ່ນັກສຶກສາທີ່ຮຽນຈົບອອກໃນສົກຮຽນ 2018-2019 ຖ້າແຍກຕາມກຸ່ມການສຶກສາມີດັ່ງນີ້: 1) ກຸ່ມການສຶກສາ ແລະ ກິລາ ມີ 1.165 ຄົນ; 2) ກຸ່ມພາສາ ແລະ ມະນຸດສາດ ມີ 592 ຄົນ; 3) ກຸ່ມ ສັງຄົມສາດ ມີ 685 ຄົນ; 4) ກຸ່ມທຸລະກິດ, ການບໍລິຫານ ແລະ ກົດໝາຍ ມີ 2.601 ຄົນ; 5) ກຸ່ມ ເທັກໂນໂລຊີ ແລະ ຂໍ້ມູນຂ່າວສານ ມີ 74 ຄົນ; 6) ກຸ່ມວິທະຍາສາດ ມີ 480 ຄົນ; 7) ກຸ່ມ ວິສາວະກຳສາດ ມີ 1.890 ຄົນ; 8) ກຸ່ມກະສິກຳ ແລະ ປ່າໄມ້ ມີ 985 ຄົນ; 9) ກຸ່ມ ສຸຂະພາບ ແລະ ສະຫວັດດີການສັງຄົມ ມີ 219 ຄົນ ແລະ 10) ກຸ່ມການບໍລິການ ມີ 89 ຄົນ.

### 8.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

ຄຽງຄູ່ກັບການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມກັນ ໄດ້ມີການພັດທະນາຫຼັກສູດ, ສົ່ງເສີມການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການໃຫ້ແກ່ສັງຄົມ ເຮັດວຽກງານການປະກັນຄຸນນະພາບ, ໄດ້ສ້າງຂອບຂອບວຸດທິການສຶກສາຊັ້ນສູງ ແຫ່ງຊາດ, ການບັນຈຸ ແລະ ການພັດທະນາຄູ ຊຶ່ງມີບາງຜົນສຳເລັດ ທີ່ພົ້ນເດັ່ນເຊັ່ນ: ສຳເລັດການນຳໃຊ້ 45 ຫຼັກສູດ ຊຶ່ງເປັນຫຼັກສູດສ້າງໃໝ່ 38 ຫຼັກສູດ (ອະນຸປະລິນຍາ 12 ຫຼັກສູດ, ປະລິນຍາຕີ 19 ຫຼັກສູດ ຊ່ຽວຊານສອງ 1 ຫຼັກສູດ, ປະລິນຍາໂທ 5 ຫຼັກສູດ ແລະ ປະລິນຍາເອກ 1 ຫຼັກສູດ) ແລະ ຫຼັກສູດປັບປຸງ 7 ຫຼັກສູດ ( ອະນຸປະລິນຍາ 2 ຫຼັກສູດ, ປະລິນຍາຕີ 3 ຫຼັກສູດ, ລົງເລິກຂະແໜງ 1 ຫຼັກສູດ, ແລະ ປະລິນຍາໂທ 1 ຫຼັກສູດ). ນອກນັ້ນ ກໍໄດ້ຕີພິມບົດຄົ້ນຄວ້າວິທະຍາສາດລົງວາລະສານ ພາຍໃນ ແລະ ຕ່າງປະເທດ ປະຈຳປີ 2018, ລົງວາລະສານພາຍໃນຈຳນວນ 65 ບົດ, ວາລະສານຕ່າງປະເທດ ຈຳນວນ 4 ບົດ.

### 8.1.3. ການບໍລິຫານ ແລະ ຄຸ້ມຄອງ

1. ສຳເລັດການສ້າງ (ຮ່າງ) ກົດໝາຍການສຶກສາຊັ້ນສູງ ບົນພື້ນຖານການຍົກດຳລັດການສຶກສາຊັ້ນສູງ.
2. ສຳເລັດການສ້າງລະບຽບການໃຫ້ທຶນສະໜັບສະໜູນ ການຄົ້ນຄວ້າວິທະຍາສາດໃຫ້ພະນັກງານ, ຄູ-ອາຈານ ເພື່ອເຮັດການຄົ້ນຄວ້າ ພາຍໃຕ້ໂຄງການສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານການສຶກສາຊັ້ນສູງໄລຍະສອງ (SSHEP).
3. ສຳເລັດການເຈລະຈາ ແລະ ເຊັນສັນຍາກັບມະຫາວິທະຍາໄລຕ່າງປະເທດ ເພື່ອຈັດສົ່ງພະນັງານ, ຄູ-ອາຈານ ຂອງມະຫາວິທະຍາໄລ (ສປປ.ລາວ) ໄປຍົກລະດັບໃນຫຼັກສູດປະລິນຍາໂທ ແລະ ແລະ ຫຼັກສູດ ປະລິນຍາເອກ.

4. ໄດ້ມີການຮ່ວມມືກັບບັນດາອົງການຈັດຕັ້ງສາກົນຕ່າງໆ ແລະ ບັນດາມຫາວິທະຍາໄລໃນພາກພື້ນ ແລະ ສາກົນ ໃນການພັດທະນາຊັບພະຍາກອນມະນຸດ.
5. ສຳເລັດການຂໍອະນຸມັດ ຕຳແໜ່ງວິຊາການຄູສອນ ຂັ້ນອາຈານ 56 ທ່ານ, ຜູ້ຊ່ວຍ ອາຈານ 48 ທ່ານ ໃຫ້ແກ່ມະຫາວິທະຍາໄລແຫ່ງຊາດ.
6. ສຳເລັດລາຍງານດຳລັດ ວ່າດ້ວຍຕຳແໜ່ງວິຊາການຄູສອນ ຢູ່ ສະຖາບັນການສຶກສາຊັ້ນສູງ (ສະບັບປັບປຸງ);
7. ສຳເລັດຈັດກອງປະຊຸມປັບປຸງເນື້ອໃນຂໍ້ຕົກລົງ ວ່າດ້ວຍຂອບວຸດທິການສຶກສາ ແຫ່ງຊາດ.

## 8.2. ປະເດັນບັນຫາ ແລະ ສິ່ງທ້າທາຍ.

1. ການປະຕິບັດຫຼັກສູດການຮຽນ-ການສອນ ຂອງສະຖາບັນການສຶກສາຊັ້ນສູງ ບໍ່ທັນມີຄຸນນະພາບດີ ຍ້ອນຍັງປັບປຸງມາດຕະຖານຫຼັກສູດແຫ່ງຊາດໃໝ່;
2. ທິດທາງການສົ່ງເສີມໃຫ້ສະຖາບັນການສຶກສາຊັ້ນສູງສ້າງຄວາມເຂັ້ມແຂງດ້ານການເງິນ ແລະ ການເປັນເຈົ້າຕົນເອງ (Autonomous) ບໍ່ທັນຊັດເຈນເທື່ອ;
3. ການເຜີຍແຜ່ ແລະ ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດຍັງບໍ່ທັນກວ້າງຂວາງ ຍັງບໍ່ມີຜົນໄດ້ຮັບຢ່າງຈະແຈ້ງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ;
4. ການບັນຈຸ, ສັບຊ້ອນພະນັກງານບໍ່ທັນສອດຄ່ອງ ແລະ ຖືກຕ້ອງຕາມວິຊາສະເພາະທີ່ໄດ້ຮຽນມາ;
5. ການຄົ້ນຄວ້າການທຽບວຸດທິການສຶກສາ ພາຍໃນ ແລະ ຕ່າງປະເທດ ໂດຍສະເພາະການຮຽນທາງໄກ.

## 8.3. ແຜນວຽກບູລິມະສິດ ສຳລັບປີ 2020.

### 8.3.1. ຈຸດປະສົງ:

ສືບຕໍ່ພັດທະນາຂະແໜງການຍ່ອຍການສຶກສາຊັ້ນສູງ ໃຫ້ໄປຕາມແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ (2016-2020).

### 8.3.2. ຄາດໝາຍ:

1. ສູ້ຊົນໃຫ້ມີຈຳນວນນັກຮຽນທີ່ຮຽນຈົບຈາກຊັ້ນມັດທະຍົມຕອນປາຍ ໄດ້ເຂົ້າສຶກສາຕໍ່ໃນສະຖາບັນການສຶກສາຊັ້ນສູງທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 20% ທຽບໃສ່ຜູ້ທີ່ຮຽນຈົບທັງໝົດ ໃນປີ 2020, ໃນນັ້ນໃຫ້ມີແມ່ຍິງກວມ 45%;
2. ສ້າງຫຼັກສູດວິຊາສະເພາະທີ່ສອນເປັນພາສາຕ່າງປະເທດໃຫ້ໄດ້ 5 ຫຼັກສູດ;
3. ຍົກລະດັບພະນັກງານ, ຄູ-ອາຈານ ໃຫ້ໄດ້ຕາມແຜນທີ່ວາງໄວ້ (1:6:3);
4. ສະຖານການສຶກສາຊັ້ນສູງທຸກແຫ່ງ ຕ້ອງມີການປະເມີນຕົນເອງຢ່າງໜ້ອຍໜຶ່ງຄັ້ງ ຕໍ່ປີ;
5. ມີຜົນງານການຄົ້ນຄວ້າວິທະຍາສາດ ແລະ ໄດ້ຮັບການຕີພິມລົງໃນວາລະສານ ທັງພາຍໃນ ແລະ ຕ່າງປະເທດເພີ່ມຂຶ້ນ.
6. ການຄົ້ນຄວ້າການທຽບວຸດທິການສຶກສາພາຍໃນ ແລະ ຕ່າງປະເທດ ໂດຍສະເພາະການຮຽນທາງໄກ.
7. ປັບປຸງມາດຕະຖານຫຼັກສູດແຫ່ງຊາດ ໃຫ້ໄດ້ນຳໃຊ້ໃໝ່ໃນປີ 2020;

**8.3.3. ວຽກງານຈຸດສຸມ:**

1. ສືບຕໍ່ຊີ້ນຳການກໍ່ສ້າງພື້ນຖານໂຄງລ່າງຢູ່ມະຫາວິທະຍາໄລສະຫວັນນະເຂດ.
2. ກວດກາຄືນສາເຫດການເຂົ້າຮຽນຂອງນັກສຶກສາທີ່ຮຽນພາຍໃນຫຼຸດລົງ.
3. ພັດທະນາການສຶກສາຊັ້ນສູງ ໃຫ້ມີສ່ວນຮ່ວມ ລະຫວ່າງພາກ ລັດ ແລະ ເອກະຊົນ
4. ສືບຕໍ່ຝຶກອົບຮົມໃຫ້ແກ່ພະນັກງານຄຸ້ມຄອງການບໍລິຫານລັດ ຢູ່ ມະຫາວິທະຍາໄລ ຂອງລັດ.
5. ສືບຕໍ່ສົ່ງເສີມການຈັດສົ່ງພະນັກງານ, ຄູ-ອາຈານ ໄປຍົກລະດັບປະລິນຍາໂທ, ປະລິນຍາເອກ ຢູ່ພາຍໃນ ແລະ ຕ່າງປະເທດ.
6. ປັບປຸງຫຼັກສູດໃຫ້ມີຄຸນນະພາບທົ່ວສະຖານການສຶກສາຊັ້ນສູງ, ເນັ້ນໜັກການສ້າງຫຼັກສູດທີ່ເປັນທ່າແຮງ, ສ້າງຫຼັກສູດໃໝ່ ກ່ຽວກັບການພັດທະນາຜູ້ປະກອບການ ແລະ ສ້າງສູນຄວາມເປັນເລີດ,
7. ປັບປຸງເນື້ອໃນຂໍ້ຕົກລົງວ່າດ້ວຍຂອບວຸດທິການສຶກສາແຫ່ງຊາດ (ຮ່ວມກັບສູນປະກັນຄຸນນະພາບການສຶກສາ).
8. ສືບຕໍ່ ການຮ່ວມມືກັບອົງການຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

# IX. ຂະແໜງການຍ່ອຍກິລາ-ກາຍະກຳ

## 9.1 ສະພາບລວມ:

### 9.1.1 ກິລາ-ກາຍຍະກຳມວນຊົນ :

ໃນປີຜ່ານມາ ຂະແໜງການຍ່ອຍກິລາ-ກາຍະກຳ ໂດຍສະເພາະວຽກງານກິລາກາຍະກຳມວນຊົນ ໄດ້ຖືເອົາການສ້າງນິຕິກຳເປັນວຽກໜຶ່ງທີ່ສຳຄັນ ເພື່ອເປັນບ່ອນອີງໃຫ້ແກ່ການພັດທະນາວຽກງານກິລາມວນຊົນ. ດັ່ງນັ້ນ, ໃນສົກຮຽນຜ່ານມາ ກະຊວງສຶກສາທິການ ແລະ ກິລາ ໄດ້ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍເພື່ອຄຸ້ມຄອງກິລາ-ກາຍຍະກຳມວນຊົນໄດ້ທັງໝົດ 5 ສະບັບ ມີດັ່ງນີ້: 1) ຄຳແນະນຳການຈັດຕັ້ງປະຕິບັດກິດຈະກຳຫັດກາຍຍະບໍລິຫານອອກກຳລັງກາຍ, ຫຼິ້ນກິລາ ແລະ ແຂ່ງ ຂັນກິລາເພື່ອສຸຂະພາບ; 2) ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງການສະເຫຼີມສະຫຼອງ ວັນກິລາ-ກາຍຍະກຳແຫ່ງຊາດ, 3) ຂໍ້ຕົກລົງ ວ່າດ້ວຍການຈັດງານແຂ່ງຂັນກິລາຄົນພິການ ທົ່ວປະເທດ, 4) ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ກິດຈະກຳ ກິລາ-ກາຍຍະກຳມວນຊົນ ແລະ 5) ຄູ່ມື ກົດລະບຽບກະຕິກາ ກິລາ-ກາຍຍະກຳມວນຊົນ.

ຄຽງຄູ່ກັບການສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆ, ຍັງໄດ້ສົ່ງເສີມມວນຊົນທຸກເພດ ທຸກໄວເຂົ້າຮ່ວມການຫັດກາຍຍະບໍລິຫານ, ອອກກຳລັງກາຍ, ຫຼິ້ນກິລາ ແລະ ສ້າງຂະບວນການເຄື່ອນໄຫວ ຈັດກິດຈະກຳຈັດການແຂ່ງຂັນກິລາກາຍຍະກຳມວນຊົນ ປະເພດຕ່າງໆ ປະຈຳປີ, ວັນບຸນປະເພນີ, ວັນບຸນສຳຄັນຕ່າງໆຂອງຊາດ ແລະ ສາກົນ ຊຶ່ງມີມວນຊົນເຂົ້າຮ່ວມຈຳນວນ 134.794 ຄົນ, ຍິງ 29.556 ເພີ່ມຂຶ້ນ 2% (ທຽບສະໄໝ ສົກຮຽນ 2018-2019) ເທົ່າກັບ 24% ຂອງພົນລະເມືອງ ປີ 2019. ນອກນັ້ນ, ກໍຍັງໄດ້ສົ່ງເສີມການສ້າງຕັ້ງສະໂມສອນເຄື່ອນໄຫວກິລາ-ກາຍຍະກຳມວນຊົນໃນຂັ້ນບ້ານ, ກຸ່ມບ້ານ ແລະ ເມືອງ.

ເພື່ອເຮັດໃຫ້ວຽກງານກິລາມວນຊົນ ໂດຍສະເພາະແມ່ນວຽກງານກິລາສຳລັບຄົນພິການ ໄດ້ຮັບການປັບປຸງ ແລະ ພັດທະນາດີຂຶ້ນ, ພາກສ່ວນດັ່ງກ່າວຍັງໄດ້ມີການຮ່ວມມືກັບ ຄະນະກຳມະການພາຣາແລມປິກສາກົນ (IPC) ແລະ ບັນດາປະເທດເພື່ອນມິດຕ່າງໆ ທັງໃນພາກພື້ນ ແລະ ສາກົນ ໃນການຝຶກອົບຮົມ ແລະ ຝຶກຊ້ອມນັກກິລາປະເພດຕ່າງໆ. ຜົນໄດ້ຮັບຈາກການຮ່ວມມືດັ່ງກ່າວ ເຮັດໃຫ້ ສປປ ລາວ ສາມາດນຳສົ່ງນັກກິລາສຳລັບຄົນພິການເຂົ້າຮ່ວມລາຍການແຂ່ງຂັນຕ່າງໆ ຕາມການເຊີນ ແລະ ພັນທະ ເຊັ່ນ: ໄດ້ ສົ່ງນັກກິລາແລ່ນ-ລານຄົນພິການທີມຊາດລາວເຂົ້າຮ່ວມແຂ່ງຂັນ ກິລາແລ່ນ-ລານ ຄົນພິການລະດັບໂລກ ປີ 2019 (World Para Athletic Grand Prix Beijing 2019) ທີ່ປັກກິ່ງ ສປ ຈີນ; ເຂົ້າຮ່ວມແຂ່ງຂັນ ກິລາລອຍນ້ຳຄົນພິການ ລະດັບໂລກ ປີ 2019 (Singapore World Para Swimming World Series 2019) ທີ່ປະເທດສິງກະໂປ; ແລະ ເຂົ້າຮ່ວມແຂ່ງ ຂັນກິລາລົດຖີບຄົນພິການ ລະດັບທະວີບອາຊີ ປະຈຳປີ 2019 ( 2019 Asian Road Cycling Championships 2019 ) ທີ່ປະເທດ Uzbe kistan.

### 9.1.2 ກິລາ-ກາຍຍະກຳໃນໂຮງຮຽນ :

ເພື່ອເປັນການສົ່ງເສີມໃຫ້ນັກຮຽນ-ນັກສຶກສາ ມີຄວາມຮັກມັກກິລາ ແລະ ເພື່ອເປັນການຊອກຫານັກກິລາຮຸ່ນສືບທອດ ພາກສ່ວນທີ່ກ່ຽວຂ້ອງຍັງໄດ້ມີການຈັດການແຂ່ງຂັນກິລານັກຮຽນ ລະຫວ່າງເມືອງຕໍ່ເມືອງ ແລະ ແຂວງຕໍ່ແຂວງ, ລວມທັງໄດ້ຄັດເລືອກ ແລະ ຝຶກຊ້ອມນັກຮຽນຜູ້ທີ່ມີພອນສະຫວັນ ເພື່ອເຂົ້າຮ່ວມລາຍການ ແຂ່ງຂັນຕ່າງໆ ເຊັ່ນ: ໄດ້ເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ 10 ທີ່ປະເທດມາເລເຊຍ, ຊຶ່ງສາມາດຍາດໄດ້ 3 ຫຼຽນທອງ ຈັດຢູ່ອັນດັບທີ 8 ຂອງ 10 ປະເທດເຂົ້າຮ່ວມ.

**9.1.3 ກິລາລະດັບສູງ :**

ເພື່ອເຮັດໃຫ້ວຽກງານກິລາລະດັບສູງ ໄດ້ຮັບການພັດທະນາດີຂຶ້ນເພື່ອລະກ້າວເພື່ອໃຫ້ສາມາດແຂ່ງຂັນ ແລະ ທຽບທັນກັບກິລາຂອງພາກພື້ນ ແລະ ສາກົນໄດ້, ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ກໍໄດ້ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງ ໂດຍສະເພາະແມ່ນສະໜາມກິລາປະເພດຕ່າງໆ ໃຫ້ສາມາດໃຊ້ງານໄດ້ເປັນປົກກະຕິ ເຊັ່ນ: ໄດ້ປັບປຸງ ແລະ ສ້ອມ ແປງເດີ່ນກິລາໃນຮົ່ມສະໜາມກິລາແຫ່ງຊາດ ( ຫຼັກ 16 ) ຄື : ສະລອຍນໍ້າ, ລະບົບໄຟຟ້າ, ນໍ້າປະປາ, ປະຕູ, ປ່ອງຢ້ຽມ ແລະ ສະຖານທີ່ກາງແຈ້ງໃຫ້ມີຄວາມສະອາດງາມຕາ; ໄດ້ປັບປຸງ ແລະ ສ້ອມແປງອາຄານສະຖານທີ່ ສູນຝຶກກິລາແຫ່ງຊາດ ( ສີເກີດ ) ແລະ ໂຮງຮຽນພອນສະຫວັນກິລາ-ກາຍຍະກຳ ຄື: ອາຄານຮຽນ, ຫ້ອງຮຽນ, ຫໍພັກ, ຫ້ອງອາຫານ ແລະ ສະໜາມຝຶກຊ້ອມກິລາໃນຮົ່ມ ແລະ ສະຖານທີ່ກາງແຈ້ງໃຫ້ມີຄວາມສະອາດງາມຕາ; ແລະ ໄດ້ສົມທົບກັບສະຫະພັນກິລາ ເບສບອນແຫ່ງຊາດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງສະໜາມກິລາເບສບອນ ຢູ່ທີ່ສະໜາມກິລາແຫ່ງຊາດ (ຫຼັກ16, ໂດຍທຶນການຊ່ວຍເຫຼືອລ້າທະນາຄານດີຈີປີ ສ.ເກົາຫຼີ.

ນອກຈາກການປັບປຸງພື້ນຖານໂຄງລ່າງແລ້ວ, ໃນປີຜ່ານມາ ຍັງໄດ້ອະນຸມັດສ້າງຕັ້ງສະຫະພັນກິລາແຫ່ງຊາດໃໝ່ ແລະ ປັບປຸງ ຄືນຈຳນວນ 43 ສະຫະພັນ ຄື:

- ສະຫະພັນກິລາແຫ່ງຊາດ ທີ່ໄດ້ຮັບການສ້າງຕັ້ງໃໝ່ ມີຈຳນວນ 3 ສະຫະພັນຄື : 1) ສະຫະພັນກິລາຄິກບອກຊິງ (Kick Boxing) ແຫ່ງຊາດ , 2) ສະຫະພັນກິລາອີສະປອດແຫ່ງຊາດ ແລະ 3) ສະຫະພັນກິລາເບສບອນ ແຫ່ງຊາດ.
- ສະຫະພັນກິລາແຫ່ງຊາດທີ່ໄດ້ຮັບການປັບປຸງໃໝ່ ມີຈຳນວນ 5 ສະຫະພັນຄື: 1) ສະຫະພັນກິລາຍົກນໍ້າໜັກແຫ່ງຊາດ, 2) ສະຫະພັນກິລາເທຄວັນໂດແຫ່ງຊາດ, 3) ສະຫະພັນກິລາກະຕໍ້ແຫ່ງຊາດ, 4) ສະຫະພັນກິລາມວຍລາວແຫ່ງຊາດ ແລະ 5) ສະຫະພັນກິລາກາຣາເຕໂດແຫ່ງຊາດ.

ຄຽງຄູ່ກັບການປັບປຸງໂຄງລ່າງພື້ນຖານ ແລະ ປັບປຸງສະຫະພັນກິລາຕ່າງໆແລ້ວ, ຍັງໄດ້ເອົາໃຈໃສ່ ກໍ່ສ້າງຄູຝຶກ ກຳມະການຕັດສິນອີກດ້ວຍ ເຊັ່ນ: ໄດ້ຝຶກອົບຮົມຄູຝຶກກິລາບານເຕະ ແຕ່ລະ ລະດັບດັ່ງນີ້ :

- ລະດັບ C ຂອງ AFC 1 ຄັ້ງ ມີຜູ້ເຂົ້າຮ່ວມ 25 ທ່ານ ເປັນຍິງ 2 ທ່ານ;
- ລະດັບ A ຂອງ AFC 1 ຄັ້ງ ມີຜູ້ເຂົ້າຮ່ວມ 24 ທ່ານ ເປັນຍິງ 2 ທ່ານ;
- ລະດັບ D ຂັ້ນພື້ນຖານ 8 ແຂວງພາກເໜືອ ມີຜູ້ເຂົ້າຮ່ວມ 240 ຄົນ;
- ໄດ້ຝຶກອົບຮົມກຳມະການຕັດສິນບານເຕະ ຂັ້ນແຂວງ 8 ແຂວງພາກເໜືອ ມີຜູ້ເຂົ້າຮ່ວມ 240 ຄົນ.

**ສ່ວນຜົນການຈັດການແຂ່ງຂັນ ແລະ ເຂົ້າຮ່ວມແຂ່ງຂັນຢູ່ພາຍໃນ ແລະ ຕ່າງປະເທດມີດັ່ງນີ້:**

1) ໄດ້ສົມທົບກັບສະຫະພັນກິລາແຫ່ງຊາດ ຈັດການແຂ່ງຂັນກິລາລະດັບນາໆຊາດ, ແຂ່ງຂັນກິລາປະຈຳປີ, ຊີງຂັນຜູ້ນຳ ພັກ-ລັດ ແລະ ສະຫຼອງວັນສຳຄັນຂອງຊາດ ຈຳນວນ 60 ຄັ້ງ ມີ 26 ປະເພດກິລາຄື : ກິລາມວຍສາກົນ, ເປຕັງ, ລັກບີ້, ລົດຖີບ, ເຮືອຊ່ວງປະເພນີ, ແລ່ນ-ລານ, ດອກປີກໄກ່, ມວຍລາວ, ມວຍປໍ້າ, ຍິງປືນ, ລົດໃຫຍ່ ເບສບອນ, ບານເຕະ, ເທຄວັນໂດ, ລົດຖີບ, ຢູໂດ, ວູຊູ, ກ໋ອຟ, ປິ່ງປ່ອງ, ອີສະປອດ, ເທັນນິດ, ກາຣາເຕໂດ, ລອຍນໍ້າ, ກະຕໍ້, ບານສົ່ງ ແລະ ເພາະກາຍ ຜູ້ເຂົ້າຮ່ວມທັງໝົດ 2.500 ຄົນ;
2) ນັກຮຽນຂອງໂຮງຮຽນພອນສະຫວັນກິລາ-ກາຍຍະກຳເຂົ້າຮ່ວມການແຂ່ງຂັນພາຍໃນປະເທດ ຈຳນວນ 7 ຄັ້ງ ຜູ້ເຂົ້າຮ່ວມ 142 ເທື່ອຄົນ, ສາມາດຍາດໄດ້ 59 ຫຼຽນຄຳ, 49 ຫຼຽນເງິນ ແລະ 45 ຫຼຽນທອງ.
3) ໄດ້ສົມທົບກັບສະຫະພັນກິລາແຫ່ງຊາດ ແລະ ຄະນະກຳມະການໂອແລມປິກແຫ່ງຊາດລາວ ສົ່ງຄະນະນຳ, ຄູຝຶກ ກຳມະການຕັດສິນ ແລະ ນັກກິລາທີມຊາດລາວ ເຂົ້າຮ່ວມການແຂ່ງຂັນຊີງແຊ້ມນາໆຊາດ ຕາມການເຊື້ອເຊີນ ຈຳນວນ 71 ຄັ້ງ, ມີ 26 ປະເພດກິລາ ມີຜູ້ເຂົ້າຮ່ວມທັງໝົດ 851 ເທື່ອຄົນ ສາມາດຍາດໄດ້ 17 ຫຼຽນຄຳ, 21 ຫຼຽນເງິນ ແລະ 31 ຫຼຽນທອງ. ພິເສດແມ່ນ ຄະນະນັກກິລາບານເຕະຍິງ ລຸ້ນອາຍຸ 19 ປີ ສາມາດຍາດໄດ້ 1 ຫຼຽນຄຳ ຮ່ວມກັບປະເທດເຈົ້າພາບ ທີ່ປະເທດບັງກາລາເດດ, ຫຼຽນເງິນກິລາບານເຕະຍິງ ລາຍການ U-15

AFF ທີ່ປະເທດໄທເປັນເຈົ້າພາບ ແລະ ປະເພດກິລາແລ່ນ-ລານ ເຂົ້າຮ່ວມການແຂ່ງຂັນໃນລາຍການໄທແລນ ໂອເພັນ 2019 ສາມາດຍາດໄດ້ 1 ຫຼຽນຄຳ ຈາກລາຍການແລ່ນຂ້າມຮົ້ວ 110 ແມັດຊາຍ, ຫຼຽນເງິນທີມຍິງ 4x100 ແມັດ ແລະ ຫຼຽນທອງແລ່ນຂ້າມຮົ້ວຍິງ 100 ແມັດ,

4) ນັກຮຽນກິລາຂອງ ໂຮງຮຽນພອນສະຫວັນກິລາ-ກາຍຍະກຳ ເຂົ້າຮ່ວມແຂ່ງຂັນລະດັບນາໆຊາດ 7 ຄັ້ງ ມີຈຳນວນ ນັກຮຽນກິລາເຂົ້າຮ່ວມ 22 ນ້ອງ, ຍາດໄດ້ 3 ຫຼຽນເງິນ, 5 ຫຼຽນທອງ.

### 9.1.4 ວຽກງານກິລາໂອແລມປິກ :

**1) ວຽກກິດຈະກຳຂອງຫ້ອງການເລຂາທິການຄະນະກຳມະການໂອແລມປິກແຫ່ງຊາດລາວ:**

1 ໄດ້ເຜີຍແຜ່ຜັນຂະຫຍາຍເນື້ອໃນຈິດໃຈ ແຜນຍຸດທະສາດການພັດທະນາກິລາ-ກາຍຍະກຳ ແຕ່ນີ້ຮອດປີ 2020 ຜູ້ບໍລິຫານ ແລະ ວິຊາການກິລາ-ກາຍຍະກຳຂັ້ນທ້ອງຖິ່ນໃຫ້ບັນດາແຂວງ ແລະ ເມືອງໃນຂອບເຂດທົ່ວປະເທດ.

2 ສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານ, ວຽກງານຄຸ້ມຄອງກິລາບັນດາແຂວງ, ເມືອງ ແລະ ບັນດາສະຫະພັນກິລາແຫ່ງຊາດ ໃນທົ່ວປະເທດ.

3 ສຳເລັດໃນການ ຈັດຝຶກອົບຮົມຫຼັກການ ໃນການພົວພັນວຽກງານກິລາ-ກາຍຍະກຳລະດັບພາກພື້ນ, ອານຸພາກພື້ນ ແລະ ສາກົນ ໃຫ້ແກ່ຜູ້ບໍລິຫານ ແລະ ວິຊາການ ຢູ່ຂັ້ນທ້ອງຖິ່ນບັນດາເມືອງ ຂອງແຂວງສາລະວັນ, ເຊກອງ, ຈຳປາສັກ ແລະ ອັດຕະປື ມີຈຳນວນພົນເຂົ້າຮ່ວມທັງໝົດ 42 ຄົນ, ຍິງ 12 ຄົນ;

4 ສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການ ຜູ້ຮັບຜິດຊອບວຽກງານກິລາ-ກາຍຍະກຳຂັ້ນທ້ອງຖິ່ນ.

**2) ວຽກກິດຈະກຳເຄື່ອນໄຫວຮ່ວມມືກັບຕ່າງປະເທດ :**

1 ຕ້ອນຮັບຄະນະຜູ້ແທນຈາກກົມໃຫຍ່ກິລາ, ມະຫາວິທະຍາໄລກິລາໂຮ່ຈິມິ່ນ, ຄະນະກຳມະການ ໂອແລມປິກ ສສ ຫວຽດນາມ, ໄທ, ມາເລເຊຍ ແລະ ອິນໂດເນເຊຍ ທີ່ມາຢ້ຽມຢາມ ແລະ ແລກປ່ຽນບົດຮຽນກ່ຽວກັບການພັດທະນາກິລາ-ກາຍຍະກຳ ມີ 11 ຄັ້ງ;

2 ຄະນະຫ້ອງການ ແລະ ວິຊາການ ໄດ້ໄປເຄື່ອນໄຫວແລກປ່ຽນບົດຮຽນ ຢູ່ປະເທດມາເລເຊຍ, ໄທ, ອິນໂດເນເຊຍ, ສສ ຫວຽດນາມ ( ຮ່າໂນ້ຍ ແລະ ດາໜັງ, ບູໄນ ແລະ ມຽນມາ ມີ 15 ຄັ້ງ)

**3) ວຽກງານຄະນະກຳມະການໂອແລມປິກ (ຄອລ)**

1 ສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານກິລາຂອງແຕ່ລະສະຫະພັນໂຄງການໂອແລມປິກສາກົນສົກຮຽນ 2017-2018 ( ປະເພດໂອແລມປິກໄດ້ 10 ຄັ້ງ ).

2 ສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານງານສະຫະພັນກິລາແຫ່ງຊາດສົກຮຽນ 2018 ມີຜູ້ເຂົ້າຮ່ວມທັງໝົດ 255 ທ່ານ, ຍິງ 90 ທ່ານ;

3 ສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານກິລາຂອງແຕ່ລະສະຫະພັນໂຄງການໂອແລມປິກສາກົນໃນປີ 2018 ມີຜູ້ເຂົ້າຮ່ວມທັງໝົດ 367 ທ່ານ, ຍິງ 100 ທ່ານ;

4 ຊ່ວຍພັດທະນານັກກິລາຈຳນວນໜຶ່ງກຽມເຂົ້າຮ່ວມແຂ່ງຂັນຕ່າງປະເທດປະກອບມີ :

* ຊຸກຍູ້ການຝຶກແອບກຽມໂອແລມປິກເກມ 2020 ປະກອບມີນັກກິລາແລ່ນ-ລານ 2 ຄົນ, ລອຍນ້ຳ 2 ຄົນ ແລະ ຢູໂດ 1 ຄົນ;
* ຊຸກຍູ້ການຝຶກແອບກຽມເຂົ້າຮ່ວມ Youth Olympic Games ປະກອບມີນັກກິລາແລ່ນ-ລານ 2 ຄົນ, ລອຍນ້ຳ 1 ຄົນ ແລະ ດອກປີກໄກ່ 1 ຄົນ;

5 ຊ່ວຍທຶນຝຶກແອບໃຫ້ນັກກິລາເຂົ້າຮ່ວມເອຊຽນເກມ ຄັ້ງທີ 18 ທີ່ປະເທດອິນໂດເນເຊຍ ປະກອບມີ 8 ປະເພດກິລາ, ລວມທັງໝົດ 28 ຄົນ, ມີກິລາແລ່ນ-ລານ, ຢູໂດ, ເທຄວັນໂດ, ກະຕໍ້, ປັ່ນຈັກສີລັດ, ວູຊູ, ກາຣາເຕໂດ ແລະ ລົດຖີບ;

6 ຄະນະກຳມະການໂອແລມປິກແຫ່ງຊາດ ໄດ້ສົມທົບກັບກົມວິຊາການກິລາ ໃນການຕິດຕາມການຝຶກແອບນັກກິລາ ທີ່ໄດ້ຮັບທຶນຈາກໂອແລມປິກສາກົນ (OS) ຈຳນວນ 5 ທຶນ. ທີ່ຈະເຂົ້າຮ່ວມໂອແລມ

ປັກໂຕກຽວ 4 ທີມ, ກຽມເຂົ້າຮ່ວມງານໂອແລມປິກຊາວໜຸ່ມ ແລະ 28 ທີມ ຝຶກແອບກຽມ ເຂົ້າຮ່ວມເອຊຽນເກມ;

## 9.2 ບັນຫາ ແລະ ສິ່ງທ້າທາຍ :

### 9.2.1 ກິລາ-ກາຍຍະກຳມວນຊົນ :

1) ການຈັດຕັ້ງປະຕິບັດ ແຜນພັດທະນາກິລາກາຍຍະກຳມວນຊົນ ຍັງບໍ່ທັນບຸກທະລຸໄດ້ຕາມຄາດໝາຍຕົວຊີ້ບອກທີ່ລັດຖະບານໄດ້ວາງໄວ້, ຍັງບໍ່ທັນໄດ້ເຂົ້າສູ່ລວງເລິກຕົວຈິງຢ່າງກວ້າງຂວາງ ໂດຍສະເພາະການລົງຕິດຕາມ ຊຸກຍູ້, ແລະ ເກັບກຳຂໍ້ມູນຍັງບໍ່ທັນໄດ້ມີຖານຂໍ້ມູນທີ່ເປັນມາດຕະຖານ ເພື່ອເຊື່ອມຕໍ່ໃຫ້ເຂົ້າກັບຖານຂໍ້ມູນຂອງສູນສະຖິຕິ ກະຊວງສຶກສາທິການ ແລະ ກິລາ.
2) ການເກັບກຳຂໍ້ມູນ-ສະຖິຕິວຽກງານກິລາ-ກາຍຍະກຳມວນຊົນ ຢູ່ຂັ້ນທ້ອງຖິ່ນຍັງຈັດຕັ້ງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ.
3) ວຽກງານກິລາ-ກາຍຍະກຳມວນຊົນ ຢູ່ເຂດຫ່າງໄກສອກຫຼີກ ຍັງຂາດດ້ານນິຕິກຳ, ດ້ານອຸປະກອນຮັບໃຊ້ໃນການເຄື່ອນໄຫວກິລາ-ກາຍຍະກຳມວນຊົນ.
4) ການຊ່ວຍເຫຼືອ, ການປະກອບສ່ວນຂອງບໍລິສັດ, ຫ້າງຮ້ານ ແລະ ຂອງຊຸມຊົນ, ສັງຄົມ ຍັງມີຂອບເຂດຈຳກັດ. ການສະໜອງງົບປະມານຂອງຂະແໜງກິລາ-ກາຍຍະກຳມວນຊົນຂັ້ນແຂວງ, ຂັ້ນນະຄອນຫຼວງ ແລະ ໜ່ວຍງານກິລາ-ກາຍຍະກຳ ຂັ້ນເມືອງ, ເທດສະບານ, ນະຄອນ ຍັງຈຳກັດ ບໍ່ໄປຕາມແຜນຍຸດທະສາດກິລາກາຍຍະກຳ ແລະ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020) ທີ່ລັດຖະບານໄດ້ມອບໝາຍໃຫ້.

### 9.2.2 ກິລາ-ກາຍຍະກຳໃນໂຮງຮຽນ :

1) ບັນຫາທີ່ພົບໃນການກະກຽມຈັດການແຂ່ງຂັນ ກິລານັກຮຽນມັດທະຍົມສຶກສາທົ່ວປະເທດເຫັນວ່າ ມີຄວາມຫຍຸ້ງຍາກທາງດ້ານງົບປະມານຫຼາຍ ໂດຍສະເພາະແມ່ນງົບປະມານການກໍ່ສ້າງສະໜາມເປີດ-ປິດ ບໍ່ສາມາດຕອບສະໜອງໃຫ້ບໍລິສັດທີ່ຮັບເໝົາກໍ່ສ້າງໄດ້ ເຮັດໃຫ້ການດຳເນີນການກໍ່ສ້າງບໍ່ຕໍ່ເນື່ອງ.
2) ບັນຫາທີ່ພົບໃນການເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນ ດ້ານການກະກຽມເຂົ້າຮ່ວມແຂ່ງຂັນມີໄລຍະສັ້ນ, ການເກັບຕົວນັກກິລາເຂົ້າສູນໃຊ້ເວລາພຽງ 1-2 ເດືອນເທົ່ານັ້ນ, ນັກກິລາສ່ວນຫຼາຍແມ່ນນັກກິລາໜ້າໃໝ່ຂາດປະສົບການ ສ່ວນຫຼາຍເຂົ້າຮ່ວມແຂ່ງຂັນໄດ້ພຽງຄັ້ງດຽວ ຍ້ອນວ່າອາຍຸກາຍເກນ, ການຕອບສະໜອງດ້ານງົບປະມານພົບຄວາມຫຍຸ້ງຍາກ, ຊັກຊ້າບໍ່ທ່ວງທັນກັບການຄັດເລືອກ ແລະ ການເກັບຕົວຝຶກຊ້ອມຂອງນັກກິລາ.
3) ການຈັດງານແຂ່ງຂັນກິລາ ຢູ່ບາງທ້ອງຖິ່ນຍັງບໍ່ທັນເປັນຂະບວນໃຫຍ່ ແລະ ກວ້າງຂວາງ ເນື່ອງຈາກງົບປະມານຮັບໃຊ້ບໍ່ພຽງພໍ, ບໍ່ສາມາດຄັດເລືອກ ແລະ ຕີລາຄາໄດ້ພອນສະຫວັນທີ່ແທ້ຈິງຂອງນັກຮຽນຄື: ຜູ້ໜຶ່ງຕ້ອງຫຼິ້ນກິລາ ຫຼື ສິລະປະໄດ້ປະເພດລະໜຶ່ງຢ່າງ.

### 9.2.3 ກິລາລະດັບສູງ :

1) ການຄຸ້ມຄອງສະໜາມກິລາລະດັບຊາດ ຍັງບໍ່ມີປະສິດທິຜົນເທົ່າທີ່ຄວນ, ຍ້ອນຍັງຂາດບັນດານິຕິກຳຄຸ້ມຄອງ ແລະ ໜ່ວຍງານສະເພາະທີ່ຈະຮັບຜິດຊອບໂດຍກົງ;
2) ການຈັດຕັ້ງປະຕິບັດນິຕິກຳທີ່ມີແລ້ວ ຍັງບໍ່ທັນເຂັ້ມງວດ, ເຮັດໃຫ້ການເຄື່ອນໄຫວກິລາພົບຂໍ້ຫຍຸ້ງຍາກ ແລະ ເກີດປັນຫາຫຼາຍດ້ານ;
3) ຂາດເຂີນງົບປະມານຮັບໃຊ້ບັນດາກິດຈະກຳທີ່ກຳນົດໄວ້ ໃນວຽກງານຈຸດສຸມ 5 ປີ (2016-2020);
4) ງົບປະມານຮັບໃຊ້ການກໍ່ສ້າງ ແລະ ສ້ອມແປງຫໍພັກ, ຫ້ອງຮຽນ, ສະໜາມກິລາໃນຮົ່ມ ແລະ ກາງແຈ້ງ ແລະ ເງິນຮັບໃຊ້ບໍລິຫານຂອງບັນດາສະຫະພັນກິລາແຫ່ງຊາດ ຍັງມີຈຳນວນຈຳກັດ.

### 9.2.4 ວຽກງານກິລາໂອແລມປິກ :

1) ຜ່ານການເຜີຍແຜ່ກົດໝາຍວ່າດ້ວຍກິລາ-ກາຍຍະກຳ (ສະບັບປັບປຸງ), ຍຸດທະສາດການພັດທະນາກິລາກາຍຍະກຳຮອດປີ 2020 ຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ເຂົ້າໃຈ ແຕ່ມີຂໍ້ຈຳກັດໃນການຈັດຕັ້ງປະຕິບັດ ເນື່ອງຈາກວ່າ ຄາດໝາຍ ແລະ ຕົວຊີ້ວັດບາງອັນແມ່ນສູງເກີນໄປ;
2) ຄະນະນຳຂັ້ນທ້ອງຖິ່ນ, ຂັ້ນເມືອງ ແລະ ຂັ້ນແຂວງ ຍັງບໍ່ທັນເຂົ້າໃຈໃນວຽກງານການພັດທະນາກິລາກາຍຍະກຳເທົ່າທີ່ຄວນ;
3) ສະຫະພັນກິລາແຫ່ງຊາດບາງສະຫະພັນ ໂຄງຮ່າງການຈັດຕັ້ງຍັງບໍ່ທັນສົມບູນ, ຂາດຄວາມຊຳນານ ໃນການບໍລິຫານ, ຂາດພະນັກງານປະຈຳການ ແລະ ພະນັກງານຍັງຂາດຄວາມຮູ້ທາງດ້ານພາສາຕ່າງປະເທດ, ການຍາດແຍ່ງເອົາທຶນຊ່ວຍເຫຼືອຈາກສາກົນເພື່ອມາພັດທະນາກິລາ-ກາຍຍະກຳຍັງບໍ່ໄດ້ເທົ່າທີ່ຄວນ.

## 9.3 ແຜນວຽກບູລິມະສິດ ສຳລັບປີ 2020:

### 9.3.1 ກິລາ-ກາຍຍະກຳມວນຊົນ :

1) ສືບຕໍ່ສົ່ງເສີມມວນຊົນທຸກເພດ-ໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ອອກກຳລັງກາຍ, ຫຼິ້ນກິລາ ແລະ ສ້າງຂະບວນການ ເຄື່ອນໄຫວກິດຈະກຳ ຈັດການແຂ່ງຂັນກິລາກາຍຍະກຳມວນຊົນປະເພດຕ່າງໆ ປະຈຳປີ, ວັນບຸນປະເພນີ, ວັນບຸນສຳຄັນຕ່າງໆຂອງຊາດ ແລະ ສາກົນ ໃຫ້ບັນລຸໄດ້ 26% ຂອງພົນລະເມືອງລາວໃນຂອບເຂດທົ່ວປະເທດ.
2) ສືບຕໍ່ສົ່ງເສີມການສ້າງຕັ້ງສະໂມສອນເຄື່ອນໄຫວກິລາກາຍຍະກຳມວນຊົນ ໃນຂັ້ນບ້ານ, ກຸ່ມບ້ານ, ເມືອງ ໃຫ້ບັນລຸໄດ້ 24% ໃນທົ່ວປະເທດ;
3) ສືບຕໍ່ສົ່ງເສີມໃຫ້ຄອບຄົວຫັດກາຍຍະບໍລິຫານ, ອອກກຳລັງກາຍ, ຫຼິ້ນກິລາກາຍຍະກຳໃຫ້ ບັນລຸໄດ້ 8% ຂອງຄອບຄົວໃນທົ່ວປະເທດ;
4) ສືບຕໍ່ສົ່ງເສີມຄົນພິການໃຫ້ອອກມາ ຫັດກາຍຍະບໍລິຫານ, ອອກກຳລັງກາຍ, ຫຼິ້ນກິລາ ແລະ ເຂົ້າຂະບວນການເຄື່ອນໄຫວກິດຈະກຳຈັດການແຂ່ງຂັນກິລາກາຍຍະກຳຄົນພິການທົ່ວປະເທດໃຫ້ບັນລຸໄດ້ 8% ຂອງຄົນພິການໃນທົ່ວປະເທດ;
5) ສືບຕໍ່ ບຳລຸງ ຍົກລະດັບຜູ້ບໍລິຫານ, ຄູຝຶກ, ກຳມະການຕັດສິນ, ແພດ ແລະ ນັກກິລາພາຍໃນປະເທດ ແລະ ຕ່າງປະເທດ ຈຳນວນ 10 ປະເພດກິລາ.
6) ສືບຕໍ່ ພົວພັນຮ່ວມມືກັບ ຄະນະກຳມະການພາຣາແລມປິກ ປະເທດ ອັງກິດ (England) ຊ່ວຍເຫຼືອ ຄູຝຶກ ຜູ້ຊ່ວຍຄູຝຶກ ແລະ ນັກກິລາຄົນພິການ ເຂົ້າຮ່ວມແຂ່ງຂັນ ກິລາລອຍນ້ຳຄົນພິການ ຄັດເລືອກ (Qualifie) ທີ່ປະເທດອັງກິດ;
7) ສືບຕໍ່ ການພົວພັນຮ່ວມມືກັບ ມູນລະນິທິ ເຊວຊີ ເອັຟຊີ (CHELSEA FC) ຈາກປະເທດອັງກິດ ແລະ ສະ ຖານທູດອັງກິດ ປະຈຳ ສປປ ລາວ ໃຫ້ການຊ່ວຍເຫຼືອທາງດ້ານ ຄູຝຶກກິລາບານເຕະຄົນພິການ, ອຸປະກອນຈຳນວນໜຶ່ງ ພ້ອມທັງງົບປະມານ ໃນການປັບປຸງກໍ່ສ້າງພື້ນຖານໂຄງລ່າງ;

8) ສືບຕໍ່ ພົວພັນຮ່ວມມືກັບ ເມືອງ ອິເຊະ (ISE) ແຂວງ ມິເອະ (MIE) ປະເທດຍີ່ປຸ່ນ (Japan) ກ່ຽວກັບພິທີລົງນາມບົດບັນທຶກຄວາມເຂົ້າໃຈ (MOU) ການເຂົ້າສູນຝຶກຊ້ອມ ກິລາແລ່ນ-ລານ ຄົນພິການ ສົກຮຽນ 2019-2020 ທີ່ປະເທດ ຍີ່ປຸ່ນ;
9) ສືບຕໍ່ ພົວພັນຮ່ວມມືກັບ ບ້ານ ອິຕາເຕະ (Iitate) ແຂວງ ໂຊມະ (Soma) ປະເທດຍີ່ປຸ່ນ (japan) ກ່ຽວກັບພິທີລົງນາມບົດບັນທຶກຄວາມເຂົ້າໃຈ (MOU) ການເຂົ້າສູນຝຶກຊ້ອມ ກິລາລອຍນໍ້າ ຄົນພິການ ສົກຮຽນ 2019-2020 ທີ່ປະເທດ ຍີ່ປຸ່ນ;
10) ສືບຕໍ່ ພົວພັນຮ່ວມມືກັບ ເບບປຸ (Beppu) ແຂວງ ໂອອິຕະ (Oita) ປະເທດຍີ່ປຸ່ນ (Japan) ກ່ຽວກັບພິທີລົງນາມບົດບັນທຶກຄວາມເຂົ້າໃຈ (MOU) ການເຂົ້າສູນຝຶກຊ້ອມ ກິລາຍົກນໍ້າໜັກຄົນພິການ ສົກຮຽນ 2019-2020 ທີ່ປະເທດ ຍີ່ປຸ່ນ;
11) ສືບຕໍ່ ພົວພັນຮ່ວມມືລະຫວ່າງ ກົມກິລາ-ກາຍຍະກຳມວນຊົນ, ກະຊວງສຶກສາທິການ ແລະ ກິລາ ກັບສະຖານທູດຍີ່ປຸ່ນ ປະຈຳ ສປປ ລາວ ໃຫ້ທຶນຊ່ວຍເຫຼືອດ້ານອຸປະກອນກິລາຍົກນໍ້າໜັກກິລາຄົນພິການ; ກິລາບານເຕະຄົນພິການ ແລະ ກິລາໂກນບານ ສົກຮຽນ 2019-2020.

### 9.3.2 ກິລາ-ກາຍຍະກຳໃນໂຮງຮຽນ :

1) ສືບຕໍ່ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງສາລະວັນ ກະກຽມງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ 7.
2) ເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ 11 ທີ່ ປະເທດອິນໂດເນເຊຍ ໃນໄລຍະວັນທີ 17-25 ກໍລະກົດ 2019 ແລະ ສືບຕໍ່ກະກຽມເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນຄັ້ງທີ 12 ທີ່ປະເທດຟີລິບປິນໃນປີ 2020.
3) ຄົ້ນຄວ້າຂຽນໂຄງການກະກຽມສະເໜີຮັບເປັນເຈົ້າພາບກິລານັກຮຽນອາຊຽນ ຄັ້ງທີ 16 ປີ 2024.
4) ຊຸກຍູ້ສົ່ງເສີມ ບັນດາແຂວງສ້າງຂະບວນການເຄື່ອນໄຫວກິດຈະກຳແຂ່ງຂັນພະລະສຶກສາ-ກິລາໃນໂຮງຮຽນໃນລະດັບຕ່າງໆທັງພາຍໃນ ແລະ ຕ່າງປະເທດ.
5) ສົ່ງເສີມການສ້າງສະໂມສອນກິລາ-ກາຍຍະກຳ ໃນໂຮງຮຽນສາມັນສຶກສາ ທັງພາກລັດ ແລະ ເອກະຊົນ.
6) ລົງສຳຫຼວດ ແລະ ເກັບກຳສະຖິຕິສະໜາມກິລາໃນໂຮງຮຽນມັດທະຍົມສຶກສາທົ່ວປະເທດ.
7) ສ້າງຄວາມເຂັ້ມແຂງດ້ານການເປັນຄູຝຶກ ແລະ ເປັນກຳມະການຕັດສິນໃຫ້ຄູພະລະສຶກສາ.
8) ຈັດການແຂ່ງຂັນກິລາ ແລະ ແລກປ່ຽນສິລະປະວັນນະຄະດີ ນັກຮຽນມັດທະຍົມສຶກສາມິດຕະພາບ 5 ແຂວງພາກເໜືອ ແລະ ແຂວງດຽນບຽນ ສສ.ຫວຽດນາມ ໂດຍແຂວງບໍ່ແກ້ວເປັນເຈົ້າພາບ.
9) ສະເໜີໂຄງການ, ກິດຈະກຳກ່ຽວກັບການພັດທະນາວຽກງານພະລະສຶກສາ-ກິລາໃນໂຮງຮຽນ ຕາມການຮ່ວມມືກັບ 4 ປະເທດຄື : ໄທ, ກູຍບາ, ບຣູໄນ ແລະ ຮົງກາລີ.

### 9.3.3 ກິລາລະດັບສູງ :

1) ການປັບປຸງສູນຝຶກກິລາແຫ່ງຊາດ ຂຶ້ນເປັນສະຖາບັນກິລາ-ກາຍຍະກຳ ທີ່ໄດ້ກຳນົດໄວ້ໃນກົດໝາຍກິລາ-ກາຍຍະກຳ ສະບັບປັບປຸງ ເພື່ອເປັນບ່ອນກໍ່ສ້າງ ແລະ ພັດທະນາບຸກຄະລາກອນການກິລາ, ທັງເປັນບ່ອນຄົ້ນຄວ້າວິໄຈ ແລະ ເປັນສູນຝຶກຊ້ອມນັກກິລາ;
2) ຊຸກຍູ້ໃຫ້ບັນດາສະຫະພັນກິລາແຫ່ງຊາດ ເປັນເຈົ້າການດ້ານວິຊາການໃນການກໍ່ສ້າງ ແລະ ພັດທະນາບຸກຄະລາກອນການກິລາ ຕາມແຜນຍຸດທະສາດການພັດທະນາກິລາ-ກາຍຍະກຳ ແຕ່ນີ້ເຖິງປີ 2020 ໂດຍຮັບການຊີ້ນຳຈາກກົມວິຊາການ ກະຊວງສຶກສາທິການ ແລະ ກິລາ;
3) ການສ້າງ ແລະ ພັດທະນານັກກິລາ ຕ້ອງໃຫ້ມີຈຸດສຸມເປັນລະບົບຕໍ່ເນື່ອງ ໂດຍມອບໃຫ້ບັນດາສະຫະພັນກິລາແຫ່ງຊາດ, ໂຮງຮຽນພອນສະຫວັນກິລາ-ກາຍຍະກຳ ແລະ ບັນດາແຂວງ, ນະຄອນຫຼວງ ທີ່ມີເງື່ອນໄຂ ແລະ ມີທ່າແຮງເປັນຜູ້ຊ່ວຍສ້າງ ແລະ ພັດທະນາ;
4) ເອົາໃຈໃສ່ສ້າງເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ຄູຝຶກກິລາ ເພື່ອປະກອບອາຊີບທີ່ຍືນຍົງ;

5) ສະໜອງສິ່ງຈູງໃຈທີ່ເໝາະສົມໃຫ້ແກ່ນັກກິລາ ທີ່ມີຜົນງານດີເດັ່ນ ແລະ ສ້າງກຽດຊື່ສຽງໃຫ້ແກ່ປະເທດຊາດ;
6) ສົມທົບກັບຄະນະກຳມະການໂອແລມປິກແຫ່ງຊາດລາວ ເພີ່ມທະວີການພົວພັນ ແລະ ຮ່ວມມືກັບຕ່າງປະເທດດ້ານວຽກງານກິລາລະດັບສູງ ເພື່ອຍາດແຍ່ງເອົາທຶນການຊ່ວຍເຫຼືອ ແລະ ຫຼຸດຜ່ອນງົບປະມານຂອງລັດຖະບານ;
7) ສົມທົບກັບຫ້ອງການ, ບັນດາກົມວິຊາການ ແລະ ພາກສ່ວນທີ່ກ່ຽວຂ້ອງສະເໜີການປັບປຸງ ແລະ ສ້ອມແປງສະໜາມກິລາເຈົ້າອານຸວົງ;
8) ສົມທົບກັບບັນດາກົມວິຊາການ ແລະ ພະແນກສຶກສາທິການ ແລະ ກິລາແຂວງບໍ່ແກ້ວ ຄົ້ນຄວ້າ ແລະ ພິຈາລະນາ ການສ້າງສະໜາມກິລາແຂວງບໍ່ແກ້ວ;
9) ສືບຕໍ່ປະສານສົມທົບກັບເຈົ້າພາບ ແຂວງຊຽງຂວາງ ກະກຽມຈັດງານມະຫາກຳກິລາແຫ່ງຊາດ ຄັ້ງທີ XI ຕົ້ນປີ 2020;
10) ສ້າງນິຕິກຳກ່ຽວກັບການຄຸ້ມຄອງວຽກງານກິລາລະດັບສູງ ແລະ ການນຳໃຊ້ສະໜາມກິລາລະດັບຊາດ ຄື: ປັບປຸງກົດໝາຍວ່າດ້ວຍກິລາ-ກາຍຍະກຳ, ດຳລັດວ່າດ້ວຍກອງທຶນກິລາ-ກາຍຍະກຳ, ດຳລັດວ່າດ້ວຍກິລາອາຊີບ, ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍເຄື່ອງແບບກິລາ-ກາຍຍະກຳ, ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍລະບຽບການຄຸ້ມຄອງການຈັດການແຂ່ງຂັນກິລາລະດັບຊາດ ແລະ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍລະບຽບການຄຸ້ມຄອງສະໜາມກິລາລະດັບຊາດ.

### 9.3.4 ວຽກງານກິລາໂອແລມປິກ:

- **ຄາດໝາຍ :**

1) ສ້າງຜູ້ບໍລິຫານກິລາກາຍຍະກຳຂັ້ນແຂວງ, ຂັ້ນເມືອງ ແລະ ສະຖາບັນການສຶກສາຕ່າງໆ ໃຫ້ເອົາໃຈຢ່າງເລິກເຊິ່ງ ຕໍ່ຄຸນຄ່າການພັດທະນາວຽກງານກິລາກາຍຍະກຳ;
2) ຍົກລະດັບ ແລະ ສ້າງຄວາມເຂົ້າໃຈໃຫ້ແກ່ຜູ້ບໍລິຫານສະຫະພັນກິລາແຫ່ງຊາດ ແລະ ທ້ອງຖິ່ນຮູ້ຈັກ ກ່ຽວກັບກົນໄກ, ລະບຽບການບໍລິຫານສະຫະພັນກິລາ;
3) ເກັບກຳໃຫ້ໄດ້ຂໍ້ມູນໃນເຜີຍແຜ່ ແລະ ຈັດຕັ້ງປະຕິບັດຍຸດທະສາດການພັດທະນາກິລາກາຍຍະກຳ ຂັ້ນແຂວງ, ຂັ້ນເມືອງ ແລະ ສະຖານບັນການສຶກສາ ເພື່ອເປັນບ່ອນອີງໃນການຄົ້ນຄວ້າແຜນພັດທະນາ ກິລາ-ກາຍຍະກຳ 2030 ແລະ ກົດໝາຍວ່າດ້ວຍກິລາກາຍຍະກຳ;
4) ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານພາຍໃນກົມກອງກ່ຽວກັບການພົວພັນ ແລະ ຮ່ວມມືກັບບັນດາປະເທດອາຊຽນ ແລະ ສາກົນ ພ້ອມທັງເພີ່ມທະວີຄວາມຮັບຮູ້ຕໍ່ກັບຄຸນຄ່າ ຂອງໂອແລມປິກ ຕໍ່ກັບການພັດທະນາກິລາ-ກາຍຍະກຳ.
5) ສ້າງນິຕິກຳກ່ຽວກັບການຄຸ້ມຄອງສານຕ້ອງຫ້າມໃນກິລາ-ກາຍຍະກຳ.

- **ວຽກຈຸດສຸມ :**

1) ສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານກິລາ-ກາຍຍະກຳລະດັບທ້ອງຖິ່ນ ແລະ ສະຫະພັນກິລາແຫ່ງຊາດສູ່ ໂອແລມປິກ;
2) ຍົກລະດັບຄູຝຶກ, ກຳມະການຕັດສິນ ແລະ ນັກກິລາເພື່ອກະກຽມເຂົ້າຮ່ວມການແຂ່ງຂັນກິລາໂອແລມປິກໃນລະດັບພາກພື້ນ, ອານຸພາກພື້ນ ແລະ ສາກົນ;
3) ສົມທົບກັບບັນດາກົມວິຊາການ, ສະຫະພັນກິລາແຫ່ງຊາດຈັດຕັ້ງປະຕິບັດບັນດາໂຄງການຂອງໂອແລມປິກໃຫ້ກວ້າງຂວາງ ແລະ ມີປະສິດທິຜົນ;
4) ສົມທົບກັບກົມແຜນການ, ບັນດາກົມວິຊາການ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າຊອກຫາແຫຼ່ງທຶນພັດທະນາກິລາສູ່ໂອແລມປິກ ໂດຍຜ່ານໂດຍຜ່ານຂະແໜງການຍ່ອຍກິລາກາຍຍະກຳ ແລະ ຄູ່ຮ່ວມພັດທະນາ;

5) ສືບຕໍ່ຄົ້ນຄວ້າປັບປຸງນິຕິກຳ, ລະບຽບກະຕິກາການແຂ່ງຂັນກິລາໂອແລມປິກ ເພື່ອຍົກລະດັບຄວາມສາມາດໃຫ້ແກ່ສະຫະພັນກິລາໂອແລມປິກ;
6) ເພີ່ມທະວີຮ່ວມມື ແລະ ແລກປ່ຽນບົດຮຽນໃນການພັດທະນາກິລາສູ່ໂອແລມປິກກັບບັນດາປະເທດ ເພື່ອນມິດ ແລະ ສາກົນ;
7) ສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງປັບປຸງບັນດານິຕິກຳທີ່ເປັນການຈຳກັດ ແລະ ກີດຂວາງການພັດທະນາກິລາລາວ ເວົ້າລວມ ເວົ້າສະເພາະ ກິລາສູ່ໂອແລມປິກ;
8) ສົມທົບພາກສ່ວນຕ່າງໆເພື່ອຄົ້ນຄວ້າ, ວິໄຈປະເມີນການພັດທະນາກິລາລາວສູ່ໂອແລມປິກ ເພື່ອບັນລຸຄາດໝາຍທີ່ກຳນົດໄວ້ໃນຍຸດທະສາດການພັດທະນາກິລາລາວ ເຖິງປີ 2020.
9) ເພີ່ມທະວີໃນການຈັດຕັ້ງປະຕິບັດພັນທະຂອງອົງການຄວບຄຸມການນຳໃຊ້ສານຕ້ອງຫ້າມໂລກ (WADA)
10) ປັບປຸງນິຕິກຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການປະສານງານ ຕ້ານສານຕ້ອງຫ້າມໃນກິລາ ແລະ ສະເໜີຄົ້ນຄ້ວາດຳລັດວ່າດ້ວຍການຄຸ້ມຄອງສານຕ້ອງຫ້າມ ໃນກິລາກາຍຍະກຳ.

# X. ຂະແໜງການຍ່ອຍການບໍລິຫານ ແລະ ຄຸ້ມຄອງການສຶກສາ

## 10.1 ວຽກງານຈັດຕັ້ງ ແລະ ພະນັກງານ

### 10.1.1 ຜົນສຳເລັດ

1) ໄດ້ປັບປຸງລະບົບການເກັບກຳຂໍ້ມູນລັດຖະກອນຂອງຂະແໜງການສຶກສາ, ຊຶ່ງສາມາດສັງລວມໄດ້ດັ່ງນີ້ :
   - ຈຳນວນລັດຖະກອນທັງໝົດ: 86.865 ຄົນ, ຍິງ 44.601 ຄົນ;
     - ຂັ້ນສູນກາງ: 6.993 ຄົນ, ຍິງ 3.014 ຄົນ;
     - ຂັ້ນແຂວງ: 6.538 ຄົນ, ຍິງ 3.204 ຄົນ;
     - ຂັ້ນເມືອງ: 73.334 ຄົນ, ຍິງ 38.383 ຄົນ;
   - ຈຳນວນລັດຖະກອນບໍລິຫານທັງໝົດ 9.108 ຄົນ, ຍິງ 3.325 ຄົນ;
   - ຈຳນວນລັດຖະກອນຄູທັງໝົດ 77.757 ຄົນ, ຍິງ 41.276 ຄົນ;
   - ຈຳນວນຄູອາສາສະໝັກ 12.495 ຄົນ (ສະເພາະຄູສຶກສາກ່ອນໄວຮຽນ ແລະ ສາຍສາມັນ);

ສຳລັບປີ 2019 ຂະແໜງສຶກສາ ແລະ ກິລາ ໄດ້ຮັບຕົວເລກລັດຖະກອນຄູ-ບໍລິຫານ ທັງໝົດຈຳນວນ 936 ຕົວເລກ, ໃນຂະນະທີ່ມີພະນັກງານ-ລັດຖະກອນອອກໃນຮູບການຕ່າງໆ 1.368 ຄົນ.

2) ໄດ້ສ້າງ ແລະ ປັບປຸງບັນດານິຕິກຳລຸ່ມກົດໝາຍ ທີ່ໄດ້ຮັບຮອງ ແລະ ປະກາດໃຊ້ ຈຳນວນ 18 ສະບັບ ແລະ ໄດ້ຄົ້ນຄວ້າປະກອບຄຳເຫັນໃສ່ບັນດາກົດໝາຍ ແລະ ນິຕິກຳ ໃຕ້ກົດໝາຍຫຼາຍກວ່າ 30 ສະບັບ.
3) ສຳເລັດການຮ່າງແຜນພັດທະນາຊັບພະຍາກອນມະນຸດຂອງຂະແໜງການສຶກສາ ແລະ ກິລາ ໂດຍພື້ນຖານ.
4) ໄດ້ຈັດສົ່ງພະນັກງານລົງຮາກຖານຢູ່ຂັ້ນແຂວງ, ນະຄອນຫຼວງ ໃນທົ່ວປະເທດ ແລະ 40 ເມືອງເປົ້າໝາຍ ເພື່ອຈັດຕັ້ງປະຕິບັດໂຄງຍົກສູງຄຸນນະພາບການສຶກສາໃນເຂດຫ່າງໄກສອກຫຼີກ ຕິດພັນກັບຂະບວນການ ຮັກຊາດ ແລະ ພັດທະນາຕາມທິດ 3 ສ້າງ.

### 10.1.2 ບັນຫາ ແລະ ສິ່ງທ້າທາຍ

1) ການຈັດວາງຄູ ແລະ ບຸກຄະລາກອນການສຶກສາ ເຂົ້າໃສ່ແຕ່ລະຕຳແໜ່ງງານ ບາງພາກສ່ວນຍັງບໍ່ທັນສອດຄ່ອງກັບວິຊາສະເພາະ ແລະ ຄວາມຕ້ອງການຕົວຈິງຂອງວຽກງານ ເຮັດໃຫ້ພະນັກງານ-ລັດຖະກອນ ມີລັກສະນະເຫຼືອ-ບໍ່ພໍ.
2) ການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຍັງບໍ່ທັນເປັນລະບົບຕໍ່ເນື່ອງ, ການສ້າງພະນັກງານໃນຂະບວນການຕົວຈິງຍັງບໍ່ໄດ້ເຮັດຢ່າງຕັ້ງໜ້າ.
3) ຈຳນວນຕົວເລກ (ໂກຕ້າ) ມີຈຳກັດ, ຄູອາສາສະໝັກມີຈຳນວນຫຼາຍ ເຮັດໃຫ້ການບັນຈຸລັດຖະກອນໃໝ່ພົບຄວາມຫຍຸ້ງຍາກ ມີຫາງສຽງຈົ່ມວ່າຂອງສັງຄົມ ພ້ອມນັ້ນການຮັບ-ບັນຈຸລັດຖະກອນໃໝ່ ຍັງຊັກຊ້າບໍ່ທັນກັບການໄຂສົກຮຽນໃນແຕ່ລະປີ;
4) ການສັບຊ້ອນ, ຈັດສັນຄູຈາກບ່ອນທີ່ເຫຼືອໄປໃສ່ບ່ອນທີ່ບໍ່ພຽງພໍ ແລະ ການແກ້ໄຂບັນຫາຄູອາສາສະໝັກຍັງມີຄວາມຫຍຸ້ງຍາກ ໂດຍສະເພາະຄູການສຶກສາກສາກ່ອນໄວຮຽນ ແລະ ຄູສາມັນ ຍ້ອນປັດໄຈຫຼາຍຢ່າງທີ່ຕິດພັນກັບຄອບຄົວ.

### 10.1.3 ແຜນວຽກບູລິມະສິດ ສຳລັບປີ 2020

1) ສືບຕໍ່ຕິດຕາມຊຸກຍູ້ແຜນການສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແຕ່ນີ້ຫາປີ 2020 ມີຈຳນວນ 93 ສະບັບ;
2) ຈັດຕັ້ງເຜີຍແຜ່ ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງການສຶກສາທິການ ແລະ ກິລາ;
3) ສືບຕໍ່ປັບປຸງດຳລັດວ່າດ້ວຍລັດຖະກອນຄູ, ເລກທີ 177/ລບ; ຄຳສັ່ງແນະນຳກ່ຽວກັບການແບ່ງຂັ້ນຄຸ້ມຄອງການສຶກສາ-ກິລາ, ເລກທີ 1500/ສສກ; ຄູ່ມືວິທີເຮັດວຽກຂອງຫ້ອງການ, ກົມ, ສະຖາບັນ ແລະ ສູນ; ພາລະບົດບາດ ແລະ ກົງຈັກການຈັດຕັ້ງຂອງບັນດາມະຫາວິທະຍາໄລ 4 ແຫ່ງ ແລະ ພາກສ່ວນອ້ອມຂ້າງກະຊວງ;
4) ສ້າງຄວາມເຂັ້ມແຂງກ່ຽວກັບວຽກງານການສ້າງນິຕິກຳ, ການກຳນົດຕຳແໜ່ງງານ ແລະ ການຄຸ້ມຄອງຖານຂໍ້ມູນ PMIS ໃຫ້ພາກສ່ວນສູນກາງ ແລະ ທ້ອງຖິ່ນ;
5) ປັບປຸງເຄື່ອງມື ແລະ ລົງປະເມີນຜູ້ອຳນວຍການໂຮງຮຽນ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ,
6) ລົງສັບຊ້ອນ ແລະ ຈັດສັນຄູເຫຼືອ, ຄູບໍ່ພໍ ແລະ ເກັບກຳຂໍ້ມູນຄູອາສາສະໝັກ (ຕາມ 3 ກໍລະນີ) ໃນກຸ່ມໂຮງຮຽນ 40 ເມືອງເປົ້າໝາຍ ທີ່ລົງກໍ່ສ້າງຮາກຖານ;

## 10.2 ວຽກງານການພັດທະນາຜູ້ບໍລິຫານການສຶກສາ

### 10.2.1 ຜົນສຳເລັດ

1) ສຳເລັດປັບປຸງຫຼັກສູດຜູ້ອຳນວຍການໂຮງຮຽນປະຖົມ 3 ເດືອນ, ຫຼັກສູດ 3 ອາທິດ.
2) ໄດ້ສ້າງຄູ່ມືການຝຶກອົບຮົມ, ຈັດຝຶກອົບຮົມຄູຝຶກຂັ້ນສູນກາງ, ຄູຝຶກຂັ້ນແຂວງ ແລະ ໄດ້ຈັດຕັ້ງການຝຶກອົບຮົມ ໃນຫົວຂໍ້ "ສ້າງຄວາມເຂັ້ມແຂງດ້ານການບໍລິຫານການສຶກສາ" ໃຫ້ຜູ້ບໍລິຫານການສຶກສາຂັ້ນເມືອງຈາກ 148 ເມືອງ, ເມືອງລະ 6 ຄົນ ລວມ 888 ຄົນ;
3) ໄດ້ພັດທະນາຫຼັກສູດການວາງແຜນຂະແໜງການສຶກສາ ສຳລັບຜູ້ບໍລິຫານການສຶກສາຂັ້ນກະຊວງ, ແຂວງ ແລະ ເມືອງ ພ້ອມທັງໄດ້ສຳເລັດແຜນການສອນ ແລະ ສື່ການສອນຝຶກອົບຮົມ.
4) ສ້າງຄວາມເຂັ້ມແຂງ ທາງດ້ານການບໍລິຫານຄຸ້ມຄອງ ໃຫ້ແກ່ພະນັກງານຈາກສູນກາງ ເພື່ອລົງຮາກຖານ 3 ສ້າງ.
5) ຝຶກອົບຮົມຄູຝຶກ ກ່ຽວກັບພາວະຄວາມເປັນຜູ້ນຳ ແລະ ການບໍລິຫານໂຮງຮຽນ ຈຳນວນ 32 ທ່ານ ແລະ ຝຶກອົບຮົມໃຫ້ແກ່ຜູ້ບໍລິຫານໂຮງຮຽນມັດທະຍົມຕົວແບບ ກ່ຽວກັບພາວະຄວາມເປັນຜູ້ນຳທາງດ້ານວິຊາການ (ການສິດສອນ) ຈຳນວນ 31 ທ່ານ.
6) ໄດ້ສຳເລັດການແຕ່ງຕັ້ງຄະນະຮັບຜິດຊອບຂຽນປະຫວັດການສຶກສາ ແລະ ແຕ່ລະກຸ່ມໄດ້ເລີ່ມຂຽນ.

### 10.2.2 ບັນຫາ ແລະ ສິ່ງທ້າທາຍ

ຂີດຄວາມສາມາດຂອງວິຊາການ ແລະ ຄູຝຶກ ພາຍໃນສະຖາບັນພັດທະນາການບໍລິຫານການສຶກສາ ຍັງຈຳກັດ ແລະ ນັກວິຊາການມີຄວາມຮູ້ຄວາມສາມາດບໍ່ພຽງພໍ, ດັ່ງນັ້ນ ຈຶ່ງເຮັດໃຫ້ ສະຖາບັນດັ່ງກ່າວຈຳເປັນຕ້ອງໄດ້ໃຊ້ຄູຝຶກຈາກພາກສ່ວນອື່ນມາຊ່ວຍ ອັນເຮັດໃຫ້ ຂາດຄວາມຍືນຍົງ.

### 10.2.3 ແຜນວຽກບູລິມະສິດ ສຳລັບປີ 2020

1) ຝຶກອົບຮົມໃຫ້ແກ່ຜູ້ບໍລິຫານອາຊີວະສຶກສາໃນທົ່ວປະເທດ ຮ່ວມກັບໂຄງການສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານອະຊີວະສຶກສາໃນໄລຍະສອງ.
2) ຮ່ວມມືກັບສູນ ຊີເມວ ຣີແທກ (SEAMEO RETRAC) ສສ ຫວຽດນາມ ໃນການສ້າງຄວາມເຂັ້ມແຂງ ໃຫ້ແກ່ຄູຝຶກ ສະຖາບັນພັດທະນາການບໍລິຫານການສຶກສາ ແລະ ຄົ້ນຄວ້າເຊັນສັນຍາຮ່ວມມືກັບ ສູນຊີແມລອີນໂນເຕັກ ( SEAMEO INNOTECH).
3) ຮ່ວມມືກັບສະຖາບັນສິງກະໂປ ໃນດ້ານການສ້າງຄວາມເຂັ້ມແຂງທາງດ້ານການບໍລິຫານການສຶກສາ ໃຫ້ແກ່ສະຖາບັນພັດທະນາການບໍລິຫານການສຶກສາ ແລະ ໃນຂັ້ນໂຮງຮຽນ.

4) ຝຶກອົບຮົມກ່ຽວການນໍາໃຊ້ເຄື່ອງມືການລົງຕິດຕາມຊຸກຍູ້ພະນັກງານສຶກສາທິການ ແລະກິລາເມືອງ 88 ເມືອງ.
5) ລົງຊຸກຍູ້ຕິດຕາມຊ່ວຍເຫຼືອໃຫ້ແກ່ຜູ້ອໍານວຍການໂຮງຮຽນ ແລະ ສຶກສາເມືອງ.
6) ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາໂຮງຮຽນ.
7) ສືບຕໍ່ຈັດຕັ້ງປະຕິບັດຝຶກອົບຮົມຜູ້ບໍລິຫານສະຖານການສຶກສາ ໃຫ້ບັນລຸຕາມເປົ້າໝາຍໃນແຜນພັດທະນາການສຶກສາ 5 ປີ ຄັ້ງທີ VIII.
8) ຝຶກອົບຮົມຫົວຂໍ້ ການສ້າງແຜນຂອງຂະແໜງການສຶກສາ ໃຫ້ແກ່ຜູ້ບໍລິຫານການສຶກສາ ແລະ ພະນັກງານແຜນການຂັ້ນສູນກາງ ແລະ ທ້ອງຖິ່ນ ພາຍໃຕ້ການສະໜັບສະໜູນດ້ານງົບປະມານ ແລະ ວິຊາການຈາກສະຫະພາບເອີຣົບ.
9) ສືບຕໍ່ການຂຽນປະຫວັດການສຶກສາໃຫ້ສໍາເລັດ.

## 10.3 ວຽກງານສະຖິຕິ ແລະ ແຜນການ

### 10.3.1 ຜົນສໍາເລັດ

1) ພັດທະນາຖານຂໍ້ມູນຄຸ້ມຄອງແຜນການ ແລະ ການເງິນ ແນ່ໃສ່ເພື່ອເຮັດໃຫ້ການຈັດສັນງົບປະມານສອດຄ່ອງກັບຍຸດທະສາດໃນການພັດທະນາການສຶກສາ.
2) ຄົ້ນຄວ້າ ແລະ ພັດທະນາຕົວຊີ້ບອກສໍາລັບເປົ້າໝາຍການພັດທະນາແບບຍືນຍົງສໍາລັບຂະແໜງການສຶກສາ.
3) ສໍາເລັດການປະເມີນກາງສະໄໝ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ VIII (2016-2020).
4) ຄົ້ນຄວ້າ ແລະ ກະກຽມສ້າງຖານຂໍ້ມູນຄຸ້ມຄອງໂຄງການທີ່ໄດ້ຮັບທຶນ ການຊ່ວຍເຫຼືອທາງການ ເພື່ອການພັດທະນາ (ODA) ໃນຂະແໜງການສຶກສາ ແລະ ກິລາ.
5) ຮ່ວມກັບບັນດາແຂວງ ຄົ້ນຄວ້າ ແລະ ວິໄຈຂໍ້ມູນດ້ານການສຶກສາ ລວມທັງວິເຄາະສະພາບການສຶກສາ ເພື່ອກໍານົດທິດທາງໃນການແກ້ໄຂໃນຕໍ່ໜ້າ.
6) ຮ່ວມກັບສະຖາບັນພັດທະນາການບໍລິຫານການສຶກສາ ພັດທະນາຫຼັກສູດຝຶກອົບຮົມການສ້າງແຜນພັດທະນາການສຶກສາ ພ້ອມທັງໄດ້ສ້າງຄວາມເຂັ້ມແຂງດ້ານວິຊາການໃຫ້ແກ່ຄູຝຶກຂອງ ສະຖາບັນພັດທະນາການບໍລິຫານການສຶກສາ.
7) ສໍາເລັດການສ້າງແຜນຍຸດທະສາດການພັດທະນາລະບົບຂໍ້ມູນຂ່າວສານຄຸ້ມຄອງການສຶກສາ ແລະ ກິລາ ແຕ່ປີ 2018-2022 (ລະບົບ LESMIS).
8) ປັບປຸງຂໍ້ມູນແຜນທີ່ການສຶກສາສົກຮຽນ 2017-2018, ພ້ອມທັງດໍາເນີນການຈັດພິມ ແລະ ແຈກຢາຍໃຫ້ພາກສ່ວນຕ່າງໆນັບແຕ່ຂັ້ນກະຊວງຫາຂັ້ນເມືອງ;

### 10.3.2 ບັນຫາ ແລະ ສິ່ງທ້າທາຍ

1) ພະນັກງານທີ່ຮັບຜິດຊອບວຽກງານແຜນການ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງມີຄວາມຮູ້ຈໍາກັດກ່ຽວກັບກ່ຽວກັບວຽກງານການສ້າງແຜນພັດທະນາການສຶກສາ, ຍິ່ງໄປກວ່ານັ້ນ ຢູ່ຂັ້ນເມືອງ ແລະ ຂັ້ນແຂວງ ການຍົກຍ້າຍ ແລະ ສັບຊ້ອນພະນັກງານໄປຢູ່ພາກສ່ວນອື່ນ ອັນເປັນສາຍເຫດເຮັດໃຫ້ວຽກງານແຜນການບໍ່ຕໍ່ເນື່ອງ.
2) ຂອດປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນເຮັດໄດ້ດີໂດຍສະເພາະການສົ່ງຂໍ້ມູນ, ບົດສະຫຼຸບ ແລະ ແຜນ ຍັງຊັກຊ້າ ບໍ່ທັນຕາມກໍານົດ.
3) ການສະຫຼຸບ-ລາຍງານວຽກງານການຄຸ້ມຄອງແຜນງານ ແລະ ໂຄງການການຊ່ວຍເຫຼືອທາງການເພື່ອການພັດທະນາຍັງມີການຊໍ້າຊ້ອນ, ບໍ່ທັນສະຫຼຸບໄດ້ຕົວເລກດ້ານການຊ່ວຍເຫຼືອຢ່າງຊັດເຈນ.

### 10.3.3 ແຜນວຽກບູລິມະສິດ ສຳລັບປີ 2020

1) ສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX ( 2021-2025 );
2) ສືບຕໍ່ສ້າງຄວາມເຂັ້ມແຂງວຽກງານສະຖິຕິ ແລະ ແຜນການໃຫ້ແກ່ວິຊາການ ແລະ ຜູ້ບໍລິຫານຂັ້ນທ້ອງຖິ່ນ;
3) ສືບຕໍ່ປັບປຸງລະບົບຄຸ້ມຄອງຂໍ້ມູນສະຖິຕິການສຶກສາ ແລະ ກິລາ.
4) ສືບຕໍ່ຮ່ວມກັບຄູ່ຮ່ວມພັດທະນາ ໃນການພັດທະນາເຄື່ອງມືໃນການສ້າງແຜນການ ແລະ ແຜນງົບປະມານ ຂອງຂະແໜງການສຶກສາ.
5) ສືບຕໍ່ຮ່ວມເຮັດວຽກກັບ ຄະນະກຳມະການພັດທະນາຊັບພະຍາກອນມະນຸດຂັ້ນກະຊວງ, ອີງການທຽບເທົ່າກະຊວງ ແລະ ຂັ້ນແຂວງ/ນະຄອນຫຼວງ ໃນການສ້າງແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດ.
6) ກະກຽມການທົບທວນການຈັດຕັ້ງປະຕິບັດຍຸດທະສາດ ຂອງການພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025.

## 10.4 ວຽກງານການເງິນ

### 10.4.1 ຜົນສຳເລັດ

1) ຈັດຕັ້ງຜັນຂະຫຍາຍມະຕິ ສະບັບເລກທີ 057/ຄບສພ ລົງວັນທີ 19/12/2018 ຂອງຄະນະບໍລິຫານງານສູນກາງພັກ, ປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2019 ຕາມຄຳແນະນຳ ຂອງກະຊວງການເງິນສະບັບເລກທີ 4000/ກງ, ເລກທີ 0018/ກງ ແລະ 0016/ກງ ລົງວັນທີ 03 ມັງກອນ 2019 ຢ່າງເຂັ້ມງວດບົນພື້ນຖານການຈັດບູລິມະສິດໜ້າວຽກໃຫ້ສອດຄ່ອງຕາມແຜນພັດທະນາການສຶກສາ ແລະ ກິລາ ຂອງແຕ່ລະຂະແໜງການຍ່ອຍ;
2) ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດນິຕິກຳ ຮັບຮອງການນຳໃຊ້ປື້ມຄູ່ມືແນະນຳວິທີການຈັດສັນງົບປະມານຂອງພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ສຳລັບພາກລາຍຈ່າຍບໍລິຫານປົກກະຕິ (ພາກ 62) ແລະ ພາກດັດສົມສິ່ງເສີມ ແລະ ບຳລຸງ (ພາກ 63) ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ໃຫ້ມີຄວາມເປັນເອກະພາບ ແລະ ຍຸດຕິທຳ;
3) ຝຶກອົບຮົມລະບົບໂປຣແກມເງິນບໍລິຫານສະຖານການສຶກສາ ໃຫ້ພະນັກງານການເງິນແຂວງ/ນະຄອນຫຼວງຂັ້ນເມືອງ/ນະຄອນ ໃນຂອບເຂດທົ່ວປະເທດ.

### 10.4.2 ບັນຫາ ແລະ ສິ່ງທ້າທາຍ

1) ການປະຕິບັດວິໄນທາງດ້ານແຜນການ-ການເງິນຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ, ການສົ່ງແຜນງົບປະມານປະຈຳປີ ແລະ ແຜນດັດແກ້ 6 ເດືອນທ້າຍປີ ຂອງບັນດາຫົວໜ່ວຍງົບປະມານທີ່ຂຶ້ນກັບສູນກາງ ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ມີບາງພາກສ່ວນຊັກຊ້າ;
2) ການສ້າງບັນຊີເງິນເດືອນປະຈຳແຕ່ລະງວດ ເຫັນວ່າມີບາງພາກສ່ວນຍັງມີຄວາມຊັກຊ້າຕາມກຳນົດໃນປະຕິທິນງົບປະມານ ຂອງຂະແໜງການສຶກສາ ແລະ ກິລາ ຈຶ່ງເຮັດໃຫ້ການອະນຸມັດ ແລະ ການເບີກຈ່າຍເງິນເດືອນຊັກຊ້າ ບໍ່ທັນຕາມກຳນົດເວລາ.

### 10.4.3 ແຜນວຽກບູລິມະສິດ ສຳລັບປີ 2020

1) ສ້າງ ແລະ ປັບປຸງນິຕິກຳ, ຄຳສັ່ງ, ຄຳແນະນຳຕ່າງໆ ແລະ ສ້າງລະບຽບການກ່ຽວກັບວຽກງານການຄຸ້ມຄອງງົບປະມານ, ການກວດກາການເງິນ, ການບັນຊີ, ການຄຸ້ມຄອງ-ນຳໃຊ້ຊັບສິນ, ການປະມູນຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ແລະ ການກໍ່ສ້າງສ້ອມແປງ ຂອງຂະແໜງການສຶກສາ ແລະ ກິລາ;
2) ຄົ້ນຄວ້າ ແລະ ສ້າງຂໍ້ແນະນຳ ໃນການຈັດສັນງົບປະມານບໍລິຫານປົກກະຕິໃຫ້ແກ່ສະຖາບັນການສຶກສາຕ່າງໆເພື່ອເຮັດໃຫ້ການສະໜອງງົບປະມານດັ່ງກ່າວໃຫ້ແຕ່ລະສະຖາບັນການສຶກສາ ມີຄວາມຍຸດຕິທຳ.
3) ສ້າງນິຕິກຳເພື່ອກຳນົດເງື່ອນໄຂ ແລະ ກົນໄກໃນການຈັດສັນງົບປະມານບໍລິຫານໃຫ້ແກ່ຂະແໜງການຍ່ອຍຕ່າງໆ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ.

4) ສ້າງຄວາມເຂັ້ມແຂງ ໃຫ້ພະນັກງານຂັ້ນທ້ອງຖິ່ນດ້ານວຽກການເງິນ, ການກວດກາການເງິນ, ການບັນຊີ, ການຄຸ້ມຄອງນໍາໃຊ້ຊັບສິນ, ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ການກໍ່ສ້າງສ້ອມແປງ ໃຫ້ສອດຄ່ອງຕາມ ກົດໝາຍ, ລະບຽບການຕ່າງໆ ທີ່ໄດ້ກໍານົດຢ່າງເປັນລະບົບຕໍ່ເນື່ອງ;
5) ສ້າງເຄື່ອງມືທົດລອງຕິດຕາມ ແລະ ປະເມີນຜົນ ການຈັດປະຕິບັດງົບປະມານ;
6) ສະໜອງຂໍ້ມູນດ້ານການໃຊ້ຈ່າຍຕົວຈິງ ຂອງຂະແໜງການສຶກສາ ແລະ ກິລາ ໃຫ້ຖືກຕ້ອງຄົບຖ້ວນຕາມກົດໝາຍ ແລະ ລະບຽບການທີ່ໄດ້ກໍານົດໄວ້;

## 10.5 ວຽກງານຕິດຕາມ, ກວດກາ, ປະເມີນຜົນ

### 10.5.1 ຜົນສໍາເລັດ

1) ສໍາເລັດການລົງຕິດຕາມ ກວດກາການປະຕິບັດພາລະບົດບາດ, ໜ້າທີ່ຂອງຜູ້ບໍລິຫານການສຶກສາ ແລະ ກິລາ ແລະ ຜູ້ເຮັດວຽກງານກວດກາ ປະເມີນຜົນ ແລະ ປະກັນຄຸນນະພາບຂັ້ນແຂວງ ແລະ ຂັ້ນເມືອງ.
2) ສໍາເລັດສ້າງ, ລົງທົດລອງ ແລະ ປັບປຸງເຄື່ອງມືຕິດຕາມ ແລະ ປະເມີນຜົນ ຕາມຕົວຊີ້ບອກສໍາລັບຂະແໜງການຍ່ອຍອາຊີວະສຶກສາ, ການສຶກສາຊັ້ນສູງ, ສ້າງຄູ ແລະ ກິລາ-ກາຍຍະກໍາ ທີ່ອີງໃສ່ນະໂຍບາຍ, ຍຸດທະສາດ ແລະ ວຽກຈຸດສຸມ 5 ປີ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ.
3) ສໍາເລັດການກວດກາການຈັດຕັ້ງພັກ ແລະ ສະມາຊິກພັກທີ່ຂຶ້ນກັບອົງຄະນະພັກກະຊວງສຶກສາ ແລະ ກິລາ ຈໍານວນ 15 ໜ່ວຍ ຜົນການປະເມີນໜ່ວຍພັກສາມາດຈັດປະເພດດີຫຼາຍ ມີ 11 ໜ່ວຍ, ໜ່ວຍພັກປະເພດດີ 4 ໜ່ວຍ, ໜ່ວຍພັກປະເພດປານກາງ ແລະ ປະເພດອ່ອນບໍ່ມີ; ສະມາຊິກພັກທີ່ຖືກປະເມີນທັງໝົດ 224 ສະຫາຍ ປະເພດດີຫຼາຍ 194 ສະຫາຍ ແລະ ປະເພດດີ 30 ສະຫາຍ.
4) ສໍາເລັດລົງກວດສອບການຈັດຕັ້ງປະຕິບັດແຜນງົບປະມານຢູ່ວິທະຍາໄລເຕັກນິກວິຊາຊີບ 8 ແຫ່ງ, ດໍາເນີນການກວດກາຕາມຄໍາສັ່ງ ຈໍານວນ 5 ກໍລະນີ, ຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ຈໍານວນ 17 ໂຄງການ ໃນນີ້ ມີການກວດກາປົກກະຕິ 6 ໂຄງການ, ກວດກາຕາມຄໍາສັ່ງ ໂຄງການໄພພິບັດແຂວງຈໍາປາສັກ ແລະ ອັດຕະປື ຈໍານວນ 7 ໂຄງການ ແລະ ກວດກາຕາມຄໍາສັ່ງໂຄງການຟື້ນຟູໄພພິບັດ ສຸກເສີນເມືອງສະໜາມໄຊແຂວງອັດຕະປື ຈໍານວນ 4 ໂຄງການ.
5) ແກ້ໄຂຜົນການກວດສອບຂອງອົງການກວດສອບແຫ່ງລັດສໍາລັບ 15 ພາກສ່ວນ ໃນສົກປີ 2013-2014, 2014-2015 ແລະ 2015-2016 ຈາກທັງໝົດ 87 ບັນຫາ ສໍາເລັດແກ້ໄຂ ຈໍານວນ 51 ບັນຫາ; ກໍາລັງດໍາເນີນ ການປັບປຸງແກ້ໄຂຈໍານວນ 26 ບັນຫາ, ການປະເມີນຜົນໂຄງການ ຈໍານວນ 33 ໂຄງການ ແລະ ຍັງບໍ່ທັນໄດ້ປັບປຸງແກ້ໄຂຈໍານວນ 10 ບັນຫາ.

### 10.5.2 ບັນຫາ ແລະ ສິ່ງທ້າທາຍ

1) ການຊີ້ນໍານໍາພາຕໍ່ວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນຂອງຜູ້ບໍລິຫານການສຶກສາ-ກິລາ ຢູ່ແຕ່ລະຂັ້ນຄຸ້ມຄອງ ຍັງເຮັດບໍ່ທັນໄດ້ຢ່າງກວ້າງຂວາງ ແລະ ເລິກເຊິ່ງ.
2) ຄວາມຮູ້-ຄວາມສາມາດຂອງພະນັກງານທີ່ເຮັດວຽກງານກວດກາ-ປະເມີນຜົນມີຈໍາກັດ, ຜົນການກວດກາຍັງມີລັກສະນະລວມໆ.
3) ລະບອບ, ລະບຽບ ແລະ ກົນໄກໃນການເຄື່ອນໄຫວວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນ ຍັງບໍ່ທັນຮັດກຸມ, ການຕິດຕາມນະໂຍບາຍຍຸດທະສາດ ວຽກຈຸດສຸມປະຈໍາ 5 ປີ, ປະຈໍາປີ, ໄຕມາດ ຢູ່ແຕ່ລະຂັ້ນຄຸ້ມຄອງການສຶກສາ-ກິລາຍັງບໍ່ທັນເປັນລະບົບຄົບຊຸດ.
4) ລະບົບການຕິດຕາມກວດກາ ແລະ ປະເມີນຜົນຍັງບໍ່ທັນເປັນລະບົບຄົບຊຸດ, ກົງຈັກການຕິດຕາມກວດກາໄດ້ສ້າງຕັ້ງຂຶ້ນຢູ່ແຕ່ລະຂັ້ນ, ແຕ່ຢູ່ມະຫາວິທະຍາໄລ ແລະ ສະຖາບັນການສຶກສາ ສ່ວນຫຼາຍບໍ່ທັນໄດ້ຮັບການສ້າງຕັ້ງ, ບ່ອນທີ່ມີແລ້ວແຕ່ການສັບຊ້ອນຈັດວາງພະນັກງານໃສ່ຕໍາແໜ່ງງານຕ່າງໆບໍ່ທັນພຽງພໍ.
5) ຂີດຄວາມຮູ້ຄວາມສາມາດຂອງພະນັກງານກວດກາແຕ່ລະຂັ້ນ ສ່ວນໃຫຍ່ຍັງຈໍາກັດ ທັງຮຽນທັງເຮັດ ຕົວຈິງຍັງບໍ່ທັນເປັນມືອາຊີບ ແລະ ຍັງບໍ່ທັນພຽງພໍກັບຕາມຕໍາແໜ່ງງານ ແລະ ໜ້າວຽກຕົວຈິງ.

6) ຜູ້ບໍລິຫານການສຶກສາ ແລະ ກິລາ, ພະນັກງານຄູອາຈານ ຈຳນວນໜຶ່ງ ບໍ່ທັນເຂົ້າໃຈ ແລະ ບໍ່ເຫັນຄວາມສຳຄັນຂອງວຽກງານຕິດຕາມກວດກາ ແລະ ປະເມີນຜົນ, ຍັງຖືວ່າວຽກງານຕິດຕາມກວດກາເປັນໜ້າທີ່ຂອງຄະນະກວດກາ, ຍັງຢ້ານການກວດກາ.
7) ການຈັດຕັ້ງກວດກາຢູ່ບາງຂັ້ນ, ບາງບ່ອນຍັງບໍ່ທັນໄດ້ເຄື່ອນໄຫວຕາມພາລະບົດບາດ ແລະ ບໍ່ໄດ້ດຳເນີນການກວດກາ ເລີ່ມແຕ່ຫົວທີ ແລະ ບໍ່ເຮັດເປັນປົກກະຕິ, ເກີດມີບັນຫາແລ້ວຈຶ່ງໄປກວດກາ.

### 10.5.3 ແຜນວຽກບູລິມະສິດ ສຳລັບປີ 2020

1) ກຳນົດພາລະບົດບາດ, ຕຳແໜ່ງວຽກຕິດຕາມ ແລະ ປະເມີນຜົນໃນສະຖານການສຶກສາປັບປຸງ, ສ້າງເຄື່ອງມືຄູ່ມືກວດກາລັດ ແລະ ນິຕິກຳຮັບໃຊ້ວຽກງານຕິດຕາກວດກາ ແລະ ປະເມີນຜົນ ຂອງຂະແໜງການຍ່ອຍບໍລິຫານຄຸ້ມຄອງການສຶກສາ, ກວດກາພາຍໃນ, ກວດກາການລົງທຶນຂອງລັດແຕ່ຫົວທີ.
2) ສ້າງຄວາມເຂັ້ມແຂງ ແລະ ຂີດຄວາມສາມາດ ກ່ຽວກັບວຽກຕິດຕາມກວດກາ ໃຫ້ແກ່ຜູ້ບໍລິຫານ ແລະ ພະນັກງານກວດກາແຕ່ລະຂັ້ນ.
3) ຕິດຕາມ ແລະ ປະເມີນ ຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ປະຈຳປີ.
4) ເຜີຍແຜ່ນິຕິກຳກ່ຽວກັບວຽກງານຕິດຕາມກວດກາ ແລະ ປະເມີນຜົນ, ວຽກຕ້ານການສໍ້ລາດບັງຫຼວງ ພ້ອມທັ ຕິດຕາມການການປະຕິບັດນິຕິກຳດັ່ງກ່າວ ພາຍໃນຂະແໜງການສຶກສາ ແລະ ກິລາ.
5) ຕິດຕາມກວດກາການປະຕິບັດພາລະບົດບາດ, ໜ້າທີ່ຂອງຄະນະພັກ, ສະມາຊິກພັກທີ່ຂຶ້ນກັບອົງຄະນະພັກກະຊວງສຶກສາທິການ ແລະ ກິລາ ຈຳນວນ 11 ເປົ້າໝາຍ.
6) ຕິດຕາມກວດກາການປະຕິບັດພາລະບົດບາດ, ໜ້າທີ່ ໃນການຄຸ້ມຄອງລັດ ຕໍ່ກັບວຽກງານສຶກສາ ແລະ ກິລາ ຂອງຜູ້ບໍລິຫານການສຶກສາ ແລະ ກິລາ ຈຳນວນ 9 ແຂວງ ແລະ 18 ເມືອງ.
7) ຕິດຕາມ, ກວດກາ, ກວດສອບ ການປະຕິບັດລາຍຮັບ-ລາຍຈ່າຍງົບປະມານ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ.
8) ຄົ້ນຄວ້າແກ້ໄຂຄຳຮ້ອງ-ຄຳສະເໜີ ໂດຍສະເພາະອັນທີ່ຍັງບໍ່ທັນໄດ້ແກ້ໄຂຢ່າງຂາດຕົວ ເຊັ່ນ: ບັນຫາຄຳຮ້ອງຢູ່ວິທະຍາໄລສົງອິງຕີ້, ໂຮງຮຽນວິຊາຊີບແບບປະສົມແຂວງບໍ່ແກ້ວ, ຄະນະອັກສອນສາດ (ມຊ), ຫ້ອງການການເງິນຂັ້ນສອງ (ຫ້ອງການກະຊວງ), ວິທະຍາໄລວິຊາຊີບແຂວງວຽງຈັນ, ສັບພະວິຊາ, ແລະ ບັນຫາເງິນເສຍຢູ່ວິທະຍາໄລຄູສາລະວັນ, ວິທະຍາໄລຄູບ້ານເກີນ.
9) ປັບປຸງນິຕິກຳຕ່າງໆ ເພື່ອຮັບໃຊ້ວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນ ພ້ອມກັບການສ້າງ ຄວາມເຂັ້ມແຂງໃຫ້ແກ່ພະນັກງານທີ່ຮັບຜິດຊອບວຽກງານດັ່ງກ່າວ.
10) ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ທາງສັງຄົມທີ່ເກີດຂຶ້ນໃນຂະແໜງການສຶກສາ ແລະ ກິລາ.
11) ນຳເອົາວຽກງານຕ້ານການສໍ້ລາດ-ບັງຫຼວງເຂົ້າໃນຫຼັກສູດສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ.
12) ຮັບແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ - ລັດຖະກອນອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ.

## 10.6 ວຽກງານພົວພັນຕ່າງປະເທດ

### 10.6.1 ຜົນສຳເລັດ

1) ສຳເລັດການເປັນເຈົ້າພາບຈັດກອງປະຊຸມເຈົ້າໜ້າທີ່ອາວຸໂສ ການສຶກສາຂັ້ນພື້ນຖານພາກພື້ນຊີແມວ ຄັ້ງທີ 7 ສຳລັບ 11 ປະເທດສະມາຊິກອົງການລັດຖະມົນຕີສຶກສາອາຊີຕາເວັນອອກສຽງໃຕ້.
2) ສຳເລັດການເຊັນສັນຍາຮ່ວມມືສອງຝ່າຍລະຫວ່າງກະຊວງສຶກສາທິການ ແລະ ກິລາ ກັບ 11 ພາກສ່ວນ ຄື: ກະຊວງສຶກສາສິງກະໂປ, ວິທະຍາໄລວິຊາອາຊີບເມືອງຫຼິວໂຈ ສປ ຈີນ, ສະຖາບັນກິລາ ພະລະສຶກສາ ແລະ ສິລະປະແຫ່ງ ສ. ກູບາ, ກະຊວງຊັບພະຍາກອນມະນຸດຮັງກາລີ, ກະຊວງສຶກສາທິການ ຊາວໜຸ່ມ ແລະ ກິລາ ປະເທດ ກຳປູເຈຍ, ກະຊວງສຶກສາທິການ ປະເທດໄທ, ກະຊວງສຶກສາທິການ ແລະ ກິລາ ບຣູໄນ ແລະ ສະຖາບັນພັດທະນາສິນ ປະເທດໄທ, ສະຖານທູດອັງກິດປະຈຳລາວ, ພະແນກສຶກສາແຂວງຢຸນນານ,

ມະຫາວິທະຍາໄລພາສາ ແລະ ວັດທະນະທຳປັກກິ່ງ, ເມືອງນາກາຊາກິ ແລະ ເມືອງອິເຊະຂອງປະເທດຍີ່ປຸ່ນເພື່ອເອົານັກກິລາເຂົ້າຝຶກຊ້ອມກະກຽມແຂ່ງຂັນ Olympic 2020.

3) ສຳເລັດການເຊັນສັນຍາຮ່ວມມືໃນຂະແໜງການສຶກສາ ແລະ ກິລາ ກັບອົງການຈັດຕັ້ງສາກົນ ທີ່ບໍ່ຂຶ້ນກັບລັດຖະບານ ມີຈຳນວນ 14 ອົງການ ເພື່ອປະຕິບັດ 17 ໂຄງການ.
4) ສຳເລັດການເຊັນສັນຍາຮ່ວມມືປະຈຳປີ 2019 ລະຫວ່າງ ກະຊວງສຶກສາທິການ ແລະ ກິລາ ກັບກະຊວງສຶກສາ ແລະ ກໍ່ສ້າງ ຫວຽດນາມ ແລະ ສືບຕໍ່ປະຕິບັດເນື້ອໃນສັນຍາຢ່າງຕໍ່ເນື່ອງ.
5) ນຳສົ່ງນັກສຶກສາເຂົ້າຮ່ວມໂຄງການແລກປ່ຽນໃນກອບການຮ່ວມມືຕ່າງໆກັບແຕ່ລະປະເທດ ລວມທັງໝົດ 65 ຄົນ (ໂຄງການ JENESY ຍີ່ປຸ່ນ 43 ຄົນ; ອາຊຽນ-ຈີນ 2 ຄົນ; ແລະ ນັກສຶກສາລາວ 20 ຄົນເຂົ້າຮ່ວມໂຄງການແລກປ່ຽນຊາວໜຸ່ມ ທີ່ ປະເທດມາເລເຊຍ).

- **ວຽກງານການສຶກສາເພື່ອພັດທະນາຊຸມຊົນຂົງເຂດອາຊີຕາເວັນອອກສຽງໃຕ້ (SEAMEO CED)**

1) ສຳເລັດພິທີເປີດສູນການສຶກສາເພື່ອພັດທະນາຊຸມຊົນຂົງເຂດອາຊີຕາເວັນອອກສຽງໃຕ້ ແລະ ຈັດກອງປະຊຸມຄະນະຜູ້ບໍລິຫານງານສູນ ຄັ້ງທີ 1.
2) ສຳເລັດປະຕິບັດໂຄງການຄົ້ນຄວ້າລະດັບພາກພື້ນ ໃນຫົວຂໍ້ "ການຮຽນຮູ້ຕະຫຼອດຊີວິດ ສຳລັບກຸ່ມຊົນເຜົ່າໃນບັນດາປະເທດລຸ່ມແມ່ນ້ຳຂອງ" ຢູ່ເມືອງໂພນໄຊ, ແຂວງຫຼວງພະບາງ ໂດຍລົງເລິກກ່ຽວກັບການຍົກລະດັບການຮຽນ ແລະ ການຝຶກອົບຮົມວິຊາຊີບຂອງຊຸມຊົນ ກຸ່ມຊົນເຜົ່າຕ່າງໆ.
3) ປະຊຸມປຶກສາຫາລືກ່ຽວກັບໂຄງການພັດທະນາໂຮງຮຽນ ທີ່ຕັ້ງຢູ່ເຂດຊາຍແດນປະເທດສະມາຊິກຊີແມວ ລະຫວ່າງສູນຊີແມວຕ່າງໆ ແລະ 9 ໂຮງຮຽນຢູ່ເຂດຊາຍແດນຂອງ ສປປ ລາວ ແລະ ໂຮງຮຽນຊາຍແດນຈັງຫວັດໜອງຄາຍ ລາຊະອານາຈັກໄທ.

### 10.6.2 ບັນຫາ ແລະ ສິ່ງທ້າທາຍ

1) ການເຊັນສັນຍາສອງຝ່າຍ, ຫຼາຍຝ່າຍ ຫຼື ກັບອົງການຈັດຕັ້ງສາກົນ, ເມື່ອເຊັນແລ້ວຍັງຂາດການແຕ່ງຕັ້ງຄະນະກຳມະການຄຸ້ມຄອງການຈັດຕັ້ງປະຕິບັດສັນຍາໃນລະດັບຕ່າງໆກັນ;
2) ການປະຕິບັດວຽກງານຕ່າງປະເທດຕາມລະບົບຜ່ານປະຕູດຽວຍັງພົບຄວາມຫຍຸ້ງຍາກ ເນື່ອງຈາກບາງກົມ ສະຖາບັນການສຶກສາ ຈຳນວນໜຶ່ງ ຍັງດຳເນີນເອກະສານບໍ່ໄປຕາມລະບົບຜ່ານປະຕູດຽວ.
3) ຂອດປະສານງານ ແລະ ລວມສູນປະຊາທິປະໄຕ ຂອງບັນດາເອກະສານຍັງກະແຈກກະຈາຍເຮັດໃຫ້ເອກະສານບໍ່ທັນຕາມເວລາກຳນົດໄວ.
4) ການເຜີຍແຜ່ພາລະບົດບາດ ແລະ ໜ້າທີ່ຂອງສູນຍັງບໍ່ທັນກວ້າງຂວາງເທົ່າທີ່ຄວນຈຶ່ງເຮັດໃຫ້ຫຼາຍພາກສ່ວນພາຍໃນຂະແໜງການສຶກສາ ແລະ ກິລາ ຍັງບໍ່ເຂົ້າໃຈກ່ຽວກັບວຽກງານຂອງສູນຊີແມວ ຊີອີດີ.
5) ການປະຕິບັດວຽກງານຂອງສູນຍັງພົບຄວາມຫຍຸ້ງຍາກເນື່ອງຈາກວ່າພະນັກງານຂອງສູນ ຊີແມວ ຊີອີດີ ຍັງບໍ່ຄົບຕາມຕຳແໜ່ງງານ ແລະ ງົບປະມານເຄື່ອນໄຫວກິດຈະກຳຂອງສູນຍັງຈຳກັດ.

- **ວຽກງານການສຶກສາເພື່ອພັດທະນາຊຸມຊົນຂົງເຂດອາຊີຕາເວັນອອກສຽງໃຕ້**

1) ສຳເລັດພິທີເປີດສູນການສຶກສາເພື່ອພັດທະນາຊຸມຊົນຂົງເຂດອາຊີຕາເວັນອອກສຽງໃຕ້ ແລະ ຈັດກອງປະຊຸມຄະນະຜູ້ບໍລິຫານງານສູນ;
2) ສຳເລັດການຈັດກອງປະຊຸມສາກົນໃນຫົວຂໍ້ການສຶກສາຢູ່ຊຸມຊົນຊົນນະບົດຂອງປະເທດຂົງເຂດແມ່ນ້ຳຂອງ ຄັ້ງວັນທີ 24-28 ກັນຍາ 2018.
3) ສຳເລັດການຈັດຝຶກອົບຮົມໃນຫົວຂໍ້ "ສ້າງຄວາມເຂັ້ມແຂງດ້ານເຕັກໂນໂລຊີຂໍ້ມູນຂ່າວສານໃຫ້ພະນັກງານ;
4) ສຳເລັດປະຕິບັດໂຄງການຄົ້ນຄວ້າລະດັບພາກພື້ນ ໃນຫົວຂໍ້ "ການຮຽນຮູ້ຕະຫລອດຊີວິດ ສຳລັບກຸ່ມຊົນເຜົ່າໃນບັນດາປະເທດລຸ່ມແມ່ນ້ຳຂອງ" ຢູ່ເມືອງໂພນໄຊ, ແຂວງຫຼວງພະບາງ ໂດຍລົງເລິກກ່ຽວກັບການຍົກລະດັບການຮຽນ ແລະ ການຝຶກອົບຮົມວິຊາຊີບຂອງຊຸມຊົນ ກຸ່ມຊົນເຜົ່າຕ່າງໆ ໃນໄລຍະເດືອນ 11/2018-3/2019.

5) ສຳເລັດການຈັດກອງປະຊຸມສາກົນເພື່ອວາງແຜນພັດທະນາໂຮງຮຽນທີ່ຕັ້ງຢູ່ເຂດຊາຍແດນ ລະຫວ່າງ ປະເທດ ສະມາຊິກຊີແມວໃນຫົວຂໍ້ "ແກ້ໄຂອຸປະສັກເພື່ອຮ່ວມກັນພັດທະນາ" ໃນຄັ້ງວັນທີ 1-4 ເມສາ 2019 ທີ່ນະຄອນຫຼວງວຽງຈັນ

**10.6.3 ແຜນວຽກບູລິມະສິດ ສຳລັບປີ 2020**

1) ສືບຕໍ່ການຄົ້ນຄວ້າການເຊັນສັນຍາຮ່ວມມືສອງຝ່າຍ ລະຫວ່າງ ກະຊວງສຶກສາທິການ ແລະ ກິລາ ກັບ ກະຊວງສຶກສາ ແລະ ກິລາ ກັບບັນດາປະເທດຕ່າງໆ ໃນປີ 2020.
2) ເຂົ້າຮ່ວມກອງປະຊຸມ ເຈົ້າໜ້າທີ່ອາວຸໂສສຶກສາອາຊຽນ ແລະ ກອງປະຊຸມລັດຖະມົນຕີກິລາອາຊຽນ ໃນເດືອນ ຕຸລາ 2019 ທີ່ປະເທດ ຟີລິບປິນ ແລະ ກອງປະຊຸມ ລັດຖະມົນຕີສຶກສາອາຊີຕາເວັນອອກສ່ຽງໃຕ້ ຄັ້ງທີ 50 ທີ່ ປະເທດມາເລເຊຍ.
3) ເປັນເຈົ້າພາບຈັດກອງປະຊຸມກິລາອາຊຽນ ASEAN Sport SEA Forum ໃນຕົ້ນປີ 2020 ທີ່ແຂວງຫຼວງພະບາງ.
4) ປັບປຸງ, ຄົ້ນຄ້ວາ, ຕິດຕາມ, ຊຸກຍູ້ການເຊັນສັນຍາກັບຕ່າງປະເທດ ທີ່ໄດ້ສະເໜີມາໃຫ້ເຂົ້າສູ່ກົນໄກ ລະບົບປະຕູດຽວເພື່ອໃຫ້ມີທ່າແຮງ ແລະ ສະດວກຕໍ່ການຈັດຕັ້ງປະຕິບັດບັນດາສັນຍາຕ່າງໆ ດ້ານການສຶກສາ ແລະ ກິລາ ສາມາດດຶງດູດໃຫ້ມີການຮ່ວມມືຫຼາຍຂຶ້ນ.

- **ວຽກງານການສຶກສາເພື່ອພັດທະນາຊຸມຊົນຂົງເຂດອາຊີຕາເວັນອອກສຽງໃຕ້**

1) ສະຫຼຸບ-ລາຍງານຜົນຂອງກອງປະຊຸມສາກົນ ເພື່ອວາງແຜນພັດທະນາໂຮງຮຽນທີ່ຕັ້ງຢູ່ເຂດຊາຍແດນລະຫວ່າງປະເທດສະມາຊິກຊີແມວໃນຫົວຂໍ້ "ແກ້ໄຂອຸປະສັກເພື່ອຮ່ວມກັນພັດທະນາ" ໃຫ້ສຳເລັດ;
2) ສະຫຼຸບ-ລາຍງານ ຜົນຂອງການເກັບກຳຂໍ້ມູນຄວາມຕ້ອງການຂອງໂຮງຮຽນ, ຜູ້ອຳນວຍການ, ຄູສອນ, ຄະນະພັດທະນາການສຶກສາຂັ້ນບ້ານ, ແລະ ຊຸມຊົນຂອງໂຮງຮຽນເຂດຊາຍແດນປະເທດ ສະມາຊິກຊີແມວ;
3) ສົມທົບກັບສູນຊີແມວຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນປະເທດ ຈັດຕັ້ງປະຕິບັດກິດຈະກຳເສີມສ້າງຄວາມສາມາດໃຫ້ໂຮງຮຽນຢູ່ເຂດຊາຍແດນ (ຄູ ແລະນັກຮຽນ) ທາງດ້ານການສິດສອນ ແລະ ການຮຽນພາກປະຕິບັດຕົວຈິງ ກ່ຽວກັບວິທະຍາສາດ ແລະ ຊຸມຊົນໂຮງຮຽນ (ຄະນະພັດທະນາການສຶກສາຂັ້ນບ້ານ) ໃນການຊີ້ນຳ, ຕິດຕາມ ແລະ ປະເມີນຜົນ ການພັດທະນາການສຶກສາຂອງໂຮງຮຽນ;
4) ຮ່ວມມືກັບສູນ ຊີແມວ INNOTECH ລິເລີ່ມໂຄງການ "ສ້າງຄວາມເຂັ້ມແຂງໃນການຮ່ວມມືລະຫວ່າງໂຮງຮຽນ ແລະ ຊູມຊົນສຳລັບພັດທະນາຄຸນນະພາບການສຶກສາ ແລະການຮຽນຮູ້ຕະຫຼອດຊີວິດ ຢູ່ອາຊີຕາເວັນອອກສ່ຽງໃຕ້".
5) ສືບຕໍ່ປະສານງານ ແລະ ເຊັນສັນຍາຮ່ວມມືກັບຄູ່ຮ່ວມພັດທະນາໃນຂົງເຂດພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນ ສູນຄົ້ນຄວ້າ ແລະ ຝຶກອົບຮົມການສຶກສາຢູ່ເຂດຊົນນະບົດຂອງອົງການຢູແນສໂກ ຢູ່ ສປ ຈີນ.
6) ກະກຽມກອງປະຊຸມຜູ້ບໍລິຫານສູນຊີແມວຊີອີດີ ຄັ້ງທີ 2 ແລະ ກອງປະຊຸມສາກົນໃນຫົວຂໍ້ "ການພັດທະນາການສຶກສາຂອງຊຸມຊົນຢູ່ຂົງເຂດອາຊີຕາເວັນອອກສ່ຽງໃຕ້" ທີ່ແຂວງຫຼວງພະບາງ ໃນທ້າຍເດືອນສິງຫາ 2019.

## 10.7 ວຽກງານ ICT

**10.7.1 ຜົນສຳເລັດ**

1) ສຳເລັດການຈັດຕັ້ງປະຕິບັດແຜນຂະຫຍາຍລະບົບເຄືອຂ່າຍຂອງຂະແໜງການສຶກສາ ແລະ ກິລາ ປີ 2018 ເພື່ອເຊື່ອມຈອດອາຄານອ້ອມຂ້າງສຳນັກກະຊວງ 9 ຈຸດ, ສູນໄອຊີທີ 18 ແຂວງ, ໂຮງຮຽນມັດທະຍົມອ້ອມຂ້າງ 26 ແຫ່ງ ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ 18 ແຫ່ງ;
2) ສຳເລັດການສະໜອງພື້ນຖານໂຄງລ່າງໄອຊີທີ ໃຫ້ແກ່ການຄຸ້ມຄອງນຳໃຊ້ລະບົບຖານຂໍ້ມູນ ສຳລັບການຄຸ້ມຄອງບໍລິຫານການສຶກສາ ແລະ ກິລາ ເຊັ່ນ: ລະບົບຖານຂໍ້ມູນໂຮງຮຽນ Lao EMIS, ລະບົບຖານຂໍ້ມູນບຸກຄະລາກອນ PMIS, ລະບົບຖານຂໍ້ມູນເງິນເດືອນ WMIS, ລະບົບຖານຂໍ້ມູນຄຸ້ມຄອງ ການນຳໃຊ້ເງິນບໍລິຫານໂຮງຮຽນ SBGWBS, ລະບົບຖານຂໍ້ມູນຄຸ້ມຄອງຊັບສິນ ແລະ ອື່ນໆ.

3) ສໍາເລັດການສ້າງຂີດຄວາມສາມາດການສຶກສາທາງໄກສໍາລັບ ສປປ ລາວ ໂດຍມີພະນັກງານວິຊາການ, ຄູຝຶກ ແລະ ຄູສອນ ໄດ້ຮັບການຝຶກອົບຮົມຈໍານວນ 150 ຄົນ ແລະ ມີວີດີໂອສື່ການຮຽນ-ການສອນ ແບບເອເລັກໂຕນິກ 6 ວິຊາຫຼັກ (ຄະນິດສາດ, ຟີຊິກສາດ, ເຄມີສາດ, ຊີວະສາດ, ພາສາອັງກິດ ແລະ ໄອຊີທີ) ຈໍານວນ 40 ບົດ ໄດ້ຮັບການພັດທະນາໂດຍພື້ນຖານສໍາເລັດ 90%;
4) ສໍາເລັດການຈັດຕັ້ງປະຕິບັດໂຄງການປັບປຸງລະບົບ ການຮຽນ-ການສອນແບບເອເລັກໂຕຣນິກ ໂດຍທຶນລັດຖະບານກູ້ຢືມຈາກປະເທດ ໂອຕຣິສ, ໄລຍະເວລາໂຄງການ 18 ເດືອນ.
5) ສໍາເລັດໂຄງການພັດທະນາການສຶກສາໂດຍນໍາໃຊ້ນະວັດຕະກໍາໄອຊີທີ ເພື່ອສົ່ງເສີມການອ່ານພາສາລາວ, ການຂຽນ, ການຟັງ ແລະ ການຮຽນຮູ້ຂ່າວສານອື່ນໆ ໂດຍການຮ່ວມມືກັບອົງການ Aide et Action Laos ຢູ່ 5 ໂຮງຮຽນ ໃນ 3 ເມືອງຂອງແຂວງວຽງຈັນ.

### 10.7.2 ບັນຫາ ແລະ ສິ່ງທ້າທາຍ:

1) ການເຜີຍແຜ່ຂໍ້ມູນຂ່າວສານທີ່ເປັນປະໂຫຍດທາງເວັບໄຊຂອງຂະແໜງການທີ່ພັດທະນາຂຶ້ນ ຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ, ບັນດານິຕິກໍາທີ່ເອົາລົງໃນເວັບໄຊ ໃຫ້ຜູ້ຊົມໃຊ້ໄດ້ຮັບຮູ້ຍັງບໍ່ກວ້າງຂວາງ ເທົ່າທີ່ຄວນ;
2) ການນໍາໃຊ້ລະບົບອີເມວຂອງຂະແໜງການ ທີ່ພັດທະນາຂຶ້ນມານັ້ນ ຍັງບໍ່ກວ້າງຂວາງ ແລະ ບໍ່ມີປະສິດທິຜົນເທົ່າທີ່ຄວນ, ຈໍານວນຜູ້ຊົມໃຊ້ຕົວຈິງຍັງມີໜ້ອຍ;
3) ຂາດງົບປະມານໃນການບໍາລຸງຮັກສາພື້ນຖານໂຄງລ່າງໄອຊີທີ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະງົບປະມານສ້ອມແປງ-ປ່ຽນຖ່າຍອຸປະກອນໄອຊີທີທີ່ຈໍາເປັນ.
4) ການຄຸ້ມຄອງ ແລະ ສົ່ງເສີມການນໍາໃຊ້ສູນ ICT ໃນຂອບເຂດທົ່ວປະເທດຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ.

### 10.7.3 ແຜນວຽກບູລິມະສິດ ສໍາລັບປີ 2020

1) ສ້າງທັກສະ ແລະ ຄວາມຮູ້ພື້ນຖານ ທາງດ້ານໄອຊີທີ ໃຫ້ແກ່ຄູສອນ ແລະ ຜູ້ບໍລິຫານການສຶກສາ ແລະ ສ້າງວິຊາການໄອຊີທີຂອງຂະແໜງການທັງສູນກາງ ແລະ ທ້ອງຖິ່ນໃຫ້ເປັນຜູ້ຊ່ຽວຊານທາງດ້ານໄອຊີທີ.
2) ບໍາລຸງຮັກສາ ແລະ ຂະຫຍາຍພື້ນຖານໂຄງລ່າງໄອຊີທີສໍາລັບການສຶກສາ ແລະ ກິລາ ໃຫ້ທົ່ວເຖິງ ແຕ່ສູນກາງຮອດທ້ອງຖິ່ນ ແລະ ໃນສະຖາບັນການສຶກສາ ທຸກຊັ້ນທຸກສາຍ ເທື່ອລະກ້າວ;
3) ສືບຕໍ່ນໍາສະເໜີ ແລະ ກະກຽມຈັດຕັ້ງປະຕິບັດໂຄງການສຶກສາທາງໄກໂດຍທຶນຊ່ວຍເຫຼືອລ້າຂອງ ສປ ຈີນ;
4) ສືບຕໍ່ຈັດຕັ້ງປະຕິບັດ ພ້ອມທັງຕິດຕາມ ແລະ ປະເມີນຜົນ ລະບົບການຮຽນການສອນ ແລະ ການຄຸ້ມຄອງບໍລິຫານໂຮງຮຽນ ແບບເອເລັກໂຕຼນິກ ທີ່ພັດທະນາພາຍໃຕ້ໂຄງການປັບປຸງລະບົບການຮຽນ-ການສອນແບບເອເລັກໂຕຼນິກ ທຶນກູ້ຢືມບໍ່ມີດອກເບ້ຍ ຈາກປະເທດໂອຕຼິດ ໃຫ້ສໍາເລັດ ແລະ ມີປະສິດທິຜົນ;
5) ສືບຕໍ່ຈັດຕັ້ງປະຕິບັດໂຄງການພັດທະນາການສຶກສາ ໂດຍນໍາໃຊ້ນະວັດຕະກໍາໄອຊີທີເພື່ອສົ່ງເສີມ ການອ່ານພາສາລາວ, ການຂຽນ, ການຟັງ ແລະ ການຮຽນຮູ້ຂ່າວສານອື່ນໆ ໄລຍະທີ 2 ໂດຍການຮ່ວມມື ກັບອົງການ Aide et Action Laos.

## 10.8 ວຽກງານຫ້ອງການເລຂາຄະນະກໍາມາທິການແຫ່ງຊາດລາວເພື່ອອຸຍແນສໂກ

### 10.8.1 ຜົນສໍາເລັດ

1) ສົມທົບກັບກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວນໍາສະເໜີທົ່ງໄຫຫີນ ເຂົ້າເປັນມໍລະດົກໂລກ ຊຶ່ງຖືກຮັບຮອງໃຫ້ເປັນມໍລະດົກໂລກ ຢ່າງເປັນທາງການໃນກອງປະຊຸມ ຄະນະກໍາມະການມໍລະດົກໂລກຄັ້ງທີ 43 ທີ່ນະຄອນຫຼວງບາກູ, ສາທາລະນະລັດ ອາແຊກໃບຊານ.
2) ຈັດຕັ້ງເຜີຍແຜ່ເນື້ອໃນ ແລະ ວິທີການສອດແຊກການສຶກສາພົນລະເມືອງໂລກເຂົ້າໃນການຮຽນ-ການສອນໃຫ້ ແກ່ຜູ້ອໍານວຍການ ແລະ ຄູສອນ ຊຶ່ງນອນຢູ່ໃນຈຸດສຸມ 4.7 ຂອງເປົ້າໝາຍ SDGs 2 ຄັ້ງ.
3) ຝຶກອົບຮົມການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນທຸກຂະແໜງການວຽກງານ ສໍາລັບ 8 ແຂວງພາກໃຕ້ ແລະ 7 ແຂວງພາກເໜືອ ສົມທົບກັບສູນກາງສະຫະພັນແມ່ຍິງລາວ;

4) ສໍາເລັດການແປເອກະສານ ບົດລາຍງານການຕິດຕາມການສຶກສາໂລກ 2019 (GEMR 2019) ຂອງອົງການອຸຍ ແນສໂກ.

**10.8.2 ບັນຫາ ແລະ ສິ່ງທ້າທາຍ**

1) ຍ້ອນຫຼາຍພາກສ່ວນຍັງບໍ່ທັນເຂົ້າໃຈ ແລະ ກໍາໄດ້ພາລະບົດບາດຂອງ ຫ້ອງການເລຂາຄະນະກໍາມາທິການແຫ່ງຊາດລາວເພື່ອອຸຍແນສໂກ ຈຶ່ງເຮັດໃຫ້ການປະສານງານກັບພາກສ່ວນຕ່າງໆ ບາງຄັ້ງກໍຍັງມີຄວາມຫຍຸ້ງຍາກ ແລະ ຊັກຊ້າ;
2) ກົນໄກໃນການຕິດຕາມເອົາບົດລາຍງານກັບບັນດາພະນັກງານຈາກພາກສ່ວນຕ່າງໆ ທີ່ທາງຫ້ອງການຫ້ອງການເລຂາຄະນະກໍາມາທິການແຫ່ງຊາດລາວເພື່ອອຸຍແນສໂກ ໄດ້ນໍາສົ່ງໄປຮ່ວມກອງປະຊຸມ ຫຼື ຝຶກອົບຮົມໃນລະດັບພາກພື້ນ ແລະ ສາກົນ ຍັງບໍ່ທັນຄ່ອງຕົວ ເຮັດໃຫ້ບໍ່ສາມາດສັງລວມຂໍ້ມູນ ແລະ ເນື້ອໃນຂອງແຕ່ລະກອງປະຊຸມ ເພື່ອລາຍງານໃຫ້ຂັ້ນເທິງຊາບ;
3) ບັນດາກະຊວງຕ່າງໆ ທີ່ກ່ຽວຂ້ອງກັບຂະແໜງວິຊາສະເພາະຂອງອຸຍແນສໂກ ຍັງບໍ່ເຫັນຄວາມສໍາຄັນເທົ່າທີ່ຄວນ ໃນການຂຶ້ນແຜນງົບປະມານ ເພື່ອເຂົ້າຮ່ວມກອງປະຊຸມລະດັບພາກພື້ນ ແລະ ສາກົນ ທີ່ອົງການອຸຍແນສໂກຈັດຂຶ້ນໃນທຸກໆປີ.

**10.8.3 ແຜນວຽກບູລິມະສິດ ສໍາລັບປີ 2020**

1) ສືບຕໍ່ສົມທົບກັບກົມການສຶກສານອກໂຮງຮຽນ ແລະ ຄະນະກໍາມາທິການແຫ່ງຊາດເກົາຫຼີເພື່ອອຸຍແນສ ໂກ ປ້ອງກັນໂຄງການ UNESCO National Commission Partnership Programme for Sustainable Development Goal 4, ແຕ່ 2020-2024 ໃນວົງເງິນໜຶ່ງລ້ານໂດລາສະຫະລັດ;
2) ສືບຕໍ່ປະສານງານກັບກະຊວງທີ່ກ່ຽວຂ້ອງ ເພື່ອສະເໜີລໍາວົງລາວ ແລະ ລາຍນາກ ເຂົ້າເປັນມໍລະດົກໂລກ;

## 10.9 ວຽກງານສາມສ້າງ

**10.9.1 ຜົນສໍາເລັດ**

1) ສ້າງນິຕິກໍາວ່າດ້ວຍການຫັນເອົາພະນັກງານລົງກໍ່ສ້າງຮາກຖານ ຂອງຂະແໜງການສຶກສາ ແລະ ກິລາ;
2) ສ້າງນິຕິກໍາວ່າດ້ວຍການຊຸບຊ້ອນພະນັກງານລົງກໍ່ສ້າງຮາກຖານຢູ່ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ກຸ່ມໂຮງຮຽນ ໃນ 40 ເມືອງເປົ້າໝາຍ ຂອງໂຄງການ ຍົກສູງຄຸນນະພາບການສຶກສາ ແລະ ກິລາ ຢູ່ເຂດຫ່າງໄກສອກຫຼີກ;
3) ສໍາເລັດການຈັດຝຶກອົບຮົມ ແລະ ນໍາສົ່ງພະນັກງານລົງກໍ່ສ້າງຮາກຖານຢູ່ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ກຸ່ມໂຮງຮຽນໃນ 40 ເມືອງເປົ້າໝາຍ ທັງໝົດມີ 138 ສະຫາຍ;
4) ສໍາເລັດການສ້າງ ແລະ ເຜີຍແຜ່ມາດຕະຖານ 3 ສ້າງຂງຂະແໜງການສຶກສາ ແລະ ກິລາ ໃຫ້ຜູ້ບໍລິຫານ, ພະນັກງານ, ຄູ-ອາຈານສອນຢູ່ບັນດາແຂວງ, ເມືອງ ແລະ ກຸ່ມໂຮງຮຽນຈໍານວນໜຶ່ງໃນເມືອງເປົ້າໝາຍຂອງໂຄງການ;
5) ສະໜອງອຸປະກອນຮັບໃຊ້ວຽກບໍລິຫານໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາ ໃນ 40 ເມືອງເປົ້າໝາຍຂອງໂຄງການ;
6) ບັນດາຫ້ອງການ, ກົມ, ສະຖາບັນ ແລະ ສູນ ໄດ້ເອົາໃຈໃສ່ລົງຊຸກຍູ້ຕິດຕາມພະນັກງານລົງກໍ່ສ້າງຮາກຖານ ແລະ ຊ່ວຍເຫຼືອທາງດ້ານວິຊາການ;
7) ພະແນກສຶກສາທິການ ແລະກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ ແລະ ອໍານາດການປົກຄອງທ້ອງຖິ່ນໄດ້ອໍານວຍຄວາມສະດວກພາຫະນະ, ທີ່ພັກ ແລະ ອຸປະກອນຮັບໃຊ້ ຊີວິດປະຈໍາວັນ ທີ່ຈໍາເປັນຈໍານວນໜຶ່ງ ແລະ ເອົາໃຈໃສ່ໃນການຊຸກຍູ້ຕິດຕາມພະນັກງານລົງກໍ່ສ້າງຮາກຖານ;

8) ຈັດກອງປະຊຸມຖອດຖອນບົດຮຽນໃຫ້ແກ່ພະນັກງານລົງກໍ່ສ້າງຮາກຖານ 6 ເດືອນຕົ້ນປີ 2019 ເພື່ອສະຫຼູບຕີລາຄາການຈັດຕັ້ງປະຕິບັດໂຄງການ ແລະ ຖອດຖອນບົດຮຽນກ່ຽວກັບການຫັນເອົາພະນັກງານລົງກໍ່ສ້າງຮາກຖານ.

### 10.9.2 ສິ່ງທ້າທາຍ

1) ຄຽງຄູ່ກັບຜົນສໍາເລັດເຫັນໄດ້ວ່າຍັງມີບາງບັນຫາຄື: ການເຜີຍແຜ່ ແລະ ການຜັນຂະຫຍາຍມາດຕະຖານ 3 ສ້າງຍັງບໍ່ທັນທົ່ວເຖິງ ເນື່ອງຈາກວ່າບາງແຂວງບໍ່ໄດ້ກໍານົດວຽກງານ 3 ສ້າງ ເຂົ້າໃນຂອບພັດທະນາການສຶກສາ ແລະ ກິລາ ແລະ ຍັງບໍ່ທັນເຂົ້າໃຈເລິກເຊິ່ງກ່ຽວກັບມາດຕະຖານ 3 ສ້າງ ແລະ ງົບປະມານໃນການຈັດຕັ້ງປະຕິບັດ ແລະ ຊຸກຍູ້ຕິດຕາມກໍຍັງມີຈໍາກັດ.
2) ພະນັກງານລົງກໍ່ສ້າງຮາກຖານມີຄວາມຮູ້ຄວາມສາມາດທີ່ແຕກຕ່າງກັນ, ຈໍານວນໜຶ່ງມີປະສົບການຈໍາກັດກ່ຽວກັບການວາງແຜນພັດທະນາການສຶກສາ ແລະ ກິລາ, ຈໍານວນໜຶ່ງຍັງຕ້ອງໄດ້ສຶກສາຮຽນຮູ້ນໍາທ້ອງຖິ່ນເນື່ອງຈາກວ່າເປັນວຽກໃໝ່, ບວກກັບອຸປະກອນຮັບໃຊ້ທີ່ຈໍາເປັນ ແລະ ງົບປະມານຍັງຈໍາກັດ ຈຶ່ງເຮັດໃຫ້ການປະຕິບັດບາງວຽກງານພົບຄວາມຫຍຸ້ງຍາກ;
3) ໃນບາງເມືອງສະຖານທີ່ເຮັດວຽກ, ບ່ອນຢູ່ພັກເຊົາ ແລະ ສິ່ງອໍານວຍຄວາມສະດວກຕ່າງໆຍັງມີຄວາມຫຍຸ້ງຍາກ ແລະ ຍັງບໍ່ທັນຕອບສະໜອງຕາມຄວາມເໝາະສົມ;

### 10.9.3 ແຜນວຽກບູລິມະສິດ ສໍາລັບປີ 2020

1) ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໂຄງການຍົກສູງຄຸນນະພາບການສຶກສາ ແລະ ກິລາ ຢູ່ເຂດຫ່າງໄກສອກຫຼີກ ໃນ 40 ເມືອງເປົ້າໝາຍຂອງໂຄງການ ທີ່ຕິດພັນກັບວຽກງານ 3 ສ້າງ;
2) ສະຫຼູບການຫັນເອົາພະນັກງານລົງກໍ່ສ້າງຮາກຖານ ໄລຍະ 09 ເດືອນ ແລະ 02 ປີ ແລະ ກະກຽມຄັດເລືອກບຸກຄະລາກອນທີ່ຈະລົງໄປກໍ່ສ້າງຮາກຖານຊຸດທີ II ແລະ ບັນດາຫ້ອງການ, ກົມ, ສະຖາບັນ, ພະແນກສຶກສາທິການ ແລະ ກິລາແຂວງ/ຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ສືບຕໍ່ລົງຊຸກຍູ້ຕິດຕາມພະນັກງານລົງກໍ່ສ້າງຮາກຖານຊຸດທີ II ພ້ອມທັງຊ່ວຍຊີ້ນໍາ-ນໍາພາການຈັດຕັ້ງ ປະຕິບັດໂຄງການຢ່າງເປັນປົກກະຕິ;
3) ສືບຕໍ່ເຜີຍແຜ່ ແລະ ຈັດຕັ້ງປະຕິບັດມາດຕະຖານ 3 ສ້າງຂອງຂະແໜງການສຶກສາ ແລະ ກິລາໃຫ້ທົ່ວເຖິງ;
4) ສ້າງເຄື່ອງມື ເພື່ອລົງຊຸກຍູ້ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດມາດຕະຖານ 3 ສ້າງໃນຂັ້ນແຂວງ, ເມືອງ ແລະ ກຸ່ມໂຮງຮຽນ;
5) ສະຫຼູບຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານ 3 ສ້າງຂອງຂະແໜງສຶກສາ ແລະ ກິລາປະຈໍາປີ;
6) ສະຫຼູບຜົນການຫັນລົງກໍ່ສ້າງຮາກຖານໄລຍະ 09 ເດືອນ ໂດຍໃຫ້ມີການປະເມີນຜົນ ແລະ ການຍ້ອງຍໍພະນັກງານພື້ນຖານ ແລະ ພາກສ່ວນທີ່ເຂົ້າຮ່ວມໃນການປະຕິບັດກິດຈະກໍາຕ່າງໆ;
7) ຈັດກອງປະຊຸມຖອດຖອນບົດຮຽນໃຫ້ແກ່ພະນັກງານລົງກໍ່ສ້າງຮາກຖານ 6 ເດືອນຕົ້ນປີ ແລະ 6 ເດືອນທ້າຍປີ 2020 ເພື່ອສະຫຼູບຕີລາຄາການຈັດຕັ້ງປະຕິບັດໂຄງການ ແລະ ຖອດຖອນບົດຮຽນ ກ່ຽວກັບການຫັນເອົາພະນັກງານລົງກໍ່ສ້າງຮາກຖານ;

# XI. ການສຶກສາຮຽນຮ່ວມ

## 11.1. ຜົນສໍາເລັດ

ເພື່ອສົ່ງເສີມເດັກກຸ່ມດ້ອຍໂອກາດ ໃຫ້ໄດ້ເຂົ້າເຖິງການສຶກສາຕາມຈຸດປະສົງ, ເປົ້າໝາຍ ແລະ ຄາດໝາຍທີ່ວາງໄວ້ໃນແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ VIII (2016-2020) ການສຶກສາຮຽນຮ່ວມໄດ້ມີຜົນສໍາເລັດບາງວຽກທີ່ພົ້ນເດັ່ນດັ່ງນີ້: ໃນສົກຮຽນ 2018-2019 ວຽກງານການສຶກສາຮຽນຮ່ວມ-ການສຶກສາພິເສດ ແລະ ການສຶກສາຊົນເຜົ່າ ມີນັກຮຽນພິການເບົາໄດ້ເຂົ້າຮຽນຮ່ວມໃນໂຮງຮຽນທົ່ວໄປນັບມື້ນັບຫຼາຍຂຶ້ນ ແລະ ນັກຮຽນພິການໜັກ (ຫູໜວກ-ປາກກືກ) ແລະ ເດັກພິການທາງດ້ານການເບິ່ງເຫັນ (ຕາບອດສະນິດ) ໄດ້ເຂົ້າຮຽນໃນໂຮງຮຽນສຶກສາພິເສດທັງສອງແຫ່ງເພີ່ມຂຶ້ນ. ເພື່ອເປັນການຂະຫຍາຍໂອກາດໃຫ້ເດັກພິການໜັກ ໄດ້ເຂົ້າຮຽນເພີ່ມຂຶ້ນ. ໃນສົກຮຽນ 2018-2019 ກະຊວງສຶກສາທິການ ແລະ ກິລາ ໄດ້ແບ່ງປັນໂຄຕ້າໂດຍການສະໜອງເບ້ຍລ້ຽງໃຫ້ແຕ່ລະແຂວງສໍາລັບນັກຮຽນພິການໜັກ ເພື່ອສົ່ງນັກຮຽນພິການໜັກເຂົ້າຮຽນໃນໂຮງຮຽນສຶກສາພິເສດທັງສອງແຫ່ງ, ໄດ້ສໍາເລັດໂຄງການປຸກສ້າງໂຮງຮຽນສຶກສາພິເສດ ນະຄອນຫຼວງວຽງຈັນ ຊຶ່ງໃນພາກຮຽນ II ສົກຮຽນ 2018-2019 ໂຮງຮຽນດັ່ງກ່າວ ສາມາດຈັດການຮຽນ-ການສອນຢ່າງເປັນປົກກະຕິ. ໃນສົກຮຽນ 2018-2019 ມີຈໍານວນນັກຮຽນພິການໜັກໄດ້ເຂົ້າຮຽນໃນໂຮງຮຽນສຶກສາພິເສດ ຈໍານວນ 169 ຄົນ, ຍິງ 75 ຄົນ. ນອກຈາກນັ້ນ, ກະຊວງສຶກສາທິການ ແລະ ກິລາ ໄດ້ຊຸກຍູ້ ແລະ ສົ່ງເສີມໃຫ້ຄະນະເຄືອຂ່າຍການສຶກສາຮຽນຮ່ວມ ຂັ້ນກະຊວງ, ມະຫາວິທະຍາໄລ, ວິທະຍາໄລຄູ, ຂັ້ນແຂວງ ແລະ ຂັ້ນເມືອງ ຮ່ວມມືກັບກະຊວງອ້ອມຂ້າງ, ບັນດາສະມາຄົມຄົນພິການປະເພດຕ່າງໆ, ມູນນິທິ ແລະ ອົງການຈັດຕັ້ງສາກົນທີ່ເຮັດວຽກກ່ຽວກັບການສຶກສາສໍາລັບຄົນພິການໃນວຽກງານໂຄ ສະນາເຜີຍແຜ່, ພັດທະນານິຕິກໍາ, ເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ຕ່າງປະເທດ, ຈັດກອງປະຊຸມສ້າງຂີດຄວາມສາມາດໃຫ້ແກ່ຜູ້ບໍລິຫານ, ຄູສອນໃນໂຮງຮຽນສຶກສາພິເສດ ແລະ ໂຮງຮຽນທົ່ວໄປທີ່ມີນັກຮຽນພິການເຂົ້າໄປຮຽນຮ່ວມໃນທົ່ວປະເທດ.

ວຽກງານການສຶກສາຊົນເຜົ່າ : ໃນສົກຮຽນ 2018-2019 ມີໂຮງຮຽນສາມັນກິນນອນຊົນເຜົ່າທັງໝົດ 23 ແຫ່ງ, ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ 02 ແຫ່ງ, ຂຶ້ນກັບແຂວງ 15 ແຫ່ງ ແລະ ຂຶ້ນກັບເມືອງ 06 ແຫ່ງ, ໃນນັ້ນ ມີນັກຮຽນທັງໝົດ 8.874 ຄົນ, ຍິງ 3.987 ຄົນ ໃນນັ້ນຈະເຫັນໄດ້ຄວາມແຕກໂຕນລະຫວ່າງການເຂົ້າຮຽນຂອງນັກຮຽນຊົນເຜົ່າໃນແຕ່ລະໝວດພາສາ ເຊັ່ນ : ໝວດພາສາລາວ-ໄຕ ລວມ 1.555 ຄົນ ຍິງ 834 ຄົນ ຊາຍ 721 ຄົນ, ໝວດພາສາມອນ-ຂະແມ ລວມ 4.990 ຄົນ ຍິງ 2.318, ຊາຍ 2.672 ຄົນ, ໝວດພາສາມົ້ງ-ອິວມຽນ ລວມ 1.485 ຄົນ, ຍິງ 529 ຄົນ, ຊາຍ 956 ຄົນ ແລະ ໝວດຈີນ-ຕິເບດ ລວມ 951 ຄົນ, ຍິງ 413 ຄົນ, ຊາຍ 538 ຄົນ ນອກຈາກນັ້ນ, ໄດ້ຈັດກອງປະຊຸມຖອດຖອນບົດຮຽນກ່ຽວກັບກັບການຄຸ້ມຄອງ-ບໍລິຫານໂຮງຮຽນສາມັນກິນນອນຊົນເຜົ່າທົ່ວປະເທດ ເພື່ອສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານ ແລະ ຄູສອນ ພ້ອມທັງວາງແຜນໃນສົກຮຽນຕໍ່ໄປ.

**ຕາຕະລາງທີ 10: ນັກຮຽນໃນໂຮງຮຽນສາມັນກິນນອນຊົນເຜົ່າທົ່ວປະເທດທີ່ໄປຕໍ່ວິຊາຊີບ ໃນສົກຮຽນ 2018-2019**

| ລ/ດ | | ຊັ້ນຮຽນ | ລວມ | ຍິງ | ຊາຍ |
|---|---|---|---|---|---|
| 1 | I. | ຊັ້ນຕົ້ນ | 45 | 20 | 25 |
| 2 | | ຊັ້ນກາງ | 22 | 6 | 16 |
| 3 | | ຊັ້ນສູງ | 0 | 0 | 0 |
| 1 | II. | ຊັ້ນຕົ້ນ | 0 | 0 | 0 |
| 2 | | ຊັ້ນກາງ | 31 | 11 | 20 |
| 3 | | ຊັ້ນສູງ | 36 | 19 | 17 |
| 4 | | ປະລິນຍາຕີ | 127 | 51 | 76 |
| 5 | | ອື່ນໆ | 0 | 0 | 0 |
| | | **ລວມ** | **261** | **107** | **154** |

ວຽກງານອາຫານໃນໂຮງຮຽນ: ໃນເດືອນ ພຶດສະພາ 2019 ສຳເລັດການມອບໂອນວຽກງານອາຫານໃນໂຮງຮຽນ ໃນນັ້ນໄດ້ແຕ່ງຕັ້ງຄະນະຮັບຜິດຊອບມອບໂອນ ນັບແຕ່ຂັ້ນສູນກາງຮອດທ້ອງຖິ່ນ, ສຳເລັດ ແລະ ກຳລັງພັດທະນາ ນິຕິກຳ ຮັບຮອງວຽກງານອາຫານໃນໂຮງຮຽນເປັນຕົ້ນ : ຄຳສັ່ງແນະນຳການຟື້ນຟູກະສິກຳໃນສະຖານການສຶກສາ, ດຳລັດວ່າດ້ວຍງົບປະມານອາຫານໃນໂຮງຮຽນ, ຄູ່ມືການຈັດຕັ້ງປະຕິບັດວຽກງານອາຫານໃນໂຮງຮຽນ ແລະ ການສ້າງຄວາມເຂັ້ມແຂງໃຫ້ຄະນະຮັບຜິດຊອບວຽກງານອາຫານໃນໂຮງຮຽນທຸກຂັ້ນ. ໃນສົກຮຽນ 2018-2019 ນັກຮຽນລ້ຽງເດັກ, ອະນຸບານ ແລະ ປະຖົມ ໄດ້ກິນອາຫານທ່ຽງ ທັງໝົດ 105.607 ຄົນ.

## 11.2. ບັນຫາ ແລະ ສິ່ງທ້າທາຍ

1) ພະນັກງານທີ່ຮັບຜິດຊອບວຽກງານການສຶກສາຮຽນຮ່ວມ-ການສຶກສາພິເສດ ແລະ ການສຶກສາຊົນເຜົ່າ ຍັງຂາດຄວາມສາມາດ ແລະ ມີຂີດຈຳກັດທາງດ້ານວິຊາການສະເພາະດ້ານ.
2) ຜູ້ບໍລິຫານ, ພະນັກງານວິຊາການ, ຄູສອນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ຍັງຂາດຄວາມຮູ້, ຄວາມເຂົ້າໃຈ ແລະ ຈຳກັດ ກ່ຽວກັບວຽກງານການຄຸ້ມຄອງບໍລິຫານ ແລະ ວິທີການຈັດການຮຽນ-ການສອນແບບຮຽນຮ່ວມ ແລະ ການສຶກສາພິເສດ.
3) ການຈັດຕັ້ງປະຕິບັດວຽກງານອາຫານທ່ຽງໃນໂຮງຮຽນພາຍໃຕ້ງົບປະມານຂອງລັດ ຍັງມີຄວາມສ່ຽງ ແລະ ທ້າທາຍ ຕໍ່ປະຕິທິນການສຶກສາ ແລະ ການປະກອບສ່ວນເຂົ້າກິນຂອງຊຸມຊົນໃຫ້ໂຮງຮຽນ.
4) ການໂຄສະນາຂ່າວສານກ່ຽວກັບວຽກງານດັ່ງກ່າວຍັງບໍ່ມີຄວາມຍືນຍົງ ອີງໃສ່ແຕ່ງົບຂອງຜູ້ໃຫ້ທຶນ ແລະ ເຂດຫ່າງໄກສອກຫຼີກກໍ່ບໍ່ທົ່ວເຖິງ.

## 11.3. ແຜນວຽກບູລິມະສິດ ສຳລັບປີ 2020

1) ສືບຕໍ່ປັບປຸງ ແລະ ຂໍອະນຸມັດຮັບຮອງຍຸດທະສາດ ແລະ ຂອບແຜນປະຕິບັດງານ 2018-2025 ວ່າດ້ວຍການເລັ່ງລັດພັດທະນາການສຶກສາຮຽນຮ່ວມ ໃນລະບົບການສຶກສາ.
2) ສືບຕໍ່ປັບປຸງ ແລະ ຂໍອະນຸມັດຮັບຮອງຫຼັກການບໍລິຫານ-ຄຸ້ມຄອງໂຮງຮຽນສຶກສາພິເສດ.
3) ສືບຕໍ່ປັບປຸງ ແລະ ຂໍອະນຸມັດຮັບຮອງແຜນຍຸດທະສາດແຜນງານສົ່ງເສີມອາຫານໃນໂຮງຮຽນ 2019-2025.
4) ສືບຕໍ່ປັບປຸງ ແລະ ຂໍອະນຸມັດຮັບຮອງ ແຜນປະຕິບັດງານການສຶກສາສຳລັບຜູ້ຮຽນທີ່ເປັນຄົນພິການ, ຫຼັກການບໍລິຫານ-ຄຸ້ມຄອງໂຮງຮຽນສຶກສາພິເສດ;
5) ສືບຕໍ່ໂຄສະນາເຜີຍແຜ່ ແລະ ສ້າງຂີດຄວາມສາມາດດ້ານການຄຸ້ມຄອງ-ບໍລິຫານ ແລະ ວິທີການຈັດຕັ້ງ ການຮຽນ-ການສອນ ກ່ຽວກັບວຽກງານການສຶກສາຮຽນຮ່ວມ, ການສຶກສາພິເສດ ແລະ ການສຶກສາຊົນເຜົ່າ ໃຫ້ພະນັກງານທີ່ຮັບຜິດຊອບວຽກງານການສຶກສາຮຽນຮ່ວມ ລວມທັງທຸກພາກສ່ວນທີ່ກ່ຽວຂ້ອງ.

# ພາກທີ III
# ການເງິນຂອງຂະແໜງການສຶກສາ ແລະ ກິລາ

## I. ສະພາບການເງິນສຳລັບຂະແໜງການສຶກສາ ແລະ ກິລາ ປີ 2019

ໃນປີ 2019 ງົບປະມານຂອງຂະແໜງສຶກສາ ແລະ ກິລາ ທີ່ສະພາແຫ່ງຊາດຮັບຮອງ ແລະ ກະຊວງການເງິນ ອະນຸມັດໃຫ້ທັງໝົດ 4.055.976,54 ລ້ານກີບ ເທົ່າກັບ 12,15% ທຽບໃສ່ລາຍຈ່າຍລັດຖະບານ ແລະ ເທົ່າກັບ 2,45% ທຽບໃສ່ GDP. ໃນນີ້ ງົບປະມານ ບໍລິຫານປົກກະຕິ: 3.447.918,07 ລ້ານກີບ (ລາຍຈ່າຍວິຊາການ: 95.268,65 ລ້ານກີບ) ແລະ ງົບປະມານການລົງທຶນທັງໝົດ 608.058,47 ລ້ານກີບ (ທຶນພາຍໃນລວມທັງໝົດ 149.448,75 ລ້ານກີບ ແລະ ທຶນຕ່າງປະເທດທັງໝົດ 458.609,72 ລ້ານກີບ). ໃນງົບປະມານທັງໝົດ, ສູນກາງຄຸ້ມຄອງມີຢູ່ 1.207.035,72 ລ້ານກີບ (ກະຊວງສຶກສາທິການ ແລະ ກິລາ, ມະຫາວິທະຍາໄລແຫ່ງຊາດ) ແລະ ທ້ອງຖິ່ນຄຸ້ມຄອງແມ່ນ 2.848.840,82 ລ້ານກີບ.

ຖ້າສົມທຽບໃສ່ລາຍຈ່າຍງົບປະມານແຕ່ລະພາກຂອງລັດຖະບານຈະເຫັນໄດ້ວ່າ ງົບປະມານເງິນເດືອນ (ພາກ 60) ກວມປະມານ 23,6%; ເງິນອຸດໜູນ (ພາກ 61) ກວມ 16,8%; ເງິນບໍລິຫານປົກກະຕິ (ພາກ 62) ກວມ 11,7%; ເງິນດັດສົມ-ສົ່ງເສີມ (ພາກ 63) ກວມ 5,2%; ເງິນລົງທຶນພາຍໃນ (ພາກ 67) ກວມ 5,8% ແລະ ເງິນລົງທຶນຕ່າງປະເທດ (ODA) ກວມ 6,4% ທຽບໃສ່ລາຍຈ່າຍໃນພາກດຽວກັນຂອງລັດຖະບານ.

## II. ຄວາມຕ້ອງການດ້ານການເງິນສຳລັບປີ 2020

ອີງໃສ່ແຜນວຽກບູລິມະສິດ ທີ່ໄດ້ກຳນົດໃນແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019, ໃນປີງົບປະມານ 2020 ທີ່ວຂະແໜງການສຶກສາ ແລະ ກິລາ ມີຄວາມຕ້ອງການງົບປະມານທັງໝົດ 5.218,15 ຕື້ກີບ, ຊຶ່ງມີລາຍລະອຽດດັ່ງນີ້:

| | | |
|---|---|---|
| **ລາຍຈ່າຍບໍລິຫານປົກກະຕິ** | **=** | **5.218,15 ຕື້ກີບ.** |
| ▪ ເງິນເດືອນ ແລະ ນະໂຍບາຍ (ພາກ 60) | = | 2.869,93 ຕື້ກີບ. |
| ▪ ເງິນນະໂຍບາຍ ແລະ ເງິນເບ້ຍລ້ຽງ (ພາກ 61) | = | 388,94 ຕື້ກີບ. |
| ▪ ເງິນບໍລິຫານປົກກະຕິ (ພາກ 62) | = | 531,53 ຕື້ກີບ. |
| ▪ ເງິນລາຍຈ່າຍດັດສົມ, ສົ່ງເສີມ ແລະ ບຳລຸງ (ພາກ 63) | = | 592,30 ຕື້ກີບ. |
| ▪ ຊື້ຊັບສົມບັດຄົງທີ່ຮັບໃຊ້ບໍລິຫານ (ພາກ 66) | = | 35,45 ຕື້ກີບ. |
| ▪ ລາຍຈ່າຍລົງທຶນຂອງລັດ ແລະ ODA (ພາກ 67) | = | 800,00 ຕື້ກີບ |

# ພາກທີ IV
# ກົນໄກການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ

## I. ມາດຕະການໃນການຈັດຕັ້ງປະຕິບັດ

1) ໃຫ້ແຕ່ລະພາກສ່ວນ/ແຕ່ລະຂະແໜງການຍ່ອຍ ນໍາເອົາວຽກງານຈຸດສຸມນີ້ໄປຜັນຂະຫຍາຍເປັນແຜນ ປະຕິບັດງານລະອຽດໂດຍກໍານົດກິດຈະກໍາ, ຜົນໄດ້ຮັບ, ໄລຍະຈັດຕັ້ງປະຕິບັດ, ຜູ້ຮັບຜິດຊອບ ແລະ ງົບປະມານຮັບໃຊ້.
2) ໃຫ້ແຕ່ລະກົມ/ຂະແໜງການຍ່ອຍ ຈັດກອງປະຊຸມພາຍໃນທຸກໆເດືອນ ແລະ ທຸກໆສາມເດືອນ ເພື່ອຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນກິດຈະກໍາຂອງຕົນ.
3) ໃຫ້ບັນດາບັນດາກົມ/ຂະແໜງການຍ່ອຍ ເອົາໃຈໃສ່ຊີ້ນໍາພະແນກສຶກສາທິການ ແລະ ກິລາ ເພື່ອແນະນໍາບັນດາເມືອງ ແລະ ໂຮງຮຽນໃນການຫັນເອົາກິດຈະກໍາໄປຈັດຕັ້ງປະຕິບັດ.
4) ໃຫ້ບັນດາບັນດາກົມ/ຂະແໜງການຍ່ອຍ ເອົາໃຈໃສ່ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ບໍລິຫານ ການສຶກສາ ແລະ ກິລາ ປະຈໍາປີ 2019 ດ້ວຍຄວາມຮັບຜິດຊອບສູງ.
5) ໃຫ້ກົມແຜນການ ແລະ ກົມກວດກາ ເອົາໃຈໃສ່ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດມະຕິສະພາແຫ່ງຊາດ ແລະ ຄາດໝາຍສູ້ຊົນຂອງແຕ່ລະແຂວງ ໂດຍອີງໃສ່ມະຕິສະພາປະຊາຊົນຂັ້ນແຂວງ.

## II. ການຕິດຕາມ ແລະ ປະເມີນ

1) ໃຫ້ສູນສະຖິຕິການສຶກສາ ແລະ ກິລາ (ກົມແຜນການ) ຮີບຮ້ອນສັງລວມ ແລະ ວິເຄາະສະຖິຕິຂໍ້ມູນການສຶກສາ ສໍາລັບສົກຮຽນ 2019-2020 ໃຫ້ສໍາເລັດກ່ອນ ເດືອນມັງກອນ 2020 ໃຫ້ເປັນບ່ອນອີງໃນການສ້າງແຜນສົກຮຽນ 2020-2021 ແລະ ແຜນພັດທະນາການສຶກສາຄັ້ງທີ IX (2021-2025).
2) ໃຫ້ກົມກວດກາ ຮ່ວມກັບເຄືອຂ່າຍຕິດຕາມ ແລະ ປະເມີນຜົນ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກຈຸດສຸມ ແລະ ແຜນກິດຈະກໍາຂອງແຕ່ລະຂະແໜງການຍ່ອຍ ທຸກໆ 3 ເດືອນ ແລະ 6 ເດືອນ ເພື່ອລາຍງານໃຫ້ແກ່ກອງປະຊຸມຄະນະນໍາບໍລິຫານລັດ ຂອງກະຊວງສຶກສາທິການ ແລະ ກິລາ.
3) ໃຫ້ແຕ່ລະໂຮງຮຽນສະຫຼຸບ, ຕີລາຄາຜົນສໍາເລັດ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດແຜນປະຈໍາປີ ແລ້ວລາຍງານໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ.
4) ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ ສັງລວມຜົນສໍາເລັດ ແລະ ບັນຫາ ແລ້ວລາຍງານໃຫ້ພະແນກ ສຶກສາທິການ ແລະ ກິລາ ແຂວງ ແລະ ນະຄອນຫຼວງ.
5) ໃຫ້ກົມແຜນການ ກະກຽມລາຍງານຜົນສໍາເລັດໃນການຈັດຕັ້ງປະຕິບັດມະຕິສະພາແຫ່ງຊາດ, ມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາປະຈໍາປີ 2019 ກໍຄືແຜນພັດທະນາຂະແໜງການສຶກສາ ແລະ ກິລາປະຈໍາສົກຮຽນ 2019-2020 ເພື່ອລາຍງານຢູ່ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈໍາປີ 2020 ເຊິ່ງຈະຈັດຂຶ້ນ ໃນເດືອນກໍລະກົດ ປີ 2020.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ ເລກທີ 4259 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 26 ສິງຫາ 2019

# ມະຕິ
# ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳສົກຮຽນ 2018-2019

- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 67/ນຍ, ລົງວັນທີ 3 ກຸມພາ 2017.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຜູ້ເຂົ້າຮ່ວມກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019, ສະບັບເລກທີ 2412/ສສກ, ລົງວັນທີ 16 ມິຖຸນາ 2019.
- ອີງຕາມ ມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳສົກຮຽນ 2017-2018 ສະບັບເລກທີ 1043/ສສກ, ລົງວັນທີ 27 ສິງຫາ 2018.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ຕໍ່ບົດລາຍງານການຈັດຕັ້ງ ປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019 ແລະ ທິດທາງແຜນການປະຈຳສົກຮຽນ 2019-2020 ທີ່ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳສົກຮຽນ 2018-2019 ໃນລະຫວ່າງວັນທີ 29-31 ກໍລະກົດ 2019 ທີ່ແຂວງວຽງຈັນ ກອງປະຊຸມໄດ້ຕົກລົງເຫັນດີຮັບເອົາມະຕິຂອງກອງປະຊຸມດັ່ງນີ້:

1. ເຫັນດີເປັນເອກະພາບຕໍ່ບົດລາຍງານ ຜົນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019, ຊຶ່ງເຫັນວ່າ ການສຶກສາກ່ອນໄວຮຽນ ມີການຂະຫຍາຍຕົວ ເປັນທີ່ໜ້າເພິ່ງພໍໃຈ, ໃນຂະນະທີ່ການສຶກສາຊັ້ນປະຖົມມີລັກສະນະທົດຖອຍ, ອັດຕາການຄ້າງຫ້ອງຍັງສູງ ແລະ ອັດຕາການປະລະການຮຽນຂອງນັກຮຽນມີລັກສະນະເພີ່ມຂຶ້ນ. ສ່ວນການສຶກສາຊັ້ນມັດທະຍົມ ບໍ່ໄດ້ຮັບການພັດທະນາດີເທົ່າທີ່ຄວນ, ການເລື່ອນຊັ້ນຈາກປະຖົມສຶກສາ ຫາ ຊັ້ນມັດທະຍົມສຶກສາຕອນຕົ້ນມີທ່າອ່ຽງຫຼຸດລົງ ພ້ອມດຽວກັນ ອັດຕາປະລະການຮຽນເພີ່ມຂຶ້ນ ທັງມັດທະຍົມຕອນຕົ້ນ ແລະ ຕອນປາຍ. ໃນສົກຮຽນ 2018-2019 ການຈັດຕັ້ງປະຕິບັດບັນດາຄາດໝາຍຈຳນວນ 15 ຄາດໝາຍຫຼັກ ເຫັນວ່າ ມີພຽງແຕ່ 2 ຄາດໝາຍທີ່ສາມາດບັນລຸໄດ້ຕາມແຜນ, ມີ 6 ຄາດໝາຍ ທີ່ສາມາດປະຕິບັດໄດ້ດີຂຶ້ນເມື່ອທຽບໃສ່ສົກຮຽນ 2017-2018 ເຊິ່ງໃນນີ້ມີບາງຄາດໝາຍກໍ່ໃກ້ຈະບັນລຸ ແລະ ມີ 7 ຄາດໝາຍທີ່ບໍ່ສາມາດບັນລຸໄດ້ທັງຍັງບໍ່ມີຄວາມຄືບໜ້າ. ກອງປະຊຸມເຫັນດີຮັບຮອງເອົາຄາດໝາຍສູ້ຊົນສຳລັບສົກຮຽນ 2019-2020 ຊຶ່ງມີທັງໝົດ 17 ຄາດໝາຍ.

2. ກອງປະຊຸມເຫັນດີຮັບຮອງເອົາມາດຕະການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸໄດ້ຄາດໝາຍຂອງແຕ່ລະຂະແໜງການຍ່ອຍດັ່ງນີ້:

➢ **ການສຶກສາກ່ອນໄວຮຽນ**

1) ບັນດາເມືອງທີ່ຍັງມີອັດຕາການເຂົ້າຮຽນຂອງເດັກ 5 ປີ ຕໍ່າກວ່າ 60% ໃຫ້ສົມທົບກັບອົງການປົກຄອງຂັ້ນເມືອງ ແລະ ຂັ້ນບ້ານ ເພື່ອຂະຫຍາຍຫ້ອງກຽມປະຖົມ ຢູ່ບັນດາໂຮງຮຽນປະຖົມ ສົມບູນ ທີ່ບໍ່ທັນມີຫ້ອງກຽມປະຖົມ;
2) ແຕ່ລະເມືອງ ໃຫ້ຊຸກຍູ້ ແລະ ສົ່ງເສີມພໍ່ແມ່ ແລະ ຜູ້ປົກຄອງເດັກນ້ອຍ, ຊຸມຊົນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ເປັນເຈົ້າການໃນການປັບປຸງສະພາບແວດລ້ອມ ແລະ ການພັດທະນາການຮຽນຮູ້ຂອງເດັກ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ.

➢ **ປະຖົມສຶກສາ**

1) ກົມສາມັນສຶກສາ ສ້າງຄູ່ມືແນະນຳການຈັດຕັ້ງປະຕິບັດກຸ່ມໂຮງຮຽນປະຖົມສຶກສາ ລວມທັງແຜນພັດທະນາກຸ່ມໂຮງຮຽນຕົວແບບ;
2) ກົມສາມັນສຶກສາ ອອກຂໍ້ແນະນຳ ກ່ຽວກັບການນຳໃຊ້ແຜນທີ່ ເພື່ອຈັດກຸ່ມໂຮງຮຽນ, ພ້ອມດຽວກັນນັ້ນ ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ສ້າງແຜນທີ່ກຸ່ມໂຮງຮຽນໃຫ້ສຳເລັດ;
3) ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ສ້າງຕັ້ງກຸ່ມໂຮງຮຽນປະຖົມສຶກສາ ພ້ອມທັງໃຫ້ດຳເນີນໄປຕາມພາລະບົດບາດທີ່ກຳນົດໂດຍໃຫ້ຕິດພັນກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໂດຍເອົາການຝຶກອົບຮົມທີ່ເນັ້ນກຸ່ມໂຮງຮຽນເປັນຫຼັກ;
4) ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ລົງສົມທົບກັບອົງການປົກຄອງຂັ້ນບ້ານ ແລະ ຂັ້ນເມືອງ ເພື່ອລະດົມ ໃຫ້ນັກຮຽນທີ່ມີຄວາມສ່ຽງຈະອອກໂຮງຮຽນ ໃຫ້ສືບຕໍ່ເຂົ້າຮຽນຈົນຈົບການສຶກສາຊັ້ນປະຖົມ;
5) ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສົມທົບກັບຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ຊີ້ນຳອຳນວຍການໂຮງຮຽນໃນການຈັດຕັ້ງປະຕິບັດ ນິຕິກຳຄຸ້ມຄອງໂຮງຮຽນຢ່າງເໝາະສົມ ເພື່ອຫຼຸດຜ່ອນການຄ້າງຫ້ອງ ແລະ ປະລະການຮຽນຂອງນັກຮຽນ;
6) ເພື່ອຍົກສູງທັກສະໃນການອ່ານ, ການຂຽນພາສາລາວ ແລະ ການຄິດໄລ່ເລກພື້ນຖານຂອງນັກຮຽນຊັ້ນປະຖົມສຶກສາ, ດັ່ງນັ້ນ ມອບໃຫ້ ພະແນກສຶກສາທິການ ແລະ ກິລາແຂວງ ອອກຂໍ້ແນະນຳ ໃຫ້ຄູສອນ ຊັ້ນ ປ.1 - ປ.3 ເພື່ອເຮັດໃຫ້ຄູສອນ ໄດ້ເນັ້ນໃສ່ການສອນການອ່ານ, ການຂຽນພາສາລາວ ແລະ ການຄິດໄລ່ເລກພື້ນຖານເປັນຕົ້ນຕໍ ຕາມຫຼັກສູດສະບັບປັບປຸງໃໝ່ ໂດຍໃຫ້ໄດ້ເລີ່ມ ໃນສົກຮຽນ 2019-2020;
7) ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ລົງຕິດຕາມ ແລະ ຊຸກຍູ້ໃຫ້ໂຮງຮຽນປະຖົມໃນຂອບເຂດຮັບຜິດຊອບຂອງຕົນ ຈັດການບຳລຸງໃຫ້ນັກຮຽນທີ່ຮຽນອ່ອນ ໃນຍາມພັກຮຽນ ກ່ອນເປີດສົກຮຽນໃໝ່ ພ້ອມທັງໃຫ້ຈັດຕັ້ງສອບເສັງທຽບລະດັບໃຫ້ພວກກ່ຽວ ເພື່ອໃຫ້ສາມາດເລື່ອນຂຶ້ນຮຽນໃນຊັ້ນຖັດໄປ;

8) ສູນປະກັນຄຸນນະພາບການສຶກສາ ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງ ຕິດຕາມຄຸນນະພາບ ການສຶກສາ ຕາມມາດຕະຖານອ່ານອອກຂຽນໄດ້ ແລະ ຄິດໄລ່ເປັນ ພ້ອມທັງສ້າງຄວາມເຂັ້ມແຂງ ວຽກງານປະກັນຄຸນນະພາບໃຫ້ແກ່ທ້ອງຖິ່ນ.

9) ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ດໍາເນີນການປະເມີນຜົນການຮຽນຂອງນັກຮຽນປະຖົມປີທີ 5.

- **ມັດທະຍົມສຶກສາ (ຕອນຕົ້ນ ແລະ ຕອນປາຍ)**

1) ກົມສາມັນສຶກສາ ສືບຕໍ່ສ້າງນິຕິກໍາກ່ຽວກັບການສ້າງຕັ້ງກຸ່ມໂຮງຮຽນມັດທະຍົມ ພ້ອມດ້ວຍ ສ້າງຄູມືແນະນໍາການຈັດຕັ້ງປະຕິບັດ;
2) ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ລົງສົມທົບກັບອົງການປົກຄອງຂັ້ນບ້ານ ແລະ ຂັ້ນເມືອງ ເພື່ອລະດົມ ໃຫ້ນັກຮຽນທີ່ມີຄວາມສ່ຽງຈະອອກໂຮງຮຽນ ໃຫ້ສືບຕໍ່ເຂົ້າຮຽນຈົນຈົບການສຶກສາພາກບັງຄັບ;
3) ກົມສາມັນສຶກສາ ສົມທົບກັບກົມອາຊີວະສຶກສາ ຄົ້ນຄວ້າຄວາມເປັນໄປໄດ້ເພື່ອຂະຫຍາຍ ຫຼັກສູດສາມັນວິຊາຊີບ ຢູ່ບັນດາໂຮງຮຽນຊົນເຜົ່າຕ່າງໆ ບ່ອນທີ່ມີເງື່ອນໄຂ.
4) ສະຖາບັນຄົ້ນຄົ້ນວິທະຍາສາດການສຶກສາ ສົມທົບກັບຄະນະໂຄສະນາອົບຮົມສູນການພັກ ແລະ ພາກສ່ວນທີ່ກ່ຽວຂ້ອງປັບປຸງລັກສູດການເມືອງ ( ສຶກສາພົນລະເມືອງ) ໃນທຸກຊັ້ນ ແລະ ທຸກສາຍ.

- **ການສຶກສານອກໂຮງຮຽນ**

1) ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ເກັບກໍາຂໍ້ມູນກຸ່ມເປົ້າໝາຍການສຶກສານອກໂຮງຮຽນທີ່ຍັງບໍ່ຈົບການສຶກສາ ພາກບັງຄັບແລ້ວຈັດຕັ້ງການຮຽນ-ການສອນ;
2) ສູນການສຶກສານອກໂຮງຮຽນຂັ້ນແຂວງ ແລະ ຂັ້ນເມືອງ ສົມທົບກັບສະຖາບັນອາຊີວະສຶກສາ ພາຍໃນແຂວງ ເພື່ອຈັດຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ຊາວໜຸ່ມ ແລະ ຜູ້ທີ່ສົນໃຈອື່ນໆ ໂດຍນໍາໃຊ້ກຸ່ມໂຮງຮຽນ, ສູນການສຶກສານອກໂຮງຮຽນ ແລະ ສະຖານທີ່ອື່ນໆ ທີ່ເໝາະສົມ ເປັນບ່ອນຝຶກອົບຮົມ.

- **ການສຶກສາຄູ**

1) ກົມສ້າງຄູ ສົມທົບກັບ ກົມສາມັນສຶກສາ ແລະ ກົມຈັດຕັ້ງ ແລະ ພະນັກງານ ປັບປຸງນິຕິກໍາກ່ຽວກັບການຈັດຕັ້ງ ແລະ ການການເຄື່ອນໄຫວຂອງສຶກສານິເທດຂັ້ນແຂວງ, ຂັ້ນເມືອງ ແລະ ກຸ່ມໂຮງຮຽນ ພ້ອມທັງກໍານົດຈໍານວນຄູສຶກສານິເທດຂອງແຕ່ລະຂັ້ນໃຫ້ເໝາະສົມ;
2) ກົມສ້າງຄູ ຄົ້ນຄວ້າເປົ້າໝາຍຄູປະຈໍາການ ທີ່ບໍ່ໄດ້ມາດຕະຖານ ເພື່ອຍົກລະດັບໃຫ້ພວກກ່ຽວ ໃນຮູບແບບຕ່າງໆ ຕາມຄວາມເໝາະສົມ ພ້ອມທັງຮັບປະກັນດ້ານຄຸນນະພາບ. ພ້ອມນີ້, ກໍ່ໃຫ້ ສະຖາບັນສ້າງຄູ ອົບຮົມຄູຍາມພັກແລ້ງໃຫ້ເປັນລະບົບ ໂດຍຮັບໃຊ້ໃຫ້ແກ່ການນໍາໃຊ້ຫຼັກສູດໃໝ່ ໃນສາຍສາມັນສຶກສາ;
3) ກົມສ້າງຄູ ສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ແລະ ບັນດາແຂວງ/ນະຄອນຫຼວງ ແລະ ເມືອງ/ນະຄອນ ດໍາເນີນການປະເມີນຄວາມຮູ້ຄວາມສາມາດ ແລະ ຈັນຍາບັນຂອງຄູປະຖົມ ແລະ ມັດທະຍົມໃນທົ່ວປະເທດ ເພື່ອກໍານົດມາດຕະການແກ້ໄຂອັນຮີບດ່ວນ.

- **ອາຊີວະສຶກສາ ແລະ ອົບຮົມວິຊາຊີບ**

1) ກົມອາຊີວະສຶກສາ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຂະຫຍາຍຄວາມອາດສາມາດ ໃນການສະໜອງການສຶກສາສາຍອາຊີວະສຶກສາ ໃຫ້ກວ້າງຂວາງ ແລະ ຫຼາຍຮູບແບບ; ເພີ່ມການໂຄສະນາເຜີຍແຜ່ແນະນຳວິຊາຊີບ ໃຫ້ກວ້າງຂວາງຢູ່ບັນດາໂຮງຮຽນມັດທະຍົມຕອນຕົ້ນ, ມັດທະຍົມຕອນ ປາຍ, ສືບຕໍ່ປັບປຸງຫຼັກສູດໃຫ້ແທດເໝາະກັບຄວາມຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມ ແລະ ເປີດສອນຫຼາກຫຼາຍຫຼັກສູດວິຊາຊີບທັງໄລຍະສັ້ນ ແລະ ໄລຍະຍາວ.
2) ກົມອາຊີວະສຶກສາ ເຜີຍແຜ່ກົດໝາຍວ່າດ້ວຍອາຊີວະສຶກສາສະບັບປັບປຸງ, ປັບປຸງນິຕິກຳ ໃຕ້ກົດໝາຍ ແລະ ນິຕິກຳວ່າດ້ວຍການສ້າງ ແລະ ຄຸ້ມຄອງກອງທຶນພັດທະນາອາຊີວະສຶກສາ.

- **ການສຶກສາຊັ້ນສູງ**

1) ກົມການສຶກສາຊັ້ນສູງ ສົມທົບກັບມະຫາວິທະຍາໄລຕ່າງໆ ເພີ່ມທະວີການຄຸ້ມຄອງການ ພັດທະນາ ແລະ ປະຕິບັດຫຼັກສູດຂອງສະຖາບັນການສຶກສາຊັ້ນສູງໃຫ້ມີຄຸນນະພາບ ແລະ ສອດຄ່ອງຕາມຄວາມຕ້ອງການ ຂອງການພັດທະນາ - ເສດຖະກິດສັງຄົມ ແລະ ຕາມທ່າອ່ຽງຂອງພາກພື້ນ ແລະ ສາກົນ. ສົ່ງເສີມ ການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການໃນລະດັບຊາດ, ລະດັບມະຫາວິທະຍາໄລ ໃຫ້ກວມເຖິງຫຼາຍຂົງເຂດໃນສັງຄົມ;
2) ສະຖານການສຶກສາຊັ້ນສູງຕ່າງໆ ສືບຕໍ່ຄົ້ນຄວ້າ ແລະ ປັບປຸງຄວາມສາມາດຂອງຕົນເອງ ເພື່ອກ້າວໄປເຖິງຄວາມເປັນເຈົ້າຕົນເອງທາງດ້ານເງິນ ແລະ ວິຊາການ;
3) ກົມການສຶກສາຊັ້ນສູງ ສືບຕໍ່ຄົ້ນຄວ້າ, ປັບປຸງ ແລະ ສ້າງບັນດານິຕິກຳ ເພື່ອອຳນວຍຄວາມສະດວກໃນການດຳເນີນເຄື່ອນໄຫວວຽກງານວິຊາການຂອງສະຖານການສຶກສາຊັ້ນສູງ.

- **ກິລາ-ກາຍະກຳ**

1) ກົມກິລາລະດັບສູງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອອກນິຕິກຳກ່ຽວກັບການຄຸ້ມຄອງສະໜາມກິລາ ລະດັບຊາດຂັ້ນສູນກາງ ແລະ ແຂວງ ແລະ ສືບຕໍ່ສ້າງຕັ້ງກອງທຶນກິລາ-ກາຍະກຳ ໃຫ້ສຳເລັດ;
2) ກົມກິລາມວນຊົນ ສືບຕໍ່ໂຄສະນາ, ເຜີຍແຜ່ກ່ຽວກັບວຽກງານກິລາມວນຊົນ ໃຫ້ລົງເຖິງຮາກຖານ ແລະ ບັນດາກຸ່ມເປົ້າໝາຍຕ່າງໆ ເພື່ອບັນລຸເປົ້າໝາຍຕົວເລກທີ່ໄດ້ວາງອອກ;
3) ກົມພະລະ ແລະ ສິລະປະສຶກສາ ເພີ່ມທະວີເອົາໃຈໃສ່ ຈັດຕັ້ງການຮຽນ - ການສອນ ວິຊາວິຊາພະລະສຶກສາ ຕາມຫຼັກສູດ ແລະ ຈັດໃຫ້ມີການແຂ່ງຂັນກິລາໃນໂຮງຮຽນ, ພັດທະນາກິລານອກໂມງຮຽນ ໃຫ້ມີຂະບວນກວ້າງຂວາງຫຼາຍຂຶ້ນ ເພື່ອຫັນນັກຮຽນ ແລະ ຊາວໜຸ່ມ ອອກຈາກປະກົດການຫຍໍ້ທໍ້ ແລະ ສິ່ງເສບຕິດ;
4) ຫ້ອງການເລຂາທິການຄະນະກຳມະການໂອລິມປິກແຫ່ງຊາດ ສົມທົບກັບສະຫະພັນກິລາ ເພີ່ມທະວີການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສຶກສາອົບຮົມແນວຄິດໃຫ້ຄູຝຶກ, ກຳມະການຕັດສິນ ແລະ ນັກກິລາ ໃນການຫ້າມໃຊ້ສານກະຕຸ້ນ, ສິ່ງເສບຕິດ ແລະ ການລົ້ມບານອື່ນໆ ທີ່ລະເມີດລະບຽບກົດໝາຍ.
5) ມອບໃຫ້ກົມກິລາລະດັບສູງ ແລະ ກົມກິລາມວນຊົນ ສົມທົບກັບແຂວງຊຽງຂວາງ ຈັດການແຂ່ງຂັນມະຫາກຳກິລາແຫ່ງຊາດຄັ້ງທີ 11 ແລະ ກິລາຄົນພິການ ທີ່ແຂວງຊຽງຂວາງ ໃຫ້ມີເນື້ອໃນ, ທັງ

ໃຫ້ຄັດເລືອກໄດ້ນັກກິລາທີ່ມີພອນສະຫວັນອັນພົ້ນເດັ່ນ ເພື່ອສືບຕໍ່ສ້າງເປັນນັກກິລາອາ ຊີບ. ນອກ ນັ້ນ, ກໍໃຫ້ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ. ພາຍຫຼັງສຳເລັດການ ຈັດການແຂ່ງຂັນກິລາລະດັບຊາດ ແລະ ການຈັດການແຂ່ງຂັນລາຍການຕ່າງໆ ແລ້ວ ໃຫ້ຈັດກອງ ປະຊຸມຖອດຖອນບົດຮຽນ ແລະ ກຳນົດທິດທາງ ແລະ ວິທີການຈັດການແຂ່ງຂັນຄັ້ງຕໍ່ໄປ.

- **ການບໍລິຫານ ແລະ ຄຸ້ມຄອງ**

1) ກົມຈັດຕັ້ງ ແລະ ພະນັກງານ ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ປັບປຸງນິຕິກຳ ແລະ ດຳເນີນ ການປະເມີນຜູ້ບໍລິຫານການສຶກສາ ແລະ ກິລາທຸກຂັ້ນ ລວມທັງຄູສອນ. ພ້ອມດຽວກັນນັ້ນ ໃຫ້ ສ້າງນິຕິກຳໃນການຄຸ້ມຄອງຄູ ແລະ ຜູ້ບໍລິຫານສະຖານການສຶກສາ;
2) ກົມຈັດຕັ້ງ ແລະ ພະນັກງານ ສ້າງນິຕິກຳເພື່ອເປັນບ່ອນອີງໃຫ້ແກ່ແຂວງ ແລະ ເມືອງ ໃນການສັບ ຊ້ອນ, ຈັດສັນຄູເຫຼືອບໍ່ພໍ ແລະ ແກ້ໄຂບັນຫາຄູອາສາສະໝັກ ໂດຍໃນເບື້ອງຕົ້ນໃຫ້ສຸມໃສ່ ເມືອງ ເປົ້າໝາຍຂອງໂຄງການຍົກສູງຄຸນນະພາບການສຶກສາ ແລະ ກິລາ ໃນ 40 ເມືອງ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ເມືອງທີ່ມີເງື່ອນໄຂ ໂດຍຖືເອົາຂອບເຂດ ກຸ່ມໂຮງຮຽນເປັນຫຼັກ ໃນການຈັດສັນຄູ ເຫຼືອບໍ່ພໍ ແລະ ແກ້ໄຂບັນຫາຄູອາສາສະໝັກ;
3) ກົມການເງິນ ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ຄົ້ນຄວ້າຈັດສັນ ງົບປະມານພາກ 62 ແລະ ພາກ 63 ໃຫ້ແກ່ເມືອງ ໂດຍອີງໃສ່ຄູ່ມືແນະນຳ ທີ່ໄດ້ຮັບຮອງໃນປີ 2018. ພ້ອມດຽວກັນນັ້ນ ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ ຈັດສັນງົບປະມານ ເຂົ້າ ໃສ່ວຽກງານນິເທດການສຶກສາ ເປັນບູລິມະສິດທີໜຶ່ງ;
4) ກົມການເງິນ ຄົ້ນຄວ້າຈັດສັນງົບປະມານສ່ວນກາງ ໃຫ້ແກ່ເມືອງ ແລະ ກຸ່ມໂຮງຮຽນຕົວແບບ ໃນ 40 ເມືອງເປົ້າໝາຍຂອງໂຄງການຍົກສູງຄຸນນະພາບການສຶກສາຢູ່ເຂດຫ່າງໄກສອກຫຼີກ;
5) ໃຫ້ສຳເລັດການຄົ້ນຄວ້າ ຮຽບຮຽງ ປະຫວັດສາດ ການສຶກສາແຫ່ງຊາດ ໃນປີ 2020;
6) ສະຖາບັນພັດທະນາຜູ້ບໍລິຫານການສຶກສາ ແລະ ກິລາ ສົມທົບກັບກົມແຜນການ ຈັດຝຶກອົບຮົມ ຫຼັກສູດການວາງແຜນການສຶກສາ ໃຫ້ແກ່ຜູ້ບໍລິຫານການສຶກສາ ແລະ ກິລາຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ; ພ້ອມດຽວກັນນັ້ນ, ໃຫ້ສົມທົບກັບກົມກ່ຽວຂ້ອງຄົ້ນຄວ້າສ້າງຫຼັກສູດ ການຝຶກ ອົບຮົມວຽກງານການເງິນ, ວຽກງານຈັດຕັ້ງ ແລະ ພະນັກງານ, ວຽກງານກວດກາ ແລະ ຕິດຕາມປະ ເມີນຜົນການສຶກສາ ແລະ ຫົວຂໍ້ອື່ນໆ ທີ່ຈຳເປັນ;
7) ໃຫ້ແຕ່ລະພາກສ່ວນ ສືບຕໍ່ຊຸກຍູ້ ສົ່ງເສີມ ການພົວພັນຮ່ວມມື ກັບຕ່າງປະເທດ ໃນຮູບການຕ່າງໆ ເພື່ອຍາດແຍ່ງການຊ່ວຍເຫຼືອ ໃນການພັດທະນາການສຶກສາ ແລະ ກິລາ; ມອບໃຫ້ກົມພົວພັນ ຕ່າງປະເທດ ຈັດຕັ້ງຖອດຖອນບົດຮຽນ ເພື່ອສົ່ງເສີມ ດ້ານທີ່ມີຜົນສຳເລັດຜ່ານມາ ແລະ ປັບປຸງແກ້ ໄຂ ດ້ານທີ່ເຫັນວ່າ ຍັງເຮັດບໍ່ທັນເຮັດໄດ້ດີເທົ່າທີ່ຄວນ;
8) ຫ້ອງການກະຊວງ ສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ແລະ ຫ້ອງການ ຄະນະພັກກະຊວງ ສືບຕໍ່ຄົ້ນຄວ້າເປົ້າໝາຍພະນັກງານສືບທອດ ເພື່ອລົງໄປກໍ່ສ້າງຢູ່ຮາກຖານໃນຊຸດຕໍ່ໄປ;
9) ກົມກວດກາ ສົມທົບກັບພາກສ່ວນກ່ຽວຂ້ອງ ພັດທະນາ ແລະ ນຳໃຊ້ເຄື່ອງມືຕິດຕາມ ແລະ ປະ ເມີນຜົນໃຫ້ເປັນລະບົບ, ຄົບຊຸດ, ທັນສະໄໝ ແຕ່ສູນກາງຮອດທ້ອງຖິ່ນ.

10) ກົມກິດຈະການນັກສຶກສາ ຄົ້ນຄວ້າສ້າງນິຕິກຳຄຸ້ມຄອງທຶນການສຶກສາ ແລະ ການໂຄສະນາເຜີຍແຜ່ ທຶນການສຶກສາໄປຮຽນທີ່ຕ່າງປະເທດ ໃຫ້ແກ່ນັກຮຽນຈົບຊັ້ນມັດທະຍົມຕອນປາຍ ແລະ ກຸ່ມເປົ້າໝາຍອື່ນໆ ຕາມເປົ້າໝາຍຂອງຜູ້ໃຫ້ທຶນ;

11) ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສົມທົບກັບບັນດາຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ດຳເນີນການຕິດຕາມ ແລະ ກວດກາການປະຕິບັດໜ້າທີ່ຂອງຄູ ແລະ ອຳນວຍການໂຮງຮຽນ ຢ່າງເປັນປະຈຳ.

12) ກົມແຜນການ ສົມທົບກັບບັນດາພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ກຳນົດຄາດໝາຍສູ້ຊົນ ແລະ ວຽກຈຸດສຸມຂອງແຂວງ ໃຫ້ສອດຄ່ອງກັບບູລິມະສິດ ຂອງກະຊວງ ສຶກສາທິການ ແລະ ກິລາ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ພ້ອມທັງຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ;

13) ມອບໃຫ້ຫ້ອງການກະຊວງ, ກົມແຜນການ ແລະ ຂະແໜງການຍ່ອຍທີ່ກ່ຽວຂ້ອງ ລົງເຜີຍແຜ່ ແລະ ເຊື່ອມຊຶມມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳສົກຮຽນ 2018-2019 ນີ້ ໃຫ້ແກ່ແຂວງ ແລະ ສະຖານການສຶກສາທີ່ຂຶ້ນກັບ, ພ້ອມດຽວກັນນັ້ນ ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສືບຕໍ່ລົງເຜີຍແຜ່ໃຫ້ແກ່ເມືອງ ແລະ ເມືອງສືບຕໍ່ເຜີຍແຜ່ໃຫ້ໂຮງຮຽນ ຢ່າງທົ່ວເຖິງ ແລະ ນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ແລະ ໄດ້ຮັບຜົນດີ;

14) ກົມກວດກາ ສົມທົບກັບກົມແຜນການເປັນຜູ້ຮັບຜິດຊອບຕິດຕາມ, ກວດກາ ແລະ ຊຸກຍູ້ ການ ຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ ພ້ອມລາຍງານໃຫ້ແກ່ການນຳກະຊວງໃນທຸກໆ 3 ເດືອນ.

ກອງປະຊຸມໄດ້ຮັບກຽດກ່າວປິດ ໂດຍ ທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໃນເວລາ 16:00 ໂມງ ຂອງວັນທີ 31 ກໍລະກົດ 2019.

**ລັດຖະມົນຕີ**

ນ.ແສງເດືອນ ຫຼ້າຈັນທະບູນ

European Union

ສະໜັບສະໜູນການຈັດພິມໂດຍ
ສະຫະພາບເອີຣົບ